ໝວດຄວາມຮູ້ພື້ນຖານວິຊາ | ສາຍສ້າງຄູມັດທະຍົມ

# ປະຫວັດສາດຈີນ









**ປີ 2023**

# ປະຫວັດສາດຈີນ

| | | |
|---|---|---|
| **ສາຍປະຫວັດສາດ ລະບົບ** | **ປີທີ2** | **ພາກຮຽນທີ 1** |


**ຮຽບຮຽງໂດຍ:**

**ທ່ານ ນາງ ອິນປອນ ເພັງສຸວັນ**

**ກວດແກ້ໂດຍ:**

**ທ່ານ ວັດທະນາ ໝັ້ນອິໄລ**

**ທ່ານ ອຈ ປທ ນາງ ສີງອຳໄພ ພົມພາພອນ**

**ທ່ານ ປທ ນາງ ລຸ້ງຟ້າ ຂັນຕິວົງ**


ຄຳນຳ

ເອກະສານປະກອບການຮຽນ-ການສອນວິຊາ: ປະຫວັດສາດຈີນຖືກຮຽບຮຽງຂຶ້ນມາຈາກການສັງລວມບັນດາເອກະສານຕ່າງໆເພື່ອນໍາໃຊ້ເປັນເອກະສານປະກອບການຮຽນ-ການສອນວິຊາປະຫວັດສາດຈີນ ສໍາລັບນັກສຶກສາຄູລະບົບ 12+4 ສາຍປະຫວັດສາດ . ການຮຽບຮຽງ ແລະ ຈັດລຽງເນື້ອໃນວິຊາແມ່ນອີງໃສ່ໂຄງຮ່າງຫຼັກສູດລາຍວິຊາທີ່ກົມສ້າງຄູກະຊວງສຶກສາທິການ ແລະ ກິລາກໍານົດອອກມາ. ຫວັງຢ່າງຍິ່ງວ່າເອກະສານສະບັບນີ້ຈະສາມາດເປັນບ່ອນນອີງໃຫ້ແກ່ບັນດາທ່ານທີ່ມີຄວາມສົນໃຈໃນການສຶກສາຫາຄວາມຮູ້ກ່ຽວກັບປະຫວັດສາດຈີນ, ແຕ່ຍ້ອນເປັນການຮຽບຮຽງຄັ້ງທໍາອິດຈິ່ງບໍ່ສາມາດປາສະຈາກໄດ້ກ່ຽວກັບຂໍ້ຂາດຕົກບົກຜ່ອງທາງດ້ານເຕັກນິກການພິມ, ການຈັດລຽງຄໍາສັບ ຫວັງວ່າທ່ານຄົງຈະປະກອບຄໍາເຫັນເພື່ອການປັບປຸງການຈັດຮຽບຮຽງເອກະສານໃນຄັ້ງຕໍ່ໄປ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ.1148....ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງປື້ມສາຍປະຫວັດສາດ

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ 5 ປີ
- **ອີງຕາມ:** ແຜນການປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະການບໍລິການ
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 0640/ວຄວ, ລົງວັນທີ17 ກຸມພາ 2022..

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດຮຽບຮຽງເອກະສານປະກອບການສອນມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈິ່ງໄດ້ຮັບຮອງເອົາປື້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
|---|---|
| ທ່ານ ອຈ ປທ ນາງ ຄຳຂຽງ ຈັນທະວົງສັກ | .................................... |
| ທ່ານ ຊອ ປທ ມອນໄຊ ຂັນທະຈັກ | .................................... |
| ທ່ານ ຊອ ປອ ໄພທອງ ພົງສົງຄາມ | .................................... |

ທີ່, ສາລະວັນ, ວັນທີ 07 JUL 2023

**ປະທານສະພາວິທະຍາສາດ**

ອຈ. ນ ສົມປອງ ແສນທະວິ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ຫ້ອງການວິທະຍາສາດສັງຄົມ

ເລກທີ 029 ສຄ

# ໃບຮັບຮອງການກວດແກ້ບົດຮຽບຮຽງປຶ້ມ ວິຊາ ປະຫວັດສາດຈີນ

ຊື່ຫົວຂໍ້: ປະຫວັດສາດຈີນ

ຫ້ອງການ: ວິທະຍາສາດສັງຄົມ

**ຜູ້ຮຽບຮຽງ**

ທ່ານ ຊອ ນາງ ອິນປອນ ເພັງສຸວັນ

| ຄະນະກຳມະການກວດແກ້ບົດ | ລາຍເຊັນ |
| --- | --- |
| ທ່ານ ວັດທະນາ ໝັ້ນວິໄລ | ........................ |
| ທ່ານ ອຈ ປທ ນາງ ສີງອຳໄພ ພົມພາພອນ | ........................ |
| ທ່ານ ປທ ນາງ ລຸ້ງຟ້າ ຂັນຕິວົງ | ........................ |

**ທີ່, ສາລະວັນ, ວັນທີ 7/7/2023**

**ຫົວໜ້າຫ້ອງການວິທະຍາສາດສັງຄົມ**

**ນ. ຄຳຂ້ຽງ ຈັນທະວົງສັກ**

# ສາລະບານ

## Contents


ບົດທີ1:....1
ວິວັດທະນາການຂອງຊຸມຊົນຈີນ....1
1. ສະພາບປະຫວັດສາດ ແລະ ຄວາມເປັນມາຂອງຊຸມຊົນຈີນ....1
1.1 ປະເທດຈີນລັດບູຮານໂລກໃນ 5000-4000 ປີ ກ່ອນ ຄສ....2
1.2 ຈຸດສຳຄັນໃນວິຖີຊີວິດຈີນບູຮານ....3
2. ຄວາມໝາຍ ແລະ ຄວາມສຳຄັນກ່ຽວກັບປະຫວັດສາດຈີນ....3
3. ວັດທະນະທຳຈີນບູຮານ....4
3.1 ການກຳເນີດກິດຈະກຳຕ່າງໆຂອງຈີນ.....4
ບົດທີ2:....7
ຈີນສະໄໝການປົກຄອງຂອງບັນດາລາຊະວົງຕ່າງໆ....7
1. ລາຊະວົງຈີນໃນສະໄໝຂ້າທາດ....7
1.1 ລາຊະວົງເຮຍ 2100-1600 ປີ ກ່ອນ ຄສ....7
1.2 ລາຊະວົງຊາງ 1600-1100 ກ່ອນ ຄສ....8
1.3 ລາຊະວົງຊິນຫຼື ໂຈ ຫຼື ຊິວ 1100-256 ປີ ກ່ອນ ຄສ....11
2. ລາຊະວົງຈີນໃນສະໄໝສັກດີນາ....13
2.1 ລາຊະວົງຊິນ (221-207 ປີ ກ່ອນ ຄສ)....13
2.2 ລາຊະວົງຫານ ( ປີ 207 ກ່ອນ ຄສ - ຄສ 220)....15
2.3 ລາຊະວົງຈິ້ນ (265-420)....18
2.4 ລາຊະວົງສຸຍ (581-618)....19
2.5 ລາຊະວົງຕານ ຫຼື ຖັງ (618-907)....21
2.6 ລາຊະວົງຊົ່ງ(960-1279)....22
2.7 ລາຊະວົງຢວນ (1279-1368)....23
2.8ລາຊະວົງໝິງ ( 1368-1644)....25
2.9 ລາຊະວົງຊິງ( 1644-1911)....26
ບົດທີ3:....28
ຈີນສະໄໝການຮຸກຮານຂອງພວກລ່າເມືອງ....28
1. ການປາກົດຕົວຂອງພວກເອີລົບຢູ່ຈີນ....28
2. ສົງຄາມຢາຝິ່ນຄັ້ງທີ1....29
3. ຂະບວນການຕໍ່ສູ້ຂອງທາຍບີງ-ທຽນກົວ....34

4. ການປະຕິວັດໃນປະເທດຈີນ......36
ບົດທີ4:......38
ການປະຕິວັດຈີນ ແລະ ຈີນລະບອບສາທາລະນະລັດ......38
1. ການປະຕິວັດຈີນ ປີ ຄສ 1925-1927......38
1.1 ສາເຫດທີ່ພາໃຫ້ເກີດມີການປະຕິວັດ......38
1.2 ການເລີ່ມຕົ້ນຂອງການປະຕິວັດຈີນ......38
1.3 ການສ້າງຖານທີ່ໝັ້ນຂອງການປະຕິວັດ......41
1.4 ຍີ່ປຸ່ນຮຸກຮານປະເທດຈີນ......43
2. ການສ້າງຕັ້ງສາທາລະນະລັດປະຊາຊົນຈີນ......45
3. ການກໍ່ສ້າງສັງຄົມນິຍົມຢູ່ຈີນ......47
ບົດທີ5......49
ວັດທະນະທໍາຈີນ......49
1. ວິທະຍາສາດ ແລະ ສິລະປະກໍາ......49
2. ວັດທະນະທໍາຕົວໜັງສື......54
3. ຈຸດພິເສດ ແລະ ການພັດທະນາດ້ານສິລະປະກໍາ, ວັດທະນະທໍາ......62
3.2 ວັດທະນະທໍາຢາງເຊົາ......63
3.3 ວັດທະນະທໍາລຸງຊານ......64
3.4 ຈຸດພິເສດ ແລະ ຜົນງານທາງດ້ານວັດທະນະທໍາ......65
3.5 ຜົນງານດ້ານວິທະຍາສາດ......66

# ບົດທີ1:
# ວິວັດທະນາການຂອງຊຸມຊົນຈີນ

## 1. ສະພາບປະຫວັດສາດ ແລະ ຄວາມເປັນມາຂອງຊຸມຊົນຈີນ

ຕາມຫຼັກຖານທາງປະຫວັດສາດກໍ່ຄືບູຮານຄະດີບອກວ່າ: ບໍລິເວນດິນແດນທີ່ເປັນປະເທດຈີນມີຊຸມຊົນອາໄສຢູ່ມາຕັ້ງແຕ່ດຶກດຳບັນກໍ່ຄືຕັ້ງແຕ່ຍຸກຫີນເກົ່າ ຫຼື ສະໄໝສັງຄົມກ່ອນມີການກະສິກຳ. ຫຼັກຖານທີ່ບົ່ງບອກນັ້ນແມ່ນການຄົ້ນພົບໂຄງກະດູກມະນຸດບູຮານປະເພດ ໂຮໂມອີເຣັກຕັດ ແລະ ມະນູດຊີນານຕຶບຸທີ່ມີອາຍຸລະຫວ່າງ 600.000-500.000 ປີ ກ່ອນ ຄສ ທີ່ຖ້ຳ ຈູກູຕຽນ ຫ່າງຈາກນະຄອນຫຼວງປັກກິ່ງປະມານ 54 ກິໂລແມັດ ໄປທາງທິດຕາເວັນຕົກສ່ຽງໃຕ້. ຈາກຫຼັກຖານນີ້ບົ່ງບອກໃຫ້ຮູ້ມະນຸດຊີນານຕຶບອາດຈະເປັນບັນພະບູລຸດລຸ້ນທຳອິດຂອງກຸ່ມຄົນຈີນໃນດິນແດນແຫ່ງນີ້

ຈາກນັ້ນມາປະມານ4.000-3.000 ປີ ກ່ອນ ຄສ ຊຸມຊົນຈີນບູຮານໄດ້ພັດທະນາຕົນເອງຂຶ້ນມາເປັນຊຸມຊົນບ້ານໃນຍຸກຫີນ ກະຈາຍກັນຕັ້ງຖິ່ນຖານຢູ່ບໍລິເວນດິນແດນຕາມລ້ອງແມ່ນ້ຳຮວງໂຫ ແລະ ແມ່ນ້ຳຢັງຊີກຽງ ( ແມ່ນ້ຳເຫຼືອງ) ໂດຍຍຶດຖືເອົາການປູກຝັງ ແລະ ລ້ຽງສັດເປັນອາຊີບຫຼັກ, ລະບົບການປົກຄອງແມ່ນມີຄວາມສະເໝີພາບ ທັງນີ້ກໍ່ຍ້ອນວ່າການຈັດຕັ້ງທາງສັງຄົມຂອງຈີນໃນຍຸກກະສິກຳຕອນຕົ້ນນີ້ແບ່ງອອກເປັນ 2 ລະບົບຄື:

1. ໃນຊ່ວງທີ່ຜູ້ຍິງເປັນໃຫ່ຍເອີ້ນວ່າ: ວັດທະນະທຳຢາງຊີງ
2. ໃນຊ່ວງທີ່ຜູ້ຊາຍເປັນໃຫ່ຍເອີ້ນວ່າ: ວັດທະນະທຳລຸງຊານ

ສັງຄົມແບບກົກມານດາ( ມານດາສິດທິລາດ) ເປັນສັງຄົມທີ່ມີຫົວໜ້າເຜົ່າເປັນຜູ້ຍິງ ຖືກຄັດເລືອກມາຈາກສະມາຊິກໃນເຜົ່າ. ຕໍ່ມາປະມານ 2.500 ປີ ກ່ອນ ຄສ ໄດ້ເກີດມີກົກບິດາ (ບິດາສິດທິລາດ)ເປັນສັງຄົມທີ່ມີຫົວໜ້າເຜົ່າເປັນຜູ້ຊາຍ ເຊິ່ງຜູ້ຊາຍໃໄລຍະນີ້ແມ່ນມີບົດບາດໃໃນການລ່າເນື້ອ, ລ້ຽງສັດ ແລະ ເຮັດກະສິກຳ ເພາະການເຮັດວຽກດັ່ງກ່າວແມ່ນໄກ້ອາໄສແຮງງານຜູ້ຊາຍເປັນຕົ້ນຕໍເຮັດໃຫ້ມີການປ່ຽນແປງຈາກລະບອບມານດາສິດທິລາດ ມາເປັນ ບິດາສິດທິລາດ ຫຼັງຈາກນັ້ນກໍ່ຄ່ອຍໆກາຍມາເປັນການດຳລົງຊີວະດແບບ ກົກເຫຼົ່າ, ເຜົ່າຊົນ, ໝູ່ບ້ານ. ສັງຄົມເມືອງ ຈີນໃນສະໄໝນີ້ສັງຄົມໄດ້ແບ່ງອອກເປັນ 2 ກຸ່ມຄື:

1. ກຸ່ມທີ່ອາໄສຢູ່ພາຍໃນກຳແພງເມືອງ: ກຸ່ມນີ້ແມ່ນຊົນຊັ້ນປົກຄອງປະກອບມີ: ກະສັດ, ຂຸນນາງ, ທະຫານ ແລະພໍ່ຄ້າ
2. ກຸ່ມທີ່ອາໄສຢູ່ນອກກຳແພງເມືອງ: ກຸ່ມນີ້ແມ່ນພວກຊາວນາ ເຊິ່ງເປັນຄົນກຸ່ມໃຫ່ຍໃນສັງຄົມ ມີການລວມຕົວເຂົ້າກັນເປັນບ້ານກະຈາຍກັນຢູ່ອ້ອມກຳແພງເມືອງ

ໃນຊ່ວງເວລາທີ່ມີການປ່ຽນແປງຈາກລະບອບມານດາສິດທິລາດ ມາເປັນ ບິດາສິດທິລາດຢູ່ໃນສັງຄົມເກີດມີການເອົາລັດເອົາປຽບກັນ ເຊິ່ງເປັນສາເຫດເຮັດໃຫ້ເກີດມີຄວາມບໍ່ສະເໝີພາບໃນສັງຄົມ ເຖິງຢ່າງໃດກໍ່ຕາມຖືວ່າຄວາມເປັນມາຂອງຈີນບູຮານຂ້ອນຂ້າງມີຄວາມຊັດເຈນ ແລະ ແຈ່ມແຈ້ງຂຶ້ນພາຍຫຼັງຊຸມຊົນຈີນໄດ້ມີການພັດທະນາຈາກສັງຄົມເມືອງມາເປັນແຄ້ວນ ຫຼື ອານາຈັກໂດຍມີການປົກຄອງແບບລາຊະວົງ ນັກປະຫວັດສາດຈີນໄດ້ກຳນົດເອົາຈຸດເລີ່ມຕົ້ນກການປົກຄອງແບບລາຊະວົງຈີນຂຶ້ນເມື່ອປະມານ 2.100 - 1.600 ປີ ກ່ອນ ຄສ ເກີດມີລາຊະວົງເຮຍຫຼັງຈາກນັ້ນກໍ່ເກີດມີຫຼາຍລາຊະວົງປົກຄອງສືບຕໍ່ກັນມາ. ຈົນມາຮອດ ປີ ຄສ 221 ລັດຈີນບູຮານຈຶ່ງໄດ້ສິ້ນສຸດລົງ

## 1.1 ປະເທດຈີນລັດບູຮານໂລກໃນ 5000-4000 ປີ ກ່ອນ ຄສ

ປະເທດຈີນເປັນປະເທດທີ່ມີອະຣິຍະທຳອັນຍາວນານທີ່ສຸດ ແລະ ເປັນປະເທດໜຶ່ງທີ່ມີຫຼັກຖານທາງປະຫວັດສາດທີ່ສາມາດຄົ້ນຄວ້າໄດ້ຢ່າງຊັດເຈນໂດຍມີອາຍຸເຖິງ 5000 ປີ, ຫຼັກຖານທີ່ສຳຄັນຂອງອະຣິຍະທຳຈີນຄື: ການສ້າງລະບົບການຂຽນໃນສະຕະວັດທີ3 ກ່ອນ ຄສ ແລະ ການພັດທະນາຂີງຈື້ ໃນສະຕະວັດທີ2 ກ່ອນ ຄສ. ປະຫວັດສາດຈີນກໍ່ຄືກັນກັບປະຫວັດສາດຂອງຫຼາຍປະເທດ ຄືມີທັງໄລຍະທີ່ເປັນປຶກແຜນແໜ້ນໜາ ແລະ ໄລຍະທີ່ແຕກແຍກອອກເປັນຫຼາຍອານາຈັກສະຫຼັບກັນໄປ ແຕ່ບາງຄັ້ງກໍ່ຖືກປົກຄອງຈາກຊາດອື່ນ. ວັດທະນະທຳຈີນມີອິດທິພົນຕໍ່ຊາດອື່ນຫຼາຍໂດຍສະເພາະປະເທດໃນທະວີບອາຊີ ໂດຍສະເພາະແມ່ນທາງດ້ານການຄ້າ ແລະ ວັດທະນະທຳ

- ❖ ຍຸກກ່ອນປະຫວັດສາດຈີນນັ້ນເພິ່ນໄດ້ແບ່ງອອກເປັນ 3 ຍຸກດັ່ງນີ້:

1) **ຍຸກຫີນເກົ່າ:** ປະເທດຈີນເປັນດິນແດນທີ່ມີມະນຸດອາໄສຢູ່ມາເປັນເວລາດົນນານ ຍຸກຫີນເກົ່າຂອງຈີນຢູ່ທີປະມານ 2.000.000 - 10.000 ປີ ກ່ອນ ຄສ ການດຳລົງຊີວິດຂອງມະນຸດໃນຍຸກນັ້ນແມ່ນອາໄສຢູ່ຕາມຖ້ຳ, ຕາມຜາ ຢູ່ນຳກັນເປັນຄອບຄົວ. ມີອາຊີບເກັບເດັດ, ລ່າເນື້ອ. ສ່ຳລັບການລ່າເນື້ອແມ່ນຍັງບໍ່ທັນມີບົດບາດຫຼາຍປານໃດ. ມະນຸດໃນສະໄໝນີ້ແມ່ນຍັງບໍ່ທັນມີເຄື່ອງນຸ່ງຫົ່ມ, ສຳລັບເຄື່ອງມືແມ່ນ ໃຊ້ໄມ້ຄ້ອນ, ກ້ອນຫີນທີ່ຢູ່ຕາມທຳມະຊາດໃຊ້ ແກວ່ງ, ທັບ, ຂຸດ, ໃຊ້ລ່າເນື້ອ ເພິ່ນເຄື່ອງມືໃນສະໄໝນີ້ວ່າເຄື່ອງມືຫີນຫຍາບ, ເຄື່ອງມືຫີນຕ່ອຍ, ເຄື່ອງມືຫີນຂຸດ ເຊິ່ງມີລັກສະນະງ່າຍດາຍ, ສັ້ນ, ໜາ ແລະ ມີປະສິດທິພາບຕໍ່າ.



ຮູບ: ມະນຸດຍຸກຫີນ ແລະ ກະໂຫຼກມະນຸດປັກກິ່ງ

2) **ຍຸກຫີນກາງ:**ຍຸກນີ້ຢູ່ລະຫວ່າງ 10.000 - 6.000 ປີ ກ່ອນ ຄສ ໃນຍຸກນີ້ແມ່ນມະນຸດຮູ້ຈັກປະດິດເຄື່ອງໃຊ້ທີ່ທັນສະໄໝຂຶ້ນກວ່າເກົ່າເຊັ່ນວ່າ: ທະນູ, ລູກທະນູ ແລະ ເລີ່ມຮູ້ຈັກການຜະລິດກະສິກຳ, ຮູ້ຈັກລ້ຽງສັດ ແຕ່ອາຊີບຫຼັກຂອງເຂົາເຈົ້າແມ່ນການລ່າສັດ ເກີດມີການຈັດຕັ້ງການປົກຄອງ( ກົກມານດາສິດທິລາດ) ຕັ້ງຖິ່ນຖານຕາມແຄມທະເລ, ຮູ້ຈັກເຮັດການປະມົງ ໃນເວລານັ້ນມະນຸດຮູ້ຈັກການສ້າງກຳແພງດ້ອຍຫີນ, ຜະລິດຂ້ອນຫີນ ແລະ ຮູ້ຈັກຂຸດອົບມຸງ.
3) **ຍຸກຫີນໃໝ່:** ຍຸກນີ້ຢູ່ລະຫວ່າງ 6.000 - 4.000 ປີ ກ່ອນ ຄສ ເກີດມີການປ່ຽນແປງທາງວັດທະນະທຳຄັ້ງຍິ່ງໃຫຍ່ຂອງມະນຸດ 4 ປະການຄື:

   1. ເກີດມີການຄົ້ນຄິດການປູກເຂົ້າເປັນຄັ້ງທຳອິດ( ເຂົ້າບາເລ, ເຂົ້າຟ່າງ, ຖົ່ວ, ມັນຝຣັ່ງ, ສາລີ ......)
   2. ເກີດມີການລ້ຽງສັດ ເພື່ອຮັບໃຊ້ໃນຊີວິດປະຈຳວັນ
   3. ເລີ່ມຮູ້ຈັກການສ້າງຫັດຖະກຳເຊັ່ນ: ຕ່ຳຫູກ, ເຄື່ອງປັ້ນດິນເຜົາຂຽນລາຍສີ
   4. ຮູ້ຈັກການປະດິດອາວຸດຫຼາຍຊະນິດເຊັ່ນ: ດາບ, ຂວານ, ຫຼາວແຫຼມ, ທະນູ, ລູກສອນ....



ຮູບ: ແຕ້ມຝາຖ້ຳ

### 1.2 ຈຸດສຳຄັນໃນວິຖີຊີວິດຈີນບູຮານ

ຈີນເປັນຊາດໜຶ່ງທີ່ມີຄວາມຈະເລີນມາແຕ່ບູຮານມີອະຣິຍະທຳທີ່ເກົ່າແກ່ ແລະ ມີຄວາມຈະເລີນຮຸ່ງເຮືອງມາຫຼາຍທົດສະວັດ. ປະຈຸບັນຊາວຈີນສ່ວນຫຼາຍເອີ້ນຕົນເອງວ່າ: ຊາວຮັ່ນ ພວກເຂົາຢືນຢັນຄວາມເຂັ້ມແຂງເປັນອັນໜຶ່ງອັນດຽວກັນວ່າອະດີດຕະການຂອງຊາວຮັ່ນເປັນກຸ່ມຄົນທີ່ມີອະຣິຍະທຳທີ່ໂດດເດັ່ນ ແລະ ຈະເລີນຮຸ່ງເຮືອງ

ຊາວຮັ່ນກຳເນີດມາແຕ່ສະໄໝຈັກກະພັດຫວງຕີ້ ຫຼື ອະວີ່ ອາໃສຢູ່ໃນແຖບດິນແດນຈີງຫຍວນ ແລະ ກະຈາຍໄປໃນທົ່ວປະເທດຈີນຍາວນານມາເຖິງ 5.000 ປີ ເລີ່ຕັ້ງແຕ່ສະໄໝເຊຍຈີນມາເລີ່ມເປັນປຶກແຜນໃນສະໄໝຊິນ ແລະ ຮັ່ນ. ສະໄໝຮັ່ນນີ້ເອງ ທີ່ເລີ່ມມີການເອີ້ນຕົນເອງວ່າ: ຊົນຊາດຮັ່ນ ເຊິ່ງເປັນກຸ່ມຄົນທີ່ມີຄວາມເຊື່ອຕາມແບບລັດທິເຕົ໋າ.

ຊາວຮັ່ນ ເປັນຄົນທີ່ມີຄວາມດຸໝັ່ນອົດທົນໃນວຽກງານ ແລະ ມີຫົວຄິດປະດິດສ້າງ, ມີຄວາມກ້າວໜ້າທາງດ້ານກະສິກຳ ແລະ ຫັດຖະກຳທີ່ຈະເລີນກ້າວໜ້າທັງມີການປະດິດເຄື່ອງສຳລິດ, ການຖັກ, ການທໍ, ເຄື່ອງປັ້ນດິນເຜົາ, ສະຖາປັດຕະຍາກຳ ແລະ ສິລະປະການແຕ້ມ ທີ່ເປັນໜ້າເປັນຕາຂອງຊົນຊາດມາແຕ່ຍຸກບູຮານ. ນອກຈາກນີ້ຍັງມີຜົນງານດ້ານວັນນະກຳຮູບແບບຕ່າງໆທີ່ມີການຍອມຮັດໂດຍທົ່ວໄປ ແລະ ທີ່ລືມບໍ່ໄດ້ກໍ່ຄືເປັນກຸ່ມທຳອິດຂອງໂລກທີ່ຄົ້ນພົບ ແລະ ສ້າງສັນປະດິດ 4ຢ່າງຄື: ເຈ້ຍ, ເຕັກເນີກການພິມ, ເຂັມທິດ ແລະ ດິນປືນ

## 2. ຄວາມໝາຍ ແລະ ຄວາມສຳຄັນກ່ຽວກັບປະຫວັດສາດຈີນ

ຄວາມເປັນມາຂອງປະເທດຈີນໃນຍຸກກ່ອນປະຫວັດສາດລ້ວນແຕ່ໄດ້ມາຈາກການສັນນິຖານ ແລະ ໃນການອ້າງອີງຕາມຊາກວັດຖຸທີ່ນັກບູຮານຄະດີໄດ້ຄົ້ນພົບ ຈີນເປັນປະເທດທີ່ມີວັດທະນະທຳທີ່ເກົ່າແກ່ຫຼາຍທີ່ສຸດປະເທດໜຶ່ງໃນໂລກ, ຊາວຈີນສະໄໝກ່ອນປະຫວັດສາດຮູ້ຈັກປະດິດຕົວອັກສອນຂຶ້ນມາໃຊ້ ແລະ ຈາລຶກລົງໃສ່ກະດູກສັດ, ອອງເຕົ່າ, ຜ້າໄໝ ແລະ ກີບໄມ້ໃຜ່ ເຂົາເຈົ້າມີຄວາມຮູ້ທາງດ້ານດາລາສາດ, ຄະນິດສາດ, ການແພດ, ສິລະກຳ, ຕົວໜັງສື ແລະ ປັດຊະຍາ. ວັດທະນະທຳຈີນຍັງເຫຼືອຢ່າງຫຼວງຫຼາຍໃນວິຖີຊີວິດຂອງຜູ້ຄົນບໍ່ໄດ້ສູນເສຍໄປຈາກປະເທດຈີນເລີຍ ກົງກັນຂ້າມຈີນກຳລັງສ້າງຄວາມເປັນເອກະພາບໃຫ້ຕົນເອງວັດທະນະທຳຈີນໄດ້ຮັບການຍອມຮັບເຊື່ອວ່າເປັນວັດທະນະທຳທີ່ມີຄວາມຈະເລີນມາແຕ່ດຶກດຳບັນ

ຄວາມໝາຍ ແລະ ຄວາມສຳຄັນຂອງປະຫວັດສາດຈີນແມ່ນເປັນຈຸດເລີ່ມຕົ້ນຂອງວັດທະນະທຳຕາເວັນອອກທີ່ມີຄວາມກ້າວໜ້າ, ມີຄວາມສີວິໄລທາງດ້ານສະຕິປັນຍາ ແລະ ເຕັກນິກວິທະຍາສາດ ເປັນວິວັດທະນະການທີ່ເຮົາໄດ້ຮຽນຮູ້ ແລະ ປະຍຸກໃຊ້ມາຈົນເຖິງປະຈຸບັນ.

## 3. ວັດທະນະທຳຈີນບູຮານ

### 3.1 ການກຳເນີດກິດຈະກຳຕ່າງໆຂອງຈີນ.

❖ **ຕຸດຈີນ:** ເປັນໜຶ່ງໃນປະເພນີທີ່ສຳຄັນທີ່ສຸດ ຫຼື ຈະເອີ້ນວ່າເປັນມື້ຂຶ້ນປີໃໝ່ຕາມປະຕິທິນຈີນ. ຊາວຈີນໝົດທຸກຄົນແມ່ນໃຫ້ຄວາມສຳຄັນກັບວັນນີ້ເປັນສ່ວນຫຼາຍ ເພາະຖືເປັນງານສະເຫຼີມສະຫຼອງທີ່ຍາວນານທີ່ສຸດ, ວັນຕຸດຈີນນັ້ນຄ້າຍຄືກັບວັນຂຶ້ນປີໃໝ່ໃນປະເທດທາງຕາເວັນອອກ ຮ່ອງຮອຍຂອງປະເພນີພຶດຕິກຳຄວາມເປັນມາຂອງການສະເຫຼີມສະຫຼອງຕຸດຈີນນັ້ນມີມາແຕ່ດົນນານ, ຕຸດຈີນເປັນທີ່ຮູ້ຈັກກັນທົ່ວໄປໃນການສະເຫຼີມສະຫຼອງ ເທດສະການລະດູໃບໄມ້ປົ່ງ. ຕຸດຈີນເກີດຈາກການຈັດຕັ້ງຂຶ້ນເພື່ອຕັ້ງໃຈທີ່ຈະສະເຫຼີມສະຫຼອງຊ່ວງລະດູໃບໄມ້ປົ່ງ ເນື່ອງຈາກຊ່ວງກ່ອນເທດສະການຕຸດຈີນນັ້ນ ປະເທດຈີນປົກຄຸມໄປດ້ວຍຫິມະຈຶ່ງບໍ່ສາມາດເຮັດການກະສິກຳໄດ້ ເມື່ອເຂົ້າເຖິງລະດູໃບໄມ້ປົ່ງໃນແຕ່ລະປີເປັນວັນສຳຄັນທີ່ເອີ້ນວ່າ: ວັນຕຸດຈີນ. ປະເພນີ ແລະ ພິທີກຳຕ່າງໆນັ້ນຜູກໄວ້ກັບທຸກສິ່ງທຸກຢ່າງຕັ້ງແຕ່ອາຫານຈີນໄປຮອດເສື້ອຜ້າ ແລະ ສະເຫຼີມສະຫຼອງເປັນເວລາ 15 ວັນ. ການກຽມງານສະຫຼອງສ່ວນໃຫ່ຍຈະເລີ່ມຂຶ້ນໜຶ່ງເດືອນກ່ອນເຖິງຕຸດຈີນ

- **ວັນເຮັດພິທີ**

ຊາວຈີນຈະເລີ່ມຫ້າງຫາກະກຽມຊື້ເຄື່ອງປະດັບຕົບແຕ່ງ, ເຄື່ອງນຸ່ງ, ຂອງຂວັນ ແລະ ອາຫານ. ນອກຈາກນີ້ຊາວຈີນທຸກຄອບຄົວຍັງມີການອະນາໄມບ້ານເຮືອນເພື່ອປັດກວາດຄວາມໂຊກຮ້າຍອອກໄປເພື່ອເອົາຄວາມໂຊກດີເຂົ້າມາ ພວກເຂົາເຈົ້າຈະມີການປະດັບງານດ້ວຍໄຟໂຄມສີແດງ, ເຈ້ຍສີແດງຕິດຕາມປະຕູທາງເຂົ້າ ແລະ ປ່ອງຢ້ຽມເພື່ອຄວາມເປັນສິລິມຸງຄຸນອັນເປັນທີ່ນິຍົມຂອງຊາວຈີນ ແລະ ອາຫານຈານໃຫ່ຍທີ່ໃຊ້ໃນການກິນລ້ຽງແມ່ນໝູ, ເປັດ, ໄກ່ ແລະ ລົງທ້າຍດ້ວຍອາຫານຫວານ. ນອກຈາກນັ້ນຍັງມີການໃຫ້ອັ່ງເປົາ ຫຼື ຊ່ອງສີແດງ ສຳລັບເດັກນ້ອຍ, ຜູ້ໃຫ່ຍ ໃນຄອບຄົວເພື່ອເປັນການໃຫ້ຂອງຂວັນ.

ເທດສະການຕຸດຈີນນັ້ນມີຫຼາຍພິທີກຳ ແລະ ປະເພນີຫຼາຍຢ່າງໃນການສະເຫຼີມສະຫຼອງ ໃນ15 ວັນມີດັ່ງນີ້:

- ມື້ທີ1: ເປັນການຕ້ອນຮັບເທວະດາແຫ່ງສະຫວັນ ແລະ ໂລກ. ຫຼາຍຄົນງົດກິນຊີ້ນໃນມື້ນີ້ເພາະມີຄວາມເຊື່ອວ່າເປັນການຕໍ່ອາຍຸ ແລະ ນຊາມາເຊິ່ງຄວາມສຸກໃນຊີວິດຂອງຕົນ.
- ມື້ທີ2: ຊາວຈີນຈະໄຫ້ວບັນພະບູລຸດ ແລະ ເທວະດາທັງຫຼາຍ, ໃນມື້ນີ້ຊາວຈີນເຊື່ອວ່າເປັນວັນເກີດກັບໝາເຂົາເຈົ້າຈະມີຄວາມດີໃຈເປັນພິເສດຄືຈະມີການອາບນ້ຳໃຫ້, ເອົາເຂົ້າເອົານ້ຳໃຫ້ກິນ ແລະ ເອົາເຂົ້ານອນນຳ
- ມື້ທີ3-4: ເປັນວັນທີ່ລູກເຂີຍຈະຕ້ອງໄປເຄົາລົບພໍ່ເຖົ້າແມ່ເຖົ້າຂອງຕົນ.
- ມື້ທີ5: ເອີ້ນວ່າ: ພູວູ ມັນເປັນວັນທີ່ທຸດຄົນຈະຕ້ອງຢູ່ໃນເຮືອນເພາະມັນເປັນວັນຂອງເທບພະເຈົ້າແຫ່ງຄວາມລ້ຳລວຍ ໃນມື້ນີ້ຈະບໍ່ມີການໄປຢ້ຽມຢາມເຊິ່ງກັນ ແລະ ກັນ.
- ມື້ທີ6: ແມ່ນການກະກຽມຢ້ຽມຢາມເຊິ່ງກັນ ແລະ ກັນ, ໄປວັດເພື່ອສວດມົນ
- ມື້ທີ7: ເປັນມື້ທີ່ຊາວບ້ານນຳຜົນຜະລິດຂອງຕົນ 7 ຢ່າງເພື່ອເຮັດນ້ຳ, ມື້ນີ້ຖືວ່າເປັນວັນເກີດຂອງຄົນ. ເຂົາເຈົ້າຈະກິນໝີ່ຂົ້ວ ເພື່ອໃຫ້ຊີວິດຍາວນານ ແລະ ກິນປາດິບ ເພື່ອຄວາມສຳເລັດ.

- ມື້ທີ8: ຊາວຟູຈຽນ ຈະມີການກິນເຂົ້າກັບຄອບຄົວອີກເທື່ອໜຶ່ງ ແລະ ເມື່ອເຖິງເວລາຍາມກາງຄືນທຸກຄືນ ຈະສອດມົນຂໍພອນຈາກທຽນກົງ ເທບແຫ່ງສະຫວັນ
- ມື້ທີ9: ຈະສອດມົນໄຫ້ວ ແລະ ຖວາຍອາຫານໃຫ້ແກ່ ເງັກຊຽນຮ່ອງເຕ້
- ມື້ທີ10,11,12: ເປັນມື້ຂອງໝູ່ ແລະ ຍາດຕິພີ່ນ້ອງ. ເຊິ່ງມີການເຊື້ອເຊີນຮັບປະທານອາຫານຄ່ຳ
- ມື້ທີ13: ເປັນມື້ທີ່ກິນເຂົ້າດ້ວຍຜັກດອງກິມຈິ ຖືວ່າເປັນການຊໍາລະລ້າງຮ່າງກາຍ.
- ມື້ທີ14: ແມ່ນມື້ທີ່ກະກຽມໂຄມໄຟ
- ມື້ທີ15: ແມ່ນເປັນມື້ທີ່ນໍາເອົາໂຄມໄຟທີ່ຕຽມໄວ້ມາຈູດເພື່ອປ່ອຍໂຄມໄຟຂຶ້ນທ້ອງຟ້າ.





ຮູບພາບກ່ຽວກັບເທດສະການຕຸດຈີນ

❖ **ວັນໄຫ້ວພະຈັນ**

ກົງກັບວັນເພັງຂຶ້ນ 15 ຄ່ຳ ເດືອນ 8 ຕາມປະຕິທິນດວງຈັນ ເຊິ່ງກົງກັບເດືອນກັນຍາ ຫຼື ຕຸລາ ນັບເປັນຊວງກາງລະດູໃບໄມ້ຫຼົ່ນ. ຊາວຈີນເອີ້ນວ່າ: ຈົງຊິວ. ໃນເທດສະການນີ້ຊາວຈີນຈະສະເຫຼີມສະຫຼອງດ້ວນການໄຫ້ວພະຈັນໃນຕອນກາງຄືນ( ນັບແຕ່ຕາເວັນຕົກດິນ). ເຂົາເຈົ້າຈະໄດ້ມີການຈັດເປັນພະເພນີໃຫ່ຍມີການສະເຫຼີມສະຫຼອງດ້ວຍໂຄມໄຟສີແດງ ແລະ ອາດມີການເຊີດມັງກອນ. ທີ່ມາຂອງເທດສະການນີ້ແມ່ນມີຫຼາຍຕໍານານ ແຕ່ຕໍານານທີ່ກ່ຽວຂ້ອງກັບປະຫວັດສາດຂອງຈີນນັ້ນແມ່ນເລີ່ມຈາກຊ່ວງທີ່ປະເທດຈີນຖືກປົກຄອງດ້ວຍຊາວມົງໂກນ( ລາຊະວົງຢວນ)  ແລະ ຊາວຈີນທັງຫຼາຍຖືກກົດຂີ່ຂູດຮີດຢ່າງໜັກດ້ວຍຫຼາຍຮູບການ ແລະ ໜຶ່ງໃນນັ້ນໄດ້ສົ່ງທະຫານມົງໂກນເຂົ້າໄປປະຈໍາຢູ່ແຕ່ລະໝູ່ບ້ານຂອງຊາວຈີນ( ຊາວຮັ່ນ) ຈີນເຮັດໃຫ້ເຂົາເກີດມີການກໍ່ກະບົດຂຶ້ນດ້ວຍການແອບສົ່ງສານແອກຍັດໃສ່ໃນໄສ້ເຂົ້າໜົມ  ເຊິ່ງມີເນື້ອໃນຄວາມໝາຍວ່າ: ຄືນນີ້ເມື່ອເວລາຍາມ3(ເຊິ່ງວັນນັ້ນເປັນວັນເພັງ ຂຶ້ນ 15 ຄ່ຳ ເດືອນ 8 ພໍດີ) ໃຫ້ທຸກບ້ານຈັດການ(ສັງຫານ) ທະຫານມົງໂກນໃຫ້ໝົດ. ຈີນນໍາໄປເຖິງສາມາດໂຄ່ນລົ້ມອໍານາດການປົກຄອງໄດ້ໃນທີ່ສຸດ ດັ່ງນັ້ນເພື່ອເປັນການສະເຫຼີມສະຫຼອງ ແລະ ລໍາເລິກເຖິງການກອບກູ້ແຜນດິນທີ່ປະສົບຄວາມສໍາເລັດ ຈຶ່ງມີປະເພນີນີ້ສືບທອດກັນມາຈົນຮອດປະຈຸບັນ.



ຮູບ: ເຂົ້າໜົມໄຫ້ວພະຈັນ ແລະ ພິທີການໄຫ້ວ

# ບົດທີ2:
# ຈີນສະໄໝການປົກຄອງຂອງບັນດາລາຊະວົງຕ່າງໆ

## 1. ລາຊະວົງຈີນໃນສະໄໝຂ້າທາດ

### 1.1 ລາຊະວົງເຊຍ 2100-1600 ປີ ກ່ອນ ຄສ

ລາຊະວົງເຊຍເປັນລາຊະວົງທຳອິດຂອງປະຫວັດສາດຈີນທີ່ເລີ່ມມີລະບອບການປົກຄອງຈາກພໍ່ສືບທອດໃຫ້ລູກ. ສູນກາງການປົກຄອງຂອງລາຊະວົງເຊຍແມ່ນຢູ່ບໍລິເວນພາກໃຕ້ມົນທົນຊິນຊີ ແລະ ພາກຕາເວັນຕົກຂອງມົນທົນເຫີນນານໃນປະຈຸບັນ



ຮູບແຜນທີ່ລາຊະວົງເຊຍ

ພະເຈົ້າອະວີ່ ຜູ້ສະຖາປານາລາຊະວົງເຊຍ ເພິ່ນເປັນວິລະບູລຸດທີ່ແກ້ໄຂບັນຫາອຸທົກກະໄພນ້ຳຖ້ວມບ້ານເຮືອນປະຊາຊົນ. ໃນເວລາທີ່ເກີດເຫດນ້ຳຖ້ວມນັ້ນປະຊາຊົນຕ້ອງໄດ້ອົບພະຍົບໜີ, ໄປອາໄສຢູ່ຕາມຕົ້ນໄມ້, ອາໄສຢູ່ເທິງພູ. ຫຼັງຈາກທີ່ພະເຈົ້າອະວີ່ ໄດ້ໃຊ້ເວລາ 13 ປີເພື່ອແກ້ໄຂບັນຫານີ້ ໃນທີ່ສຸດເພິ່ນກໍ່ສາມາດແກ້ໄຂບັນຫານີ້ໄດ້ປະຊາຊົນຈຶ່ງຍົກຍ້ອງສັນລະເສີນ ແລະ ສະໜັບສະໜູນໃຫ້ມີການສະຖາປານາລາຊະວົງເຊຍຂຶ້ນ. ການສະຖາປານາລາຊະວົງເຊຍຖືວ່າເປັນສັນຍາລັກຂອງສັງຄົມກຳມະສິດໄດ້ເຂົ້າມາແທນສັງຄົມດຶກດຳບັນທີ່ມີມາເປັນເວລາຍາວນານ. ນັບແຕ່ນັ້ນມາຈີນກໍ່ໄດ້ກ້າວເຂົ້າສູ່ລະບອບຂ້າທາດ.

ການກໍ່ຕັ້ງລາຊະວົງເຊຍແມ່ນໄດ້ອຳນາດຈາກການຍຶດຄອງຊັບສິນຂອງສ່ວນຕົວ ເປັນສັນຍາລັກວ່າສັງຄົມຍຸກດຶກດຳບັນທີ່ມີຊັບສິນເປັນຂອງສາທາລະນະກຳລັງຖືກປ່ຽນແທນດ້ວຍສັງຄົມແບບຍຶດຄອງແບບຊັບສິນສ່ວນຕົວ ແລະ ກໍ່ເປັນວິວັດທະນາການທາງປະຫວັດສາດຊ່ວງເວລາໃດໜຶ່ງ. ແຕ່ວ່າໂດຍປົກກະຕິການກໍ່ເກີດຂອງລະບົບໃໝ່ມັກມີບັນຫາກັບແຮງຕ້ານຈາກຝ່າຍອະນຸລັກ. ພາຍຫຼັງການຊິ້ນພະຊົນຂອງອະວີ່ ກໍ່ໄດ້ມີການຈັດຕັ້ງໃຫ້ລູກຊາຍຂອງເພິ່ນສືບທອດຕຳແໜ່ງ ໂດຍການເຊື້ອເຊີນເອົາຫົວໜ້າເຜົ່າຈາກດິນແດນຕ່າງໆມາໃນງານລ້ຽງເພື່ອຮັບຮອງເອົາການຂຶ້ນສູ່ຕຳແໜ່ງໃໝ່ ແຕ່ມີກຸ່ມ ຮູ່ຊື ທີ່ບໍ່ພໍໃຈຄັດຄ້ານຕໍ່ການຂຶ້ນດຳລົງຕຳແໜ່ງເຊ່ຍສີ ຈຶ່ງບໍ່ຍອມເຂົ້າມາຮ່ວມໃນງານລ້ຽງ ຕໍ່ມາເຊ່ຍສີ ໄດ້ຍົກທັບອອກໄປປາບຮູ່ຊື ໂດຍໄດເຮັດເສິກກັນ. ໃນການສູ້ຮົບຄັ້ງນີ້ແມ່ນເຊ່ຍສີ ເປັນຝ່າຍຊະນະ. ໄຊຊະນະຈາກການສູ້ຮົບຄັ້ງນີ້ແມ່ນບາດກ້າວທຳອິດທີ່ສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກຄອງໃໝ່.

ລະບົບການປົກຄອງໃໝ່ນີ້ຄ່ອຍໆພັດທະນາຂຶ້ນ ໃນຂະນະທີ່ຜູ້ປົກຄອງໃໝ່ຕ້ອງພົບກັບບັນຫາການຂາດປະສົບການໃນການປົກຄອງ, ຮາກຖານຂອງອຳນາດທີ່ມາຈາກການຍຶດຊັບເປັນຂອງສ່ວນຕົວເພື່ອອຳນາດອັນຍິ່ງໃຫ່ຍເຮັດໃຫ້ສະພາບການຂູດຮີດ, ຍາດແຍ່ງ ແລະ ຄວາມຕ້ອງການອຳນາດຂອງຜູ້ປົກຄອງເປັນໄປຢ່າງຮຸນແຮງ ແລະ ບໍ່ສາມາດຫຼີກລຽງໄດ້ຈາກການຍາດແຍ່ງຜົນປະໂຫຍດ ແລະ ອຳນາດໃນກຸ່ມຜູ້ປົກຄອງນຳກັນເອງ.

ດັ່ງນັ້ນເມື່ອເຊ່ຍສີ ສິ້ນພະຊົນ ບຸດຊາຍຂອງລາວທັງຫ້າພໍ່ພາກັນຍາດແຍ່ງອຳນາດກັນ ຈົນໃນທີ່ສຸດ ໄທ່ຄັງໄດ້ເປັນຜູ້ຂຶ້ນຄອງລາດຊະສົມບັດຕໍ່ ແຕ່ລາວພັດບໍ່ໄດ້ສົນໃຈນຳເຫດການບ້ານເມືອງ ມີແຕ່ມົວເມົານຳສຸລານາລີ ຈຶ່ງເປັນໂອກາດດີໃຫ້ແກ່ການຂຶ້ນຊີງອຳນາດ ຈົນໃນທີ່ສຸດກໍ່ໄດ້ເສຍອຳນາດໃຫ້ແກ່ ອີ້ ຕໍ່ມາ ອີ້ໄດ້ຖືກຂຸນນາງຂອງລາວ

ທີ່ຊື່ ຈົ້ວ ສັງຫານ ແລ້ວຂຶ້ນກຳອຳນາດແທນ ຈຶ່ງເຮັດໃຫ້ເກີດຄວາມບໍ່ສະຫງົບໃນລາຊະວັງ ຈຶ່ງໃຫ້ລູກຊາຍຂອງໄທ່ຄັງຜູ່ທີຫຼົບໜີເຂົ້າມາຊີງອຳນາດກອບກູ້ເອົາລາຊະວົງຄືນ.



ຮູບ: ກະສັດຂອງລາຊະວົງທີ່ມົວເມົາກັບສຸລານາລີ

ເມື່ອຮອດໄລຍະທ້າຍຂອງລາຊະວົງເຮຍ ສູນກາງອຳນາດພາຍໃນເກີດຄວາມວຸ້ນວາຍ, ເກີດຂໍ້ຂັດແຍ່ງທາງຊົນຊັ້ນນັບມື້ນັບຮຸນແຮງໃນເມື່ອ ເຊຍເຈ໋ຍ ໄດ້ຂຶ້ນຄອງລາດຊະສົມບັດ ແຕ່ບໍ່ມີການປະຕິຮູບແກ້ໄຂແຕ່ຢ່າງໃດຍັງຄົງຟຸມເຟີໃນອຳນາດ, ສັ່ງໃຫ້ກໍ່ພາລາຊະວັງ, ໃຊ້ຈ່າຍເງິນຢ່າງຟຸມເຟືອຍ, ມົວເມົາກັບສຸລານາລີທຸກມື້ທຸກຄືນ ໂດຍບໍ່ມີຄວາມສົນໃຈຕໍ່ປະຊາຊົນລາດຊະດອນ ປະຊາຊົນຈຶ່ງເກີເມີຄວາມບໍ່ພໍໃຈດ່າປະນາມກະສັດຢ່າງຮຸນແຮງ, ຂຸນນາງຜູ້ຈົ່ງຮັກພັກດີພັດຖືກຈັບກຸມຄຸມຂັງ ຫຼື ປະຫານຊີວິດ, ບັນດາເຈົ້ານາຍຊັ້ນສູງພາກັນເອົາໃຈອອກຫ່າງ ເຊຍເຈ໋ຍ ຈຶ່ງຕົກຢູ່ໃນສະຖານະໂດດດ່ຽວ. ຊາງຖັງ ເຫັນໂອກາດເໝາະສົມຈຶ່ງໃຊ້ຂໍ້ອ້າງກ່າວຫາວ່າລາຊະວົງເຮຍ ເຮັດຜິດຕໍ່ຟ້າຈຶ່ງຖືກລົງໂທດ. ໂດຍຂໍໃຫ້ທຸກຄົນລວມພະລັງກັນເຂົ້າໂຈມຕີພະລາຊະວັງ ສຸດທ້າຍ ຊາງຖັງ ກໍ່ສາມາດເອົາຊະນະເຊຍເຈ໋ຍ ແລ້ວເຊຍເຈ໋ຍກໍ່ສິ້ນພະຊົນ ເປັນການສິ້ນສຸດລາຊະວົງເຮຍ.

## 1.2 ລາຊະວົງຊາງ 1600-1100 ກ່ອນ ຄສ

ລາຊະວົງຊາງເປັນລາຊະວົງທີສອງຂອງຈີນເຊິ່ງປົກຄອງຕໍ່ຈາກລາຊະວົງເຮຍ. ລາຊະວົງຊາງ ສະຖາປານາຂຶ້ນເມື່ອປະມານ ສະຕະວັດທີ17 - 16 ກ່ອນ ຄສ ສິ້ນສຸດລົງໃນສະຕະວັດທີ 11 ກ່ອນ ຄສ ກິນເວລາປະມານ 700 ກວ່າປີ ລາຊະວົງຊາງໄດ້ຍ້າຍເມືອງຫຼວງຫຼາຍຄັ້ງໃນທີ່ສຸດຈຶ່ງໄປຕັ້ງເມືອງຫຼວງຂຶ້ນຢູ່ທີ່ກຸງຢິນ. ( ບໍລິເວນເມືອງອັນຢາງ ຂອງມົນທົນເຫີໜານ ໃນປະຈຸບັນ)




ຮູບແຜນທີ່ລາຊະວົງຊາງ

ຫຼັງຈາກລາຊະວົງຊາງໄດ້ກໍ່ຕັ້ງຂຶ້ນແລ້ວ. ກໍ່ໄດ້ຍົກເລີກການກົດຂີ່ຂູດຮີດປະຊາຊົນ ຍ້ອນມີບົດຮຽນມາຈາກການປົກຄອງຂອງລາຊະວົງເຮຍ. ຜູ້ນຳລາຊະວົງຊາງໄດ້ມານຳໃຊ້ຫຼັກເມດຕາທຳໃນການປົກຄອງເຮັດໃຫ້ສະພາບການບ້ານເມືອງໃນໄລຍະນີ້ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍດີ, ບໍ່ມີຄວາມຂັດແຍ່ງ, ສະພາບການບ້ານ

ເມືອງມີຄວາມສະຖຽນລະພາບ, ການທະຫານກໍ່ມີຄວາມເຂັ້ມແຂງ. ຈຶ່ງໄດ້ເລີ່ມເຮັດສົງຄາມກັບແຄ້ວນທີ່ຢູ່ໃກ້ຄຽງກໍ່ສາມາດຍາດໄດ້ໄຊຊະນະ ເຊິ່ງໃນບັນທຶກຊົງຈື້ຂຽນວ່າ: ຢູ່ໃນສະໜາມຮົບ ບໍ່ມີຜູ້ຕໍ່ຕ້ານ. ສະແດງໃຫ້ເຫັນວ່າພາຍໃຕ້ການປົກຄອງຂອງລາຊະວົງຊ່າງແມ່ນມີຄວາມເຂັ້ມແຂງຫຼາຍ

ໃນສະໄໝທຳອິດໃນການປົກຄອງລາຊະວົງຊາງ ກະສັດ ມີເສນາບໍດີທີ່ມີຄວາມຮູ້ຄວາມສາມາດ, ມີຄວາມເກັ່ງກ້າອາດຫານຊ່ອຍເຫຼືອຢູ່ 2 ຄົນຄື: ອີຫຍິ່ນ ແລະ ຈົ່ງຮຸຍ ຈາກການບັນທຶກເຫັນວ່າພວກເຂົາທັງສອງມີບົດບາດທາງດ້ານການເມືອງໃນການບໍລິຫານແຜ່ນດິນ. ໂດຍທີ່ພວກເຂົາໄດ້ດຳລົງຕຳແໜ່ງເສນາບໍດີຊ້າຍ-ຂວາ ແລ້ວກໍ່ມີຜົນງານດີເດັ່ນໃນການບໍລິຫານບ້ານເມືອງ, ຮັກສາຄວາມສະຫງົບ ແລະ ພັດທະນາການຜະລິດ ຫຼັງຈາກ ຈົ່ງຮຸຍ ເສຍຊີວິດບົດບາດທາງການເມືອງຂອງ ອີຫຍິນ ກໍ່ຍິ່ງໂດດເດັ່ນຫຼາຍຂຶ້ນ ແລະ ກາຍເປັນເສນາບໍດີທີ່ເກົ່າແກ່ໃນພາລາຊະວັງໃນສະໄໝນັ້ນ



ຮູບ: ເສນາບໍດີອີຫຍິ່ນ

ຈາກການບັນທຶກປະຫວັດສາດຂອງຊົນເຜົ່າຍິນ. ໄດ້ກ່າວວ່າ: ຫຼັງຈາກທີ່ໄທ່ເຈ່ຍ ຄອງລາດໄດ້ 3 ປີ ກໍ່ບໍ່ຢູ່ໃນທຳ ບໍ່ຢູ່ໃນກົດ ຈົນຖືກ ອີຫຍິນ ຈັບຂັງໄວ້ໃນວັງເຖິງ 3 ປີ ຈຶ່ງຮູ້ສຳນຶກຜິດ ຈາກນັ້ນ ອີຫຍິນ ຈຶ່ງໄດ້ເຊີນໄທ່ເຈ່ຍກັບຄືນມາຄອງບັນລັງ ຈາກນັ້ນໄທ່ເຈ່ຍ ຈຶ່ງປົກຄອງແຜ່ນດິນດ້ວຍຄວາມເປັນທຳ, ຂຸນນາງຍອມຈົ່ງຮັກພັກດີ, ປະຊາຊົນຢູ່ເຢັນເປັນສຸກ ນີ້ເປັນເລື່ອງເລົ່າທີ່ສະແດງວ່າ ອີຫຍິນ ເປັນຢູ່ດຳລົງການປົກຄອງໂດຍຫຼັກທຳເຮັດໃຫ້ລາຊະວົງຊາງປົກຄອງແຜນດິນດ້ວຍຄວາມຮົ່ມເຢັນເປັນເວລາດົນນານ ແລະ ໄດ້ກາຍເປັນເລື່ອງເລົ່າຂານຕໍ່ມາຈົນເຮັດໃຫ້ຊື່ສຽງຂອງ ອີຫຍິນ ໄດ້ຮັບການເຊີດຊູ ແລະ ນຳມາໃຊ້ເອີ້ນວ່າຜູ້ທີ່ມີເມດຕາທຳ ແລະ ຄຸນນະທຳສູງ.

ບັນທຶກປະຫວັດສາດຂອງເຜົ່າຍິນຍັງໄດ້ຂຽນໄວ້ອີກວ່າ: ນັບແຕ່ສະໄໝ ຈົ່ງຕິງ ເປັນຕົ້ນມາ ຜູ້ປົກຄອງໄດ້ຖິ້ມຄວາມຮັບຜິດຊອບ, ບໍ່ມີຄວາມເປັນທຳ, ແຕ່ງຕັ້ງເຊີເຊູແຕ່ພວກລູບແຄ່ງເລ່ຍຂາ, ເຫຼົ່າຍາດມິດຕ່າງພາກັນແບ່ງພັກແບ່ງພວກເພື່ອຍາດຊີງອຳນາດກໍ່ໃຫ້ເກີດຄວາມວຸ້ນວາຍບໍ່ຢຸດບໍ່ຢອນ ເປັນເຫດເຮັດໃຫ້ພວກຂຸນນາງພາກັນກໍ່ກະບົດ

ຈາກສະໄໝນີ້ຈີນອີກ ໑ ກະສັດປົກຄອງບ້ານເມືອງແມ່ນບໍ່ມີຄວາມສະຫງົບ ເຕັມໄປດ້ວຍການຍາດຊີງບັນລັງໃນລາຊະວົງຊາງ ເຊິ່ງເປັນຕົ້ນເຫດການລົ້ມລະລາຍຂອງລາຊະວົງ ແລະ ຄວາມວຸ້ນວາຍນັ້ນກໍ່ໄດ້ເຮັດໃຫ້ມີການຍ້າຍເມືອງຫຼາຍຄັ້ງ.

ໃນສະໄໝຊາງໄດ້ມີຄວາມເຊື່ອກ່ຽວກັບຄໍາວ່າ: ຟ້າ, ອັກສອນຈານເທິງກະດູກສັດທີ່ພົບມີອັກສອນຄໍາວ່າ: ຕີ້ ຫຼື ເຕ້. ດັ່ງນັ້ນມັນໄດ້ສະແດງວ່າເມື່ອຄັ້ງທີ່ຊາງຍົກທັບໄປປາບປາມເຊ່ຍເຈ່ຍ ກະສັດອົງສຸດທ້າຍແຫ່ງລາຊະວົງເຊຍນັ້ນຈຶ່ງມີຄໍາກ່າວວ່າ: ເຊຍເຮັດຜິດຕໍ່ຟ້າ ສົມຄວນໄດ້ຮັບການລົງໂທດ ໂດຍໃຊ້ຄໍາຂ້ອນທີ່ວ່າ: ຟ້າກໍານົດ ເພື່ອກະຕຸ້ນໃຫ້ກອງທັບ ແລະ ຜູ້ຈົ່ງຮັກພັກດີໃຫ້ມີຄວາມຫ້າວຫັນ. ເພື່ອເປັນການຊອກຫາເສັ້ນທາງເພື່ອກ້າວສູ່ບັນລັງໂດຍເຊື່ອວ່າມີເທບແຫ່ງຟ້າ, ເທບແຫ່ງດິນ ເປັນຂອງຄູ່ກັນ ເພື່ອປະຕິບັດພາລະກິດຈາກຟ້າ ເທບແຫ່ງດິນຈຶ່ງໃຊ້ພິທີກໍາໃນການຕິດຕໍ່ກັບຟ້າ ດັ່ງນັ້ນ ເວລາທີ່ຊ່າງອ່ອງເຊັ່ນໄຫ້ວບັນພະບູລຸດນັ້ນຈຶ່ງໃຊ້ເຄື່ອງບູຊາທັງຫ້າການເຮັດພິທີຕ້ອງເຊັ່ນໄຫ້ວໃນເຂດສຸສານຫຼວງບໍລິເວນເມືອງຍິນ ຫຼື ເມືອງອັນຢ່າງໃນປະຈຸບັນ, ນັກບູຮານຄະດີໄດ້ຄົ້ນພົບຮ່ອງຮອຍການບູຊາໃນຫຼຸມສິບພັນແຫ່ງ ແລະ ພົບວ່າໃນສະໄໝອູ່ຕິງ ນັ້ນມີການໃຊ້ຄົນຫຼາຍຮ້ອຍຄົນເປັນເຄື່ອງສັງເວີຍໃນການບູຊາພິທີດັ່ງກ່າວ ເຮັດໃຫ້ເຫັນວ່າໃນສະໄໝຊາງນັ້ນແມ່ນໃຫ້ຄວາມສໍາຄັນຕໍ່ການເຊັ່ນໄຫ້ວຕໍ່ບັນພະບູລຸດເນື່ອງຈາກຮອງເຕ້ຄືເທບພະເຈົ້າ



ຮູບ: ວັດຖຸບູຮານບາງສ່ວນຂອງຈີນໃນສະໄໝລາຊະວົງຊາງ

ນອກຈາກນີ້ຍັງມີການພັດທະນາກໍາລັງການຜະລິດໄດ້ມີການຜະລິດເຄື່ອງມືດ້ວຍທອງສໍາລິດ ແລະ ຍັງໄດ້ພົບຮ່ອງຮອຍການໃຊ້ເຕັກເນິກການແຍກຫຼອມຢ່າງຫຼວງຫຼາຍ, ຈາກການຂຸດໄດ້ພົບເຫັນເຄື່ອງມືທີ່ເຮັດຈາກໂລຫະເຊັ່ນ: ທອງແດງ, ກົ່ວ ແລະ ດີບຸກ. ປະລິມານການຜະລິດເຄື່ອງມືກໍ່ເພີ່ມຂຶ້ນເປັນຈໍານວນຫຼວງຫຼາຍມີການຫຼອມສ້າງໂອງຟາງອີ້ ທີ່ເປັນພະຫະນະໃສ່ເຫຼົ້າໃນສະໄໝບູຮານ ແລະ ຕິ່ງ ເຊິ່ງມີຮູບຮ່າງເປັນໝໍ້ໂລຫະຂະໜາດໃຫ່ຍມີ 3 ຂາໃຊ້ໃນພິທີເຊັ່ນໄຫ້ວເທບພະເຈົ້າ ແລະ ໃຊ້ສະແດງສະຖານາທາງສັງຄົມ. ນອກຈາກນີ້ຍັງມີຄວາມກ້າວໜ້າທາງການຕໍ່າແຜນແພ, ການແພດ, ການຄົມມະນາຄົມ ແລະ ດາລາສາດ.

ຫຼັງຈາກ ອູ່ຕິ່ງ ເສຍຊີວິດໄລຍະແຫ່ງຄວາມຈະເລີນຮຸ່ງເຮືອງກໍ່ສິ້ນສຸດລົງ ເມື່ອມາຮອດສະໄໝຂອງຈູ່ເກີງ, ຈູ່ເຈຍ, ຕີ້ອີ ແລະ ຕີ້ຊີງ ນັ້ນໄດ້ເກີດເສີກຂໍ້ຂັດແຍ່ງພາຍໃນຢ່າງຮຸນແຮງ ຂຸນນາງອ້ອມຂ້າງຕ່າງກໍ່ພາກັນລຸກຮື້ຂຶ້ນຕໍ່ຕ້ານ ເຖິງຈະພົບກັບສະຖານະການແບບນີ້ແຕ່ ຕີ້ຊີງ ກໍ່ບໍ່ໄດ້ຄິດຈະປັບປຸງປ່ຽນແປງແຕ່ຢ່າງໃດ ທັງບໍ່ຮັບຟັງຄໍາຕັກເຕືອນຈາກຜູ້ຫວັງດີ, ຫຼົງມົວເມົາຢູ່ກັບຊີວິດທີ່ຟຸ້ງເຟີ້ຍິ່ງເຮັດໃຫ້ເພີ່ມທະວີຄວາມຂັດແຍ່ງຂຶ້ນຕື່ມ.

ໃນເວລາດຽວກັນກໍ່ໄດ້ເປີດເສິກກັບເຜົ່າຕົງອີ້ ຍິ່ງເພີ່ມທະວີພາລະອັນໜັກໜ່ວງໃຫ້ແກ່ປະຊາຊົນ ແລະ ເຮັດໃຫ້ສູນເສຍກຳລັງທະຫານອີກດ້ວຍກ ດັ່ງນັ້ນເມື່ອ ໂຈອູ່ ຍົກທັບເຂົ້າມາໃກ້ຊາຍແດນ ຕີ້ຊິງ ຈຶ່ງໄດ້ລວບລວມກຳລັງພົນເພື່ອອອກໄປຮັບເສິກ ຜົນສຸດທ້າຍກອງກຳລັງທະຫານຝ່າຍຊາງເປັນຝ່າຍປາລາໄຊ ເມື່ອເປັນແນວນັ້ນ ຕີ້ຊິງ ຈຶ່ງຫອບເອົາຊັບສົມບັດແລ້ວຫຼົບໜີໄປເມືອງລູໄຖ ສຸດທ້າຍກໍ່ເສຍຊີວິດລົງ ແລ້ວລາຊະວົງຊາງກໍ່ສິ້ນສຸດລົງ.

## 1.3 ລາຊະວົງຊິນຫຼື ໂຈ ຫຼື ຊົວ 1100-256 ປີ ກ່ອນ ຄສ

ໃນສະໄໝຊາງ ມີຊົນເຜົ່າປະສົມລະຫວ່າງເຕີກກັບຕີເບດ ເຂົ້າມາຕັ້ງລັດຂອງຕົນຂຶ້ນໃນບໍລິເວນລຸ່ມແມ່ນ້ຳເວີ່ຍ ບໍລິເວນມົນທົນລັນຊີ ໃນໄລຍະທຳອິດກໍ່ອ່ອນນ້ອມຕໍ່ລາຊະວົງຊາງ ນຳເອົາຄວາມຈະເລີນຂອງພວກຊ່າງມາເຮັດໃຫ້ຕົນເອງເປັນປຶກແຜ່ນຂຶ້ນ, ຈົນຮອດກະສັດອົງສຸດທ້າຍຂອງລາຊະວົງຊາງທີ່ບໍ່ມີຄວາມຮັບຜິດຊອບຕໍ່ໜ້າທີ່ຂອງຕົນເອງ, ປ່ອຍປະລະເລີຍປະຊາຊົນ, ປົກຄອງດ້ວຍຄວາມບໍ່ຍຸດຕິທຳ, ກົດຂີ່ຂູດຮີດພວກທາດຢ່າງໂຫດຮ້າຍທາລຸນສະນັ້ນໃນຕົ້ນສະຕະວັດທີ 11 ກ່ອນ ຄສ ອູ່ຫວັງຜູ້ປົກຄອງແຄ້ວນໂຈ ຈຶ່ງລວບລວມຂຸນນາງທີ່ບໍ່ພໍໃຈກະສັດລາຊະວົງຊາງ ໂດຍນຳກຳລັງທາດ ແລະ ສາມັນຊົນເຂົ້າຢຶດອຳນາດລາຊະວົງຊາງ ແລ້ວກໍ່ຕັ້ງລາຊະວັງໂຈໄດ້ສຳເລັດ ແລະ ລວມເອົາອານາຈັກຊາງ ມາໄວ້ຢູ່ໃຕ້ການປົກຄອງຂອງລາວົງໂຈນຳ

ລາຊະວົງໂຈ ເປັນລາຊະວົງທີ່ມີອາຍຸຍາວນານກວ່າລາຊະວົງອື່ນ ມີອາຍຸປະມານ 800 ກວ່າປີ ແຕ່ມີຊວງເວລາທີ່ເຂັ້ມແຂງແທ້ພຽງແຕ່ 350 ປີເທົ່ານັ້ນ ມີກະສັດປົກຄອງທັງໝົດ 35 ພະອົງ ໂດຍແບ່ງອອກເປັນ 2 ຍຸກຄື: ໂຈຕາເວັນຕົກ ແລະ ໂຈຕາເວັນອອກ.



ຮູບແຜນທີ່ລາຊະວົງໂຈ

### 1.1.1 ຍຸກໂຈຕາເວັນຕົກ( ເມືອງຫຼວງທີ່ເມືອງເກົ່າຈິງ 1046-771 ປີ ກ່ອນ ຄສ)

ໃນສະໄໝໂຈຕາເວັນຕົກເປັນຊ່ວງທີ່ມີການປ່ຽນລະບອບຈາກສັງຄົມທາດໄປສູ່ສັງຄົມສັກດີນາ ໃນສະໄໝນີ້ຍັງມີການປົກຄອງລະບົບທາດເຊິ່ງໄດ້ຮັບອິດທິພົນຈາກສະໄໝຊາງທີ່ຍັງຫຼົງເຫຼືອຢູ່. ແຕ່ຫຼຸດຄວາມໂຫດຮ້າຍລົງໂດຍໄດ້ຍົກເລີກປະເພນີການຂ້າມະນຸດເພື່ອສັງເວີຍເທບພະເຈົ້າ ແລະ ໄດ້ມີການປົດປ່ອຍທາດສວນໜຶ່ງ. ເອີ້ນໄດ້ວ່າໃນສະໄໝນີ້ເລີ່ມີການປົກຄອງແບບສັກດີນາແລ້ວ ອາດເວົ້າສະໄໝໂຈຕາເວັນຕົກເປັນຈຸດເລີ່ມຕົ້ນຂອງສັງຄມສັກດີນານຳໄປສູ່ການພັດທະນາໃນະໄໝໂຈຕາເວັນອອກເປັນສັງຄົມສັກດີນາຢ່າງເຕັມຮູບແບບ ແລະ ພັດທະນາໄປສູ່ລາຊະວົງອື່ນ.

ການປົກຄອງໃນສະໄໝໂຈຕາເວັນຕົກນັ້ນ ເປັນລະບອບສັກດີນາເຊິ່ງເປັນການປົກຄອງແບບກະຈາຍອຳນາດ. ກະສັດໂຈເຊິ່ງເປັນຜູ້ມີອຳນາດສູງສຸດຈະມີອຳນາດໃນການຕັດສິນໃຈມອບ ຊັບພະຍາກອນ, ພາລະກິດສ່ວນກາງໄປໃຫ້ບຸກຄົນໃດໜຶ່ງດູແລ ກະສັດຈະຕ້ອງພະລາຊະທານບັນດາຍົດສັກໃຫ້ແກ່ເຈົ້າຂຸນມຶນນາຍ, ນາຍທາດເກົ່າຂອງລາຊະວົງຊາງ ແລະ ເຄືອຍາດໂດຍແບ່ງເປັນບັນດາສັກ 5 ຊັ້ນຄື: ກຸງ, ໂຈ, ປໍ້, ຈື ແລະ ໝັນ ເຊິ່ງກະສັດໂຈໄດ້ສົ່ງນາງເຫຼົ່ານີ້ໄປປົກຄອງເມືອງນ້ອຍໃຫ່ຍໂດຍໃຫ້ຂຸນນາງມີອຳນາດເດັດຂາດໃນເມືອງນັ້ນໆ ເຊິ່ງຂຸນນາງເຫຼົ່ານີ້ຈະຕ້ອງຈົ່ງຮັກພັກດີ ແລະ ມີການເສຍຊວ່ຍຕໍ່ລາຊະວົງເພື່ອເປັນການຕອບແທນ ຕ້ອງເຊື່ອຟັງ, ສົ່ງເຄື່ອງບັນນາການ, ຊ່ວຍປ້ອງກັນບ້ານເມືອງ, ຍອມໃຫ້ເມືອງຫຼວງເກນແຮງງານຈາກເມືອງຂອງຕົນ, ສ່ວນກະສັດໂຈ ກໍ່ພະຍາຍາມຄວບ

ຖຸມຂຸນນາງສັກດິນາດ້ວຍການສົ່ງຕົວແທນກະສັດໄປປະຈຳຢູ່ເມືອງຕ່າງໆ ເພື່ອກວດຄວາມເປັນລະບຽບຮຽບຮ້ອຍ ແລະ ລາຍງານໃຫ້ກະສັດຮັບຮູ້. ນອກຈາກນີ້ຍັງມີການກຳນົດທະຫານໃນເມືອງຄືເມືອງທີ່ໃຫ່ຍສຸດໃຫ້ມີທະຫານ ເທົ່າກັບເຄິ່ງໜຶ່ງຂອງກະສັດໂຈ.

ເຖິງວ່າການປົກຄອງໃນໄລຍະນີ້ຈະເປັນແບບກະຈາຍອຳນາດ ແຕ່ດິນແດນຂອງລາຊະວົງກໍ່ໄດ້ແຜ່ຂະຫຍາຍໄປຢ່າງກວ້າງໃຫ່ຍໄພສານ ແລະ ໝັ້ນຄົງ ພ້ອມທັງຂຸນນາງກໍ່ມີຄວາມຈົ່ງຮັກພັກດີ ສຳລັບຄວາມຄິດ ແລະ ວິທະຍາສາດໃນສະໄໝນີ້ແມ່ນມີຄວາມຈະເລີນທີ່ມີປັດໃຈມາຈາກ2 ພາກສ່ວນຄື: ຄວາມຈະເລີນທີ່ໄດ້ມາຈາກການຖ່າຍທອດຈາກລາຊະວົງຊາງ ເຊັ່ນວ່າ: ອັກສອນພາບ, ການໃຊ້ກະດູກ ຫຼື ອອງເຕົ່າທຳນາຍອານາຄົດ, ການທຳນາຍປະຕິທິນ ແລະ ອີກສ່ວນໜຶ່ງແມ່ນເປັນຄວາມຮູ້ ແລະ ວິທີການທີ່ພວກໂຈ ຄິດຂຶ້ນມາ

### 1.1.2 ໂຈຍຸກຕາເວັນອອກ (ມີເມືອງຫຼວງທີ່ເມືອງລໍ່ຫຍາງ771-256 ປີ ກ່ອນ ຄສ)

ລາຊະວົງໂຈຕາເວັນອອກເປັນການປົກຄອງສືບຕໍ່ຈາກໂຈຕາເວັນຕົກ ປະມານ 771-256 ປີ ກ່ອນ ຄສ ພະເຈົ້າຜິງຫວັງ ໄດ້ຍ້າຍນະຄອນຫຼວງ ມາຢູ່ທີ່ລໍ່ຫຍາງ ເຊິ່ງຕັ້ງຢູ່ທາງພາກຕາເວັນອອກຂອງເມືອງຊີອານ, ໃນສະໄໝນີ້ເກີດມີການຊິງອຳນາດກັນຂອງບັນດາ ອ໋ອງ ຈຶ່ງເຮັດໃຫ້ເກີດຄວາມບໍ່ສະຫງົບຈົນນຳໄປສູ່ການລົ້ມລະລາຍຂອງລາຊະວົງ. ລາຊະວົງນີ້ໄດ້ແບ່ງອອກເປັນ 2 ຍຸກຄື: ຍຸກທຳອິດແມ່ນ: ຍຸກຊຸນຊິວ ແລະ ຍຸກຈ້ານກໍ່

- **ຍຸກຊຸນຊິວ:** ຍຸກນີ້ເປັນຍຸກທີ່ເຕັມໄປດ້ວຍຄວາມວຸ້ນວາຍໃນອານາຈັກ, ແຄ້ວນຕ່າງໆກໍ່ເກີດຄວາມບໍ່ໄວ້ໃຈເຊິ່ງກັນ ແລະ ກັນ, ເກີດສົງຄາມລະຫວ່າງແຄ້ວນຕ່າງໆ, ຜູ້ຄົນເດືອດຮ້ອນທຸກຍາກຈົນກໍ່ເກີດມີນັກປັດຊະຍາຂຶ້ນ ແລະ ມີບົດບາດເຂົ້າມາປ່ຽນແປງໃນດ້ານຕ່າງໆທາງສັງຄົມບໍ່ວ່າຈະເປັນດ້ານປັດຊະຍາ, ຄວາມເຊື່ອ, ຂະນົບທຳນຽມ, ປະເພນີ, ວັດທະນະທຳ, ການປົກຄອງ. ປະຊາຊົນໃນເວລານັ້ນຕ້ອງການຄວາມຊ່ວຍເຫຼືອຜູ້ປົກຄອງກໍ່ຕ້ອງການແມ່ທັບ, ຜູ້ມີຄວາມສາມາດເລື່ອງຍຸດທະວິທີການວາງແຜນ, ສາມາດວາງກຳລັງລົບທີ່ເໜືອກວ່າຄູ່ແຂ່ງ. ຈຶ່ງເຮັດໃຫ້ຄົນຈຳນວນຫຼວງຫຼາຍຫັນມາຮັບຟັງນັກປັດຊະຍາ ແລະ ເກີດມີນັກປັດະຍາທີ່ມີຊື່ສຽງຂຶ້ນຢ່າງຫຼວງຫຼາຍເຊັ່ນ: ເລົ່າຈື້, ສະວິນຈື້, ຈວງຈື້, ມໍຈື້ ແລະ ຂົງຈື້.



ຮູບ: ຫ້ານັກປັດຊະຍາຂອງລາຊະວົງໂຈຕາເວັນອອກ

❖ ຍຸກຈ້ານກໍ່: ເປັນຍຸກແຫ່ງການເຮັດສົງຄາມຍາດຊີງຄວາມເປັນໃຫ່ຍຂອງແຄ້ວນຕ່າງໆເຊັ່ນ: ແຄ້ວນສູ່, ແຄ້ວນເຈົ້າ, ແຄ້ວນອ້ຽນ, ແຄ້ວນຊິນ, ແຄ້ວນຫານ ແລະ ແຄ້ວນວຸ່ຍ ຈີນໃນທີ່ສຸດ ຊິນຫວັງເຈິ້ງ ຫຼື ຊິນສີຫວງ ຫຼື ຊິນຊີຮ່ອງເຕ້ ແຫ່ງ ແຄ້ວນຊິນ ໄດ້ກວດຕ້ອນແຄ້ວນຕ່າງໆທັງ6 ແຄ້ວນໃຫ້ເປັນອັນໜຶ່ງອັນດຽວແລ້ວສະຖາປານາເປັນລາຊະວົງຊິນຂຶ້ນໃນທີ່ສຸດ

ສາເຫດທີ່ແບ່ງໂຈ ອອກເປັນ2 ຍຸກເນື່ອງຈາກອຳນາດຂອງລາຊະວົງໂຈເສື່ອມລົງກະສັດໂຈຖືກຂັບໄລ່ອອກຈາກແມ່ນນ້ຳເວີ່ຍແລ້ວໄປຕັ້ງເມືອງໃໝ່ທີ່ລໍ່ຫຍາງ( ທິດຕາເວັນອອກຂອງມົນທົນເຫີໜັນ) ສະໄໝນີ້ເກີດມີສົງຄາມກາງເມືອງ ກະສັດໂຈບໍ່ສາມາດຄວບຄຸມໄດ້ລັດຈຶ່ງເລີ່ມແຕກແຍກ ແລະ ຕ້ອງການເປັນອິດສະຫຼະ

ສະໄໝໂຈຕາເວັນອອກລັດໃຫ່ຍຕ່າງໆມີຜູ້ປົກຄອງທີ່ເອີ້ນວ່າ: ອ໋ອງ, ມະເຫສີ ເອີ້ນວ່າ ຮອງເຮົາ ແລະ ເສນາບໍດີເອີ້ນວ່າ: ໄຈຊ່ຽງ ໃນລາຊະວົງນີ້ເຖີງວ່າກະສັດຈະຍັງດຳລົງຕຳແໜ່ງແຕ່ກໍ່ຕ້ອງມີທ່າອ່ຽງໄປຕາມຄວາມຕ້ອງການຂອງ ອ໋ອງ. ຜູ້ທີ່ມີອຳນາສູງສຸດໃນການປົກຄອງຂອງແຕ່ລະລັດເອີ້ນວ່າ: ປາຈູ່ ຫຼື ປາອ໋ອງ ໃນຍຸກຊຸນຊິວນີ້ຜູ້ທີ່ໄດ້ຮັບການກ່າວຂານວ່າເປັນ ອ໋ອງ ມີພຽງ 5 ຄົນເຊັ່ນ: ຊີຫ່ວນກົງ, ຈີນເຫວີນກົງ, ຊິນມູ່ກົງ, ຊົ່ງຊຽງກົງ ແລະ ສູ່ຈວງຫວາງ

ຄວາມແຕກແຍກ ແລະ ຄວາມອ່ອນແອຂອງລາຊະວົງໂຈໃນຍຸກຕາເວັນອອກນັ້ນເຮັດໃຫ້ແຄ້ວນຕ່າງໆດຳເນີນສົງຄາມກັນເພື່ອແຍ່ງຊີງຄວາມເປັນໃຫ່ຍເຮັດໃຫ້ເກີດຄວາມວຸ້ນວາຍບັນດາແຄ້ວນຕ່າງໆນັບເປັນຮ້ອຍແຄ້ວນເຮັດສົງຄາມກັນຈົນຍັງເຫຼືອພຽງແຕ່2-3 ແຄ້ວນໃຫ່ຍເທົ່ານັ້ນ. ກະສັດລາຊະວົງໂຈບໍ່ສາມາດປາບປາມແຄ້ວນຕ່າງໆໄດ້ຕໍ່ມາແຄ້ວນ ຊິນ ຫຼື ຈິ່ນໄດ້ມີການພັດທະນາຈົນເຂັ້ມແຂງໄດ້ນຳກຳລັງທະຫານມາໂຄ່ນລົ້ມລາຊະວົງໂຈ ແລະ ປາບປາມລັດຕ່າງໆລົງໄດ້ສຳເລັດແລ້ວສະຖາປານາລາຊະວົງຊິນຂຶ້ນ.

## 2. ລາຊະວົງຈີນໃນສະໄໝສັກດິນາ

### 2.1 ລາຊະວົງຊິນ (221-207 ປີ ກ່ອນ ຄສ)

ລາຊະວົງຊິນເປັນລາຊະວົງທີ່ຄົງຕົວຢູ່ລະຫວ່າງ221 - 207 ປີ ກ່ອນ ຄສກ່ອນໜ້ານີ້ຈີນໄດ້ແຕກແຍກອອກເປັນ 6 ແລະ ເຮັດສົງຄາມກັນຢູ່ຕະຫຼອດ ຕໍ່ມາກະສັດແຫ່ງລັດຊິນໄດ້ເຮັດສົງຄາມລວບລວມໃຫ້ເປັນອັນໜຶ່ງອັນດຽວ ແລະ ສະຖາປານາຕົນເອງຂຶ້ນເປັນກະສັດແຫ່ງລາຊະວົງຊິນໂດຍໃສ່ຊື່ວ່າ: ຊິນສີຮ້ອງເຕ້ ຫຼ ຊິນຊີຮອງເຕ້ ມີນະຄອນຫຼວງຢູ່ເມືອງຊຽງຢາງ( ເມືອງຊີອານໃນປະຈຸບັນ)



ແຜນທີ່ລາຊະວົງຊິນ

ພາຍຫຼັງທີ່ລວມຈີນເປັນໜຶ່ງດຽວໄດ້ສຳເລັດແລ້ວ ຊິນອ໋ອງ ໄດ້ຫາຊື່ໃໝ່ໃຫ້ຕົນເອງ ເນື່ອງຈາກເຫັນວ່າຕົນເອງສາມາດລວບລວມແຜ່ນດິນໃຫ້ເປັນປຶກແຜ່ນໄດ້ຄຳວ່າ ອ໋ອງ ບໍ່ຍິ່ງໃຫ່ຍພໍ ຈຶ່ງເລືອກຄຳວ່າ ຫວງຕີ້ ຫຼື ຮ່ອງເຕ້ເຊິ່ງມີຄວາມໝາຍວ່າ ໂອລົດສະຫວັນ ມາໃຊ້ແລ້ວເອີ້ນຊື່ຕົນເອງຕາມຊື່ລາຊະວົງ, ຮ່ອງເຕ້ເອີ້ນຕົນເອງວ່າ: ເຈີ້ນ ເປັນການເປີດສາກໂອລົດສະຫວັນຄອງເມືອງ, ໄດ້ມີການປະຕິຮູບລະບົບຕົວອັກສອນ, ລະບົບຊັ່ງ, ຕວງ, ວັດ ໃຫ້ຄືກັນທັງປະເທດ ແຕ່ສຳລັບຕົວອັກສອນນັ້ນອອກສຽງຕ່າງກັນໄດ້ແຕ່ຕ້ອງຂຽນຄືກັນເຊັ່ນ: ເລກ 1 ຂຽນດ້ວຍຂີດແນວນອນຂີດດຽວ. ຈີນກາງອອກສຽງວ່າ: ອີ້ ແຕ່ແຕ້ຈີ້ວ ອ່ານວ່າ: ເຈັກ, ໄດ້ປັບລະບົບການປົກຄອງແບບລະບົບ

ທ້ອງຖິ່ນ ນັບວ່າເປັນຜົນງານອັນຍິ່ງໃຫ່ຍຂອງພະອົງ, ຕໍ່ມາຊິນຊີຮ່ອງເຕ້ໄດ້ໃຫ້ຂຸນເສິກເໜີງຖຽງ ແລະ ເມັງຖຽງ ຍົກທັບໄປປາບປາມຊົນເຜົ່າຊົ່ງໜູ ແລ້ວກໍ່ສ້າງກຳແພງເມືອງຈີນຂຶ້ນເພື່ອປ້ອງກັນການຮຸກຮານຂອງສັດຕູ

ຊິນຊີຮ່ອງເຕ້ ໄດ້ຊື່ວ່າເປັນກະສັດທີ່ມີຄວາມທາລຸນທີ່ສຸດປົກຄອງດ້ວຍຄວາມເຄັ່ງຄັດ, ອຳມະຫິດ, ກ່າວກັນວ່າພຽງແຕ່ມີຄົນຈັບກຸ່ມໂອ້ລົມກັນຈະຖືກຈັບໄປປະຫານທັນທີໃນຂໍ້ຫາໃສ່ຮ້າຍປ້າຍສີລາດຊະສຳນັກ. ມີການຢັດຢຽດຂໍ້ຫາ ແລະ ປະຫານທັງໂຄດ. ການປະຫານມີການຕັດຫົວ, ຕັດຫົວສຽບປະຈານ, ຫ້າມ້າແຍກຮ່າງ (ເອົາເຊືອກມັດແຂນຂາໄວ້ກັບມ້າ ຫຼື ລົດມ້າຫ້າທິດ ແລ້ວໃຫ້ມາຄວບໄປເພື່ອໃຫ້ຮ່າງກາຍແຍກອອກຈາກກັນ) ແລະເລື່ອງທີ່ດັງທີ່ສຸດແມ່ນການເຜົາຕຳລາສຳນັກຂົງຈື້ແລ້ວຈັບບັນດິດສຳນັກຂົງຈື້ມາສັງຫານໝູ່ດ້ວຍການເຜົາທັງເປັນ, ຝັງທັງເປັນຫຼື ຝັງລົງດິນແລ້ວຕັດຫົວ. ແມ້ແຕ່ລັດທະທາຍາດຝູໂຊ ( ລູກຊາຍກົກ) ຍັງຖືກເນລະເທດໄປຊາຍແດນໄປຊ່ວຍເໜີງຖັງ ສ້າງກຳແພງເມືອງຈີນ ດ້ວຍຂໍ້ຫາທີ່ຂັດແຍ່ງກັບພະອົງ ຈຶ່ງມີແຕ່ຄົນຫາທາງລັກລອບສັງຫານພະອົງບໍ່ເວັ້ນແຕ່ລະເວັນ ລວມທັງໝູສະນິດຂອງພະອົງເອງກໍ່ຄິດການກະບົດ.



ຮູບ: ການສ້າງກຳແພງເມືອງຈີນ

ນອກຈາກນີ້ ພະອົງຍັງຢ້ານຄວາມຕາຍຫຼາຍທີ່ສຸດ ພະອົງມັກສະແຫວງຫາຢາອາຍຸວັດທະນະທຸກວິທີທາງແຕ່ສຸດທ້າຍ ຊິນຊີຮ່ອງເຕ້ກໍ່ປ່ວຍໜັກ ແລະ ສິ້ນຊີ່ລົງໃນຂະນະທີ່ອອກໄປຫາຢາອາຍຸວັດທະນະໃນດິນແດນທຸລະກັນດານນັ້ນເອງ ແລະ ໄດ້ມີພະລາດຊະອົງການເອີ້ນ ຝູຊົງ ມາເພື່ອສືບທອດບັນລັງ. ຝູ່ງ ເປັນຄົນທີ່ມີນິດໃສອ່ອນໂຍນກວ່າບິດາ ແລະ ຍັງເກັ່ງກ້າອີກດ້ວຍປະຊາຊົນຈຶ່ງຄາດຫວັງຈະຫຼຸດພົ້ນອອກຈາກການປົກຄອງຂອງຊິນຊີຮ່ອງເຕ້ ແຕ່ຫູໄຫ ໂອລົດອີກຄົນໜຶ່ງຮ່ວມມືກັບເຈົ້າເກົາຂັນທີ ແລະ ເສນາບໍດີ ລີ່ຊື່ ປອມລາດຊະອົງການໃຫ້ ຝູຊົງ ແລະ ເໜີງຖຽງ ຂ້າໂຕຕາຍ ແລະ ແຕ່ງຕັ້ງ ຫູໄຫ ເປັນຮ່ອງເຕ້ອົງຕໍ່ມາ ເອີ້ນວ່າພະເຈົ້າ ຊິນທີສອງ ຫຼື ຊິນເອີຊື່ ທີ່ເປັນຮ່ອງເຕ້ທີ່ໂຫດຫ້ຽມແຕ່ບໍ່ມີຄວາມສາມາດຄືກັບບິດາແຖມຍັງຢູ່ພາຍໃຕ້ການບົງການຂອງເກົາເຮັດໃຫ້ລາຊະວົງຊິນຫຼົ້ມຈົມ ຫູໄຫ ໄດ້ໃຊ້ເງິນທອງຈຳນວນຫຼວງຫຼາຍກໍ່ສ້າງສຸສານຂອງຊິນຊີຮ່ອງເຕ້ ແລະ ຍັງຂູດຮີດເງິນຂອງປະຊາຊົນດ້ວຍການເກັບພາສີຈຶ່ງເຮັດໃຫ້ມີການກໍ່ກະບົດເກີດຂຶ້ນ

ໃນເວລານັ້ນມີກະບົດຢູ່ຫຼາຍຊຸດ ມີຂໍ້ຕົກລົງກັນວ່າຖ້າຫາກຜູ້ໃດບຸກເຂົ້າທາງກວນຈົງຂອງລາຊະວົງຊິນໄດ້ກ່ອນຈະໄດ້ເປັນໃຫ່ຍ ຫຼິວປັງ ໄດ້ກໍ່ກະບົດຕໍ່ຕ້ານລາຊະວົງຊິນຂຶ້ນ ແລະ ໄດ້ມີຜູ້ຊ່ວຍສີມືດີ 3 ຄົນຄື: ຫານຊິ່ນ, ຈາງຫຽງ ແລະ ຊ້ຽວຮີ ມາຊ່ວຍໃນການວາງແຜນຮົບ ແລະ ປະສານງານຕ່າງໆຈຶ່ງສາມາດໂຄ່ນລົ້ມລາຊະວົງຊິນລົງໄດ້ໂດຍ ເຈົາເກົາ ເຂົາໄດ້ຂ້າ ຫຼີຊື່ ແລະ ຫູໄຕ່ ແລ້ວແຕ່ງຕັ້ງ ຈືອິງ ທີ່ເປັນຫຼານຂອງ ຫູໄຫ ເປັນຮ່ອງເຕ້ແທນ ແຕ່ເຈົາເກົາກໍ່ຖືກ ຈືອິງ ຂ້າ ເພາະ ຈືອິງ ຍອມພັກດີຕໍ່ຫຼິວປັງ ເຊິ່ງໃນເວລາດຽວກັນ ຊຽງອີ້ ໄດ້ລະເມີດຂໍ້ຕົກລົງໂດຍໄດ້ຕັ້ງໂຕເປັນ ຊີຊູປ້າອ໋ອງ ແປວ່າ ອ໋ອງແຫ່ງແຄ້ວນຊູທີ່ຍິ່ງໃຫ່ຍກວ່າແຄ້ວນອື່ນໆ ຊຽງອີ້ ໄດ້ເຜົາພາລາຊະວັງອາຟາງກົງ

ຂອງຊິນຊີຮ່ອງເຕ້, ຂ້າຈືອີງ ແລ້ວສູ້ຮົບກັບຫຼິວປັງ. ການຕໍ່ສູ້ໄດ້ຍືດເຍື້ອນຢູ່ດົນ ແຕ່ໃນທີ່ສຸດຫຼິວປັງ ກໍ່ໄດ້ຍົກທັບເຂົ້າສູ້ຮົບຢ່າງເດັດຂາດເຮັດໃຫ້ຊຽງອີ້ ຂ້າໂຕຕາຍໃນທີ່ສຸດ.

## 2.2 ລາຊະວົງຫານ ( ປີ 207 ກ່ອນ ຄສ - ຄສ 220)

ລາຊະວົງຫານສະຖາປານາຂຶ້ນໂດຍຫຼິວປັງ ຫຼື ຈັກກະພັດເກົາຈູ່ ເຊິ່ງຖືວ່າເປັນຈັກກະພັດຜູ້ຍິ່ງໃຫ່ຍ ອົງທີ2 ຂອງຊິນຊາດຈີນທີ່ສາມາດທ້ອນໂຮມແຜນດິນຈີນໃຫ້ເປັນປຶກແຜນອີກຄັ້ງໜຶ່ງ. ລາຊະວົງຫານແບ່ງອອກເປັນ2 ຊ່ວງຄື: ຫານຕອນຕົ້ນ(ຫານຕາເວັນຕົກ) ທີ່ມີເມືອງຫຼວງຢູ່ນະຄອນສາງອັນ ແລະ ຫານຕອນປາຍ (ຫານຕາເວັນອອກ)ໄດ້ຍ້າຍນະຄອນຫຼວງໄປຢູ່ເມືອງລົວຫຍັງ.



ຮູບແຜນທີ່ລາຊະວົງຫານ

### 2.2.1 ລາຊະວົງຫານຕອນຕົ້ນ (ຫານຕາເວັນຕົກ) 206 ປີ ກ່ອນ ຄສ - ປີ ຄສ 25

ຫຼິວປັງເປັນຜູ້ກໍ່ຕັ້ງລາຊະວົງຫານຂຶ້ນ ຫຼິວປັງແຕ່ເດີມເປັນພຽງຊົນຊັ້ນຂຸນນາງຜູ້ນ້ອຍ ເມື່ອຊິນຊີຮ່ອງເຕ້ ໃນລາຊະວົງຊິນເລີ່ມອ່ອນແອລົງກໍ່ມີການກໍ່ກະບົດ ໂດຍອາໃສກຳລັງຈາກຊາວນາ ແລະ ບັນດາເຊື້ອສາຍເຈົ້າຜູ້ຄອງແຄ້ວນເກົ່າໄດ້ມີການຕັ້ງໂຕເປັນໃຫ່ຍໃນທົ່ວທຸກຫົນ. ຫຼິວປັງແມ່ນຜູ້ໜຶ່ງທີ່ສ້າງຈາກກຸ່ມກຳລັງນ້ອຍໆຕໍ່ມາໄດ້ຍົກທັບເຂົ້າມານະຄອນສຽງຢາງ (ຢູ່ໃກ້ກັບເມືອງຊີອານໃນປະຈຸບັນ) ມາປິດສາກຍຸກສະໄໝຂອງລາຊະວົງຊິນ ແລະ ສົ່ງມອບນະຄອນສຽງຢາງ ໃຫ້ກັບຊຽງອີ້ ທີ່ມີອຳນາດໃນຊຽງຊູ ແລະ ມີກຳລັງເຂັ້ມແຂງທີ່ສຸດໃນເວລານັ້ນ ຫຼິວປັງຈຶ່ງໄດ້ຮັບການມອບໝາຍໃຫ້ເປັນ ຫານຈີງອ໋ອງ. ຫຼັງຈາກນັ້ນກໍ່ໄດ້ມີການປັບປຸງກຳລັງໃຫ້ມີຄວາມເຂັ້ມແຂງແລ້ວກໍ່ເປີດສາກຊີງບັນລັງກັບຊຽງອີ້ ເຮັດໃຫ້ເສິກສົງຄາມຄັ້ງນັ້ນໄດ້ຮັບການຂະໜານນາມວ່າ: ສົງຄາມຊູຫານ ເຊິ່ງກິນເວລາເຖິງ 4 ປີ.

ປີ 202 ກ່ອນ ຄສ ຫຼິວປັງໄດ້ຮັບໄຊຊະນະແລ້ວກ້າວຂຶ້ນສູ່ບັນລັງແລ້ວໄດ້ສະຖາປານາລາຊະວົງຫານ, ລະບົບການປົກຄອງຂອງລາຊະວົງຫານໂດຍລວມແລ້ວຍັງຄົງຍຶດຮູບແບບດຽວກັບລາຊະວົງຊິນ ແຕ່ເນື່ອງຈາກລາຊະວົງຊິນ ມີຜູ້ປົກຄອງທີ່ເຂັ້ມງວດຈົນເກີນໄປເປັນເຫດເຮັດໃຫ້ລົ້ມສະຫຼາຍໂດຍໄວວາ ສະນັ້ນຫຼິວປັງ ຈຶ່ງປະກາດຍົກເລີກກົດໝາຍທີ່ໂຫດຮ້າຍບາງສ່ວນ. ນອກຈາກນີ້ຍັງໄດ້ດຳເນີນນະໂຍບາຍທີ່ເປັນມິດຕໍ່ປະຊາຊົນເຊັ່ນ: ຫຼຸດຜ່ອນການເກັບພາສີອາກອນ ແລະ ການເກນແຮງງານ, ປົດປ່ອຍກຳລັງທະຫານ ແລະ ປະຊາຊົນໃຫ້ກັບບ້ານເກີດຕົນເອງ, ຈັດສັນຕອນດິນທຳມາຫາກິນໃຫ້ແກ່ທະຫານທີ່ຮ່ວມຮົບຊະນະສົງຄາມ ມອບລາງວັນໃຫ້ເປັນອາຫານ ແລະ ຕຳແໜ່ງລາຊະການ. ນອກຈາກນີ້ຍັງຄວບຄຸມພໍ່ຄ້າທີ່ລຳລອຍບໍ່ໃຫ້ສວຍໂອກາດຂຶ້ນລາຄາສິນຄ້າ, ຜືນແຜນດິນທີ່ເຮັດການປູກຝັງກໍ່ໄດ້ຮັບການປັບປຸງອີກ ເມື່ອເປັນແນວນີ້ໄດ້ເຮັດໃຫ້ສະພາບສັງຄົມໄດ້ມີເວລາໃນການຟື້ນຟູ, ຈັດລະບຽບໃໝ່ ແລະ ເຮັດໃຫ້ບ້ານເມືອງກັບມາມີຄວາມສະຫງົບອີກຄັ້ງໜຶ່ງ ຈົນຮອດສະໄໝຂອງເຫວີນຕີ້ ແລະ ຈິນຕີ້ໃນໄລຍະ 60 ປີ ກໍ່ຍັງໃຫ້ຄວາມສຳຄັນກັບການກະສິກຳ ມີການເກັບພາສີແມ່ນນ້ອຍ ແຕ່ສະພາບເສດຖະກິດສັງຄົມໄດ້ຮັບການປັບປຸງຈົນເລີ່ມມີຄວາມຈະເລີນກ້າວໜ້າ.

ເນື່ອງຈາກໃນຊ່ວງຕົ້ນລາຊະວົງຫານໄດ້ມີການຖູນບຳເນັດໃຫ້ກັບບັນດາຂຸນນາງ ແລະເຈົ້ານາຍເຊື້ອສາຍຂອງລາຊະວົງເປັນຈຳນວນຫຼວງຫຼາຍ ດັ່ງນັ້ນອຳນາດຂອງເຈົ້ານາຍເຫຼົ່ານີ້ຈຶ່ງນັບມື້ນັບເກັ່ງກ້າຂຶ້ນ ມາຮອດສະໄໝຂອງຈິງຕີ້

ຈຶ່ງເກີດມີເຫດການກໍ່ກະບົດເຈັດແຄ້ວນຂຶ້ນ. ຫຼັງຈາກກະບົດຖືກປາບປາມລົງອິດທິພົນຂອງພວກຂຸນນາງກໍ່ອ່ອນແອລົງ ອຳນາດສ່ວນກາງກໍ່ເຂັ້ມແຂງຂຶ້ນ

ສະໄໝອູ່ຕີ້ ຖືເປັນຍຸກທອງຂອງລາຊະວົງຫານຕອນຕົ້ນມີເສດຖະກິດຮຸ່ງເຮືອງ, ຊັບສິນໃນຄັງຫຼວງລົ້ນເຫຼືອ, ມີການກຳນົດຫຼຽນຂຶ້ນມາໃຊ້ພາຍໃນປະເທດ, ມີການສັ່ງຫ້າມຫຼອມສ້າງຫຼຽນຂຶ້ນມາໃຊ້ເອງເປັນຂອງສ່ວນຕົວ, ມີການສ້າງກົດໝາຍການຂົນສົ່ງລຳລຽງສິງຄ້າຕ່າງໆ ເຮັດໃຫ້ມີລາຍໄດ້ເພີ່ມຂຶ້ນໃນຄັ້ງຫຼວງເປັນຈຳນວນຫຼວງຫຼາຍ ດ້ວຍເຫດນັ້ນ ຫານອູ່ຕີ້ ຈຶ່ງຫັນໄປສົນໃຈຕໍ່ຕ່າງແດນເຊັ່ນ: ຊົນເຜົ່າຊົງໜູ ທີ່ກໍ່ກວນຢູ່ທາງຊາຍແດນພາກເໜືອມາເປັນເວລາດົນນານ ຫານອູ່ຕີ້ ກໍ່ໄດ້ຍົກທັບອອກໄປປາບປາມເຖິງ 3 ຄັ້ງເພື່ອຂັບໄລ່ໃຫ້ພວກເຂົາຖອຍເຂົ້າໄປໃນດິນແດນທາງຕາເວັນຕົກສ່ຽງເໜືອ, ມີການປັວແປງກຳແພງເມືອງຈີນ, ຈັດຕັ້ງລະບົບໄຟສັນຍານແຈ້ງເຫດຕາມຊາຍແດນ ແລະ ໄດ້ສົ່ງຈາງສຽງໄປເປັນທູດໃນເອີຣົບເພື່ອເປີດເສັ້ນທາງການຄ້າອອກໄປດິນແດນອາຊີກາງອັນເປັນທີ່ຮູ້ຈັກກັນໃນນາມຂອງເສັ້ນທາງສາຍໄໝ.




**ຮູບ: ແຜນທີ່ເສັ້ນທາງສາຍໄໝ**

ສະໄໝຂອງເຈົາຕີ້ ແລະ ຊາວຽນຕີ້ ນັ້ນເຖິງວ່າເສດຖະກິດຍັງຄົງກ້າວໄປທາງໜ້າ ແຕ່ແຝງໄປດ້ວຍເງົາມືດທາງການເມືອງ, ເກີດມີຊ່ອງຫວ່າງໃນການກໍ່ອຳນາດເພື່ອລົ້ມເລີກອຳນາດການປົກຄອງເກົ່າ ເຮັດໃຫ້ປະຊາຊົນຢ້ານກົວຕໍ່ຄວາມປ່ຽນແປງທີ່ເກີດຂຶ້ນ. ສ່ວນນະໂຍບາຍຕໍ່ຊົນເຜົ່ານອກດ່ານຄືຊົນເຜົ່າຊົງໜູໄດ້ຫັນມາໃຊ້ານຜູກມິດແທນໂດຍມີການຈັດສົ່ງລູກສາວຂອງເຈົ້ານາຍຊັ້ນສູງໄປແຕ່ງງານກັບຫົວໜ້າເຜົ່ານອກດ່ານ

ສະໄໝຫານຫຍວນຕີ້ ກຸ່ມຂຸນນາງທີ່ບໍ່ມີອຳນາດ ສ່ວນຊົນຊັ້ນສູງມີອຳນາດຫຼາຍຂຶ້ນລະບອບການປົກຄອງໄດ້ເກີດຄວາມຫຼົ້ມເຫຼວ, ເກີດມີຂໍ້ຂັດແຍ່ງທາງຊົນຊັ້ນ ແລະ ມີການລຸກຮື້ຂຶ້ນຂອງຊາວນາຢູ່ສະເໝີ

ສະໄໝຫານເສິງຕີ້ ກຸ່ມຕະກຸນຫວັງເຊິ່ງເປັນພີ່ນ້ອງທາງມານດາຂອງ ເສິງຕີ້ເຂົ້າກຸ່ມອຳນາດທາງດ້ານການເມືອງ ໃນຕະກຸນມີອ້າຍນ້ອງ 4 ຄົນ ແລະ ມີຫຼານຊາຍຊື່ຫວັງມັ່ງ ໄດ້ເຂົ້າມາມີອຳນາດທາງການທະຫານ ແລະພະລາທິການໄວ້ໄດ້ ລາຊະວົງຫານຕາເວັນຕົກຖືກກະບົດຊາວນາໂຈມຕີຈົນບໍ່ສາມາດທີ່ຈະຢືນຢູ່ໄດ້ຕໍ່ໄປ ຫວັງມັ່ງໄດ້ນຳເອົາຄວາມຄິດ: ສືບທອດບັນລັງສະຫວັນ. ມາໃຊ້ເພື່ອແກ້ໄຂວິກິດການອີກຄັ້ງແຕ່ກໍ່ບໍ່ສຳເລັດ ເມື່ອຫານຜິງຕີ້ຂຶ້ນຄອງບັນລັງ. ຕໍ່ມາຫວັງມັ່ງ ກັບມາມີອຳນາອີກຄັ້ງຈຶ່ງຮີບຮ້ອນກຳຈັດສັດຕູທາງການເມືອງ ແລະ ໄດ້ຈັດຕັ້ງພັກພວກເພື່ອຫາຊື້ໃຈປະຊາຊົນເພື່ອສະໜັບສະໜູນອຳນາດຂອງຕົນເອງ. ເມື່ອຫານຕີ້ຜິງ ສະຫວັນນະຄົດ ຢູຈື່ອີງ ເຊິ່ງອາຍຸຍັງນ້ອຍໄດ້ຂຶ້ນຄອງລາດສືບຕໍ່ ເປັນໂອກາດດີໃຫ້ແກ່ຫວັງມັ່ງຈຶ່ງຫາເຫດຜົນປົດຕຳແໜ່ງ ຢູຈື່ອີງ ແລ້ວແຕ່ງຕັ້ງຕົນເອງເປັນຮ່ອງເຕ້ ເລີ່ມແຕ່ນັ້ນມາລາຊະວົງຫານຕາເວັນຕົກກໍ່ເລີ່ມອ່ອນແອ ແລະ ລົ້ມລະລາຍໃນທີ່ສຸດ.

**2.2.2 ລາຊະວົງຫານຕອນປາຍ (ຫານຕາເວັນອອກ) ປີ ຄສ 25-220**

ນັບຕັ້ງແຕ່ ຫວັງມັ່ງ ປົດ ຢູຈືອິງ ກະສັດອົງລຸດທ້າຍຂອງລາຊະວົງຫານຕອນຕົ້ນ ແລ້ວຕັ້ງຕົນເປັນໃຫ່ຍ ແລ້ວໄດ້ຈັດລະບຽບການປົກຄອງໃໝ່. ແຕ່ລະບຽບການປົກຄອງໃໝ່ໄດ້ຮັບການຕໍ່ຕ້ານຈາກປະຊາຊົນເກີດເປັນກະບົດຊາວນາໃນພື້ນທີ່ຕ່າງໆເຊັ່ນ: ກອງກຳລັງຄິວແດງທີ່ນຳພາໂດຍຝານສົງຈາກຊານຕົງ ແລະກອງກຳລັງລີ່ຫຼິນ ເຊິ່ງນຳໂດຍ ຫຼິວຊິວ ຈາກຫູເປີຍ ໂດນໃນບັນດາກຳລັງເຫຼົ່ານັ້ນຖືວ່າກອງທັບຂອງຫຼິວຊິວ ມີຄວາມເຂັ້ມແຂງທີ່ສຸດ. ພາຍຫຼັງເສິກທີ່ຄຸນຫຍັງໄດ້ຮັບໄຊຊະນະຫຼິວຊິວ ກໍ່ໄດ້ປັບປຸງກອງທັບໃໝ່ມີກຳລັງຕິດອາວຸດຂະໜາດນ້ອຍຢູ່ທາງພາກເໜືອ( ດິນແດນທີ່ຢູ່ທາງພາກເໜືອຂອງຈີນໃນປະຈຸບັນ.

ໃນປີ 25 ກ່ອນ ຄສ ຫຼິວຊິວຕັ້ງຕົນເປັນຮ່ອງເຕ້ແລ້ວຄອງດິນແດນເຫີເປີຍພາຍໃຕ້ສາຍານາມວ່າ: ຫານກວງຕີ້ ແລະ ໃສ່ຊື່ລາຊະວົງຫານຄືເກົ່າ. (ໂດຍທາງປະຫວັດສາດເພິ່ນໄດ້ແບ່ງຍຸກນີ້ເປັນຫານຕາເວັນອອກເນື່ອງຈາກນະຄອນຫຼວງມາຕັ້ງຢູ່ລົວຫຍາງ ພາລະກິດທຳກິດຂອງກວງອູ່ຕີ້ຄືການປາບປາມກອງທັບຄິວແດງທີ່ປິດລ້ອມເມືອງສາງອັນ

ກະສັດສະໄໝທີ12 ຂອງກວງຕີ້ ກໍ່ສາມາດປາບປາມກົກຂອງຂຸນຂູ່ໃນເສສອນລົງໄດ້ ແລະ ສາມາດທ້ອນໂຮມປະເທດຈີນໃຫ້ກັບມາເປັນອັນໜຶ່ງອັນດຽວອີກຄັ້ງໜຶ່ງ ຈາກນັ້ນກໍ່ປະກາດປົດປ່ອຍແຮງງານທາດ ເຊິ່ງເປັນການປົດປ່ອຍທາດແຮງງານການຜະລິດຄັ້ງໃຫ່ຍ ນອກຈາກນີ້ຍັງໄດ້ສ້ອມແປງຊົນລະປະທານທົ່ວປະເທດ ແລະ ຟື້ນຟູການເຮັດກະສິກຳໃຫ້ກັບມາມີຊີວິດຊີວາອີກຄັ້ງໜຶ່ງ.

ສະໄໝໝິງຕີ້ ກໍ່ໄດ້ຍົກເລີກການຜູກຂາດການຄ້າເກືອ, ເຫຼົ້າກ້າ ແລະ ທຸລະກິດອື່ນໆ ເຊັ່ນ: ທຸລະກິດຫຼໍ່ ແລະ ຫຼອມທອງແດງ, ທຸລະກິດຜ້າໄໝ. ເຮັດໃຫ້ບ້ານເມືອງ ແລະ ການຄ້າໃນຍຸກຫານຕາເວັນອອກຈະເລີນຮຸ່ງເຮືອງຂຶ້ນ ເມື່ອ ລົວຫຍັງ ກາຍເປັນສູນກາງການຄ້າຂອງປະເທດ. ສ່ວນສູນກາງພາກໃຕ້ແມ່ນ: ເມືອງຫຍັງໂຈ, ຈີງໂຈ, ອີໂຈ ກໍ່ມີຄວາມຈະເລີນໃນທຸລະກິດ, ຫັດຖະກຳ ແລະ ຈຳນວນປະຊາກອນກໍ່ເພີ່ມຂຶ້ນຢ່າງໄວວາ.

ສະໄໝຈາງຕີ້ ແລະ ເຫີຕີ້ໃນສະໄໝນີ້ແມ່ນມີການເດີນທາງອອກໄປຕິດຕໍ່ເຊື່ອມສຳພັນໄມຕີກັບຝັ່ງເອີຣົບ ເພື່ອສານຕໍ່ເສັ້ນທາງການຄ້າທາງສາຍໄໝ ໃນເວລາດຽວກັນບັນດາເຈົ້າຂອງທີ່ດິນທັງຝ່າຍບຸ່ມ ແລະ ຝ່າຍ ບູ້ ຕ່າງກໍ່ຢູ່ໃນຊວງສະສົມກຳລັງ, ສ້າງບາລາມີ ພາຍຫຼັງສະໄໝເຫີຕີ້ ບັນດາເຊື້ອສາຍລາຊະວົງ ແລະ ຂຸນນາງຊັ້ນສູງທາງກໍ່ມີອຳນາດເຂັ້ມແຂງຂຶ້ນໄດ້ມີການຮ່ວມມືກັນເຂົ້າຄອບຄຸມອຳນາດ. ເມື່ອສິ້ນສະໄໝເຫີຕີ້ ເຫຼົ່າຂຸນນາງກໍ່ຍິ່ງຫຼົງໄຫຼໃນອຳນາດ ຈີນເຖິງຂັ້ນມີການຊື້ຂາຍຕຳແໜ່ງທາງການເມືອງກັນຢ່າງເປີດເຜີຍ, ອຳນາດບ້ານເມືອງລົ້ມລະລາຍ, ສັງຄົມເຕັມໄປດ້ວຍຄົນທີ່ຂາດທີ່ພັກອາໄສ, ເກີດຄວາມເດືອດຮ້ອຍໄປທົ່ວທຸກແຫ່ງ ແລະ ເມື່ອຮອດສະໄໝ ຫຼີງຕີ້ ເກີດມີກະບົດຜ້າເຫຼືອງຢູ່ທາງພາກເໜືອນຳໂດຍຕຽວກົກ ເຂົາລົບລ້າງລະບອບຫານຕາເວັນອອກ, ບັນດາເຈົ້າທີ່ດິນທີ່ມີກຳລັງເຂັ້ມແຂງກໍ່ສວຍໂອກາດຕັ້ງຕົນເປັນໃຫ່ຍຕໍ່ສູ້ຍາດຊິງອຳນາດຈີນໃນສຸດທ້າຍເຫຼືອພຽງ 3 ກຸ່ມອຳນາດໃຫຍ່ຄື: ວຸ່ຍ , ສູ ແລະ ອູ່ ຫຼືຮູ້ຈັກກັນໃນນາມສາມກົກ.



ແຜນທີ່ສາມກົກ

ໃນຊ່ວງທ້າຍ ລາຊະວົງຫານ ຕາເວັນອອກເປັນຊ່ວງຍຸກສະໄໝສາມກົກ ພະເຈົ້າຫ້ຽນເຕ້ຖືກບັງຄັບໃຫ້ສະຫຼະບັນລັງ ແລະ ມອບໃຫ້ແກ່ ວຸຍອ່ອງໂຈຜີ ລູກຊາຍຂອງ ໂຈໂສ ແຕ່ວ່າລາຊະວົງຫານບໍ່ໄດ້ສິ້ນສຸດ ເມື່ອ ຫານຕົ່ງອ໋ອງເລົ່າປີ ຜູ້ເປັນອາຂອງພະເຈົ້າຫ້ຽນເຕ້ ໄດ້ສະຖາປານາຕົນເອງຂຶ້ນເປັນພະມະຫາຈັກກະພັດໃນດິນແດນເສສວນ ເພື່ອຮັກສາລາຊະວົງຫານເຊື້ອສາຍຕະກຸນຕໍ່ໄປ ແລະ ກອບກູ້ເອົາລາຊະວົງຫານໃຫ້ຟື້ນຄືນອີກຄັ້ງ ແຕ່ຫຼັງຈາກພະເຈົ້າເລົ່າປີ ສະຫວັນນະຄົດ ພະເຈົ້າເລົ່າສ້ຽນ ໄດ້ຂຶ້ນຄອງບັນລັງຕໍ່ ພະອົງບໍ່ໄດ້ເອົາໃຈໃສ່ຕໍ່ການບໍລິຫານບ້ານເມືອງ , ສົນໃຈແຕ່ເລື່ອງສຸລານາລີ ແລະ ຍັງຫູເບົາ ມັກຖືກຂັນທີ ກັງຊິນ ຍຸແຍ່ຕະຫຼອດ ເຮັດໃຫ້ຈົກກົກອ່ອນແອລົງ ແລະ ວຸຍກົກໂຈມຕີ ໃຫ້ຫຼົ້ມສະຫຼາຍລົງ. ຫຼັງຈາກນັ້ນຕໍ່ມາ ສຸມາອ້ຽມ ໄດ້ລົບລ້າງລາຊະວົງວຸ່ຍ ກືນດິນແດນເສສວນຂອງຈົກກົກ ແລະ ຕົງງໍກົກຈິນແຕກ ເປັນເຫດເຮັດໃຫ້ດິນແດນຈີນທີ່ແຕກແຍກອອກເປັນສາມກົກກັບເຂົ້າມາລວມເຂົ້າກັນອີກຄັ້ງໜຶ່ງ ເຊິ່ງຢູ່ພາຍໃຕ້ການປົກຄອງຂອງລາຊະວົງໃໝ່ ເຊິ່ງຖືວ່າເປັນການສິ້ນສຸດຂອງລາຊະວົງຫານຕາເວັນອອກຢ່າງແທ້ຈິງ.



ຮູບ: ໜ້າປົກໜັງສາມກົກ

## 2.3 ລາຊະວົງຈິ້ນ (265-420)

ລາຊະວົງຈິ້ນ ເປັນລາຊະວົງໜຶ່ງ ເຊິ່ງສະຖາປານາຂຶ້ນໃນປີ ຄສ 265 ໂດຍສຸມາອ້ຽມ ຍຶດອຳນາດຈາກລາຊະວົງເວີ່ຍໄດ້ສຳເລັດ ແລ້ວປະກາດສ້າງຕັ້ງລາຊະວົງຈິ້ນຕາເວັນຕົກຂຶ້ນແທນລາຊະວົງເວີ່ຍຂອງໂຈໂສ ເມື່ອມາຮອດປີ ຄສ 280 ລາຊະວົງຈິ້ນຕາເວັນຕົກ ສາມາດປາບກົກອູ້ລົງໄດ້ ສະພາບການແບ່ງແຍກອຳນາດຂອງສາມກົກກໍ່ສະຫຼາຍໄປທັງແຜ່ນດິນຈີນລວມເປັນອັນໜຶ່ງອັນດຽວອີກຄັ້ງ ເກີດມີຄວາມສັນຕິສຸກຂຶ້ນໃນຊ່ວງໄລຍະເວລາໃດໜຶ່ງໃນລາຊະວົງຈິ້ນຕາເວັນຕົກ

ລາຊະວົງຈິ້ນຕາເວັນຕົກເປັນຍຸກສະໄໝທີ່ຕະກຸນໃຫຍ່ກ້າວເຂົ້າມາມີອິດທິພົນທາງດ້ານການເມືອງຢ່າງສູງສຸດ ເນື່ອງຈາກນະໂຍບາຍການເມືອງຂອງໜ່າອ້ຽນ ຫຼ ຈິ້ນອູຕີ້ ອ່ຽງໄປໃນທາງຜົນປະໂຫຍດຂອງຕະກຸນຊົນຊັ້ນສູງໃນກົດໝາຍຍັງໃຫ້ສິດພິເສດແກ່ຂຸນນາງເຈົ້າທີ່ດິນໃນການຈັດສັນຍຶດຄອງທີ່ດິນ ແລະ ຜົນປະໂຫຍດອື່ນໆ ໂດຍອ້າງອີງຈາກລະດັບຕຳແໜ່ງຂຸນນາງ, ລະບຽບເຫຼົ່ານີ້ໄດ້ກາຍເປັນເຄື່ອງມືນສ້າງອຳນາດ ໃຫ້ກັບກຸມຕະກຸນໃຫ່ຍເຮັດໃຫ້ເກີດມີການແບ່ງແຍກຊົນຊັ້ນໃນສັງຄົມຄັ້ງໃຫ່ຍ. ເພື່ອຮັກາສາສິດທິພິເສດນີ້. ຈິນເຖິງຂັ້ນວ່າບໍ່ຍອມນັ່ງຮ່ວມໂຕະ

ແລະ ແຕ່ງງານຂ້າມສາຍເລືອດກັບຕະກຸນທີ່ບໍ່ໄດ້ຮັບສິດທິພິເສດ. ເຮັດຜູ້ທີ່ຢູ່ນອກວົງມີໂອກາດນ້ອຍທີ່ຈະໄດ້ຮັບຕຳແໜ່ງ.




ຮູບແຜນທີ່ລາຊະວົງຈິ້ນ

ໃນປີ ຄສ 316 ກອງກຳລັງຂອງເຜົ່າຊົງໜູ ບຸກເຂົ້ານະຄອນສາງອັນ ເມືອງຫຼວງເກົ່າຂອງລາຊະວົງຫານຕາເວັນຕົກ ໄດ້ຈັບກຸມໝິ່ນຕີ້ ຕໍ່ມາຈັກກະພັດຈີ້ຢວນ( ຈັກກະພັດອົງທີ5 ຂອງລາຊະວົງ) ໄດ້ຍ້າຍເມືອງຫຼວງມາຢູ່ທີ່ຈຽງຄັງ ແລະ ສະຖາປານາລາຊະວົງຈິ້ນຕາເວັນອອກຂຶ້ນ ໃນເວລາທີ່ສະຖານະການທາງພາກເໜືອວຸ້ນວາຍຫຼາຍແຜ່ນດິນໄດ້ແຍກອອກເປັນແຄ້ວນຕ່າງໆເຮັດໃຫ້ລາຊະວົງຈິ້ນຕາເວັນອອກບໍ່ສາມາດຄວບຄຸມສະຖານະການໄດ້ ຈົນຮອດປີ ຄສ 420 ລາຊະວົງຈິ້ນກໍ່ສິ້ນສຸດລົງໃນທີ່ສຸດ ແລະ ຈີນກໍ່ກ້າວສູ່ຍຸກທີ່ວ່າ: ລາຊະວົງ ເໜືອ-ໃຕ້. ເປັນຍຸກສົງຄາມກາງເມືອງ ແລະ ເປັນຍຸກແຫ່ງຄວາມວຸ້ນວາຍທາງການເມືອງໃນປະຫວັດສາດຈີນຢູ່ໃນຊ່ວງປີ ຄສ 420-589 ກ່ອນທີ່ຈັກກະພັດ ສຸຍເຫວີນຕີ້ ຮ່ອງເຕ້ແຫ່ງລາຊະວົງສຸຍສາມາດພິຊິດລາຊະວົງໂຈເໜືອ ແລະ ທ້ອນໂຮມແຜ່ນດິນໄດ້ສຳເລັດເມື່ອ ປີ ຄສ 589.

## 2.4 ລາຊະວົງສຸຍ (581-618)

ຢາງຈຽງ ເກີດໃນຕະກຸນຂຸນນາງຊັ້ນສູງໃນລາຊະວົງ ເປີຍໂຈ ລູກສາວຂອງຢາງຈຽງໄດ້ຮັບຕຳແໜ່ງຮອງເຮົາໃນສະໄໝ ໂຈສະວຽນຕີ້ເມື່ອປີ ຄສ 580 ໂຈສະວຽນຕີ້ໄດ້ມອບບັງລັງໃຫ້ລູກຊາຍທີ່ມີອາຍຸພຽງ 8 ປີ ຂຶ້ນເປັນໂຈຈິງຕີ້ໂດຍມີຢາງຈຽງເປັນເສນາບໍດີຊ່ວຍໃຫ້ການເບິ່ງແຍງ ແຕ່ມາຮອດປີ ຄສ 581 ຢາງຈຽງໄດ້ປົດ ໂຈຈິງຕີ້ ແລ້ວ ຕັ້ງ ສຸຍເຫວີນຕີ້ ຂຶ້ນຄອງລາດແລ້ວສະຖາປານາເປັນລາຊະວົງສຸຍ ໂດຍມີນະຄອນຫຼວງຢູ່ເມືອງຕ້າຊິງ(ຊີອັນໃນປະຈຸບັນ) ຈາກນັ້ນໄດ້ດຳເນີນນະໂຍບາຍການຜູກມິດກັບຊົນເຜົ່າທູເຈີຍຕາເວັນອອກ(ເຕີກ) ຈາກນັ້ນກໍ່ໄດ້ເຮັດສົງຄາມບຽດຍຶດລົງທາງໃຕ້ ແລະ ເຂົ້າຍຶດເມືອງຈຽນຄັງນະຄອນຫຼວງຂອງລາຊະວົງເສິນ ໄດ້ໃນປີ ຄສ 589 ເປັນຢຸດຕິສົງຄາມແບ່ງແຍກດິນແດນທີ່ດຳເນີນມາເປັນເວລາ 270 ປີໄດ້ໃນທີ່ສຸດ.




ຮູບແຜນທີ່ລາຊະວົງສຸຍ

ຮ່ອງເຕ້ ສຸຍເຫວີນຕີ້ ໄດ້ດຳເນີນນະໂຍບາຍໄດ້ຢ່າງເໝາະສົມໂດຍມີການຫຼໍ່ຫຼອມເອົາວັດທະນະທຳຂອງແຕ່ລະແຄ້ວນມາປະສົມປະສານເຂົ້າກັນໃຫ້ມີຄວາມສອດຄ່ອງ ແລະ ກົມກືນກັນເປັນຢ່າງດີໂດຍສະເພາະແມ່ນການປະສົມປະສານສາສະໜາພຸດ ທີ່ສຸຍເຫວີນຕີ້ນັບຖື ໃຫ້ເຂົ້າກັບລັດທິຂົງຈື້ ແລະ ລັດທິເຕົ໋າ ແລ້ວນຳມາພັດທະນາເປັນ

ການສ້າງຄວາມໝັ້ນຄົງໃຫ້ແກ່ກົດໝາຍຂອງລາຊະວົງ. ຫຼັງຈາກນັ້ນພະອົງກໍ່ໄດ້ດຳເນີນນະໂຍບາຍໃຫ້ຂຸນນາງໃນລາດຊະສຳນັກລວມໄປເຖິງເຊື້ອພະວົງແມ່ນສາມາດແຕ່ງງານກັບຊົນເຜົ່າຕ່າງໆໄດ້ ເພາະແຕ່ເດີມທາງສຸຍເຫວີນເຕີ້ ແລະ ມະເຫສີ ກໍ່ເປັນຕະກຸນຈີນແທ້ປະສົມກັບຊົນເຜົ່າເຕີກ ແລະ ຍັງໄດ້ດຳເນີນນະໂຍບາຍໃຫ້ມີການຂຸດຄອງ ຕ້າຢຸ່ນເຫີ ຫຼື ຕ້າອະວິນເຫີ ຂະໜາດໃຫ່ຍ ມີຄວາມຍາວປະມານ 1.800 ກິໂລແມັດ ເປັນການເຊື່ອມຕໍ່ລະຫວ່າງກຸງປັກກິ່ງັບເມືອງຫາງໂຈເປັນການເຊື່ອມຕໍ່ແມ່ນ້ຳຮວງໂຫ ກັບ ແມ່ນ້ຳຢຽງຊີກຽງ ເພື່ອເປັນການຜູກຂາດເສດຖະກິດຂອງຈີນໃຫ້ເປັນອັນໜຶ່ງອັນດຽວ.

ໃນປີ ຄສ 587 ໂຄງການຂຸດຄອງຕ້າຢຸ່ນເຫີໄດ້ເລີ່ມຂຶ້ນ ໃຊ້ເວລາໃນການຂຸດ 30 ກວ່າປີ ໃຊ້ທຶນມະຫາສານ ແລະ ແຮງງານຄົນອີກຫຼາຍລ້ານຄົນ ເຊິ່ງໃນປະຈຸບັນຄອງຕ້າຢຸ່ນເຫີກໍ່ເປັນໜຶ່ງໃນມໍລະດົກໂລກຂອງຈີນ. ພ້ອມດຽວກັນນັ້ນຍັງໄດ້ສ້າງກັກຕຸນ ສິນຄ້າຂະໜາດໃຫ່ຍເພື່ອຮັບຮອງສິນຄ້າຕະຕອດຕາມສາຍຄອງ. ນອກຈາກນີ້ຍັງມີການລິເລີ່ມການສອບເສັງ: ຈໍຫງວນ ທີ່ວລາດຊະອານາຈັກເປັນເທື່ອທຳອິດຂອງຈີນ ເພື່ອຄັດເອົາຜູ້ທີ່ມີຄວາມສາມາດມາຮັບລາດຊະການໃນຕຳແໜ່ງຂຸນນາງ ເຊິ່ງແຕ່ກອນມີພຽງຊົນຊັ້ນສູງເທົ່ານັ້ນທີ່ຈະສືບທອດຕະກຸນຕໍ່ກັນມາຮັບຕຳແໜ່ງເຮັດໃຫ້ຜູ້ທີ່ມາຮັບຕຳແໜ່ງບໍ່ມີຄວາມສາມາດ ບໍ່ສາມາດປະຕິບັດວຽກງານໃຫ້ໄດ້ດີເທົ່າທີ່ຄວນ, ດັ່ງນັ້ນການສອບເສັງ ຈໍຫງວນ ໄດ້ເປັນການຮັບເອົາຜູ້ທີ່ມີຄວາມຮູ້ຄວາມສາມາດຢ່າງແທ້ຈິງເຂົ້າມາຮັບຕຳແໜ່ງ ແລະ ເຮັດໃຫ້ປະຊາຊົນເຂົ້າມາຮັບຕຳແໜ່ງໃນພະລາດຊະວັງ ນັບວ່າເປັນການຫຼຸດຊ່ອງຫວ່າງການຫຼຸດຖານະຂອງຄົນໃນສັງຄົມອີກ.



ຮູບ: ຄອງຕ້າຢຸ່ນເຫີນໃນປະຈຸບັນ

ພ້ອມດຽວກັນນັ້ນຍັງໄດ້ສ້າງສາງກັກຕຸນສິນຄ້າຂະໜາດໃຫ່ຍເພື່ອຮັບຮອງສິນຄ້າເກືອບຕະຫຼອດຕາມແນວຂອງຄອງ. ນອກຈາກນັ້ນຍັງມີການລິເລີ່ມການສອບເສັງ ຈໍຫງວນ ເປັນຄັ້ງທຳອິດທີ່ວລາຊະອານາຈັກເພື່ອຄັດເລືອກເອົາຜູ້ທີ່ມີຄວາມສາມາດມາຮັບລາຊະການໃນຕຳແໜ່ງຂຸນນາງເຊິ່ງແຕ່ກ່ອນຈະມີພຽງຊົນຊັ້ນສູງເທົ່ານັ້ນທີ່ຈະສືບທອດຕະກຸນຕໍ່ກັນມາຮັບຕຳແໜ່ງເຮັດໃຫ້ຜູ້ທີ່ມາຮັບຕຳແໜ່ງຂາດຄວາມສາມາດ ບໍ່ສາມາດປະຕິບັດວຽກງານໄດ້ດີເທົ່າທີ່ຄວນ, ດັ່ງນັ້ນການສອບເສງຈໍຫງວນ ຈຶ່ງຈະໄດ້ຜູ້ທີ່ມີຄວາມຮູ້ຄວາມສາມາດທີ່ແທ້ຈິງມາຮັບຕຳແໜ່ງ ແລະ ເຮັດໃຫ້ປະຊາຊົນມີໂອກາດມາຮັບຕຳແໜ່ງໃນພາລາຊະວັງ ນັບວ່າເປັນການໃຫ້ຄວ່າຍຸດຕິທຳທາງສັງຄົມ.

ເມື່ອສຸຍຢາງຕີ້ (ຫຍາງກວ່າງ) ຂຶ້ນຄອງລາດພະອົງໄດ້ປະກາດສົງຄາມກັບຊົນເຜົ່າຕ່າງໆ ເຮັດໃຫ້ມີການຂະຫຍາຍອານາເຂດໄປທາງທິດຕາເວັນຕົກໄດ້ຫຼາຍພໍສົມຄວນ ແລະ ຍັງໄດ້ຍົກທັບໄປຕີເກົາຫຼີ ແລະ ແມນຈູແຕ່ບໍ່ສຳເລັດ ເພາະປະສົບກັບຄວາມໜາວເຢັນຊ້ຳຍັງບໍ່ສາມາດຄຸ້ມຄອງກອງທັບໄດ້ດີ ຈຶ່ງເຮັດໃຫ້ປາລາໄຊ. ຕາມ

ພົງສາວະດານໄດ້ກ່າວໄວ້ວ່າກໍາລັງຂອງສຸຍຢາງຕີ້ ເຄື່ອນທັບເພື່ອເຮັດສົງຄາມກັບເກົາຫຼີນັ້ນຕ້ອງໃຊ້ເວລາ 30 ວັນໃນການເດີນທາງ ໃຊ້ເຮືອກວ່າ 3 ພັນລໍາ, ທະຫານກວ່າ 1 ລ້ານຄົນ, ທະຫານມ້າ 5 ໝື່ນກວ່ານາຍ, ທົ່ນເກົາທັນ5 ພັນນາຍ ເຊິ່ງສຸດທ້າຍສຸຍຢາງຕີ້ ໄດ້ບັນຊາໃຫ້ຍົກທັບຂະໜາດໃຫຍ່ ເຖິງ4 ຄັ້ງກເຮັດໃຫ້ລາຊະວົງສຸຍເສຍຫາຍຢ່າງໜັກໜ່ວງ ດ້ວຍເຫດນີ້ຈຶ່ງກໍ່ໃຫ້ມີການຈໍລະຈົນຂຶ້ນຢູ່ທຸກແຫ່ງຫົນ. ສຸດທ້າຍສຸຍຢາງຕີ້ ໄດ້ຖືກລອບປົງພະຊົນ ໂດຍພີ່ນ້ອງຂອງພະອົງເອງ ນໍາໂດຍ ຫົວເຫວີນຮົ່ວຈີ່ ລາຊະວົງສຸຍຈຶ່ງພັງທະລາຍລົງໃນປີ ຄສ 618.

**2.5 ລາຊະວົງຕານ ຫຼື ຖັງ (618-907)**

ຫຼີ່ຢວນ ສະຖາປານາຕົນເອງເປັນ ຖັງເກົາຈູຮ່ອງເຕ້ ລວບລວມເອົາແຜ່ນດິນໃຫ້ເຂົ້າເປັນອັນໜຶ່ງອັນດຽວໃນສະໄໝນີ້ໄດ້ມີການຍາດຊີງຕໍາແໜ່ງລັດຊະທາຍາດລະຫວ່າງ ຫຼີ່ເຈັ້ນເສີງ, ຫຼີ່ຊື່ໝິນ ແລະ ຫຼີ່ຫຍວນຈີ໋ ສຸດທ້າຍ ຫຼີ່ຊື່ໝິນ ສາມາດສັງຫານອ້າຍນ້ອງທັງສອງຄົນໄດ້ ແລະ ໄດ້ໃຫ້ ຖັງເກົາຈູຕັ້ງຕົນເປັນລັດຊະທາຍາດ, ພະເຈົ້າຖັງເກົາຈູສະຫຼະລາຊະບັນລັງ ແລ້ວຕັ້ງຕົນເປັນສົມເດັດພະລາດຊະບິດາ(ໄທຊາງຫວາງ) ແລ້ວໃຫ້ຫຼີຊື່ໝິນ ຂຶ້ນຄອງລາດ ເປັນຖັງໄທ່ຈົງຮ່ອງເຕ້.



ຮູບແຜນທີ່ຂອງລາຊະວົງຖັງ

ໃນຍຸກຖັງໄທ່ຈົງຮ່ອງເຕ້ແຜ່ນດິນຈີນມີຄວາມຈະເລີນຫຼາຍລວມທັງດ້ານເສດຖະກິດ, ການຄ້າ, ສິລະປະ, ວັດທະນະທໍາ, ການກໍ່ສ້າງ, ການທະຫານ, ມີການຕິດຕໍ່ພົວພັນກັບຕ່າງປະເທດຄື: ຍີ່ປຸ່ນ, ເກົາຫຼີ, ອິນເດຍ, ເປີເຊຍ, ອາຣັບ, ມີການປັບປຸງກໍາແພງເມືອງຈີນ, ມີການຈ້າງເພື່ອຂະຫຍາຍອານາເຂດໃຫ້ກວ້າງໃຫຍ່ຂຶ້ນ ມີເມືອງຫຼວງຄືເມືອງ ຊາງອັນ (ຊີອານໃນປະຈຸບັນ) . ໃນຍຸກນີ້ມີພະສະວຽນຈັງ( ຖັງຊໍາຈັ໋ງ)ໄປສຶກສາ ແລະ ອັນເຊີນພະໄຕປິດົກພຸດທະສາສະໜາ( ມະຫາຍານ) ຈາກວັດນະລັນທາປະເທດອິນເດຍມາເຜີຍແຜ່ ( ເປັນຕໍານານຂອງໄຊອິ໋ວ)

ຫຼັງຈາກເຈົ້າຖັງໄທ່ຈົງ ເສຍຊີວິດ ລັດຊະທາຍາດ ຫຼີ່ຈື້ ຜູ້ຄອງລາດຕໍ່ມີນາມວ່າ: ຖັງເກົາຈົງຮ່ອງເຕ້ ພະອົງໄດ້ນາງ ອີເໝີຍໜຽງ ອາດີດສະໜົມຂອງພະບິດາ ມາເປັນສະໜົມເອກ ເຊິ່ງສະໜົມເອກະຄົນນີ້ໄດ້ໃສ່ຄວາມມະເຫສີໃຫ້ຖືກຖອນອອກຈາກບັນດາສັກແລ້ວລົງໄປເປັນຄົນຮັບໃຊ້, ຖັງເກົາຈົງ ແຕ່ງຕັ້ງສະໜົມເອກເປັນມະເຫສີແທນ ແລະ ນາງກໍ່ໄດ້ແຊກແຊງການບໍລິຫານບ້ານເມືອງ ມາໂດຍຕະຫຼອດ ຈົນພະເຈົ້າຖັງເກົາຈົງ ເສຍຊີວິດ ນາງກໍ່ໄດ້ປ່ຽນຊື່ລາຊະວົງຖັງ ມາເປັນລາຊະວົງໂຈ ແລ້ວຕັ້ງຕົນເປັນ ອູເຈີທຽນ ( ບູເຊັກທຽນ) ນາງໄດ້ກໍາຈັດສັດຕູທາງການເມືອງ ແລະ ປົກຄອງລາຊະວົງໂຈ ຈົນເສຍຊີວິດດ້ວຍອາຍຸໄຂ



ຮູບ: ອູ່ເຈີທຽນ ຫຼື ບູເຊັກທຽນ

ຈາກນັ້ນ ຫຼີ່ຫຼົງຈີ່ ໄດ້ຄອງລາດໃນນາມ ຖັງສະວຽນຈົງຮ່ອງເຕ້ ການປົກຄອງບ້ານເມືອງແມ່ນມີຄວາມຈະເລີນຮຸ່ງເຮືອງກວ່າໄລຍະທີ່ຜ່ານມາ ຍຸກສະໄໝນີ້ໄດ້ມີປົດກະວີສຳຄັນທີ່ເກີດຂຶ້ນຄື: ຫຼີໄປ໋ ແລະ ຕູ້ຟູ້ ໃນທ້າຍສະໄໝນີ້ໄດ້ເກີດມີການກໍ່ກະບົດຂຶ້ນ ຫຼັງຈາກນັ້ນລາຊະວົງຖັງກໍ່ເລີ່ມອ່ອນແອລົງ ຂັນທີ ມີອຳນາດຫຼາຍຂຶ້ນ ມີການກໍ່ກະບົດຫຼາຍຄັ້ງ, ແມ່ທັບຊື່ຈູເວີນໄດ້ສັງຫານຂັນທີ ແລະ ໄດ້ລອບຂ້າເຈົ້າຊີວິດອົງສຸດທ້າຍຂອງລາຊະວົງ( ຖັງອ້າຍຈົງຮ່ອງເຕ້)

**2.6 ລາຊະວົງຊົງ(960-1279)**

ຊົງໄທ່ຈູ່ຮ່ອງເຕ້ ໄດ້ທ້ອນໂຮມຈີນ ມີເມືອງຫຼວງຢູ່ທີ່ເມືອງໄຄໂຟ ( ມົນທົນເຫີນານໃນປະຈຸບັນ) ຊົງໄທ່ຈູ່ໄດ້ພັດທະນາເສດຖະກິດ ແລະ ສັງຄົມຂຶ້ນມາໃໝ່ ແຕ່ພັດຕັດທ້ອນອຳນາດທາງດ້ານການທະຫານຂອງແມ່ທັບຍອມຄວາມລະແວງວ່າຈະຖືກຍຶດອຳນາດເຮັດໃຫ້ການທະຫານອ່ອນແອ ເຖິງຢ່າງໃດກໍ່ຕາມໃນຊ່ວງລາຊະວົງນີ້ມີສິລະປະ ແລະ ວັດທະນະທຳທີ່ຈະເລີນຮຸ່ງເຮືອງຫຼາຍ, ການສຶກສາຂອງປະຊາຊົນດີຂຶ້ນ ແລະ ເປົາບຸນຈິ້ນ ກໍ່ໄດ້ເກີດມີໃນຍຸກສະໄໝຂອງເຫຍິນຈົງຮ່ອງເຕ້ ເຊິ່ງເປັນຍຸກທີ່ຮ່ອງເຕ້ມີຄວາມອ່ອນແອອຳນາດຢູ່ໃນກຳມືຂອງພວກກັງສິນ, ເປົາບຸນຈິ້ນໄດ້ຕັດສິນຄະດີຄວາມຢ່າງຍຸດຕິທຳ ແລະ ເດັດຂາດຈົນກາຍເປັນເລື່ອງໂດດເດັ່ນມາຈົນຮອດປະຈຸບັນ ນັກປະຫວັດສາດເອີ້ນຍຸກທຳອິດນີ້ວ່າ: ລາຊະວົງຊົງເໜືອ




ຮູບ: ແຜນທີ່ລາຊະວົງຊົງໃຕ້ ແລະ ເໜືອ

ເປົາບຸນຈິ້ນ ມີຊື່ແທ້ວ່າ: ເປົາຫວິນຈິ່ງ ເປົາບຸນຈິ້ນມີຫຼັກການບໍລິຫານວ່າ: ຈິດໃຈສະອາດບໍລິສຸດ, ຊື່ສັດ, ແກ້ໄຂບັນຫາດ້ວຍຄວາມຍຸດຕິທຳ ເປັນຫຼັກໃນການດຳເນີນຊີວິດ ຈື່ງຈື່ຈຳບົດຮຽນໃນປະຫວັດສາດໄວ້ ຢ່າໃຫ້ຄົນລຸ້ນຫຼັງເຍີຍຫຍັນໄດ້. ນອກຈາກການຕັດສິນຄະດີ ດ້ວຍຄວາມຊື່ສັດແລ້ວ ເປົາບຸນຈິ້ນ ຍັງມີຊື່ສຽງໃນຖານະຂ້າລາດຊະການບໍ່ເຄີຍຮັບສິນບົນໃດໆ ຫຼື ຂອງຂວັນເລັກນ້ອຍກໍ່ຕາມ



ຮູບ ເປົາບຸນຈິ້ນ

ໃນສະໄໝລາຊະວົງຊົ່ງ ຈີນຖືກຮຸກຮານໂດຍເຜົ່າຕ່າງໆເຊັ່ນ: ພວກເຊຍ, ພວກຊີຕານ ຈຶ່ງມີການເຮັດເສິກຢູ່ຕະຫຼອດເວລາ ພ້ອມທັງໄດ້ໃຊ້ສັນຍາສະຫງົບເສິກກັບຄົນປ່າເຖື່ອນ ໃຫ້ເຂົາສິ່ງເຄື່ອງບັນນາການໃຫ້ເຮັດໃຫ້ການເງິນຄ່ອງຕົວ ຈີນມີນັກປະຕິຮູບຊື່: ຫວັງອັ້ນຈີ່ ອອກກົດໝາຍມາຄວບຄຸມການເງິນ ແຕ່ສຸດທ້າຍກໍ່ຕ້ອງຍົກເລີກເພາະໄປຂັດກັບຜົນປະໂຫຍດຂອງເຈົ້າໃຫ່ຍນາຍໂຕ. ຕໍ່ມາມີຊົນເຜົ່າຈິນກິມ( ບັນພະບູລຸດຂອງແມນຈູ) ເຂົ້າມາຕີ ເນື່ອງຈາກມີຊຸມນາງກັງສົນໄປເຂົ້າກັບສັດຕູບວກກັບທະຫານທີ່ອ່ອນແອຢູ່ແລ້ວເຮັດໃຫ້ພວກເຂົາສາມາດຕີເຂົ້າຮອດເມືອງໄຟໂຄຈຶ່ງຕ້ອງໄດ້ຍ້າຍເມືອງຫຼວງໄປຢູ່ທາງທິດໃຕ້ ເຊິ່ງມີຊື່ເອີ້ນວ່າລາຊະວົງຊົ່ງໃຕ້ ແຕ່ກໍ່ຍັງຖືກຮຸກຮານຢູ່ຕະຫຼອດຈົນສຸດທ້າຍພວກມົງໂກນເຊິ່ງນຳໂດຍ ເຈງກິດຂ່ານ ( ເຕມູຈິນ) ເຂົ້າຕີເຜົ່າຕ່າງໆ ແລະ ຕີຈີນຈົນຮອດປັກກິ່ງ ຫຼັງຈາກນັ້ນກໍ່ໄກ້ຕີຮອດລາຊະວົງຊົ່ງໃຕ້ ຈຶ່ງເຮັດໃຫ້ລາຊະວົງຊົ່ງສິ້ນສຸດລົງ

**2.7 ລາຊະວົງຢວນ (1279-1368)**

ລາຊະວົງຢວນເປັນລາຊະວົງທີ່ຊາວມົງໂກນສ້າງຕັ້ງຂຶ້ນເພື່ອປົກຄອງປະເທດຈີນ ໃນຖານະທີ່ເປັນສ່ວນໜຶ່ງຂອງຈັກກະພັດມົງໂກນ, ເຈງກິດຂ່ານ( ຄສ 1167-1227) ເປັນຜູ້ທ້ອນໂຮມຊົນເຜົ່າມົງໂກນ ແລະ ຊົນເຜົ່າໃກ້ຄຽງທັງຫຼາຍແລ້ວກໍ່ຂະຫຍາຍອຳນາດໄປໃນທີ່ຕ່າງໆໃນປີ ຄສ 1215ເຈງກິດຂ່ານໄດ້ເຂົ້າຄອບຄອງດິນແດນທາງພາກເໜືອຂອງຈີນ, ລູກຊາຍຂອງເຈງກິດຂ່ານ ຊື່ວ່າ: ໂອໂກໂດ ກໍ່ໄດ້ໂຄ່ນລົ້ມລາຊະວົງຊົນທີ່ເຄີຍປົກຄອງຈີນຢູ່ທາງພາກເໜືອ ແລະ ຈັດກອງທະຫານໄວ້ເພື່ອປົກຄອງດິນແດນທີ່ພວກມົງໂກນຕີໄດ້ ຕໍ່ມາກໍ່ໄດ້ໂຄ່ນລົ້ມລາຊະວົງຊົ່ງ ທີ່ປົກຄອງຈີນ. ກຸບໄລ່ຂານ ເຊິ່ງສືບທອດຕຳແໜ່ງຂ່ານ ຕໍ່ມາໄດ້ຂະຫຍາຍອຳນາດເຂົ້າຄອບຄອງທາງພາກໃຕ້ສຸດຂອງປະເທດກຸບໄລຂ່ານເລີ່ມໃຊ້ຊື່ວ່າ: ລາຊະວົງຢວນ ຫຼື ບາງເທື່ອກໍ່ເອີ້ນວ່າ: ລາຊະວົງມົງໂກນ




ຮູບແຜນທີ່ລາຊະວົງຢວນ

ຊາວມົງໂກນແມ່ນຈັກກະພັດຜູ້ຍິ່ງໃຫ່ຍມີດິນແດນຢູ່ສ່ວນຕ່າງໆຂອງໂລກເຊັ່ນ: ອາຊີກາງ ເຄີຍຍົກທັບໄປຕີລັດເຊຍ ແລະ ໂປແລນ ໃນປີ ຄສ 1240 ແລະ ຍົກທັບໄປຮອດໂບລິເມຍ, ຮັງກາລີ ແລະ ລຸ່ມແມ່ນໍ້າດານູບ ຈຶ່ງເປັນທີ່ຢ້ານກວາຂອງຊາວເອີຣົບ, ຊາວມົງໂກນໄດ້ຄອບຄອງເສັ້ນທາງສາຍໄໝ ໄດ້ອະນຸຍາດໃຫ້ພໍ່ຄ້ານານາຊາດໃຊ້ເສັ້ນທາງໄດ້ຢ່າງເສລີ ສິ່ງຜົນໃຫ້ການຄ້ານານາຊາດໃນປະເທດຈີນຈະເລີນຂຶ້ນຫຼາຍ ໄດ້ເລີ່ມຈາກເສັ້ນທາງຈາກຈີນໄປເປີເຊະ ແລະ ລັດເຊຍ ຜ່ານອາຊີຕາເວັນຕົກ ໃນປີ ຄສ 1219 ແລະ ຕັ້ງສູນກາງທະຫານ, ສະບຽງອາຫານ ແລະ ພື້ນທີ່ປູກຝັງ ຕະຫຼອດຮອດສູນກາງໄປສະນີຂຶ້ນຕາມເສັ້ນທາງເປັນໄລຍະ ເຮັດໃຫ້ສະດວກແກ່ການເດີນທາງໄປມາຈາກໂຣມຮອດອາຊີ. ຊາວຕາເວັນຕົກໄດ້ເດີນທາງມາຈາກຈີນ ເຊັ່ນ: ບາດຫຼວງນິກາຍຟານຊິດ ທີ່ມາເຜີຍແຜ່ສາສະໜາຄຣິດນິກາຍໂລມັນຄາໂທຣິກ

ດ້ວຍຄວາມເຊື່ອວ່າ ຂ່ານມົງໂກນ ເປັນຜູ້ປົກຄອງໂລກ ແລະ ປະເທດທັງຫຼາຍຕ້ອງສົ່ງບັນນາການໃຫ້ຈີນ. ກອງທັບມົງໂກນຕີໄດ້ເກົາຫຼີ ແລະ ໂຈມຕີເຂົ້າຢີ່ປຸ່ນ 2 ຄັ້ງແຕ່ບໍ່ສຳເລັດ. ສາມາດຕີຊະນະຕິເບດ ແລະ ຢູນານ ແລ້ວຍັງເຂົ້າຮຸກຮານພາກເໜືອຂອງມຽນມາ, ຫວຽດນາມ, ຈາມປາ. ການຄ້າໃນສະໄໝນີ້ແມ່ນມີຄວາມຈະເລີນຮຸ່ງເຮືອງ ແລະ ມີການເດີນທາງທີ່ກວ້າງໄກ ຊາວມົງໂກນຈຶ່ງໄດ້ເລີ່ມເຮັດທະນະບັດຂຶ້ນມາໃຊ້ທັງພາຍໃນ ແລະ ຕ່າງປະເທດ. ນອກຈາກນັ້ນຍັງປະດິດລູກຄິດ ສຳລັບໃຊ້ຄິດເງິນໃນປີ ຄສ 1274 ອີກດ້ວຍ.

ລາຊະວົງຢວນມີເມືອງຫຼວງ 2 ເມືອງຄື: ເມືອງຫຼວງໃນລະດູໜາວຢູ່ທີ່ເມືອງຕ້າຕູ່ ແລະ ເມືອງຫຼວງໃນລະດູຮ້ອນຢູ່ທີ່ເມືອງເສິນຕູ່. ກຸບໄລ່ຂ່ານ ຮັບເອົາພິທີການຫຼາຍຢ່າງຕາມປະເພນີຈີນບູຮານມາໃຊ້ໃນລາຊະວົງຢວນ. ໃຊ້ພາສາມົງໂກເລ່ຍເປັນພາສາທາງການ ແລະ ມີລ່າມແປໃນໜ່ວຍງານທຸກລະດັບ. ຊາວມົງໂກນສ່ວນໃຫ່ຍນັບຖືສາສະໜາພຸດ ແລະ ມີສາສະໜາອື່ນອີກເຊັ່ນ: ສາສະໜາຄຣິດ, ອິດສະລາມ, ລັດທິເຕົ໋າ, ລັດທິຂົງຈື້. ການສະແດງຫງິວຖືເປັນສິລະປະທີ່ໂດດເດັ່ນຂອງຈີນສະໄໝລາຊະວົງຢວນ ທາງດ້ານວິທະຍາສາດກໍ່ມີຄວາມຈະເລີນເຊັ່ນ: ການປະດິດປະທັດແບບແປກໆຂຶ້ນ ( ກະໂພກ), ຕໍ່ມາຮູ້ຈັກປະດິດເຄື່ອງດາລາສາດແບບອິດສະລາມອີກຫຼາຍຊະນິດ, ສ້າງຫໍເບິ່ງດາວທີ່ເມືອງຕ້າຕູ, ນຳສ່າງຕາເວັນອອກກາງມາສ້າງເຂື່ອນກັ້ນນໍ້າ ແລະ ປະດິດເຈ້ຍຂຶ້ນມາໃຊ້

ຫຼັງຈາກຈັກກະພັດກຸບໄລຂ່ານ ສະຫວັນນະຄົດລາຊະວົງຢວນກໍ່ຄ່ອຍເຊື່ອມໂຊມລົງ ທາງການການທະຫານກໍ່ມີການເຊື່ອມລົງ ຍ້ອນຜູ້ສືດທອດບັນລັງບໍ່ມີຄວາມສາມາດພຽງພໍ ບໍ່ສາມາດປາບກະບົດພື້ນເມືອງໄດ້ເຊັ່ນ: ກະບົດດອກບົວຂາວ, ໃນຊວງປີ ຄສ 1350-1360 ໄດ້ມີກໍ່ການກະ ບົດຕໍ່ຕ້ານຊົນຊັ້ນສູງຫຼາຍຄັ້ງ ແລະ ລຸກລາມ ຈົນເປັນຂັບໄລ່ມົງໂກນອອກຈາກແຜນດິນຈີນ ໃນທີ່ສຸດ ຈູຢວນຈັງ ຫົວໜ້າກະບົດຊາວນາກໍ່ສາມາດໂຄ່ນລົ້ມລາຊະວົງຢວນລົງໄດ້ໃນປີ ຄສ 1368 ແລ້ວຕັ້ງລາຊະວົງໃໝ່ຂຶ້ນເອີ້ນວ່າ: ລາຊະວົງໝິງ

**2.8ລາຊະວົງໝິງ ( 1368-1644)**

ເມື່ອປີ ຄສ 1368 ຈູຢວນຈັງ ຫຼື ຈັກກະພັດໝິງໄທ່ຈູຂຶ້ນຄອງລາດທີ່ເມືອງນານກິງ ແລະ ໄດ້ສະຖາປານາລາຊະວົງໝິງຂຶ້ນ. 31 ປີແຫ່ງການຄອງອຳນາດ ຈັກກະພັດໝິງໄທ່ຈູ ໄດ້ເສີມສ້າງລະບອບລວມສູນອຳນາດລັດຜະເດັດການສັກດີນາ ໃຫ້ມີຄວາມເຂັ້ມແຂງຢ່າງສຸດຄວາມສາມາດ, ຈັກກະພັດໝິງໄທ່ຈູໄດ້ປະຫານຂຸນນາງຜູ້ມີການຕໍ່ຕ້ານ, ຂ້າຄົນຜູ້ທີ່ບໍ່ມີຄວາມເຫັນດີກັບຕົນເອງ ຫຼັງຈາກຈັກກະພັດໝິງໄທ່ຈູສິ້ນພະຊົນແລ້ວ ຈັກກະພັດຈຽນເຫວິນເຊິ່ງເປັນຫຼານໄດ້ຂຶ້ນຄອງລາດແທນ ຕໍ່ມາບໍ່ດົນ ຈູຕີ້ ຜູ້ເປັນອາຂອງຈັກກະພັດ ຈຽນເຫວິນ ໄດ້ລຸກຂຶ້ນຕໍ່ສູ້ ແລະ ໂຄ່ນລົ້ມອຳນາດຂອງຈັກກະພັດຈຽນເຫວິນລົງ ແລ້ວຂຶ້ນຄອງລາດເປັນຈັກກະພັດ ໝິງເສິງຈູ ຫຼື ຈັກກະພັດຫຍົງເລີ ໃນປີ ຄສ 1421 ໄດ້ຍ້າຍເມືອງຫຼວງຈາກນານກິງ ໄປກຸງປັກກິ່ງ.

ໃນສະໄໝລາຊະວົງໝິງ ມີນັກການເມືອງທີ່ມີຊື່: ຈັງຈະວີເຈົ້າ ເພື່ອຄາຍຄວາມຂັດແຍ່ງທາງສັງຄົມ ແລະ ກອບກູ້ການປົກຄອງຂອງລາຊະວົງໝິງ ຈັງຈະວີເຈົ້າໄດ້ດຳເນີນການປະຕິຮູບ, ປັບປຸງລະບົບຂຸນນາງ, ພັດທະນາການກະສິກຳ, ຂຸດແມ່ນ້ຳ, ຂຸດຄອງ, ຮ່ວມພາສີອາກອນ ແລະ ການເກນບັງຄັບຕ່າງໆເປັນອັນໜຶ່ງດຽວ ເປັນການຊ່ວຍຫຼຸດພາລະຂອງປະຊາຊົນໄດ້ໃນລະດັບໜຶ່ງ. ນອກຈາກນີ້ຍັງມີການພັດທະນາດ້ານການຕໍ່າແຜ່ນ, ຜະລິດເຄື່ອງປັ້ນດິນເຜົາ, ກິດຈະການເໝືອງເຫຼັກ, ການຜະລິດເຈ້ຍ, ການຕໍ່ເຮືອນ, ການແລກປ່ຽນທາງເສດຖະກິດ ແລະ ວັດທະນະທຳລະຫວ່າງປະເທດ.

ໃນສະໄໝນີ້ໄດ້ມີການສ້າງພະລາຊະວັງຕ້ອງຫ້າມກູກິງ ທີ່ຕັ້ງຢູ່ໃຈກາງກຸງປັກກິ່ງຂອງປະເທດຈີນ ມີເນື້ອທີ່ 720.000 ຕາລາງກິໂລແມັດ, ມີອາຄານ 800ຫຼັງ, ມີຫ້ອງທັງໝົດ 9.999 ຫ້ອງ, ມີຫ້ອງສະໝຸດ, ມີສວນ, ມີທາງຍ່າງເຊື່ອມກັນໂດຍຕະຫຼອດ, ມີຄູ ແລະ ກຳແພງສູງເຖິງ 11 ແມັດ ໃຊ້ເວລາໃນການກໍ່ສ້າງປະມານ 14 ປີ ເລີ່ມແຕ່ປີ ຄສ 1460-1420.




ຮູບພະລາຊະວັງຕ້ອງຫ້າມກູກິງ

ໃນຊ່ວງທ້າຍຂອງລາຊະວົງໝິງ ມີການຜູກຂາດຕອນດິນ, ບັນດາເຊື້ອສາຍລາຊະວົງ ແລະ ທ່ານ ອ່ອງ ທີ່ໄດ້ຮັບການແຕ່ງຕັ້ງ ມີຕອນດິນກະຈ່າຍຢູ່ທົ່ວປະເທດ, ພາສີອາກອນຂອງລັດນັບສູງຂຶ້ນ. ຄວາມຂັດແຍ່ງລະຫວ່າງຊົນຊັ້ນຕ່າງໆຂອງສັງຄົມກໍ່ນັບມື້ເພີ່ມທະວີຄວາມຮຸນແຮງຂຶ້ນ ມີເສນາບໍດີ ແລະ ຂຸນນາງບາງຄົນພະຍາຍາມຈະຄາຍຄວາມຂັດແຍ່ງໃນສັງຄົມໃຫ້ຜ່ອນລົງ ແລະ ຮຽກຮ້ອງໃຫ້ຢັບຢັ້ງສິດພິເສດເສນາບໍດີ, ຂັນທີ ແລະ ເຊື້ອສາຍລາຊະວົງທັງຫຼາຍ ການຕໍ່ສູ້ໃນຊົນນະບົດກໍ່ທະວີຄວາມຮຸນແຮງຂຶ້ນ ໃນປີ ຄສ 1627 ມົນທົນສານຊີ ເກີດການຂາດແຄນອາຫານຢ່າງກວ້າງຂວາງ ແລະ ມີໂລກລະບາດແຕ່ຂ້າລາຊະການ ກໍ່ຍັງບັງຄັບໃຫ້ປະຊາຊົນຈ່າຍພາສີ ຈຶ່ງເຮັດໃຫ້ເກີດການຕໍ່ສູ້. ປະຊາຊົນທີ່ປະສົບກັບບັນຫາດັ່ງກ່າວ ໄດ້ລວມຕົວຂຶ້ນເປັນກອງທະຫານຊາວນາ. ປີ ຄສ

1644 ກອງທະຫານຊາວນາບຸກເຂົ້າຮອດກຸງປັກກິ່ງ ຈັກກະພັດສົງເຈີນ ເຊິ່ງເປັນກະສັດອົງສຸດທ້າຍຂອງລາຊະວົງ ຕ້ອງແຂວນຄໍຄົນເອງຕາຍ. ນອກຈາກກະບົດເຂົ້າໂຈມຕີແລ້ວ ຍັງມີຊົນເຜົ່າແມນຈູຈາກຕາເວັນອອກສ່ຽງເໜືອເຂົ້າ ຮຸກຮານ ແລະ ຍຶດຄອງກຸງປັກກິ່ງໄດ້ດວ້ຍຄວາມຊ່ວຍເຫຼືອຈາກຜູ້ບັນຊາການຂອງາຊະວົງໝິງ ຊື່: ອູ່ຊານກຸ້ຍ. ຊົນເຜົ່າແມນຈູຈຶ່ງສະຖາປານາລາຊະວົງຊິງຂຶ້ນປົກຄອງແຜ່ນດິນຈີນໄດ້ສໍາເລັດ.

**2.9 ລາຊະວົງຊິງ( 1644-1911)**

ລາຊະວົງຊິງເລີ່ມແຕ່ປີ ຄສ 1644-1911 ໃນຊ່ວງການປົກຄອງລາຊະວົງນີ້ມີກະສັດປົກຄອງ 12 ພະອົງທີ່ ປົກຄອງແຜນດິນຈີນເປັນເວລາ 268 ປີ.

ດິນແດນຂອງຈີນໃນສະໄໝນັ້ນມີເນື້ອທີ່ຫຼາຍກວ່າ 12 ລ້ານ ຕາລາງກິໂລແມັດ. ເມື່ອ ປີ ຄສ 1616 ນູຮາຈິ ຫົວໜ້າເຜົ່າແມນຈູໄດ້ສ້າງ ຈີນຍຸກຫຼັງ ຈົນຮອດປີ ຄສ 1636 ຫວງໄທ່ຈີ້ ລູກຊາຍຂອງນູຮາຈິ ໄດ້ປ່ຽນຊື່ລາຊະວົງ ເປັນຊິງ. ປີ ຄສ 1644 ຫຼີ້ຈື້ເສີງ ແມ່ທັບຊາວນາໄດ້ຍົກທັບເຂົ້າຕີປັກກິ່ງ ແລະ ໂຄ່ນລົ້ມການປົກຄອງຂອງລາຊະວົງ ໝິງລົງ. ທະຫານຊາວຊິງຈຶ່ງໄດ້ສວຍໂອກາດ ເຂົ້າໂຈມຕີທະຫານຊາວນາ ແລະ ໄດ້ຮັບໄຊຊະນະໃນທີ່ສຸດ. ຕໍ່ ມາລາດຊະສໍານັກຊິງ ຄ່ອຍໆປາບປາມກະບົດຊາວນາຊາວນາທ້ອງຖິ່ນຕ່າງໆຂອງຈີນ ແລະ ອິດທິພົນທີ່ຫຼົງເຫຼືອຂອງ ລາຊະວົງໝິງທີ່ຈະຄິດຟື້ນຟູໝິງທາງພາກໃຕ້ຂອງຈີນ, ຈີນໄດ້ທົ່ວປະເທດຈີນ.

ໃນທ້າຍສະຕະວັດທີ 16 ລັດເຊຍໃນສະໄໝພະເຈົ້າຊາ. ພະເຈົ້າຊາໄດ້ຂະຫຍາຍອານາເຂດອອກ, ມາໃນ ພາກຕາເວັນອອກໃນຊ່ວງທີ່ທະຫານແມນຈູບຸກລົງໃຕ້ປະເທດຈີນເກີດຄວາມປັ່ນປວນ ລັດເຊຍໄດ້ສວຍໂອກາດຍຶດ ຄອງເຂດຍາຄືຊາ, ເຂດໜີປູ້ສູ ແລະ ເຂດພົມແດນຕ່າງໆຂອງຈີນ. ລາດຊະສໍານັກຊິງໄດ້ປະທວງ ແລະຮຽກຮ້ອງໃຫ້ ລັດເຊຍຖອນກໍາລັງອອກຈາກດິນອດນຂອງຈີນ ໃນປີ ຄສ 1685-1686 ຈັກກະພັດຄັງຊີ ໄດ້ຍົກທັບໄປໂຈມຕີ ທະຫານລັດເຊຍ ທີ່ປະຈຊາຢູ່ເຂດຢາຄືຊາ ບັງຄັບໃຫ້ລັດເຊຍຍອມເຂົ້າຮ່ວມການເຈລະຈາ. ປີ ຄສ 1689ຜູ້ແທນ ຈີນ ແລະ ລັດເຊຍ ໄດ້ເຈລະຈາກັນຢູ່ເຂດໜີປູ້ ໃນນາມສົນທິສັນຍາໜີປູ້ ທີ່ເປັນສົນທິສັນຍາວ່າດ້ວຍການປັກເຂດ ແດນສະບັບທໍາອິດຂອງລັດເຊຍ ແລະ ຈີນ.

ເພື່ອໃຫ້ຄວາມຂັດແຍ່ງໃນຊົນຊັ້ນຕ່າງໆຫຼຸດຜ່ອນລົງ. ໃນໄລຍະຕົ້ນຂອງລາຊະວົງຊິງ ຈຶ່ງໄດ້ດໍາເນີນ ນະໂຍບາຍສົ່ງເສີມການເຮັດໄຮ່ໄຖນາ, ຂະຫຍາຍພື້ນທີ່ປູກຝັງແລະ ຍຸກເລີກພາສີອາກອນຂອງຊາວໄຮ່ຊາວນາ ເຮັດ ໃຫ້ສັງຄົມຈີນໃນສະໄໝນັ້ນມີການພັດທະນາ, ໃນກາງສະຕະວັດທີ 18 ເສດຖະກິດສັງຄົມສັກກະດີນາຍຸກຊິງໄດ້ ພັດທະນາຫຼາຍຈີນຮອດລະດັບສູງສຸດຈີນໄດ້ນາມສາຍຍານາມວ່າ: ສະໄໝທີ່ຈະເລີນຮຸ່ງເຮືອງຄັງຍົງສຽນ ລະບົບ ການປົກຄອງແບບລວມອໍານາດທີ່ສູນກາງມີຄວາມສົມບູນ ແລະ ທົ່ວເຖິງຫຼາຍຂຶ້ນ, ປະເທດຈີນມີຄວາມເຂັ້ມແຂງ, ສັງຄົມສະຫງົບຮຽບຮ້ອຍ. ມາຮອດທ້າຍສະຕະວັດທີ 18 ປະຊາກອນຈີນມີເຖິງ 3 ຮ້ອຍລ້ານຄົນ. ສະໄໝລາຊະວົງ ຊິງ ຈີນໄດ້ປະສົບຜົນສໍາເລັດອັນໃຫ່ຍຫຼວງທາງດ້ານວັດທະນະທໍາ, ວິທະຍາສາດ ແລະ ເຕັກໂນໂລຢີໂດຍສະເພາະ ແມ່ນທາງດ້ານສະຖາປັດຕະຍາກໍາການກໍ່ສ້າງ.

ສົງຄາມຢາຝິ່ນເກີດຂຶ້ນໃນປີ ຄສ 1840 ແລະ ການຮຸກຮານຂອງຈັກກະພັດຕ່າງປະເທດໄດ້ບີບບັງຄັບໃຫ້ ລາດຊະສໍານັກຊິງ ຕ້ອງລົງນາມສົນທິສັນຍາທີ່ບໍ່ເປັນທໍາຕ່າງໆ , ປັກດິນແດນ ແລະ ຈ່າຍຄ່າປະຕິກໍາສົງຄາມຕ່າງໆໃຫ້ ກັບຜູ້ທີ່ຮຸກຮານ, ເປີດເມືອງທ່າໃຫ້ກັບຊາວຕ່າງຊາດເຮັດໃຫ້ສັງຄົມຈີນຄ່ອຍໆກາຍເປັນສັງຄົມເຄິ່ງເມືອງຂຶ້ນເຄິ່ງ ສັກດີນາ. ທ້າຍລາຊະວົງຊິງ ການເມືອງມີການທຸຈະລິດ, ກະແສແນວຄິດສັງຄົມບໍ່ໄດ້ຮັບການພັດທະນາ, ປະຊາຊົນ ຕິດຢາຝິ່ນຮ່າງກາຍອ່ອນແອ, ຂາດຄວາມໝັ້ນໃຈໃຈໂຕເອງ ສັງຄົມສັກດີນາຈີນຄ່ອຍໆກ້າວເຂົ້າສູ່ໄລຍະຊຸດໂຊມ, ປະຊາຊົນມີຄວາມເດືອດຮ້ອນ, ທຸກຍາກຈຶ່ງກໍ່ເກີດມີການເຄື່ອນໄຫວຕໍ່ຕ້ານຈັກກະພັດ ແລະ ສັກດີນາຕ່າງໆເຊັ່ນ:

ການເຄື່ອນໄຫວຜິງທຽນກົ໋ວ ເຊິ່ງເປັນກະບົດຊາວນາທີ່ມີອິດທິພົນໃຫ່ຍຫຼວງໄດ້ໂຈມຕີການປົກຄອງຂອງລາຊະວົງຊີງຢ່າງຮຸນແຮງ. ເພື່ອປະເທດຊາດ ແລະ ກອບກູ້ຊາຕາກຳຂອງຕົນພາຍໃນຊົນຊັ້ນການປົກຄອງຊີງໄດ້ດຳເນີນການປະຕິຮູບເປັນບາງເທື່ອເຊັ່ນ: ການເຄື່ອນໄຫວຫຍັງອູ້ ເຊິ່ງເປັນກິດຈະກຳທີ່ລາດຊະສໍ່ນັກຊີງສົ່ງນັກສຶກສາໄປຮຽນຕໍ່ທີ່ຕ່າງປະເທດ ແລະ ສຶກສາປະສົບການຈາກປະເທດຝຣັ່ງທີ່ທັນສະໄໝແລ້ວ ແລະ ປະຕິຮູບລະບອບການເມືອງ ອູ້ຊະວີ ເຊິ່ງເປັນການປະຕິຮູບລະບອບການເມືອງແບບສັກດີນາ ແລະ ຕໍ່ຕ້ານການປົກຄອງປະເທດແບບຜະເດັດການຂອງຊົນຊັ້ນການປົກຄອງເຈົ້າທີ່ດິນ. ນັກປະຕິຮູບ ຄິດຈະສ້າງ, ຟື້ນຟູຄວາມຈະເລີນຮຸ່ງເຮືອງໃຫ້ກັບປະເທດຈີນ ແຕ່ກໍ່ພົບຄວາມຫຼົ້ມເຫຼວໃນທີ່ສຸດ, ບຸກຄົນທີ່ມີອຸດົມການກວ້າງໄກ, ມີວິໄສທັດ ແລະ ວິລະບູລຸດທີ່ຍອມເສຍສະຫຼະຊີວິດເພື່ອປະເທດຊາດຈຳນວນບໍ່ຖ້ອນໄດ້ຕໍ່ສູ້ລຸ້ນຈາກລຸ້ນ ກະແສຊາດນິຍົມຂອງຈີນໄດ້ພັດທະນາໄປຮອດຈຸດສູງສຸດຢ່າງທີ່ບໍ່ເຄີຍມີມາກອນກ່ອນ ມາໃນປີ ຄສ 1911 ເອີ້ນວ່າ: ການປະຕິວັດຊິນໄຮ້ ຫຼື ຊຽງໄຮ້ ເຊິ່ງມີ ດຣ ຊຸນຢັດເຊັນ ເປັນຜູ້ນຳພາໃນການໂຄ່ນລົ້ມລາຊະວົງຊີງ ແລະ ສິ້ນສຸດສັງຄົມສັກດີນາທີ່ມີປະຫວັດສາດອັນຍາວນານກວ່າ 2000 ປີ.



ຮູບ: ຄວາມສັບສົນວຸ້ນວາຍຂອງສັງຄົມຈີນໃນເວລານັ້ນ

# ບົດທີ3:
# ຈີນສະໄໝການຮຸກຮານຂອງພວກລ່າເມືອງ

## 1. ການປາກົດຕົວຂອງພວກເອີລົບຢູ່ຈີນ

ທ້າຍສະຕະວັດທີ 17 ຫາຕົ້ນສະຕະວັດທີ 18 ວັດທະນະທຳຂອງຈີນມີການຂະຫຍາຍຕົວ. ການກະສິກຳກໍ່ມີການຂະຫຍາຍຕົວມີການພັດທະນາຫຼາຍຂຶ້ນ ການຕ່ຳຫູກທໍ່ໄໝ ແລະ ການຜະລິດເຄື່ອງປັ້ນດິນເຜົາມີຄວາມກ້າວໜ້າ, ມີການຫຼອມທອງເຫຼືອງ, ການຜະລິດເຈ້ຍ, ການຕໍ່ເຮືອ. ເສດຖະກິດການຄ້າໄດ້ເລີ່ມປະກົດເປັນໂຄງຮ່າງເສດຖະກິດທຶນນິຍົມ ມີຜະລິດຕະພັນໃໝ່ໆເຊັ່ນ: ໃບຢາສູບ, ມັນຝຣັ່ງ, ຖົ່ວດິນ ແລະ ສາລີສ່ວນປະເພດຫັດຖະກຳຕ່າງໆກໍ່ໄດ້ມີການພັດທະນາຂຶ້ນສູ່ລະດັບສູງໂດຍສະເພາະກິດຈະການການຕ່ຳແຜນແພເລີ່ມມີໂຮງຈັກໂຮງງານທີ່ມີເຄື່ອງປັ່ນ ເຊິ່ງສະແດງໃຫ້ເຫັນວ່າເສດຖະກິດທຶນນິຍົມເລີ່ມຕົ້ນຂຶ້ນແລ້ວ ໃນສະໄໝລາຊະມິງມີສິນຄ້າເພີ່ມຂຶ້ນຫຼາຍຊະນິດການແລກປ່ຽນຊື້ຂາຍເປັນໄປຢ່າງຄຶກຄັກ ໃນສະຖານທີ່ທີ່ມີຜົນຜະລິດອຸດົມສົມບູນ ແລະ ການຄົມມະນາຄົມກໍ່ມີການປາກົດຕົວຂຶ້ນ ສູນກາງການຄ້າທັງຂະໜາດໃຫ່ຍ ແລະ ນ້ອຍ ເຊິ່ງເຮັດໃຫ້ຕົວເມືອງໄດ້ກາຍເປັນສູນກາງການຄ້າທີ່ມີຄວາມຈະເລີນຮຸ່ງເຮືອງເຊັ່ນ: ປັກກິ່ງ, ນານກິ່ງ, ຊູໂຈ, ຫັງໂຈ, ກວາງໂຈ.

ປະເທດຈີນຕອນປາຍຂອງລາຊະວົງມິງ ການດຳລົງຊີວິດຂອງກະສັດ, ຂ້າລາຊະການ, ຂຸນນາງ ແມ່ນມີການຫຼິ້ນກິນຟຸມເຟືອຍ ໃຊ້ຊີວິດມົວເມົາ. ຍິ່ງໄປກວ່ານັ້ນຢູ່ຕາມຊົນນະບົດພວກຂຸນນາງເຈົ້າທີ່ດິນ ຊຳພັດໃຊ້ອຳນາດ ແລະ ກຳລັງຍຶດເອົາຮົ້ວສວນ, ໄຮ່ນາຂອງຊາວນາທັງຫຼາຍຢ່າງບໍ່ມີຂອບເຂດ ດ້ວຍເຫດນັ້ນປະຊາຊົນຈຶ່ງທຸກຍາກລຳບາກຂາດເຂີນ ແລະ ເດືອດຮ້ອນ ນາຍຊ່າງຫັດຖະກຳທີ່ເຮັດວຽກຢູ່ໃນເມືອງກໍ່ຖືກນາຍຈ້າງ ແລະ ເຈົ້າຂອງໂຮງງານກົດຂີ່ຂູດຮີດຢ່າງໜັກໜ່ວງ ເຫດການດັ່ງກ່າວໄດ້ກໍ່ໃ້ເກີດຂະບວນການຕໍ່ຕ້ານຂອງຊາວນາ ອລະ ພວກນາຍຊ່າງພາຍໃຕ້ການນຳພາຂອງ ຫຼີຕູຊາງ ຂະບວນການນີ້ໄດ້ຍົກທັບບຸກໂຈມຕີ ແລະ ຢຶດນະຄອນຫຼວງປັກກິ່ງໄດ້ ໃນປີ ຄສ 1644 ແລ້ວໂຄ່ນລົ້ມອຳນາດຂອງກະສັດອົງສຸດທ້າຍຂອງລາຊະວົງມິງໄດ້ສຳເລັດ.

ເມື່ອຫຼີຕູຊາງ ແລະພວກຊາວນາສາມາດຄອບຄຸມປົກຄອງນະຄອນປັກກິ່ງຢູ່ນັ້ນ, ພວກຂຸນນາງ ແລະ ແມ່ທັບແຫ່ງລາຊະວົງມິງ ໄດ້ຫຼົບໜີໄປເພິ່ງພາອາໄສ ແມນຈູ ເພື່ອຂໍກຳລັງມາປາບປາມຂະບວນການຂອງຊາວນາເຮັດໃຫ້ເຂົາມີໂອກາດຈຶ່ງຍຶດກຳລັງໃຫ່ຍລົງມາຢຶດກຸງປັກກິ່ງ ຈາກ ຫຼີຕູຊາງໄດ້ສຳເລັດ ແລ້ວພວກເຂົາກໍ່ສ້າງຕັ້ງລາຊະວົງແມນຈູຂຶ້ນ ເມື່ອກຳອຳນາດແລ້ວສັກດີນາແມນຈູກໍ່ປາບປາມຂອງຊາວຈີນເຮັດໃຫ້ຊາວຈີນລົ້ມຕາຍເປັນຈຳນວນຫຼວງຫຼາຍບ້ານເມືອງຖືກເຜົາຜານ, ໄຮ່ນາຮົ້ວສວນຖືກປະຮ້າງ ສິ່ງທີ່ໂຫດຮ້າຍໄປກວ່ານັ້ນແມ່ນພວກເຂົາໄດ້ບີບບັງຄັບໃຫ້ຊາວຈີນຕ້ອງປະຕິບັດຕາມຮີດຄອງປະເພນີຂອງພວກເຂົາຕະຫຼອດຮອດການນຸ່ງຖື.

ໃນໄລຍະຕໍ່ມາລາຊະວົງແມນຈູ ຈຶ່ງຄ່ອຍປະຕິບັດນະໂຍບາຍບາງດ້ານທີ່ມີລັກສະນະອ່ອນໂຍນເພື່ອເຮັດໃຫ້ຂໍ້ຂັດແຍ່ງລະຫວ່າງຊາວຈີນ ແລະ ພວກເຂົາຜ່ອນຄາຍລົງເທື່ອລະກ້າວ ກ່ອນອື່ນໝົດພວກເຂົາຕ້ອງດໍາເນີນການຟື້ນຟູ ແລະ ສົ່ງເສີມການຜະລິດກະສິກໍາດ້ວຍຮູບການເຕົ້າໂຮມຊາວອົບພະຍົບໃນປາງສົງຄາມໄປບຸກເບີກບ່ອນທໍາມາຫາກິນໃໝ່, ສ້າງລະບົບຊົນລະປະທານ ພ້ອມທັງຫຼຸດຜ່ອນການເກັບພາສີນໍາຊາວນາ

ເຖິງວ່າລາຊະວົງແມນຈູ ຈະປະຕິບັດນະໂຍບາຍທີ່ມີລັກສະນະຕັ້ງໜ້າເພື່ອການຟື້ນຟູເສດຖະກິດກໍ່ຕາມ, ແຕ່ພວກເຂົາກໍ່ບໍ່ສາມາດລະງັບ ແລະ ສະກັດກັ້ນຂະບວນການຕໍ່ສູ້ຂອງຊາວນາໄດ້, ຊາວນາພາກັນລຸກຂຶ້ນຕໍ່ສູ້ຢ່າງລຽນຕິດເຮັດໃຫ້ອໍານາດການປົກຄອງສັກດີນາແມນຈູນັບມື້ນັບຊຸດໂຊມບໍ່ສາມາດປົກປັກຮັກສາຄວາມສະຫງົບໄດ້ດ້ວຍເຫດນັ້ນຈຶ່ງເຮັດປະເທດຈີນເກີດມີຄວາມສັບສົນວຸ້ນວາຍ.

ຕໍ່ສະພາບການດັ່ງກ່າວ ເປັນໂອກາດທີ່ເໝາະສົມໃຫ້ແກ່ນາຍທຶນຕາເວັນຕົກຍາດແຍ່ງກັນແຊກຊຶມເຂົ້າກິດຈະການພາຍໃນປະເທດ ໂດຍມີຈຸດປະສົງຢາກປົກປ້ອງຕະຫຼາດຢູ່ພາຍໃນປະເທດ ບໍ່ໃຫ້ພວກນາຍທຶນຕາເວັນຕົກນໍາເອົາສິນຄ້າມາຈໍາໜ່າຍຢູ່ຈີນ, ລາຊະວົງແມນຈູ ໄດ້ວາງນະໂຍບາຍ ປິດປະຕູ ແລະ ຈໍາກັດການຄ້າກັບຕ່າງປະເທດຢ່າງເຂັ້ມງວດ ແຕ່ມາດຕະການດັ່ງກ່າວບໍ່ສາມາດສະກັດກັ້ນພໍ່ຄ້າຊາວຕາເວັນຕົກໄດ້ ພໍ່ຄ້າຊາວຕາເວັນຕົກໄດ້ດໍາເນີນການລັກລອບເອົາເຄື່ອງເຖື່ອນເຂົ້າມາເຊັ່ນ: ຢາຝິ່ນ ເຂົ້າມາປະເທດຈີນໃນທີ່ສຸດກໍ່ເກີດມີການປະທະກັນທາງດ້ານອາວຸດລະຫວ່າງລາຊະວົງແມນຈູ ແລະ ພໍ່ຄ້າຊາວຕາເວັນຕົກ ເນື່ອງຈາກວ່າອໍານາດການປົກຄອງແຫ່ງລາຊະວົງແມນຈູອ່ອນເພຍ ຈຶ່ງບໍ່ສາມາດປົກປັກຮັກສາອະທິປະໄຕໄວ້ໄດ້ ແລະ ເຮັດໃຫ້ລະບອບສັກດີນາບໍ່ສາມາດຄົງຕົວຢູ່ໄດ້ຈຶ່ງໄດ້ເກີດມີລະບອບໃໝ່ຂຶ້ນຄືລະບອບນາຍທຶນ.

ສິນຄ້າທີ່ຊາວເອີລົບນໍາເຂົ້າມາຈີນແມ່ນຢາຝິ່ນເຊິ່ງນໍາຜົນເສຍຫາຍມາສູ່ສັງຄົມຈີນ

- ດ້ານສັງຄົມ: ປະຊາຊົນຕິດຝິ່ນທົ່ວປະເທດ, ກໍາລັງການຜະລິດອ່ອນເພຍລົງ, ສັງຄົມວຸ້ນວາຍ, ການນໍາບໍ່ເຂັ້ມແຂງຂາດຄວາມຮັບຜິດຊອບ ແລະ ທະຫານປະລະໜ້າທີ່.
- ດ້ານເສດຖະກິດ: ເງິນຕາໄຫຼອອກຕ່າງປະເທດ, ເສດຖະກິດຕົກຕໍ່າ, ໄພເງິນເຟີ້ ແລະທະນະຄານກໍ່ຂາດເງິນໝູນວຽນ.

## 2. ສົງຄາມຢາຝິ່ນຄັ້ງທີ1

ໃນປີ ຄສ 1936 ຈັກກະພັດເຕົ້າກວງ ໄດ້ຖາມຄວາມເຫັນຂຸນນາງຊັ້ນສູງເລື່ອງການຈັດການກັບບັນຫາຝິ່ນວ່າສົມຄວນເຮັດແນວໃດ ຄວາມເຫັນຂອງຂຸນນາງຊັ້ນສູງ ມີຄວາມເຫັນທີ່ແຕກຕ່າງກັນ ບາງຄວາມຄິດເຫັນວ່າຄວນອະນຸຍາດໃຫ້ມີການຄ້າຝິ່ນ ແລະ ການສູບຝິ່ນແມ່ນຖືກກົດໝາຍ ແລະ ບາງຄວາມຄິດເຫັນກໍ່ແມ່ນເຫັນສົມຄວນໃຫ້ມີການປາບປາມຢ່າງເດັດຂາດ ເຕົ້າກວງມີການຕັດສິນໃຈໃນປີ ຄສ 1838 ຫຼັງຈາກໄດ້ຮັບຄວາມຄິດເຫັນຫຼາຍໆດ້ານແລ້ວໄດ້ແຕ່ງຕັ້ງໃຫ້ ຫຼິນເຈີສີ ( 1785-1850) ຂຸນນາງທີ່ດີເດັ່ນ ແລະ ມີຄວາມຊື່ສັດສຸດຈະລິດ, ມີຄວາມສາມາດໃນການບໍລິຫານ ຫຼິ້ນເຈີສີ ແລະ ເຕົ້າກວງ ຕັດສິນໃຈປາບປາມຂັ້ນເດັດຂາດ ໂດຍສະເໜີໃຫ້ທະຫານໂຈມຕີທັງ 3 ດ້ານພ້ອມໆກັນ.

ດ້ານທີ1: ຈະຕ້ອງຂົ່ມຂູ່ຜູ້ຕິດຝິ່ນວ່າ ຈະລົງໂທດຢ່າງໜັກຖ້າບໍ່ເລີກຢາຝິ່ນ ຈະຈັດການຫາທາງຮັກສາບໍາບັດໃຫ້ເລີກສູບຝິ່ນ

ດ້ານທີ2: ເຮັດການປາບປາມພໍ່ຄ້າຝິ່ນຂັ້ນເດັດຂາດ ໂດຍການຈັດກຸ່ມກວດລ້າງ ແລະ ລົງໂທດຢ່າງໜັກຈົນກວ່າພໍ່ຄ້າຝິ່ນຈະໝົດໄປ.

ດ້ານທີ3: ຕ້ອງບໍ່ໃຫ້ຊາວຕ່າງຊາດລັກລອບຂົນຝິ່ນເຂົ້າມາໃນອານາຈັກ ຖ້າກວດພົບຈະມີການທຳລາຍຖິ້ມ. ໃນຂະນະດຽວກັນກໍ່ບັງຄັບໃຫ້ຊາວຕ່າງຊາດເຮັດໜັງສືປະຕິຍານຕົນວ່າ: ຕໍ່ໄປນີ້ຈະບໍ່ຄ້າຝິ່ນອີກ.



ຮູບພາບຊາວຈີນທີ່ຕິດຢາຝິ່ນ

ແຜນຮົບຂອງ ຫຼິນເຈີສີ ນີ້ເອງເຮັດໃຫ້ເກີດສົງຄາມຢາຝິ່ນຂຶ້ນໃນທີ່ສຸດ. ນອກຈາກນີ້ ຫຼິນເຈີສີ ຍັງໄດ້ໃຊ້ກຳລັງທະຫານປ້ອງກັນຕາມຝັ່ງທະເລທີ່ສຳຄັນເພື່ອປ້ອງກັນການລັກລອບຂົນຢາຝິ່ນເຂົ້າມາຂາຍ ໂດຍສະເພາະກຳປັ່ນຈາກອັງກິດ ນອກນັ້ນຍັງໄດ້ໃຊ້ອາວຸດເປີດປະຕູການຄ້າຢາຝິ່ນກັບຈີນ ດັ່ງນັ້ນຈຶ່ງເຮັດໃຫ້ເກີດສົງຄາມ ຈີນ ກັບ ອັງກິດ ຂຶ້ນໃນປີ ຄສ 1840. ຫຼິນເຈີສີ ໄດ້ຮັບການແຕ່ງຕັ້ງຈາກຈັກກະພັດເຕົ້າກວງໃຫ້ເປັນຂ້າຫຼວງໃຫ່ຍມີອຳນາດໜ້າທີ່ຈັດການກັບບັນຫາຢາຝິ່ນໄດ້ທຸກປະການ ຫຼິນເຈີສີ ໄດ້ເດີນທາງໄປເຖິງກວາງຕຸ່ງ ໃນເດືອນ ມີນາ ປີ ຄສ 1839 ຜູ້ທີ່ຕິດຝິ່ນຖືກຈັບກວາດຕ້ອນເຂົ້າສະຖານທີ່ບຳບັດເພື່ອໃຫ້ເຊົາຝິ່ນ ການກວດລ້າງຕາມຄຳສັ່ງ ຫຼິນເຈີສີ ມີປະສິດທິພາບຢ່າງແທ້ຈິງ ເຊິ່ງຖ້າຫາກຜູ້ທີ່ຮັບຕຳແໜ່ງຈາກ ຫຼິນເຈີສີ ປະຕິບັດຕາມນະໂຍບາຍດັ່ງກ່າວ ການຂາຍ ແລະ ສູບຢາຝິ່ນກໍ່ຄົງຈະໝົດໄປຢ່າງແທ້ຈິງ. ການກວດລ້າງຜູ້ຄ້າຢາຝິ່ນກໍ່ເຮັດເປັນການໃຫ່ຍເຊິ່ງມີຜູ້ຖືກຈັບເຖິງ 1.600 ຄົນ ສ່ວນທີ່ຍັງຢູ່ກໍ່ຫຼົບໜີ. ພໍ່ຄ້າຝິ່ນຊາວຕ່າງຊາດທີ່ມີຢາຝີ່ສະສົມຈຳນວນຫຼວງຫຼາຍກໍ່ບໍ່ສາມາດຕິດຕໍ່ກັບພໍ່ຄ້າຊາວຈີນເພື່ອຂາຍຢາຝິ່ນຂອງຕົນໄດ້. ແຕ່ ຫຼິນເຈີສີ ກໍ່ຮູ້ດີວ່າ: ມາດຕະການປາບປາມຂອງຕົນນີ້ຖ້າເຮັດໄປແລ້ວກໍ່ຈະມີຜົນພຽງແຕ່ຊົ່ວຄາວ ຖ້າບໍ່ກວດລ້າງໃຫ້ເຖິງກົກເຖິງເຫງົ້າໂດຍສະເພາະແມ່ນພໍ່ຄ້າຊາວຕ່າງຊາດ. ໃນວັນທີ 18 ມີນາ ຄສ 1839 ອັນເປັນວັນທີ 8 ທີ່ ຫຼິນເຈີສີ ມາຮອດກວາງໂຈ ຫຼິນເຈີສີ ໄດ້ມີການປະຊຸມກັບ ເຕິ້ງເທິງເຈີນ ຜູ້ສຳເລັດລາຊະການ ແລະ ອີຫຼຽງ ຜູ້ວ່າລາຊະການ ແລ້ວໄດ້ເອີ້ນພໍ່ຄ້າຊາວຈີນ ທີ່ສັງກັດຢູ່ໂຄຫັງ ມາປະຊຸມແລ້ວແຈ້ງໃຫ້ຮູ້ເຖິງແນວຄິດຂອງເຈົ້າຈັກກະພັດທີ່ມີຕໍ່ພໍ່ຄ້າຊາວຈີນ ແລະ ພໍ່ຄ້າຊາວຕ່າງປະເທດວ່າ: ການຄ້າຝິ່ນ ຜິດທັງກົດໝາຍ ແລະ ສິນລະທຳ ໃຫ້ພໍ່ຄ້າຊາວໂຄຫັງໄປແຈ້ງຕໍ່ພໍ່ຄ້າຊາວຕ່າງປະເທດວ່າ: ຈະຕ້ອງຍອມມອບຝິ່ນທັງໝົດໃນເຮືອຂອງຕົນໃຫ້ກັບລັດຖະບານຈີນ ດັ່ງນັ້ນຈະປົກປິດເລື່ອງນີ້ໄວ້ບໍ່ໄດ້ເປັນອັນຂາດ ດັ່ງນັ້ນຈຶ່ງໄດ້ເຮັດຫຼັກຖານດ້ວຍການຂຽນສັນຍາເປັນລາຍລັກອັກສອນເປັນທັງພາສາຈີນ ແລະ ພາສາອັງກິດ ໃຫ້ຄຳໝັ້ນສັນຍາວ່າຈະບໍ່ຄ້າຝິ່ນອີກ ຖ້າຫາກມີການຄ້າຢາຝິ່ນອີກ ຖ້າຖືກຈັບໄດ້ແມ່ນຕ້ອງມີການລົງໂທດຢ່າງໜັກ

ໃນວັນຕໍ່ມາພໍ່ຄ້າຕ່າງປະເທດກໍ່ໄດ້ຮັບແຈ້ງວ່າ: ຖ້າບໍ່ຍອມມອບຢາຝິ່ນທັງໝົດທີ່ຕົນເອງຄອບຄອງໃຫ້ກັບເຈົ້າໜ້າທີ່ຈີນຈະຕ້ອງຖືກຫ້າມບໍ່ໃຫ້ອອກຈາກກວາງໂຈ ຕໍ່ມາທະຫານຈີນກໍ່ໄດ້ຍົກກຳລັງເຂົ້າປິດລ້ອມ ບໍລິເວດັງສິນຄ້າອັນເປັນບ່ອນເກັບສິນຄ້າ (ຢາຝິ່ນ) ຂອງພໍ່ຄ້າຊາວຕ່າງປະເທດທັງໝົດ ທີ່ ຊ່ານຽນ ເຊິ່ງມີທັງໝົດ 335 ຄົນ

ແລ້ວເຮັດການກວດຄົ້ນທາງເຂົ້າ-ອອກ ບໍລິເວນດັ່ງກ່າວອີກດ້ວຍ. ການເດີນເຮືອຈາກຄັງສິນຄ້າ ໄປຫາ ກໍຫວງຜູ່ ແລະ ມາເກົາ ກໍ່ຖືກຫ້າມເດັດຂາດ ໂດຍສະເພາະແມ່ນພໍ່ຄ້າຝິ່ນຊາວຕາເວັນຕົກເຊິ່ງສ່ວນໃຫ່ຍແມ່ນພໍ່ຄ້າຊາວອັງກິດ ແມ່ນຖືກກັກບໍລິເວນຢູ່ຄັງສິນຄ້າ ຫຼັງຈາກການຖືກກັກຂັງ ພໍ່ຄ້າຊາວອັງກິດຈຶ່ງໄດ້ມອບຢາຝິ່ນໃຫ້ກັບເຈົ້າໜ້າທີ່ຈີນ ເປັນຈຳນວນ 1.037 ລັງ. ແຕ່ ຫຼິນເຈີສີ ຮູ້ດີວ່າເຮືອຂອງພໍ່ຄ້າຊາວຕ່າງປະເທດທີ່ຈອດຢູ່ 20 ລຳນັ້ນ ແຕ່ລະລຳ ບັນທຸກຝິ່ນບໍ່ຕໍ່າກວ່າ 1.000ລັງ ຝິ່ນທີ່ພໍ່ຄ້າຊາວຕ່າງປະເທດຍອມມອບໃຫ້ກັບເຈົ້າໜ້າທີ່ຈີນນັ້ນເປັນພຽງສ່ວນນ້ອຍ ເທົ່ານັ້ນ ຫຼິນເຈີສີ ຈຶ່ງບໍ່ຍອມຮັບຢາຝິ່ນດັ່ງກ່າວ. ຊາລີນ ເຊິ່ງແມ່ນຜູ້ເກັບພາສີ ເຊິ່ງໄລຍະຫຼັງຂອງສິນຄ້າຖືກປິດລ້ອມ ນັ້ນຍັງຢູ່ມາເກົາ ຈຶ່ງໄດ້ຟ້າວເດີນທາງມາ ກວງໂຈ ມາຮອດໃນວັນທີ 24 ມີນາ ແຕ່ໃນເມືອງເຂົ້າໄປຫາຄັງສິນຄ້າບໍ່ມີ ໃຜຂັດຂວາງ ແຕ່ເຂົ້າໄປແລ້ວແມ່ນຫ້າມບໍ່ໃຫ້ອອກ. ສ່ວນຊາວຈີນທີ່ເປັນຄົນຮັບໃຊ້ ແລະ ນາຍໜ້າກໍ່ຖືກປົດອອກ ດັ່ງນັ້ນຊາລີນ ຈຶ່ງບໍ່ສາມາດເຮັດຫຍັງໄດ້ ເມື່ອເປັນແນວນັ້ນ ຊາລີນ ຈຶ່ງຂຽນໜັງສື ຫາ ຫຼິນເຈີສີ ຂໍໜັງສືເດີນທາງຂອງ ຊາວອັງກິດຄືນທຸກຄົນ ຫຼິນເຈີສີ ຕອບມາວ່າຖ້າບໍ່ຍອມມອບຢາຝິ່ນ ທັງໝົດໃຫ້ກໍ່ບໍ່ສາມາດຊ່ວຍຫຍັງໄດ້ ຍ້ອນບໍ່ມີ ທາງອອກອື່ນ ຊາລີນ ຄິດຢ້ານພໍ່ຄ້າຝິ່ນທັງຫຼາຍຖືກຂ້າ ຈຶ່ງໄດ້ສັ່ງໃຫ້ພໍ່ຄ້າຕ່າງປະເທດທັງຫຼາຍ ຍອມມອບຝິ່ນທັງໝົດ ໃຫ້ລັດຖະບານຈີນ ມີຈຳນວນທັງໝົດ 20.283 ລັງ ໂດຍທີ່ເຮືອບັນທຸກຝິ່ນຈອດຢູ່ທ່າຕ່າງກັນກວ່າຈະສົ່ງມອບຝິ່ນ ທັງໝົດໃຫ້ແກ່ເຈົ້າໜ້າທີ່ຈີນກໍ່ໃຊ້ເວລາເປັນ 2 ເດືອນ. ໃນການສັ່ງໃຫ້ພໍ່ຄ້າຊາວຕ່າງປະເທດສົ່ງມອບຝິ່ນນີ້ ຊາລີນ ກໍ່ ໃຫ້ຄຳໝັ້ນແກ່ພໍ່ຄ້າຊາວຕ່າງປະເທດວ່າ: ຈະຊົດໃຊ້ຄ່າເສຍຫາຍໃຫ້ແກ່ພໍ່ຄ້າລາຍໃຫ່ຍໆ. ເຖິງຢ່າໃດກໍ່ຕາມການທີ່ ຊາລີນ ຍອມອ່ອນຂໍ້ຕໍ່ຊາວຈີນແບບນີ້ເຮັດໃຫ້ລາຊະນີ ວິກຕໍລຽນ ໃຈຮ້າຍ ທັງໆທີ່ພໍ່ຄ້າຊາວອັງກິດ ຊາບຊຶ້ງໃນ ບຸນຄຸນຂອງຊາລີນ ເພາະຊ່ວຍໃຫ້ພວກເຂົາລອດພົ້ນຈາກຄວາມຕາຍ ແລະ ມີໂອກາດຄ້າຢາຝິ່ນອີກຄັ້ງໃໝ່. ສ່ວນ ຊາວຈີນກໍ່ໄດ້ພາກັນຍົກຍ້ອງ ແລະ ໃຫ້ກຽດ ຫຼິນເຈີສີ ໂດຍເອີ້ນວ່າ ຂ້າຫຼວງຫຼິນ ຫຼິນເຈີສີ ມີຄວາມພາກພູມໃຈໃນ ໄຊຊະນະຄັ້ງນີ້ຫຼາຍ. ສະຫຼຸບວ່າພໍ່ຄ້າຊາວຕ່າງປະເທດໄດ້ມອບຝິ່ນໃຫ້ແກ່ລັດຖະບານຈີນຈຳນວນ2.000.000 ລັງ ແລ້ວກໍ່ໄດ້ມີການຈູດຖິ້ມທີ່ຫາດຊາຍຝັ່ງທະເລຫູເໝິນ ໃນນັ້ນໄດ້ມີຄົນເຂົ້າມາເບິ່ງເປັນຈຳນວນຫຼວງຫຼາຍມີທັງຊາວ ຈີນ ແລະ ຊາວຕ່າງປະເທດ ເນື່ອງຈາກວ່າຝິ່ນທີ່ໄດ້ຮັບມານັ້ນມີຈຳນວນຫຼາຍຕ້ອງໃຊ້ເວລາຈູດເຖິງ 3 ອາທິດ ໃນ ລະຫວ່າງວັນທີ 3-25 ມິຖຸນາ ຈຶ່ງໝົດ ໃນຕອນທຳອິດຊາວຕ່າງປະເທດບໍ່ເຊື່ອວ່າທາງຈີນຈະທຳລາຍຢາຝິ່ນແທ້ ແຕ່ ເມື່ອເຫັນການກະທຳທັງໝົດແລ້ວຕ້ອງຍອມຮັຍວ່າຕົນເຂົ້າໃຈຜິດ. ຈີນໄດ້ມີການບັນທຶກເຫດການຄັ້ງນີ້ວ່າ: ມັນຢູ່ ໃນຊວງການເຮັດວຽກຢ່າງລະອຽດຖີ່ຖ້ວນ ແລະ ມີຄວາມສື່ສັດສຸດຈະຫຼີດທີ່ຢູ່ໃນລະດັບສູງ.

ຈາກນັ້ນ ຫຼິນເຈີສີ ກໍ່ໄດ້ປະຕິບັດຕາມຄຳເວົ້າຂອງຕົນ ໂດຍສັ່ງໃຫ້ກອງທະຫານຈີນຖອນອອກຈາກການປິດ ລ້ອມຄັງສິນຄ້າ ບັນດາພໍ່ຄ້າຊາວຕາເວັນຕົກກໍ່ໄດ້ມີການຮີບຮ້ອນເດີນທາງອອກຈາກກວງໂຈໄປທີ່ມາເກົາ. ແຕ່ ການຢຶດຝິ່ນ ແລະ ທຳລາຍເປັນພຽງສ່ວນໜຶ່ງຂອງແຜນທັງໝົດຂອງ ຫຼິນເຈີສີ ເພື່ອໃຫ້ມີຄວາມແນ່ໃຈວ່າ: ພໍ່ຄ້າຝິ່ນ ບໍລິສັດຕ່າງໆຈະຍອມເລີກການຄ້າຝິ່ນ ແລະ ຈະບໍ່ຄ້າອີກຕໍ່ໄປຢ່າງແທ້ຈິງ ຫຼິນເຈີສີໄດ້ສະເໜີໃຫ້ພໍ່ຄ້າຊາວ ຕ່າງປະເທດລົງລາຍລັກອັກສອນ ເຮັດເປັນໜັງສືໄວ້ ໂດຍໃຫ້ຄຳໝັ້ນກັບທາງການຈີນວ່າຕໍ່ໄປຈະບໍ່ຄ້າຂາຍອີກ ໜັງສື ນີ້ໄດ້ເປັນຫຼັກຖານມັດໂຕແກ່ພໍ່ຄ້າທັງຫຼາຍທາງການຈີນຈະມີການດຳເນີນຄະດີຢ່າງໜັກຫາກຍັງມີການຄ້າຝິ່ນອີກຕໍ່ ໄປ.

ເຖິງວ່າການຄ້າຝິ່ນຈະຍັງເຫຼືອຢູ່ ຫຼິນເຈີສີ ກໍ່ໄດ້ມີການກະກຽມກຳລັງປ້ອງກັນປາບປາມໄວ້ເປັນຢ່າງດີໂດຍ ສະເພາະຢູ່ຕາມເສັ້ນທາງນ້ຳເຂົ້າສູ່ກວງໂຈ ໂດຍເອົາໂສເສັ້ນຍາວມາມັດໃສ່ກັນຫຼາຍເສັ້ນໃສ່ຕາມແມ່ນ້ຳທີ່ເຮືອແລ່ນ ຜ່ານ ເພີ່ມປືນໃຫ່ຍຕິດຕັ້ງຕາມປ້ອມ ມີການກະກຽມກຳລັງໃຫ້ພ້ອມຢູ່ສະເໝີ ໃຫ້ທະຫານເຝິກການຕໍ່ສູ້ ສ່ວນພໍ່ຄ້າ ຊາວອັງກິດທີ່ໜີໄປຕັ້ງຫຼັກຢູ່ຮົງກົງ ແລະ ບໍລິເວນ ຫູເໝິນ, ປາກນ້ຳເຂົ້າກວງໂຈ ກໍ່ໄດ້ມີການຕ້ານຄືນ ມາໃນເດືອ

ກັນຍາ ແລະ ເດືອນຕຸລາ ມີຄົນບາດເຈັບ ແລະ ລົ້ມຕາຍເປັນຈຳນວນຫຼວງຫຼາຍ ຫຼິນເຈີສີ ຈຶ່ງໄດ້ລະດົມກຳລັງຕໍ່ສູ້ຕ້ານອັງກິດ ເພາະໃນເວລານີ້ເບິ່ງວ່າຄົງຈະບໍ່ສາມາດເຈລະຈາກັນໄດ້ຍິ່ງຫຼາຍມື້ກໍ່ຍິ່ງຫາງເຫີນອອກໄປ.

ພໍດີມີເຫດຮ້າຍເກີດຂຶ້ນອີກ ເພາະມີຊາວຕ່າງຊາດກຸ່ມໜຶ່ງດື່ມເຫຼົ້າເມົາແລ້ວອາລະວາດຂ້າຄົນຈີນໃນໝູ່ບ້ານກູລູນ ໃກ້ໆກັບຮົງກົງ ( ມີນ້ຳຂັ້ນກາງ) ຕາຍຄົນໜຶ່ງ ຊາລີນ ບໍ່ຍອມສົ່ງຕົວຄົນຮ້າຍໃຫ້ທາງການຈີນ ຈຶ່ງເຮັດໃຫ້ຊາວຈີນມີຄວາມກຽດຊັງຊາວຕາເວັນຕົກຫຼາຍຂຶ້ນ ມີປ້າຍປະກາດຕິດໄປທົ່ວເຮັດໃຫ້ຊາວຈີນປະຊຸມກັນແກ້ໄຂບັນຫາໃຫ້ມີການລະວັງຕົວໃຫ້ຊື້ອາວຸດເພື່ອປ້ອງກັນຕົວເອງ. ມາຮອດເດືອນມິຖຸນາປີ ຄສ 1840 ກອງເຮືອຮົບ ບໍລິຣິດ ພາຍໃຕ້ການບັນຊາຂອງພົນເອກ ຢອດ ເອລຽດ ກໍ່ມາຮອດ ເຮືອຮົບດັ່ງກ່າວບໍ່ໄດ້ບຸກຖະຫຼົ່ມເຂົ້າກຳລັງເຮືອຂອງ ຫຼິນເຈີສີ  ພຽງແຕ່ໃຊ້ເຮືອ 4 ລຳປິດທາງເຂົ້າທ່າເຮືອ ກຳລັງສ່ວນຫຼາຍແມ່ນໄດ້ໄປທາງພາກເໜືອ ໃນເດືອນ ກໍລະກົດເຮືອຮົບອີກ 2 ລຳໄດ້ເຂົ້າປິດລ້ອມ ໜິງປໍ, ບຶດຕິ້ງ, ເມືອງໃຫ່ຍໃນໝູ່ເກາະໂຈຊານ, ນອກຝັ່ງທະເລເຈີຈຽງ ແລ້ວຍັງສັ່ງໃຫ້ເຮືອຮົບດັ່ງກ່າວສະກັດກັ້ນບໍ່ໃຫ້ເຮືອຂອງຈີນແລ່ນເຂົ້າ-ອອກ ບໍລິເວນສາມຫຼ່ຽມແມ່ນ້ຳສາງຈຽງໄດ້.



ຮູບພາບເຮືອລົບໃນສົງຄາມຢາຝິ່ນ

ກອງເຮືອຮົບ ບໍລິຣິດ ໄດ້ເຄື່ອນທັບໄປຍັງປາກແມ່ນ້ຳເປ່ຍເຫີ ( ແມ່ນ້ຳເໜືອ) ໃກ້ໆກັບປ້ອມ ຕ້າກູ ທີ່ຮັກສາທາງເຂົ້າຫຽນຈີນ ແຕ່ກໍ່ຕ້ອງຫຼ້າຊາເພາະມີການຂັດຂວາງ ຈາກກອງທະຫານຂອງຊີຊານ ( ແມ່ນຜູ້ສຳເລັດລາຊະການທີ່ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກຈັກກະພັດເຕົ໋າກວງ), ຊີຊານພະຍາຍາມເຈລະຈາໃຫ້ອັງກິດຖອນກຳລັງໄປທີ່ກວາງໂຈເພື່ອເຈລະຈາກັນໃຫ້ສຳເລັດ  ການເຈລະຈາຄັ້ງນີ້ປາກົດວ່າອັງກິດຍອມທີ່ຈະບໍ່ຍົກທັບຂຶ້ນໄປທາງເໜືອ ໃນຜົນງານຄັ້ງນີ້ ຊີຊານ ໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ສຳເລັດລາຊະການໃຫ້ປົກຄອງເຂດ ກວ່າງຊີ ແລະ ກວ່າງຕຶງ ສ່ວນທ ຫຼິນເຈີສີກາຍເປັນຜູ້ມີຄວາມຜິດຖືກປົດອອກຈາກຕຳແໜ່ງແລ້ວຖືກເນລະເທດໄປຢູ່ ອີຕາລີ( ຊິນຈຽງປະຈຸບັນ).

ໃນຕອນທ້າຍເດືອນສິງຫາປີ ຄສ 1841  ປອດຕິງເຈີ ໄດ້ຍົກກຳລັງຂຶ້ນເໜືອ ພ້ອມດ້ວຍກອງທັບເຮືອ ບໍລິຣິດ ເຂົ້າບຸກຢຶດເອົາເຊຍໝິນ, ເອ້ໝິງ ແລະ ໜິງປໍ ແລ້ວຢຶດໂຈຊານຕາມລຳດັບ ໃນຕອນທ້າຍລະດູໃບໄມ້ປົ່ງ ປີ ຄສ 1842 ເມື່ອກອງທະຫານຈາກອິນເດຍທີ່ເປັນກອງໜູນ ປອດຕິງເຈີ ກໍ່ບຸກເຂົ້າໂຈມຕີແລ້ວບັງຄັບໃຫ້ລາດຊະສຳນັກຊິງຕ້ອງຍອມຈຳນົນ ໂດຍການຕັດເສັ້ນທາງເຮືອຕາມແມ່ນ້ຳໃຫ່ຍ  ແລະ ເສັ້ນທາງການຕິດຕໍ່ຕາມຄອງໃຫ່ຍນ້ອຍຕ່າງໆ. ກອງທະຫານ ບໍລິຣິດ ຍຶດເອົາຊຽງໄຮ້, ຊົ່ງໄຫ ໃນເດືອນມິຖຸນາ ປີ ຄສ 1842 ເຖິງວ່າກອງທະຫານລັດຖະບານຊິງຈະໃຊ້ຄວາມພະຍາຍາມຫຼາຍປານກໍ່ຕາມແຕ່ກໍ່ບໍ່ສາມາດຈະຕ້ານທານໄດ້ ເມື່ອເປັນແນວນັ້ນນາຍທະຫານກໍ່ໄດ້ຂ້າຕົວຕາຍພ້ອມດ້ວຍຄອບຄົວຕາມໆກັນ. ກອງທະຫານ ບໍລິຣດ ໄດ້ມຸ່ງໜ້າໄປເລື້ອຍໆຈົນເຖິງໜານຈີງ ເມືອງຫຼວງເກົ່າຂອງລາຊະວົງໝິງ ກອງທະຫານໄດ້ເຂົ້າຢຶດທີ່ນັ້ນ ( ນອກກຳແພງ) ມີການກະກຽມກຳລັງເພື່ອທີ່ຈະຖະຫຼົ່ມຕົວເມືອງໃນວັນທີ 5 ສິງຫາ ປີ ຄສ 1842 ລາຊະສຳນັກຊິງພະຍາຍາມຕິດຕໍ່ຂໍເຈລະເຈສະຫງົບເສິກ ມາ

ຮອດວັນທີ 29 ສິງຫາ ຄສ 1842 ກໍ່ມີສົນທິສັນຍາເກີດຂຶ້ນທີ່ເອີ້ນວ່າສົນທິສັນຍາໜານກິງໂດຍມີການລົງນາມກັນທັງສອງຝ່າຍ ສົນທິສັນຍາສະບັບນີ້ເປັນການປ່ຽນແປງປະຫວັດສາດໃໝ່ຂອງຈີນຢ່າງສິ້ນເຊີງ. ເພາະມັນເປັນການຍອມຮັບເອົາຄົນເຖື່ອນທີ່ຢູ່ນອກປະເທດຈີນເຂົ້າມາຢູ່ລວມກັນ ປະເທດຈີນບໍ່ແມ່ນປະເທດທີ່ມີຄວາມອຸດົມສົມບູນອີກຕໍ່ໄປແຕ່ເປັນດິນແດນທີ່ມີຄົນເຖື່ອນພ້ອມດ້ວຍກຳລັງຮົບຂອງສັດຕູທີ່ຈະບຸກເຂົ້າມາຍາມໃດກໍ່ໄດ້ ແລະ ຈະຍອມອອກໄປກໍ່ຕໍ່ເມື່ອໄດ້ໃນສິ່ງທີ່ຕົນເອງຕ້ອງການ . ໃນຄວາມຈິງອານາຈັກຈີນແມ່ນມີຖານະຕ່ຳກວ່າ ຈະຕ້ອງຍອມຮັບການຕິດສຳພັນ ແລະ ຄ້າຂາຍຕາມຫົວເມືອງສຳຄັນຕ່າງໆຕາມແຕ່ຄົນເຖື່ອນຈະກຳນົດທຸກປະການ

- ຜົນຂອງສົງຄາມຢາຝິ່ນທີ່ຈີນໄດ້ຮັບຈາກຊາວຕ່າງຊາດນັ້ນມີຄື:
  - ຝິ່ນກາຍມາເປັນສິນຄ້ານຳເຂົ້າທີ່ຖືກກົດໝາຍຂອງຈີນຈົນມາເຖິງ ປີ ຄສ 1917.
  - ພາສີສິນຄ້ານຳເຂົ້າຈາກຕ່າງປະເທດທັງໝົດໃນອັດຕ່ຮ້ອຍລະ 5 ມາຍົກເລີກໃນປີ ຄສ 1928.
  - ສິດທິຂອງຄົນຕ່າງຊາດມີຢູ່ໃນນິຕິກຳໃໝ່ຂອງຈີນ. ແຕ່ໃນຕົວຈິງແລ້ວຊາວຕ່າງປະເທດຢູ່ເໜືກົດໝາຍຂອງປະເທດຈີນທັງທີ່ອາໄສຢູ່ປະເທດຈີນ ຈົນມາຮອດປີ ຄສ 1949
  - ເຂດສຳປະທານຂອງຕ່າງປະເທດໃນດິນແດນຈີນກາຍມາເປັນຖານທີ່ໝັ້ນຂອງຕ່າງປະເທດເພື່ອການຂະຫຍາຍອຳນາດ ແລະ ອິດທິພົນຂອງປະເທດທີ່ສຳປະທານນັ້ນໆ
  - ພໍ່ຄ້າຈີນ ແລະ ຕົວແທນຈຳໜ່າຍ ສິນຄ້າຕ່າງປະເທດຈະມີການເສຍພາສີນຳເຂົ້າພຽງຄັ້ງດຽວ ຈະບໍ່ໄດ້ເສຍໃນຈີນອີກ ເຮັດໃຫ້ເກີດມີຊົນຊັ້ນນາຍທຶນ,ນາຍໜ້າ ມີບົດບາດສຳຄັນໃນການເຮັດທຸລະກິດໃນຈີນ.



ສົນທິສັນຍາໜານກິງ



ຮູບ: ເມືອງຈີນຫຼັງສິ້ນສຸດສົງຄາມຢາຝິ່ນ

## 3. ຂະບວນການຕໍ່ສູ້ຂອງທາຍປິງ-ທຽນກົວ

ຫຼັງຈາກພາຍແພ້ໃນສົງຄາມຢາຝິ່ນ ລັດຖະບານຊິງຕ້ອງເສຍດິນແດນແລະ ຊໍາລະຄ່າຝິ່ນ ກັບຄ່າປະຕິກໍາສົງຄາມເປັນຈໍານວນຫຼວງຫຼາຍ ຈຶ່ງມີການຂູດຮີດພາສີຈາກປະຊາຊົນ ປະຊາຊົນຕ້ອງອຶດຢາກທຸກຍາກຂາດເຂີນ, ສັງຄົມເລີ່ມວຸ້ນວາຍບໍ່ມີຄວາມສະຫງົບສຸກ ປະຊາຊົນເລີ່ມລວມຕົວກັນຕໍ່ຕ້ານອໍານາດລັດກາຍເປັນກະບົດທາຍປິງທຽນກົວ ໂດຍມີຜູ້ນໍາຄື ຫົງຊິວສວນ ເປັນຊາວເມືອງຮົວຊຽນ ມົນທົນກວາງຕຸ້ງ ເຊິ່ງໄດ້ຮັບອິດທິພົນຈາກຄຣິດຕະສາສະໜາ ຈຶ່ງຮ່ວມກັບ ເຝີງວິນຊານ ກໍ່ຕັ້ງສະມາຄົມນັບຖືພະເຈົ້າທີ່ມົນທົນກ່ວງຊີ ແລ້ວກາຍສະພາບເປັນກະບົດທາຍປິງທຽນກົວໃນປີ ຄສ 1851 .



ຮູບ: ຫົງຊິວສວນ

ກອງທັບຫົງຊິວສວນ ກັບ ເຝີງວິນຊານ ບຸກຍຶດເຂົ້າເມືອງໜານກິ່ງ ໃນປີ ຄສ 1953 ລັດຊະການຂອງ ສຽນຟົງ ປີທີ 3 ໃນຂະນະນັ້ນກອງທັບຫົງຊິວສວນ ກັບ ເຝີງວິນຊານ ທີ່ມີກໍາລັງພົນເປັນຈໍານວນຫຼວງຫຼາຍສາມາດໄດ້ຮັບໄຊຊະນະ ແລະ ໃນ ອີກ 2 ປີຕໍ່ມາກໍ່ສາມາດໄດ້ຮັບໄຊຊະນະອີກ ຫຼັງຈາກທີ່ໄດ້ຮັບໄຊຊະນະໃນຫຼາຍຄັ້ງໃນຊ່ວງທ້າຍຂອງກະບົດທາຍປິງທຽນກົວ ຜູ້ນໍາທັງສອງເກີດມີຄວາມຂັດແຍ່ງກັນເອງຈຶ່ງມີການແຍກຕົວອອກເປັນ

ອິດສະຫຼະ ມີການລະແວງເຊິ່ງກັນ ແລະ ກັນ ບາງຄັ້ງກໍ່ມີການລອບສັງຫານເຊິ່ງກັນ ແລະ ກັນ ເຮັດໃຫ້ກອງທັບຂອງກະບົດເລີ່ມອ່ອນແອລົງ, ລາດຊະສຳນັກຊີງຂໍຮ້ອງຕໍ່ກອງທັບອັງກິດຊ່ວຍລົບລ້າງກະບົດແລ້ວສະເໜີຜົນປະໂຫຍດໃຫ້ແກ່ອັງກິດ, ຝ່າຍກະບົດເລີ່ມສູນເສຍທີ່ໝັ້ນ ຈົນເຖິງທ້າຍປີ ຄສ 1863 ຂະບວນການຂອງທາຍບິງທຽນກົວ ກໍ່ປາລາໄຊ ຫົງຊິວສວນ ຂ້າຕົວຕາຍ. ແຕ່ຈິດວິນຍານຕໍ່ຕ້ານລາຊະວົງຊີງຍັງຝັງແໜ້ນໃນຫົວໃຈຂອງຊາວຮັນ ເຊິ່ງສິ່ງຜົນຕໍ່ເນື່ອງໃຫ້ເກີດການປະຕິວັດຕໍ່ຕ້ານແມນຈູໃນລາຊະວົງຕໍ່ໄປ.

❖ ສາເຫດທີ່ພາໃຫ້ຂະບວນການທາຍບິງທຽນກົວປາລາໄຊມີຄື:
   - ຊົນຊັ້ນນາຍທຶນອ່ອນນ້ອຍບໍ່ສາມາດຫັນຂະບວນການຕໍ່ສູ້ຂອງປະຊາຊົນໄປສູ່ການປະຕິວັດນາຍທຶນ.
   - ຂາດການນຳພາຂອງຊົນຊັ້ນກຳມະຊີບ ແລະ ຂາດການພົວພັນກັບຂະບວນອື່ນໆ.
   - ພາຍໃນສັກດີນາມີການທໍລະຍົດຂະບວນການຕໍ່ສູ້, ພວກນາຍທຶນອັງກິດ, ຝຣັ່ງ ແລະ ອາເມຣິກາໃຊ້ອາວຸດຮຸນແຮງປາບປາມຂະບວນທາຍບິງທຽນກົວ.
   - ກຳລັງຕົ້ນຕໍຂອງທາຍບິງທຽນກົວແມ່ນຊາວນາທີ່ມີທີການຕໍ່ສູ້ທີ່ບໍ່ມີຄວາມຊຳນານ

❖ ຄວາມໝາຍປະຫວັດສາດຂອງຂະບວນການທາຍບິງທຽນກົວ

ເປັນຂະບວນການຕໍ່ສູ້ປົດປ່ອຍຊາດຂອງປະຊາຊົນຈີນຕາມລະບອບສັກດີນາ ແລະ ພວກທີ່ຮຸກຮານຊາວຕ່າງຊາດ, ເປັນຂີດໝາຍປິຫວັດສາດອັນສຳຄັນໃຫ້ແກ່ການສະຫຼາຍລະບອບສັກດີນາ ແລະ ເປັນການຂະຫຍາຍລະບອບສັກດີນາຢູ່ຈີນ ແລະ ເປັນບົດຮຽນອັນລ້ຳຄ່າໃຫ່ແກ່ປະຊາຊົນຈີນ. ເຊິ່ງມັນສະແດງອອກຫຼາຍດ້ານດັ່ງນີ້:

- ດ້ານການເມືອງ: ປະຊາຊົນຖືກກົດຂີ່ຂູດຣີດ, ສູນເສຍຄວາມເປັນເອກະລາດ ແລະ ຢູ່ພາຍໃຕ້ອຳນາດຂອງຈັກກະພັດ.
- ດ້ານເສດຖະກິດ: ຈັກກະພັດມີວິດຄວບຄຸມສິນຄ້າ, ພາສີທຸກປະເພດ,ຕັ້ງທະນະຄານເສລີຢູ່ຈີນ ແລະ ກຳທຸລະກິດກຳປັ່ນທັງໝົດເຖິງ 80% ທີ່ຢູ່ໃນທ່າຖືກກົດໝາຍ.
- ດ້ານການທະຫານ:
   - ການປາລາໄຊໃນສົງຄາມຝຣັ່ງ-ຈີນ 1884-1885 ເຮັດໃຫ້ຈີນຍອມເຊັນຍາຮັບຮູ້ອຳນາດຂອງຝຣັ່ງມີສິດຄ້າຂາຍຢູ່ແຂວງຢູນານພາກໃຕ້ຂອງຈີນ
   - ການປາລາໄຊໃນສົງຄາມຍີ່ປຸ່ນ-ຈີນ 1884-1885 ຈີນຍອມເຊັນສັນຍາຮັບຮູ້ສິດອຳນາດຂອງຍີ່ປຸ່ນ ແລະ ເກົາຫຼີ ແລະ ມອບສິດໃຫ້ຍີ່ປຸ່ນຢ່າງເຕັມສ່ວນ
   - ໃຫ້ສິດແກ່ອັງກິດຄ້າຂາຍຢູ່ພາກໃຕ້ຂອງຈີນ
   - ມອບສິດໃຫ້ລັດເຊຍສ້າງເສັ້ນທາງລົດໄຟຢູ່ພາກຕາເວັນອອກສ່ຽງເໜືອ
   - ໃຫ້ເຢຍລະມັນຄ້າຂາຍຢູ່ເຂດຊານດຸນ
   - ໃຫ້ອາເມຣິກາເຄື່ອນໄຫວຄ້າຂາຍຢູ່ຈີນ.

ທ້າຍສະຕະວັດທີ 19 ຈັກກະພັດໄດ້ສຳເລັດໃນການແບ່ງປັນຜົນປະໂຫຍດຂອງຕົນຢູ່ຈີນ ເຮັດໃຫ້ຈີນກາຍເປັນປະເທດເຄິ່ງເມືອງຂຶ້ນ. ທາງດ້ານເສດຖະກິດ- ສັງຄົມຈີນແມ່ນຖືກຈັກກະພັດຄວບຄຸມແບບເສດຖະກິດນາຍທຶນ ໂດຍສະເພາະແມ່ນຢູ່ໃນຕົວເມືອງຊຽງໄຮ້,ກວາງຕຸງ ແລະ ເມືອງອື່ນໆອີກ ເຂົາເຈົ້າສ້າງໂຮງງານຂະໜາດໃຫ່ຍຂຶ້ນຫຼາຍແຫ່ງ.

ເສດຖະກິດທຶນນິຍົມຢູ່ຈີນແມ່ນພົບກັບຄວາມຫຍຸ້ງຍາກຫຼາຍດ້ານຖ້າອີງໃສ່ເຕັກນິກ ແລະ ທ່າແຮງ ດັ່ງນັ້ນຈຶ່ງເກີດຂໍ້ຂັດແຍ່ງລະຫວ່າງຊົນຊັ້ນນາຍທຶນຈີນ ແລະ ນາຍທຶນຕ່າງຊາດ ແລ້ວນຳໄປສູ່ການປະຕິຮູບປະເທດຈີນຂອງຊົນຊັ້ນປັນຍາຊົນຂຶ້ນເຊັ່ນ:

- ດ້ານການເມືອງ: ຄົນຈີນທຸກຄົນມີສິດປາກເວົ້າ, ມີສິດດັດແປງກົດໝາຍ.
- ດ້ານການທະຫານ: ມີການເກັບເກນຝຶກແອບ ແລະ ຈັດຕັ້ງກຳລັງປະກອບອາວຸດຄືນໃໝ່.
- ດ້ານການສຶກສາ: ແກ້ໄຂລະບົບການສຶກສາຄືນໃໝ່.
- ດ້ານເສດຖະກິດ: ສ້າງຕັ້ງທະນະຄານແຫ່ງຊາດ, ປັບປຸງດ້ານການຄົມມະນາຄົມຂົນສົ່ງ ແລະ ປັບປຸງດ້ານການກະສິກຳຄືນໃໝ່.

ການປະຕິຮູບນີ້ໄດ້ຮັບຮູ້ໃນວັນທີ 11 ມິຖຸນາ ປີ ຄສ 1898 ແມ່ນອີງໃສ່ການປົກຄອງຂອງເຈົ້າຊີວິດ ແຕ່ວ່າເງື່ອນໄຂຂອງປະເທດຈີນໃນເວລານັ້ນບໍ່ທັນກັບຄວາມຕ້ອງການ ແລະ ຍັງມີຂະບວນການຕໍ່ສູ້ຂອງປະຊາຊົນຕ້ານກັບການກົດຂີ່ຂູດຮີດຂອງພວກສັກດີນາ ແລະ ພວກຈັກກະພັດເກີດຂຶ້ນຫຼາຍຂະບວນ ແຕ່ກໍ່ຖືກພວກດັ່ງກ່າວປາບປາມລົງຢ່າງໂຫດຮ້າຍປ່າເຖື່ອນ.

## 4. ການປະຕິວັດໃນປະເທດຈີນ

ຊຸນຍັດເຊັນ ໄດ້ເລີ່ມມີການປະຕິວັດ ແຕ່ ປີ ຄສ 1911 ເອີ້ນວ່າການປະຕິວັດຊຽງໄຮ້ເປັນການປະຕິວັດເພື່ອຈະປ່ຽນແປງລະບອບການປົກຄອງ ຈາກລະບອບສົມບູນສິດທິລາດເຊິ່ງປົກຄອງໂດຍລາຊະວົງຊິງ ທີ່ມາຂອງລາຊະວົງຊິງນັ້ນບໍ່ແມ່ນຄົນຈີນແທ້ ລາຊະວົງຊິງເປັນຊາວຕ່າງຊາດທີ່ເຂົ້າມາປົກຄອງຈີນທີ່ເອີ້ນວ່າ: ແມນຈູ ເປັນຊົນເຜົ່າທາງພາກຕາເວັນອອກສ່ຽງເໜືອຂອງຈີນ ເປັນຊົນຊາດທີ່ມີຄວາມສາມາດພໍສົມຄວນ ເບິ່ງຈາກຄວາມສາມາດໃນການເຂົ້າມາປົກຄອງຈີນທີ່ມີຄວາມກວ້າງໃຫ່ຍໄພສານ ແລະ ເປັນປະເທດທີ່ມີປະຊາກອນຫຼາຍ ແຕ່ດ້ວຍຄວາມພະຍາຍາມຈຶ່ງເຮັດໃຫ້ມີການຍອມຮັບໃນການເຂົ້າມາປົກຄອງ ຕໍ່ມາປະເທດຈີນກໍ່ເສື່ອມໂຊມເພາະປະຊາຊົນຖືກກົກຂີ່ຂູດຮີດ, ການເສຍພາສີ ຄວາມເດືອດຮ້ອນເລີ່ມມີໄປທົ່ວທຸກແຫ່ງຫົນ ໄດ້ເກີເມີການກໍ່ກະບົດຫຼາຍຕໍ່ຫຼາຍຄັ້ງ ແລະ ໄດ້ເກີດມີນັກຄິດນັກປະຕິວັດເກີດຂຶ້ນ.

ບຸກຄົນທີ່ໄດ້ຮັບການຍົກຍ້ອງວ່າເປັນບິດາແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນຈີນຄື: ຊຸນຍັດເຊັນ ເຊິ່ງທ່ານເປັນຄົນທີ່ມີແນວຄິດຈະປ່ຽນແປງ ແລະ ປັບປຸງປະເທດໃຫ້ເປັນແບບປະເທດຕາເວັນຕົກ ເພາະທ່ານໄດ້ຮັບການສຶກສາມາຈາກຕ່າງປະເທດ ປະເທດເຂົາແມ່ນໄດ້ຮັບການພັດທະນາຫຼາຍແລ້ວ ແຕ່ທ່ານມາເບິ່ງປະເທດຕົນເອງກໍ່ເຫັນວ່າເປັນປະເທດທີ່ຫຼ້າຫຼັງ ມີການເຊື່ອມໂຊມຈາກການປົກຄອງທີ່ບໍ່ມີປະສິດທິພາບຂອລລາຊະວົງຊິງ ແລະ ທີ່ສຳຄັນແມ່ນປະເທດຕົກຢູ່ພາຍໃຕ້ລັດທິອານານິຄົມຂອງຊາວຕາເວັນຕົກ ແລະ ປະເທດຍີ່ປຸ່ນທີ່ມີຄວາມຈະເລີນກ້າວໜ້າກວ່າຈີນຫຼາຍເທົ່າ.

ປັດໄຈເຫຼົ່ານີ້ຈຶ່ງເປັນເຫດໃຫ້ ຊຸນຍັດເຊັນ ຕ້ອງເຮັດການປ່ຽນແປງໂດຍມີການໂຄ່ນລົ້ມລາຊະວົງຊິງ ທີ່ບໍ່ມີສະມັດຕະພາບໃນການບໍລິຫານປະເທດ ແລະ ກວດລ້າງລະບອບສັກກາດີນາ ເພາະ ພວກຂຸນນາງບໍ່ພຽງແຕ່ຮັບໃຊ້ລາຊະວົງຊິງແຕ່ຍັງຫັນໄປຮັບໃຊ້ພວກຈັກກະພັດນິຍົມທີ່ເຂົ້າມາກອບໂກຍເອົາຜົນປະໂຫຍດຢູ່ປະເທດຈີນ ເມື່ອເປັນແນວນັ້ນອຸດົມການຂອງ ຊຸນຍັດເຊັນ ທີ່ມີຄວາມຮັກບ້ານເກີດເມືອງນອນ ຢາກເຫັນປະເທດຈີນກ້າວໄປສູ່ຄວາມເປັນເອກະລາດ ແລະ ຢາກເຫັນປະຊາຊົນຢູ່ເຢັນເປັນສຸກ.

❖ ຫຼັກການ ແລະ ແນວຄິດຂອງ ຊຸນຍັດເຊັນ ທີ່ໃຊ້ໃນການປະຕິວັດ ຄື ຫຼັກສາມປະການ ດັ່ງນີ້:

- ການໂຄ່ນລົ້ມລັດຖະບານແມນຈູ ແລະ ຈັດຕັ້ງລັດຖະບານປະຊາຊົນຈີນຂຶ້ນ.
- ການຈັດຕັ້ງລັດຖະບານຕາມລະບອບສາທາລະນະລັດ.
- ການແບ່ງທີ່ດິນໃຫ້ແກ່ປະຊາຊົນຄືນໃໝ່.

ເມື່ອການປະຕິວັດໄດ້ດຳເນີນໄປນັ້ນໄດ້ເກີດມີເຫດການຕ່າງໆຢ່າງຫຼວງຫຼາຍເກີດຂຶ້ນ ການກໍ່ການບາງເທື່ອກໍ່ສຳເລັດ ແລະ ເທື່ອກໍ່ລົ້ມເຫຼວ ແຕ່ຊຸນຍັດເຊັນ ກໍ່ບໍ່ເຄີຍທໍ້ຕໍ່ຄວາມຫຼົ້ມເຫຼວ ເພາະອຸດົມການ ແລະ ຄວາມຮັກຊາດນັ້ນມີຫຼາຍກວ່າຄວາມທໍ້ຖອຍ ຈຶ່ງເປັນເຫດໃຫ້ການປະຕິວັດໄດ້ຮັບຜົນສຳເລັດ. ໃນຂະນະນັ້ນມີຂຸນນາງຊື່ວ່າ: ຫຍວນຊື່ໄຂ່ ຄຸມອຳນາດທາງດ້ານການທະຫານ ແລະ ການເມືອງເຂົາເປັນຂຸນນາງຜູ້ຈົງຮັກພັກດີລາຊະວົງຊິງແມ່ນຕ້ອງເພິ່ງອຳນາດຂອງເຂົາ ເຂົາເປັນຜູ້ຕໍ່ຕ້ານການປະຕິວັດຂອງຊຸນຍັດເຊັນ

ໃນທີ່ສຸດການໂຄ່ນລົ້ມລາຊະວົງສຳເລັດລົງ. ສ່ວນໜຶ່ງແມ່ນມາຈາກຫຍວນຊື່ໄຂ່ ໄດ້ຫັກຫຼັງຕໍ່ລາຊະວົງຊິງ. ໄດ້ມີການປ່ຽນແປງຈາກລະບອບສົມບູນສິດທິລາດ ມາເປັນສາທາລະນະລັດປະຊາຊົນຈີນ ແລະ ໄດ້ສະເໜີໃຫ້ຊຸນຍັດເຊັນ ເປັນປະທານາທິບໍດີຊົ່ວຄາວ ແຕ່ເນື່ອງຈາກ ຫຍວນຊື່ໄຂ່ ໄດ້ມີອຳນາດໃນທຸກດ້ານເປັນເຫດເຮັດໃຫ້ເຂົາໄດ້ບີບບັງຄັບ ຊຸນຍັດເຊັນ ມອບຕຳແໜ່ງໃຫ້ຫຍວນຊື່ໄຂ່ເປັນປະທານາທິບໍດີ ແລະ ແຕ່ງຕັ້ງໃຫ້ຊຸນຍັດເຊັນເປັນຫົວໜ້າຜູ້ອຳນວຍການລົດໄຟເພື່ອຈະໄດ້ພັດທະນາການສັນຈອນໃນປະເທດ.

ການປົກຄອງໄດ້ຕົກຢູ່ໃນກຳມືຂອງ ຫຍວນຊື່ໄຂ່  ແລ້ວຄວາມຫຍຸ້ງຍາກຂອງປະເທດຈີນກໍ່ໄດ້ເກີດຂຶ້ນອີກຄັ້ງໜຶ່ງເມື່ອ ຫຍວນຊື່ໄຂ່ ຈະປະກາດຕົນເອງຂຶ້ນເປັນຈັກກະພັດ ແຕ່ເນື່ອງຈາກ ຫຍວນຊື່ໄຂ ໄດ້ເສຍຊີວະດລົງກ່ອນ ຈຶ່ງໄດ້ມີການປ່ຽນອຳນາດໄປຫາລຸ້ນຕໍ່ໄປ ເມື່ອເປັນດັ່ງນັ້ນປະເທດກໍ່ໄດ້ກັບມາສູ່ສົງຄາມກາງເມືອງອີກຄັ້ງໜຶ່ງເພາະຜູ້ນຳລັດຖະບານບໍ່ສາມາດພັດທະນາປະເທດໄດ້.

ໃນປີ ຄສ 1917 ເປັນຊ່ວງທີ່ລັດເຊຍໄດ້ໂຄ່ນລົ້ມລະບອບພະເຈົ້າຊາ ນິໂຄຣທີ2 ເຊິ່ງເປັນກະສັດທີ່ປົກຄອງລັດເຊຍ ການໂຄ່ນລົ້ມແມ່ນນຳໂດຍ ວາລາດີມີ ເລນິນ ເຊິ່ງເປັນຫົວໜ້າພັກໂບນເຊວິກ ທີ່ເຮັດການປະຕິວັດລະບອບກະສັດຂອງລັດເຊຍ ແລະ ຕັ້ງຕົນເປັນຜູ້ນຳປະເທດ ແລະ ຊອກຫາວິທີສະຫງົບເສິກ ກັບເຢຍລະມັນໃນສົງຄາມໂລກຄັ້ງທີ 1 . ເຮັດໃຫ້ຊຸນຍັດເຊັນ ໄດ້ເຫັນຄວາມຫວັງໃໝ່ ຈາກການປະຕິວັດຊຽງໄຮ້ ທີ່ສາມາດໂຄ່ນລົ້ມລາຊະວົງແມນຈູໄດ້ ແຕ່ບໍ່ສາມາດປົກຄອງ ແລະ ປັບປຸງປະເທດໃຫ້ເປັນປະເທດປະຊາທິປະໄຕຢ່າງແທ້ຈິງໄດ້ ຊຸນຍັດເຊັນ ຈຶ່ງໄດ້ແນວຄິດໃໝ່ຈາກການປະຕິວັດລັດເຊຍ ແລະ ໄດ້ແນວຄິດຈາກນັກສຶກສາມະຫາວິທະຍາໄລປັກກິ່ງເປັນຜູ້ດຳເນີນການຮຽກຮ້ອງປະຊາທິປະໄຕຈີນກໍ່ເກີດເປັນສົງຄາມກາງເມືອງອີກຄັ້ງ.

# ບົດທີ4:
# ການປະຕິວັດຈີນ ແລະ ຈີນລະບອບສາທາລະນະລັດ

## 1. ການປະຕິວັດຈີນ ປີ ຄສ 1925-1927

### 1.1 ສາເຫດທີ່ພາໃຫ້ເກີດມີການປະຕິວັດ

ເມື່ອງສົງຄາມໂລກຄັ້ງທີ 1 ສິ້ນສຸດລົງ ອີງຕາມສົນທິສັນຍາແວກໄຊ-ວໍຊິງຕັນ ເຂດຊຽງຕຸງຂອງຈີນໄດ້ຖືກມອບໃຫ້ເປັນຫົວເມືອງຂຶ້ນຂອງຍີ່ປຸ່ນ ປະເທດຈີນໄດ້ຖືກແບ່ງປັນລະຫວ່າງຈັກກະພັດອັງກິດ, ຝຣັ່ງ ແລະ ອາເມຣິກາ. ການເຕີບໃຫ່ຍຂະຫຍາຍຕົວຂອງເສດຖະກິດນາຍທຶນ ຢູ່ຈີນເຮັດໃຫ້ຊົນຊັ້ນກຳມະຊີບຂະຫຍາຍຕົວ ພາຍໃຕ້ຜົນສະທ້ອນຂອງການປະຕິວັດເດືອນຕຸລາ ປີ ຄສ 1917 ຢູ່ລັດເຊຍ ໄດ້ເຮັດໃຫ້ຫົວໜ່ວຍພັກມາກຊິດໄດ້ຖືກສ້າງຕັ້ງຂຶ້ນຢູ່ຈີນ ແນວຄິດສັງຄົມນິຍົມໄດ້ຖືກເຜີຍແຜ່ ໃນຊົນຊັ້ນປັນຍາຊົນພາຍຫຼັງການປະຕິວັດ ປີ ຄສ 1911-1913 ພັກກົກມິນຕັງໄດ້ປ່ຽນຊື່ມາເປັນກົກມິນດາງ.

- ❖ ເປົ້າໝາຍຂອງພັກກອມມູນິດ ແລະ ພັກກົກມິນດາງແມ່ນ:
  - ຕໍ່ຕ້ານລັດທິຈັກກະພັດ ແລະ ສັກດີນາ.
  - ສ້າງຕັ້ງປະເທດຈີນໃຫ້ເປັນປະເທດສາທາລະນະລັດປະຊາທິປະໄຕ.
- ❖ ຄວາມສຳຄັນໃນການປະຕິວັດຈີນ ປີ ຄສ 1911 ມີດັ່ງນີ້:
  - ເປັນການໂຄ່ນລົ້ມອຳນາດການປົກຄອງຂອງລາຊະວົງຊີງເຊິ່ງເປັນລາຊະວົງຂອງຊາວແມນຈູ. ໂດຍການນຳພາຂອງ ດຣ ຊຸນຍັດເຊັນ ເຊິ່ງເປັນຫົວໜ້າພັກກົກມິນດາງ ເປັນຜົນເຮັດໃຫ້ຈີນປ່ຽນແປງການປົກຄອງເຂົ້າສູ່ລະບອບປະຊາທິປະໄຕໃນທີ່ສຸດ.
- ❖ ສາເຫດທີ່ພາໃຫ້ເກີດມີການປະຕິວັດຈີນ ປີ ຄສ 1911.
  - ຍ້ອນການຮຸກຮານຈາກຊາວຕ່າງຊາດໂດຍສະເພາະຊາດມະຫາອຳນາດຕາເວັນຕົກ ແລະ ຍີ່ປຸ່ນ ເຊິ່ງຈີນກໍ່ໄດ້ເຮັດສົງຄາມຕໍ່ຕ້ານການຮຸກຮານຂອງຊາວຕ່າງຊາດ ແຕ່ກໍ່ເປັນຝ່າຍປາລາໄຊມາຕະຫຼອດເຮັດໃຫ້ຄະນະປະຕິວັດບໍ່ພໍໃຈຕໍ່ລະບອບການປົກຄອງຂອງລາຊະວົງຊີງ.
  - ຍ້ອນຄວາມອ່ອນແອຂອງລາຊະວົງຊີງ ທີ່ປົກຄອງຈີນມາເປັນເວລາ 268 ປີ ( ປີ ຄສ 1611-1912) ໃນໄລຍະການປົກຄອງແມ່ນຂາດຄວາມເຂັ້ມແຂງໃນການປົກຄອງ ແລະ ມີການແຍ່ງຊີງອຳນາດພາຍໃນລາຊະວົງ.
  - ຍ້ອນຄວາມເຊື່ອມໂຊມຂອງສະພາບສັງຄົມຈີນ ປະຊາຊົນສ່ວນໃຫ່ຍທຸກຢູ່ໃນສະພາບທີ່ທຸກຍາກລຳບາກ, ຊາວໄຮ່ຊາວນາຖືກກົດຂີ່ຂູດຮີດເກັບເກນພາສີຢ່າງໜັກໜ່ວງ, ຖືກເອົາລັດເອົາປຽບຈາກເຈົ້າຂອງທີ່ດິນ, ຊາວຕ່າງຊາດເຂົ້າມາກອບໂກຍເອົາສິດຜົນປະໂຫຍດ ເອົາວັດຖຸດິບຈາກແຜນດິນຈີນໄປສະໜອງຄວາມຕ້ອງການຂອງປະເທດເຂົາໂດຍສະເພາະມາຫາອຳນາດຕາເວັນຕົກ ແລະ ຍີ່ປຸ່ນ.

### 1.2 ການເລີ່ມຕົ້ນຂອງການປະຕິວັດຈີນ

ໃນວັນທີ 30 ພຶດສະພາ ປີ ຄສ 1925 ປະຊາຊົນຊຽງໄຮ້, ກວາງເຈົ້າ ແລະ ຮົງກົງ ໄດ້ລຸກຮື້ຂຶ້ນຕໍ່ສູ້ຕ້ານຈັກກະພັດ ຂະບວນການລຸກຮື້ຂຶ້ນຕໍ່ສູ້ໄດ້ແຜ່ລາມໄປໃນຫຼາຍເມືອງ ແລະ ໄດ້ຮັບການສະໜັບສະໜູນຈາກຫຼາຍພາກສ່ວນເຮັດໃຫ້ຂະບວນການດັ່ງກ່າວ ກາຍເປັນຂະບວນການຕໍ່ສູ້ແຫ່ງຊາດ.

ຈຸດປະສົງຂອງການປະຕິວັດແມ່ນເພື່ອສ້າງຕັ້ງປະເທດຈີນໃຫ້ເປັນເອກະພາບ ເອກະລາດ ປະຊາທິປະໄຕການປະຕິວັດຈີນ ໃນປີ ຄສ 1911 ແມ່ນເປັນການໂຄ່ນລົ້ມລາຊະວົງຊີງພາຍໃຕ້ການນຳພາຂອງ ດຣ ຊຸນຍັດເຊັນ ເຊິ່ງ

ເປັນຫົວໜ້າພັກກົກມິນດາງ. ການໂຄ່ນລົ້ມນີ້ແມ່ນມີຜົນມາຈາກການເຊື່ອມໂຊມຂອງປະເທດຈີນທີ່ມີຜູ້ນໍາຂອງລາຊະວົງຊິງທີ່ບໍ່ມີຄວາມສາມາດພຽງພໍໃນການປົກຄອງປະເທດໄດ້ ດ້ວຍເຫດນັ້ນປະຊາກອນສ່ວນໃຫ່ຍຈື່ງຕົກຢູ່ໃນສະພາບຍາກຈົນແຜ່ນດິນຈີນຖືກຄຸກຄາມຈາກຊາວຕ່າງຊາດ. ໃນປີ ຄສ 1912 ຜູ່ອີ ຈັກກະພັດອົງສຸດທ້າຍຂອງລາຊະວົງຊິງຖືກບັງຄັບໃຫ້ສະຫຼະລາຊະບັນລັງ ຖືວ່າເປັນຈຸດຈົບຂອງລາຊະວົງຊິງ ແລະ ສິ້ນສຸດການປົກຄອງດ້ວຍລະບອບສົມບູນສິດທິລາດຂອງຈີນ ມາເປັນລະບອບປະຊາທິປະໄຕໄດ້ສໍາເລັດ. ຈາກນັ້ນ ດຣ ຊຸນຍັດເຊັນ ໄດ້ສະເໜີໃຫ້ ຢວນຊີໄຂ ເປັນ ປະທານາທິບໍດີຂອງປະເທດຈີນ ( ປະທານາທິບໍດີຄົນທໍາອິດຂອງຈີນ) ເມື່ອ ຢວນຊີໄຂ ໄດ້ເປັນປະທານາທິບໍດີແລ້ວກໍ່ຄິດສະຖາປານາຕົນເອງເປັນຈັກກະພັດ ແລະ ຮື້ພື້ນລະບອບສັກດີນາຂຶ້ນມາໃໝ່ ຈີນຊຸນຍັດເຊັນ ໄດ້ຮຽກຮ້ອງໃຫ້ມີການປະຕິວັດອີກຄັ້ງໜຶ່ງແຕ່ບໍ່ໄດ້ຮັບການສະໜັບສະໜູນຈາກປະຊາຊົນ. ເມື່ອຢວນຊີໄຂ ເສຍຊີວິດລົງ ດຣ ຊຸນຍັດເຊັນ ກໍ່ຂຶ້ນເປັນປາທານາທິບໍດີ ແຕ່ກໍ່ເປັນໄດ້ບໍ່ດົນກໍ່ໄດ້ເສຍຊີວິດ. ໃນໄລຍະທີ່ ດຣ ຊຸນຍັດເຊັນ ເປັນປະທານາທິບໍດີ ເພິ່ນມີອຸດົມການໃນການປະຕິວັດ 3 ປະການ ທີ່ເອີ້ນວ່າລັດທິໄຕລາດສະດອນ ທີ່ມີຫົວຂໍ້ດັ່ງນີ້:

- ປະຊາທິປະໄຕມີການປົກຄອງໃນລະບອບສາທາລະນະລັດປະຊາທິປະໄຕ.
- ມີລັດຖະທໍາມະນູນເປັນກົດໝາຍສູງສຸດໃນການປົກຄອງປະເທດ.
- ຕ້ອງຂັບໄລ່ອໍານາດ ແລະ ອິດທິພົນຂອງຊາດຕ່າງຊາດອອກຈາກຈີນ.

ຫຼັງຈາກຊຸນຍັດເຊັນເສຍຊີວິດແລ້ວ ຈຽງໄກເຊັກ ກໍ່ໄດ້ຂຶ້ນເປັນຜູ້ນໍາ ພັກກົກມິນດາງ ແລະ ຜູ້ນໍາຈີນແທນ.



ຮູບພາບ ດຣ ຊຸນຍັດເຊັນ

ໃນປີ ຄສ 1826 ຂະບວນການຕໍ່ສູ້ໄດ້ລາມໄປໃນຕົວເມືອງໃຫ່ຍໆຫຼາຍເມືອງໃນປະເທດຈີນ. ຈົນມາຮອດເດືອນທີ 3 ປີ ຄສ 1987 ກອງທັບປະຕິວັດພາຍໃຕ້ການນໍາພາຂອງຈຽງໄຄເຊັກ ພ້ອມທັງປະຊາຊົນໄດ້ພາກັນປົດປ່ອຍແຂວງຊຽງໄຮ້ໄດ້ ຈື່ງເຮັດໃຫ້ອໍານາດການປົກຄອງຕົກຢູ່ກໍາມືຂອງປະຊາຊົນ ແຕ່ຕໍ່ມາອໍານາດການປົກຄອງທັງ

ໝົດກໍ່ປ່ຽນຈາກປະຊາຊົນມາເປັນຂອງຈຽງໄຄເຊັກ. ພາຍຫຼັງຈຽງໄກເຊັກຂຶ້ນກໍາອໍານາດທັງໝົດ ກໍ່ໄດ້ສ້າງພັກກົກມິນດາງທີ 2 ຂຶ້ນ ແລະ ໄດ້ສະໜັບສະໜູນພວກສຶກດິນາ.



ຮູບຈອມພົນຈຽງໄຄເຊັກ

ຈອມພົນຈຽງໄຄເຊັກຈະມັກຢູ່ກັບກອງທັບ ແລະ ບໍ່ໄດ້ເອົາໃຈໃສ່ຄວາມເປັນຢູ່ຂອງປະຊາຊົນ, ບໍ່ໄດ້ເອົາໃຈໃສ່ທາງດ້ານເສດຖະກິດເຮັດໃຫ້ເສດຖະກິດມີຄວາມເຊື່ອມໂຊມ ແລະ ປະຊາຊົນມີຄວາມທຸກຍາກລໍາບາກ, ປະຊາຊົນຖືກກົດຂີ່ຂູດຮີດຈຶ່ງເຮັດໃຫ້ມີການປະຕິວັດຄັ້ງທີ 2 ເກີດຂຶ້ນເຊິ່ງນໍາໂດຍເໝົາເຈີຕຸງ ຜູ້ນໍາພັກກອມມູນິດຈີນ ເຊິ່ງການປະຕິວັດນີ້ໄດ້ການເປັນສົງຄາມກາງເມືອງຂອງປະເທດຈີນ ລະຫວ່າງຈຽງໄກເຊັກ ກັບ ເໝົາເຈີຕຸງ. ເໝົາເຈີຕຸງທົ່ນເຫັນປະຊາຊົນຖືກກົດຂີ່ຂູດຮີດບໍ່ໄດ້ຈຶ່ງຄິດຈະແກ້ໄຂບັນຫາຄວາມທຸກຍາກຂອງປະຊາຊົນ ໂດຍໃຫ້ຄວາມສໍາຄັນແກ່ຊົນຊັ້ນຜູ້ອອກແຮງງານ ແລະ ເປັນສັດຕູກັບພວກນາຍທຶນ. ເໝົາເຈີຕຸງ ຈຶ່ງໄດ້ຮັບການສະໜັບສະໜູນຈາກປະຊາຊົນທຸກຊັ້ນຄົນ ໂດຍສະເພາະແມ່ນຊາວໄຮ່ຊາວນາ ແລະ ຄົນຍາກຈົນ ຈຶ່ງມີການຈັດຕັ້ງກໍາລັງຂຶ້ນໂດຍໄດ້ຮັບການສະໜັບສະໜູນຈາກໂຊຫວຽດ ເພື່ອໃຫ້ມີການປະຕິວັດຈີນຄັ້ງໃໝ່ໃຫ້ກາຍເປັນກອມມູນິດ ເຊິ່ງມາໃນເດືອນທີ 8 ປີ ຄສ 1928 ຂະບວນການຕໍ່ສູ້ໂດຍມີຕົວເມືອງຕ່າງໆໂດຍມີຂະບວນການປະກອບອາວຸດ. ໃນເດືອນທີ 12 ປີ ຄສ 1928 ຢູ່ກວາງຕຸງໃນນາມກອມມູນິດກວາງຕຸງໄດ້ກວດລ້າວສະພາກອງທັບປະຊາຊົນເພື່ອຍຶດອໍານາດແຕ່ວ່າຂະບວນການຂອງພັກກອມມູນິດກໍ່ຖືກກວດລ້າງຈາກຈຽງໄຄເຊັກ ເພາະມີກໍາລັງທະຫານເປັນຈໍານວນຫຼວງຫຼາຍຈຶ່ງສາມາດເອົາຊະນະກອງທັບຂອງເໝົາເຈີຕຸງໄດ້ງ່າຍ. ໃນການປະຕິວັດຕ້ານພວກຈັກກະພັດ ແລະ ສັກດີນາຂອງພັກກອມມູນິດໃນປີ ຄສ 1995-1927 ຖືວ່າບໍ່ໄດ້ຮັບໄຊຊະນະ.



ຮູບພາບຂອງເໝົາເຈີຕຸງ

ການປາລາໄຊ ຂອງພັກກອມມູນິດນີ້ແມ່ນມາຈາກມີກຳລັງພົນທີ່ອ່ອນນ້ອຍກວ່າ, ບໍ່ທັນມີບົດຮຽນໃນການນຳພາການປະຕິວັດ. ແຕ່ມັນກໍ່ມີຄວາມໝາຍໃຫ້ແກ່ປະເທດຈີນ, ມັນເປັນເຫດການທີ່ພົ້ນເດັ່ນໃນປະເທດຈີນ, ເປັນບົດຮຽນໃຫ້ແກ່ການປະຕິວັດຈີນ, ແກ່ພັກກອມມູນິດຈີນ ແລະ ເປັນການປັບປຸງຈີນໃຫ້ເຂັ້ມແຂງຂຶ້ນເລື້ອຍໆ.

## 1.3 ການສ້າງຖານທີ່ໝັ້ນຂອງການປະຕິວັດ

ຄວາມພະຍາຍາມຄັ້ງທຳອິດໃນການປຸກລະດົມຊາວນາຂຶ້ນມາເພື່ອຈັດຕັ້ງເປັນກອງທັບໂດຍການນຳຂອງພັກກອມມູນິດແຕ່ກໍ່ຕ້ອງປະສົບກັບຄວາມຫຼົ້ມເຫຼວ ເພາະຖືກກຳລັງຂອງພັກກົກມິນດາງຕອບໂຕ້ຢ່າງຮຸນແຮງ. ມາໃນວັນທີ 21 ພຶດສະພາ ພວກເຂົາໄດ້ເຂົ້າກວດລ້າງສະມາຄົມຊາວນາ ແລະ ອົງການປະຕິວັດອື່ນໆໃນເມືອງສາງຊາ ໄດ້ມີການຈັບກຸມພວກກອມມູນິດ, ກຳມະກອນ, ຊາວນາ ໄປຂ້າເປັນຈຳນວນຫຼວງຫຼາຍ. ການສັງຫານໂຫດຂອງຈຽງໄຄເຊັກ ແລະ ນາຍພົນກົກມິນຕັງໃນຊຽງໄຮ້ ເໝົາເຈີຕຸງຈຶ່ງນຳກຳລັງທະຫານທີ່ຍັງເຫຼືອປະມານ 1.000 ຄົນ ໜີອອກໄປຈາກຕົວເມືອງ ຈີນເຖິງຊາຍແດນລະຫວ່າງ ມົນທົນຫູໜານ ແລະ ຈຽງຊີ ເຊິ່ງມີພູເຂົາຈິງກັງຊານຕັ້ງຢູ່ ເໝົາເຈີຕຸງນຳພາທະຫານຕັ້ງຖານທີ່ໝັ້ນເພື່ອເຮັດສົງຄາມປະຕິວັດຄັ້ງຕໍ່ໄປ



ຮູບ: ພູຈິງກັງຊານ

ຕໍ່ມາຜູ້ນໍາພາທະຫານຂອງພັກຄອມມູນິດ ແລະ ກົກມິນຕັງ ປີກຊ້າຍທີ່ຢຶດໜານຊີງ ເມື່ອວັນທີ 1 ສິງຫາ ປີ ຄສ 1927 ແລະ ກອງກໍາລັງທະຫານຂອງກົກມິນຕັງຖືກທໍາລາຍຈຶ່ງຖອນໜີໄປທາງໃຕ້ເຖິງ ເສົາໂຈ-ຊານໂຖ ( ແຕ້ຈົ່ວ-ຊົວເຖົາ)ພາຍໃຕ້ການນໍາຂອງຈູເຕີ, ຫຼີນຈຽວ ແລະ ເຢ່ຖີງ. ທະຫານສ່ວນໜຶ່ງກໍ່ໄດ້ເດີນທາງເຂົ້າມາຈຽງຊີ ແລ້ວຜ່ານໄປສູ່ຫູໜານເຂົ້າລວມກັນກັບທະຫານເໝົາເຈີຕຸງເທິງພູຈິງກັງຊານໃນເດືອນເມສາ ປີ ຄສ 1928 ແລ້ວຍັງມີນາຍທະຫານກອງທັບກົກມິນຕັງຊື່ ເພິງເຕີໄຫວໄດ້ນໍາທະຫານໃນບັງຄັບບັນຊາຂອງຕົນສົມທົບກັບເໝົາເຈີຕຸງ ແລະ ຈູເຕີ ໃນເດືອນຕຸລາປີດຽວກັນກໍາລັງທະຫານທີ່ຖານທີ່ໝັ້ນຈິງກັງຊານມີປະມານໝື່ນໆຄົນ.



ຮູບ: ການສ້າງຖານທີ່ໝັ້ນຢູ່ພູຈິງກັງຊານ

ໃນວັນທີ 8 ກັນຍາ ປີ ຄສ 1927 ຊາວນາພາຍການນໍາພາຂອງພັກກອມມູນິດໄດ້ເຂົ້າຢຶດ ລູ່ຜິງ ໄວ້ໄດ້ ແລະ ໃນວັນທີ 17 ກັນຍາ ປີ ຄສ 1927 ໄດ້ເຂົ້າຢຶດ ໄຫ່ຜິງ ແຕ່ກໍ່ຕ້ອງເສຍລູ່ຜິງ ແລະ ໄຫ່ຜິງໄປ ເນື່ອງຈາກກໍາລັງນ້ອຍກວ່າ. ມາໃນວັນທີ 25 ກັນຍາ ປີ ຄສ 1927 ກອມມູນິດໄດ້ສະຖາປານາຜະເດັດການກໍາກອນຊາວນາຂຶ້ນ ເຊິ່ງອາດຖືໄດ້ວ່າ: ເປັນສະພາໂຊຫວຽດແຫ່ງທໍາອິດຂອງຈີນ ແລະ ກໍ່ມີການປະກາດນະໂຍບາຍໃຫ້ຢຶດທີ່ດິນທັງໝົດ ແລະ ກໍາຈັດພວກຕໍ່ຕ້ານປະຕິວັດທັງໝົດ.

ຈາກການຢຶດອໍານາດໃນຕົວເມືອງແລ້ວຍັງມີການຈັດຕັ້ງສະພາໂຊຫວຽດ ແລະ ກອມມູນິດຂຶ້ນ ສິ່ງຜົນໃຫ້ຖືກຝ່າຍຕໍ່ຕ້ານຕອບໂຕ້ປາບປາມຢ່າງໂຫດຮ້າຍຮຸນແຮງ ຈຶ່ງເຮັດໃຫ້ສູນເສຍກໍາລັງເປັນຈໍານວນຫຼວງຫຼາຍດັ່ງນັ້ນຈຶ່ງຕ້ອງໄດ້ຖອຍອອກມາເພື່ອຮັກສາກໍາລັງໄວ້ໄປຕັ້ງໂຕໃໝ່.ຫຼັງຈາກນັ້ນກໍ່ໄດ້ກັບໄປປັບປຸງກໍາລັງທີ່ພູຈິງກັງຊານ ຢູ່ໃນບໍລິເວນນັ້ນມີກອງທັບນ້ອຍໆຂອງເໝົາເຈີຕຸງທີ່ປະກອບດ້ວຍກໍາມະກອນຊາວນາ ແລະ ທະຫານ ກອງທັບນີ້ມີກໍາລັງພົນປະມານ 1.000 ກວ່າຄົນທີ່ຢູ່ຖານທີ່ໝັ້ນ ແລະ ຕໍ່ມາກໍາລັງພົນໄດ້ເພີ່ມຂຶ້ນຈາກທະຫານ ຈູເຕີ ແລະ ເພີງເຕີ ໄດ້ມາສົມທົບກັນຢູ່ທີ່ໝັ້ນຈິງກັງຊານ ຈຶ່ງເຮັດໃຫ້ຖານທີ່ໝັ້ນດັ່ງກ່າວກາຍມາເປັນແບບຂອງການສ້າງຖານທີ່ໝັ້ນໃນການເຮັດສົງຄາມປະຕິວັດໄລຍະຍາວ ເຊິ່ງເໝົາເຈີຕຸງຈັດຕັ້ງຂຶ້ນພາຍໃຕ້ໂຄງການ ກອງພົນທີ1 ຂອງກອງທັບກໍາມະກອນ ແລະ ຊາວນາ ປະກອບດ້ວຍຈໍານວນທະຫານສ່ວນໜຶ່ງທີ່ລອດຕາຍມາຈາກການປາບປາມຄັ້ງຍິ່ງຂອງຈຽງໄຄເຊັກ ນອກຈາກນີ້ກໍ່ຍັງມີກໍາມະກອນຂຸດຄົ້ນແຮ່ທາດ, ກໍາມະກອນລົດໄຟ, ແລະ ໂຈນຄົນຮ້າຍໃນທ້ອງຖິ່ນກໍ່ໃຫ້ການສະນັບສະໜູນ.

ຄວາມຈິງຖານທີ່ໝັ້ນແຫ່ງນີ້ມັກຖືກເອີ້ນວ່າ: ຖານທີ່ໝັ້ນແດງ, ຖານທີ່ໝັ້ນປະຕິວັດ ແລະ ເຂດອິດສະຫຼະ ໃນຕອນຕົ້ນເອີ້ນວ່າ: ເກີວີ ເໝົາເຈີຕຸງເປັນຜູ້ສ້າງ ແລະ ພັດທະນາຈາກປະສົບການຂອງຕົນທີ່ໄດ້ສະສົມມາພໍ ສົມຄວນພ້ອມດ້ວຍຄວາມຮູ້ທີ່ໄດ້ມາຈາກການສຳຫຼວດ, ການເຄື່ອນໄຫວຂອງຊາວນາໃນມົນທົນຫູນານ ຕໍ່ມາເໝົາ ເຈີຕຸງກໍ່ໄດ້ເວົ້າວ່າ ເປັນຫຍັງອຳນາດລັດແດງຈຶ່ງດຳລົງຢູ່ໄດ້ ມາຮອດຕົ້ນເດືອນຕຸລາປີ ຄສ 1928 ຄວາມສຳຄັນຂອງ ຖານທີ່ໝັ້ນເທິງຈິງກັງຊານທີ່ເປັນແບບຢ່າງໃຫ້ແກ່ການຈັດຕັ້ງຖານທີ່ໝັ້ນ ຈົນມາເຖິງປີ ຄສ 1934 ຢູ່ທາງພາດເໜືອ ກໍ່ມີການສ້າງຖານທີ່ໝັ້ນໃນລະຫວ່າງສົງຄາມຕໍ່ຕ້ານຍີ່ປຸ່ນ ຈົນໄດ້ຮັບໄຊຊະນະໃນປີ ຄສ 1949.

## 1.4 ຍີ່ປຸ່ນຮຸກຮານປະເທດຈີນ

ຫຼັງສົງຄາມໂລກຄັ້ງທີ1 ຢຸດຕິລົງ ຍີ່ປຸ່ນໄດ້ເລີ່ມມີຄວາມຄິດຈະກືນກິນດິນແດນຈີນ, ເກົາຫຼີເໜືອ ແລະ ປະເທດອື່ນໆໃນທະວີບອາຊີ. ເພື່ອຊ່ວຍວິກິດການທາງດ້ານການເງິນ. ດິນແດນທີ່ຢູ່ທາງພາກເໜືອຂອງຈີນທີ່ເອີ້ນ ວ່າ: ແມນຈູເລຍນີ້ ຊາວຈີນເອີ້ນວ່າ: ຕົງເປ່ຍ ເປັນດິນແດນທີ່ມີຄວາມອຸດົມສົມບູນດ້ວຍຊັບພະຍາກອນທຳມະຊາດ. ຍີ່ປຸ່ນຈຶ່ງລໍຖ້າໂອກາດທີ່ຈະເຂົ້າຄອບຄອງດ້ວຍຄວາມໂລບມາກມາແຕ່ສະໄໝຊະນະສົງຄາມລະຫວ່າງຈີນ-ຍີ່ປຸ່ນ ເມື່ອປີ ຄສ 1895 ຫຼັງຈາກນັ້ນຍີ່ປຸ່ນກໍ່ເຫັນແມນຈູເລ່ຍເປັນເປົ້າໝາຍຕໍ່ໄປ. ຍີ່ປຸ່ນໄດ້ພະຍາຍາມຫາວິທີໜູນຫຼັງຫາ ວິທີເຄື່ອນໄຫວເພື່ອເຮັດໃຫ້ຕົນມີອຳນາດ ແຕ່ກໍ່ບໍ່ປະສົບຜົນສຳເລັດ ຍີ່ປຸ່ນຄິດວ່າການໃກ້ຊິດໂລກຈຳເປັນຕ້ອງໃກ້ ສິດຈີນກ່ອນ ແຕ່ຖ້າຢາກໃກ້ຊິດຈີນກໍ່ຈຳເປັນຕ້ອງໃກ້ຊິດກັບແມ່ນຈູເລ່ຍ ແລະ ມົງໂກເລ່ຍກ່ອນ.

ຈາກຄວາມຫຍຸ້ງຍາກເພາະສົງຄາມກາງເມືອງໃນຈີນ, ຍີ່ປຸ່ນເຫັນໂອກາດອັນດີຂອງຕົນໃນການທີ່ຈະໃຊ້ກຳ ລັງເຂົ້າໄປຕັ້ງຖານທີ່ໝັ້ນຢູ່ຊານຕົງ ໃນເດືອນເມສາ ປີ ຄສ 1928 ດ້ວຍຄວາມກວ້າງໃຫ່ຍຂອງແມ່ນຈູເລ່ຍທີ່ມີ ຊັບພະຍາກອນທຳມະຊາດທີ່ອຸດົມສົມບູນເຫັນວ່າຈະສາມາດເປັນການລະບາຍຄວາມແອອັດຂອງປະຊາກອນຍີ່ປຸ່ນ ໄດ້ ຍ້ອນປະເທດຂອງຕົນເປັນປະເທດທີ່ມີປະຊາກອນຈຳກັດຢູ່ແລ້ວທີ່ສຳຄັນທີ່ສຸດກໍ່ຄືກໍ່ຄືເປັນການແກ້ໄຂບັນຫາ ໄພວ່າງງານ ດັ່ງນັ້ນຍີ່ປຸ່ນຈຶ່ງໄດ້ວາງແຜນຮຸກຮານຈີນໄລຍະຍາວ

.ໃນປີ 1920 ອຸດສະຫະກຳຍີ່ປຸ່ນໄດ້ຂະຫຍາຍຕົວຢ່າງກະໂດດຂັ້ນຈີນໃນທີ່ສຸດຜົນການຜະລິດບໍ່ມີບ່ອນ ຮອງຮັບບໍ່ມີຕະຫຼາດຈຳໜາຍສິນຄ້າ ທຸລະກິດກໍ່ຕ້ອງລົ້ມເຫຼວເຮັດໃຫ້ຈຳນວນຄົນຫວ່າງງານສູງຂຶ້ນ ໃນປີ ຄສ 1927. ມາໃນປີ ຄສ 1930 ຄົນງານຕ້ອງອອກຈາກງານເຖິງ 660.000 ຄົນ  ດ້ານການຄ້າກໍ່ມີສິນຄ້າສົ່ງອອກຫຼຸດ ລົງ ເຮັດໃຫ້ພາວະເສດຖະກິດຕົກຕໍ່າ ແລະ ຄົນວ່າງງານກໍ່ໃຫ້ເກີດຄວາມບໍ່ສະຫງົບໃນສັງຄົມ. ລັດຖະບານຈີນກໍ່ມີ ການຕໍ່ຕ້ານໂດຍປະກາດນະໂຍບາຍ ວິກິດການໃນການຕໍ່ຕ້ານກອງທະຫານຍີ່ປຸ່ນຜູ້ຮຸກຮານ ແຕ່ກໍ່ບໍ່ສາມາດທີ່ຈະ ຕໍ່ຕ້ານກັບຍີ່ປຸ່ນໄດ້ໃນທີ່ສຸດຍີ່ປຸ່ນກໍ່ສາມາດໃກ້ຊິດກັບເຂດແມນຈູເລຍໄດ້ທັງໝົດ.



ຮູບ: ກອງທັບຍີ່ປຸ່ນທີ່ເຂົ້າມາຮຸກຮານຈີນ

ໃນວັນທີ 28 ມັງກອນ ປີ ຄສ 1932 ຍີ່ປຸ່ນກໍ່ໄດ້ເປີດບັ້ນຮົບທີ 2 ໃນຊຽງໄຮ້ ເພື່ອບໍ່ໃຫ້ປະເທດຕ່າງໆ ຄວາມສົນໃຈແມນຈູເລຍ, ເພື່ອເຮັດໃຫ້ຕົນເອງມີອຳນາດໃນແມນຈູເລຍຢ່າງຕ້ອງຍີ່ປຸ່ນຈິ່ງສ້າງລັດຂຶ້ນໃໝ່ຢູ່ແມນຈູເລຍ ລັດດັ່ງກ່າວມີຊື່ວ່າ: ແມນຈູກົ່ວ ຫຼື ລັດແມນຈູ ມີຊ່າງຊຸນເປັນເມືອງຫຼວງ ຜູ່ອີ ຈັກກະພັດລາຊະວົງຊີງ ອົງສຸດທ້າຍທີຖືກປະຕິວັດໃນປີ ຄສ 1911 ຕອນນີ້ມີອາຍຸ 25 ປີ ກໍ່ໄດ້ຖືກຍີ່ປຸ່ນດຶງຂຶ້ນມາເປັນຈັກກະພັດຫຸ່ນປົກຄອງແມນຈູກົວແຕ່ນັ້ນມາ ຫຼັງຈາກສະຖາປານາແມນຈູກົວຂຶ້ນຍີ່ປຸ່ນກໍ່ໄດ້ຕັ້ງຜູ່ອີ ຂຶ້ນເປັນຈັກກະພັດຄອງລາຊະບັນລັງແມນຈູກົວ ໃນວັນທີ 1 ມີນາ ປີ ຄສ 1934 ມີຊື່ທາງການວ່າ: ຄັງເຕີ. ໃນການປົກຄອງແມ່ນຈູເລຍນີ້ຍີ່ປຸ່ນແມ່ນຕ້ອງການຜົນປະໂຫຍດທາງດ້ານເສດຖະກິດໃຫ້ຫຼາຍທີ່ສຸດເທົ່າທີ່ຈະຫຼາຍໄດ້ ກອບໂກຍເອົາວັດຖຸດິບຕ່າງໆໃນແມນຈູເລຍ ໂຄງການຂອງຍີ່ປຸ່ນທີ່ວ່າຈະຍ້າຍພົນລະເມືອງຍີ່ປຸ່ນມາສູ່ແມນຈເລຍແມ່ນລົ້ມເຫຼວເນື່ອງຈາກສະພາບທາງດ້ານພູມສາດຂອງປະເທດທີ່ເຕັມໄປດ້ວຍຄວາຍາກລຳບາກ ແລະ ມີໂຈນຫຼາຍ ຈຶ່ງເຮັດໃຫ້ໂຄງການທີ່ວາງໄວ້ລົ້ມເຫຼວ. ຄວາມໝັ້ນຄົງຂອງຍີ່ປຸ່ນຕະຫຼອດຮອດຜົນປະໂຫຍດຈາກການລົງທຶນກໍ່ມີແຕ່ກອງທັບເທົ່ານັ້ນທີ່ສ້າງຄວາມໝັ້ນຄົງໃຫ້ໄດ້. ແຕ່ເຖິງຢ່າງໃດກໍ່ຕາມແມນຈູກົວໃນຖານະລັດຖະບານຫຸ່ນຂອງຍີ່ປຸ່ນກໍ່ຕ້ອງຢູ່ໂດດດ່ຽວ ຈົນຮອດມື້ມີການເຊັນສັນຍາກັບເຢຍລະມັນ ໃນປີ ຄສ 1936 ແລະ ອີຕາລີ ໃນປີ ຄສ 1937. ແຕ່ສຸດທ້າຍລັດຖະບານຫຸ່ນຂອງຍີ່ປຸ່ນຕ້ອງຈົບລົງ ເມື່ອຍີ່ປຸ່ນເປັນຝ່າຍປາລາໄຊໃນສົງຄາມໂລກຄັ້ງທີ2  ໃນປີ ຄສ 1945 ແມນຈູກົວ ກາຍມາເປັນ ແມນຈູເລຍທີ່ຊາວຈີນເອີ້ນວ່າ: ຕົງເປ່ຍ ຫຼື ອີສານຂອງຈີນຈົນຮອດທຸກວັນນີ້ ຕໍ່ມາວັນທີ 3 ກັນຍາຂອງທຸກໆປີເປັນມື້ຈາລຶກເຖິງໄຊຊະນະຂອງສົງຄາມຈີນ-ຍີ່ປຸ່ນ.

## 2. ການສ້າງຕັ້ງສາທາລະນະລັດປະຊາຊົນຈີນ

ການສິ້ນສຸດສົງຄາມໂລກຄັ້ງທີ2 ຈີນຖືກຂະໜານນາມວ່າເປັນຄົນປ່ວຍແຫ່ງອາຊີເພາະຈີນໃນໄລຍະນັ້ນເກີດໂລກໄພໄຂ້ເຈັບຈາກໄພອຶດຫິວ ແລະ ທຸກຍາກ. ຕໍ່ມາພັກກອມມູນິດຈີນພາຍໃຕ້ການນໍາພາຂອງເໝົາເຈີຕຸງໄດ້ຍຶດອໍານາດແຜ່ນດິນໃຫຍ່ ແລະ ສະຖາປານາປະເທດເປັນປະເທດ ສາທາລະນະລັດ ປະຊາຊົນຈີນ ໄດ້ເປັນປັດໃຈການຕໍ່ສູ້ຂອງປະຊາຊົນຈີນໃນເດືອນ ກັນຍາ ປີ ຄສ 1945. ຕໍ່ມາປີ ຄສ 1946 ພາຍຫຼັງດັບສູນກອງທັບຍີ່ປຸ່ນ. ຊົນຊັ້ນນາຍທຶນໄດ້ຊຸກຍູ້ໃຫ້ຈຽງໄຄເຊັກ ເປີດສາກຕ້ານກັບກອງທັບປະຕິວັດຈີນເຮັດໃຫ້ສົງຄາມກາງເມືອງເກີດຂຶ້ນ ແລະ ສົງຄາມດັ່ງກ່າວໄດ້ແກ່ຍາວເປັນໄລຍະເວລາ 3 ປີ. ແຕ່ມາໃນໄລຍະປີ ຄສ 1947-1949 ກອງທັບປະຕິວັດໄດ້ບຸກຕີດັບສູນທະຫານຈຽງໄຄເຊັກຢ່າງຮາບຄາບ, ຈຽງໄຄເຊັກ ແລະ ຜູ້ເຫຼືອລອດໄດ້ໂຕນໜີໄປຢູ່ໃຕ້ຫວັນ ເຊິ່ງແມ່ນເຂດທີ່ຈັກກະພັດອາເມຣິກາຢຶດຄອງ ໂດຍໄດ້ຮັບການສະໜັບສະໜູນຈາກສະຫະລັດອາເມຣິກາ. ສ່ວນແຜ່ນດິນໃຫຍ່ຂອງປະເທດຈີນຖືກປົກຄອງໂດຍພັກກອມມູນິດຈີນ ໂດຍມີເໝົາເຈີຕຸງເປັນປາທານາທິບໍດີ ພາຍໃຕ້ການສະໜັບສະໜູນຂອງໂຊຫວຽດ ໂດຍມີການກໍ່ຕັ້ງປະເທດຈີນຂຶ້ນ ແລະ ໄດ້ກໍານົດວັນສະຖາປານາ ສາທາລະນະລັດປະຊາຊົນຈີນຂຶ້ນ ໃນວັນທີ 1 ຕຸລາ ປີ ຄສ 1949 ແລ້ວໄດ້ກາຍເປັນວັນສະເຫຼີມສະຫຼອງວັນຊາດຈີນມາຮອດປະຈຸບັນ ເຊິ່ງນອກຈາກການປະກາດວັນທີ 1 ຕຸລາ ເປັນວັນຊາດແລ້ວຈີນກໍ່ຍັງໄດ້ມີການປະກາດໃຊ້ທຸງຊາດ, ເພງຊາດ ແລະ ກາສັນຍາລັກປະຈໍາຊາດຈີນໃນວັນດຽວກັນອີກດ້ວຍໂດຍມີລາຍລະອຽດດັ່ງນີ້:

❖ ທຸງຊາດ:



ຮູບພາບທຸງຊາດ

ທຸງຊາດຈີນມີຊື່ວ່າ: ປູ່ຊີຫົງຊີ ເຊິ່ງແປວ່າທຸງແດງ 5 ດາວ ທີ່ອອກແບບໂດຍ ເຈີລຽນຊົງ ມີລັກສະນະເປັນທຸງສີເຫຼືອງຜືນຜ້າກວ້າງ2 ສ່ວນ, ຍາວ 3 ສ່ວນ ແລະ ເປັນພື້ນສີແດງມົນທົນ, ມີຮູບດາວສີເຫຼືອງ 5 ຮູບ. ລັກສະນະເປັນດາວໃຫຍ່ 1 ດວງ ອ້ອມຮອບດ້ວຍດາວດວງນ້ອຍ 4 ດວງ.

➢ ຄວາມໝາຍອົງປະກອບໃນທຸງຊາດ.
  - ພື້ນສີແດງໝາຍເຖິງການປະຕິວັດຈີນ.
  - ດວງດາວສີເຫຼືອງ 5 ດວງ ເຊິ່ງລຽນກັນລັກສະນະຄ້າຍຄືແຜນທີ່ຂອງປະເທດຈີນ ໝາຍເຖິງຄວາມເປັນໜຶ່ງດຽວກັນຂອງຊາວຈີນທັງປະເທດພາຍໃຕ້ການນໍາພາຂອງພັກກອມມູນິດຈີນ.

- ດາວດວງໃຫ່ຍໝາຍເຖິງ: ຜູ້ນຳແຫ່ງກິດຈະການງານທັງປວງ ໄດ້ແກ່ພັກກອມມູນິດແຫ່ງຊາດ.
- ດາວດວງນ້ອຍ 4 ດວງ ມີຄວາມສຳຄັນຫຼາຍປະການ.ດັ່ງທີ່ ເຈີລຽນຊົງ ຜູ້ອອກແບບທຸງຊາດໄດ້ອະທິບາຍໄວ້ວ່າ: ປາຊົນຈີນ ( ເຊິ່ງຢູ່ໃນໄລຍະນັ້ນປະຊາຊົນຈີນມີ 400 ລ້ານຄົນ, ໃນສັງຄົມມີ4 ຊົນຊັ້ນ ຄື: ຊົນຊັ້ນກຳມະກອນ, ຊົນຊັ້ນກະສິກຳ, ຊົນຊັ້ນນາຍທຶນນ້ອຍ ແລະ ຊົນຊັ້ນນາຍທຶນໃຫ່ຍ, ມີກຳລັງສຳຄັນຂອງປະເທດຢູ່ 4 ຝ່າຍ ໄດ້ແກ່ ພັກການເມືອງຈາກມວນຊົນ, ປະຊາຊົນທຸກໝູ່ໃນສັງຄົມ, ທຸກຄົນຈາກອົງການຈັດຕັ້ງ ແລະ ຊາວຈີນທັງ 56 ຊົນເຜົ່າ, ມີປະຫວັດສາດອັນຍາວນານກວ່າ 4 ພັນປີ. ສ່ວນສີເຫຼືອງໝາຍເຖິງຊາວຈີນເຊິ່ງເປັນໜຶ່ງໃນກຸ່ມຄົນຜິວເຫຼືອງ.

❖ ເພງຊາດຈີນ.

- ເພງຊາດຈີນມີຊື່ວ່າ: ອີຢົງຈີນຈິ້ນຊີຈີນ ແປວ່າເພງມະຖະຫາພາສາ ໂດຍເໜີເຈີຕຸງ ແລະ ໂຈເອີລາຍ ສອງຜູ້ນຳຄົນສຳຄັນຂອງຈີນໄດ້ໃຫ້ໄດ້ໃຫ້ຄວາມເຫັນຕໍ່ເພງຊາດຈີນໄວ້ວ່າ: ເພງຊາດໄດ້ເຮັດໜ້າທີ່ສະທ້ອນເຖິງພະລັງງານ ແລະ ຈິດວິນຍານຂອງປະຊາຊົນໃນທົ່ວປະເທດ. ໂດຍເພງຊາດຂອງຈີນໄດ້ຮັບການຮັບຮອງຢ່າງເປັນທາງການຈາກມະຕິສະພາທີ່ປຶກສາການເມືອງຂອງປະເທດໃນວັນທີ 27 ກັນຍາ ປີ ຄສ 1949 ແລະ ມີການເປີດເພງນີ້ຢ່າງເປັນທາງການຄັ້ງທຳອິດໃນພິທີສະຖາປານາ ສາທາລະນະລັດ ປະຊາຊົນຈີນ ໃນວັນທີ 1 ຕຸລາ ປີ ຄສ 1949.

❖ ກາແຜນດິນ.

- ກາແຜນດິນຂອງ ສາທາລະນະລັດ ປະຊາຊົນຈີນເປັນສັນຍາລັກທີ່ສະແດງເຖິງພາບ ຂອງປະຕູທາງເຂົ້າພະລາຊະວັງຕ້ອງຫ້າມ. ພາຍໃນວົງມົນທີ່ຄ້າຍຄືພວງມະໄລພື້ນສີແດງ ແລະ ປະຕູດັ່ງກ່າວມີດາວ 5 ດວງ ເຊິ່ງປາກົດຢູ່ໃນທຸງຊາດ



ຮູບ: ກາແຜ່ນດິນຈີນ.

ວັນທີ 1 ຕຸລາ ປີ ຄສ 1949 ສາທາລະນະລັດປະຊາຊົນຈີນໄດ້ສ້າງຕັ້ງຂຶ້ນຢ່າງເປັນທາງການ ຈີນໄດ້ເປີດປະເທດເພື່ອແກ້ໄຂບັນຫາພື້ນຖານທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ເຮັດໃຫ້ຈີນຫຼາຍລ້ານຄົນຫຼຸດພົ້ນອອກຈາກຄວາມອຶດຫິວ ການທີ່ຈີນເປີດປະເທດ ແລະ ປົກຄອງຢ່າງເຂັ້ມງວດພາຍໃຕ້ການຊີ້ນຳຂອງພັກຄອມມູນິດເຮັດໃຫ້ຈີນເບິ່ງຄືວ່າເປັນປະເທດທີ່ລຶກລັບ. ການປະຕິຕ້ານຈັກກະພັດ ແລະ ສັກດິນາໄດ້ສິ້ນສຸດລົງ. ການປະຕິວັດຈີນແມ່ນເຫດການປະຫວັດສາດທີ່ມີຄວາມໝາຍຍິ່ງໃຫ່ຍ ມັນໄດ້ເປີດເສັ້ນທາງຂະຫຍາຍສັງຄົມນິຍົມໃຫ້ແກ່ປະຊາຊົນຈີນ ມັນຍັງໄດ້ປະກອບສ່ວນໃນການປັບປຸງທັດສະນະລະບົບສັງຄົມນິຍົມແຫ່ງໂລກ.

ພາຍຫຼັງປະກາດປະເທດຈີນແລ້ວ ໜ້າທີ່ຕົ້ນຕໍຂອງຊາວຜູ້ອອກແຮງງານແມ່ນປັບປຸງອຳນາດການປົກຄອງ ຕ້ອງລົບລ້າງອຳນາດການປົກຄອງເກົ່າ ແລະ ສ້າງອຳນາດການປົກໃໝ່, ຟື້ນຟູເສດຖະກິດແຫ່ງຊາດ, ແກ້ໄຂບັນຫາທີ່ດິນ, ລົບລ້າງຄວາມບໍ່ຮູ້ໜັງສືດ້ວຍການຊ່ວຍເຫຼືອຮອບດ້ານຂອງໂຊຫວຽດ. ໃນໄລຍະປີ ຄສ 1949-1952 ຈີນເປີດປະເທດຢ່າງເຕັມທີ່ ປະຕິຮູບລະບົບເສດຖະກິດຂອງຈີນໃຫ້ເປັນສັງຄົມນິຍົມໃຫ້ທັນສະໄໝໃນ 4 ດ້ານ ຄື: ທາງດ້ານການກະເສດ, ທາງດ້ານອຸດສະຫະກຳ, ການປ້ອງກັນປະເທດ ແລະ ວິທະຍາສາດເຕັກໂນໂລຊີພາຍໃນສະຕະວັດທີ 20.

ມາໃນເດືອນ ກັນຍາ ປີ ຄສ 1976 ເໝົາເຈີຕຸງໄດ້ເສຍຊີວິດ. ເຕິ້ງສຽວຜິງ ໄດ້ມາມີອຳນາດເປັນຜູ້ນຳຂອງຈີນ. ໄດ້ເປີດລະບົບເສດຖະກິດໂດຍຈັດຕັ້ງເຂດເສດຖະກິດ 5 ເຂດຄື: ເຊິນເຈີນ, ຈູ່ໄຫ່, ຊານໂຖ, ເຊີຍະເຫີນ ແລະ ໄຫ່ໜານ ລວມທັງເປີດເມືອງທ່າ 14 ເມືອງ ທາງຝັ່ງທະເລພາກຕາເວັນອອກແຕ່ເໜືອຫາໃຕ້ ເຮັດໃຫ້ນັກລົງທຶນຕ່າງປະເທດເຂົ້າມາລົງທຶນມາລົງທຶນຢ່າງມະຫາສານ ເຮັດໃຫ້ເສດຖະກິດຈີນມີການຂະຫຍາຍຕົວຢ່າງໄວວາ ແລະ ໄດ້ລົບລ້າງອຳນາດການປົກຄອງສັກດີນາ ແລະ ພວກຈັກກະພັດ, ຍຶດເອົາໂຮງຈັກໂຮງງານຂອງພວກນາຍທຶນ, ບັນດາທະນະຄານ, ພາຫະນະຂົນສົ່ງ, ບໍລິສັດການຄ້າ ໄດ້ຖືກຍຶດມາເປັນຂອງລັດ 56%. ປີ ຄສ 1954 ພັກໄດ້ຮັບເອົາລັດຖະທຳມະນູນ ໃນນັ້ນອຳນາດສູງສຸດແມ່ນຜູ້ແທນຈີນທົ່ວປະເທດ.

## 3. ການກໍ່ສ້າງສັງຄົມນິຍົມຢູ່ຈີນ

ຈີນໄດ້ມີການປະຕິຮູບ ແລະ ເປີດປະເທດໃນ 3 ອົງປະກອບຂອງແນວທາງພື້ນຖານໃນການບໍລິຫານປະເທດ ແນວທາງພື້ນຖານປະກອບດ້ວຍ ໜຶ່ງໃຈກາງສາມຈຸດຄ້ຳ ໜຶ່ງໃຈກາງກໍ່ຄືການພັດທະນາເສດຖະກິດເປັນຫົວໃຈຂອງການພັດທະນາປະເທດ, ສອງຈຸດຄ້ຳຄື:

1. ຄືການຢຶດໝັ້ນໃນຫຼັກການພື້ນຖານ 4 ປະການ ເພື່ອໃຫ້ຈີນຄົງຕົວຢູ່ໃນສັງຄົມນິຍົມເຊັ່ນ: ຕ້ອງມີພັກຄອມມູນິດອິນດູຈີນເປັນຜູ້ນຳໃນການບໍລິຫານປະເທດ, ຕ້ອງຢຶດໝັ້ນໃນລັດທິມາກຊິດ, ຕ້ອງດຳເນີນປະຊາທິປະໄຕປະຊາຊົນ ແລະ ຕ້ອງເດີນໄປຕາມເສັ້ນທາງສັງຄົມນິຍົມ.

2. ຄືການປະຕິຮູບເປີດປະເທດ, ການພັດທະນາເສດຖະກິດຈະຕ້ອງມີຫຼັກປະກັນທາງດ້ານການເມືອງ, ຕ້ອງມີສະຖຽນລະພາບທາງດ້ານການເມືອງ, ປອດໄພຈາກບັນຫາວິກິດການ ແລະ ຄວາມວຸ້ນວາຍ. ດັ່ງນັ້ນຕ້ອງມີການປະຕິຮູບໃນດ້ານເສດຖະກິດ, ການເມືອງ, ສັງຄົມວັດທະນະທຳບໍ່ໃຫ້ມີອຸປະສັກຕ່າງໆທີ່ຂັດຂວາງການພັດທະນາໃນລະບອບສັງຄົມນິຍົມ ເພື່ອໃຫ້ການພັດທະນາກຳລັງການຜະລິດຂອງປະເທດຈີນດຳເນີນໄປຢ່າງເຕັມທີ່, ການເປີດປະເທດຈີນກໍ່ຈັດຢູ່ໃນມະຕິໜຶ່ງຂອງການປະຕິຮູບ ການເປີດປະເທດຈຶ່ງສະແດງເຖິງບົດບາດຂອງກຳລັງຂັບເຄື່ອນ ຫຼື ກຳລັງດັນຂອງຂະບວນການສ້າງຊາດຍຸກໃໝ່ເປັນການເປີດທາງໃຫ້ແກ່ກຳລັງການຜະລິດ, ຖ້າບໍ່ມີການປະຕິຮູບທຸກຢ່າງກໍບໍ່ມີການເຄື່ອນໄຫວ, ການກໍ່ສ້າງລະບອບສັງຄົມນິຍົມແບບເກົ່າ ໃຫ້ມີຄວາມສຳພັນທາງການຜະລິດແບບສັງຄົມນິຍົມຕາມທິດສະດີຂອງກາກມາກ ໄດ້ກ້າວໄປສູ່ຄວາມເປັນສັງຄົມນິຍົມຄອມມູນິດວ່າດ້ວຍການເຮັດໃຫ້ລະບົບສຳພັນທາງການຜະລິດ ແລະ ໂຄ້ງສ້າງເຊັ່ນ: ຄວາມຄິດການເມືອງ, ສັງຄົມ, ສິລະປະ, ວັດທະນະທຳໃຫ້ມີຄວາມເປັນຄອມມູນິດ ເຊິ່ງໃນທີ່ກໍ່ເປັນສັງຄົມນິຍົມແຕ່ແກ່ນໃນສັງຄົມນິຍົມທີ່ຈີນເຂົ້າເຖິງໂດຍການອະທິບາຍຂອງເຕິ້ງສຽວເຜິງ ກໍ່ຄື: ກຳລັງການຜະລິດການສ້າງລະບອບສັງຄົມນິຍົມກ່ອນອື່ນຈະຕ້ອງພັດທະນາກຳລັງການຜະລິດໃຫ້ເຕີບໃຫ່ຍເຂັ້ມແຂງ ໃນສ້າງກຳລັງການປະຕິວັດຊາດ ການພັດທະນາສັງຄົມຂອງມະນຸດ ກຳລັງການຜະລິດສັງຄົມນິຍົມຈະຕ້ອງມີຄວາມກ້າວໜ້າກວ່າລະບອບທຶນນິຍົມ.

ດັ່ງນັ້ນ ຈຶ່ງມີການປ່ຽນແປງລະບົບຄວາມສຳພັນທາງດ້ານການຜະລິດເພື່ອເປັນການເປີດທາງໃຫ້ແກ່ການພັດທະນາກຳລັງການຜະລິດຂອງສັງຄົມຕ້ອງເປັນຜົນດີຕໍ່ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບອບສັງຄົມນິຍົມ, ສ້າງຖານະໃຫ້ແກ່ການນຳຂອງພັກຄອມມູນິດ, ສ້າງຄວາມເຂັ້ມແຂງໃຫ້ແກ່ລະບອບປະຊາທິປະໄຕປະຊາຊົນຈີນ, ປະເທດຈີນບົນເສັ້ນທາງການກ້າວໄປສູ່ຄວາມເປັນສັງຄົມນິຍົມ ແລະ ຄອມມູນິດໃນອານາຄົດ ເຕິ້ງສຽວຜິງ ເວົ້າວ່າ: ການປະຕິຮູບ ແລະ ການເປີດປະເທດຄືເສັ້ນທາງຊີວິດຈີນ, ການປະຕິຮູບຈີນໄດ້ໄດ້ຄວບຄຸມໄປທຸກດ້ານເຊັ່ນ: ການປະຕິຮູບທາງດ້ານເສດຖະກິດ ການປະຕິຮູບລະບົບການວາງແຜນການວາງແຜນຈາກສ່ວນກາງຂັ້ນພື້ນຖານມາເປັນລະບອບເສດຖະກິດຕະຫຼາດ, ການປະຕິຮູບລະບົບການເມືອງຈາກການລວມສູນອຳນາດມາເປັນການກະຈາຍອຳນາດ. ການປະຕິຮູບທັງໝົດນີ້ແມ່ນມີຈຸດມຸ້ງໝາຍດຽວກັນຄື: ກຳຈັດອຸປະສັກຂັດຂວາງການພັດທະນາກຳລັງການຜະລິດຂອງສັງຄົມໃຫ້ໝົດ ການປະຕິວັດໄດ້ນຳໄປສູ່ການປົກປ່ອຍກຳລັງການຜະລິດ. ການປະຕິຮູບແມ່ນອຸປະສັດຂັດຂວາງການພັດທະນາການຜະລິດຂອງສັງຄົມ. ໃນກໍລະນີປະເທດຈີນມີການປະຕິຮູບແມ່ນມີຄວາມຈຳເປັນຫຼາຍເນື່ອງຈາກຈີນເປັນປະເທດທີ່ໃຫ່ຍແຕ່ບໍ່ມີການພັດທະນາ ປະຊາຊົນມີຄວາມທຸກຍາກຫຼາຍ ການປະຕິຮູບໄດ້ເຮັດໃຫ້ກຳລັງການຜະລິດດຳເນີນໄປໄດ້ໂດຍດີ ແລ້ວເປີດປະເທດຮັບເອົາການລົງທຶນ ແລະ ເຕັກໂນໂລຊີ ຈາກການຜີລິດທີ່ກ້າວໜ້າຈາກຕ່າງປະເທດຈຶ່ງເປັນຈຸດເລີ່ມຕົ້ນຂອງການປະຕິຮູບ.

ການພັດທະນາປະເທດຈີນສຳເລັດໄດ້ດ້ວຍການເສື່ອມຕົນເອງໃຫ້ເຂົ້າກັບສັງຄົມໂລກ ຈະບໍ່ສາມາດແຍກອອກຈາກສັງຄົມໂລກໄດ້ ປະເທດຕ້ອງເພິ່ງຕົນເອງຢືນດ້ວຍຕົນເອງ ແຕ່ກໍ່ຕ້ອງໃຊ້ປະໂຫຍດດ້ວຍຄວາມຈະເລີນກ້າວໜ້າຂອງປະເທດທຶນນິຍົມ, ໃຊ້ປະໂຫຍດຈາກເງິນທຶຣທີ່ມີທົ່ວໂລກ. ລະບອບສັງຄົມນິຍົມເປັນລະບອບທີ່ຕ້ອງປະຕິຮູບ ເພື່ອປັບປຸງລະບອບສັງຄົມນິຍົມໃຫ້ດີຂຶ້ນ, ໃຫ້ມີຄວາມສົມບູນໃຫ້ປະຊາຊົນຈີນຢູ່ດີມີຄວາມສຸກຕາມແກ່ນແທ້ໃນສັງຄົມນິຍົມ ເນັ້ນຄວາມໝັ້ນຄົງຮ່ອມກັນ.

# ບົດທີ5
# ວັດທະນະທຳຈີນ

## 1. ວິທະຍາສາດ ແລະ ສິລະປະກຳ

ແຕ່ສະໄໝບູຮານທາງດ້ານວິທະຍາສາດ ແລະ ສິລະປະກຳຂອງຈີນ ໄດ້ມີການຂະຫຍາຍຕົວພໍສົມຄວນ ສາມາດແຕ້ມແຜນທີ່ຂອງໝູ່ດວງດາວລ່ວງໜ້າກ່ຽວກັບສຸລິຍະຄາດ ແລະ ຈັນທະຄາດ, ສາມາດກະຕວງໄດ້ມີດາວຫາງປາກົດຕົວ. ນອກຈາກນີ້ ຄົນຈີນບູຮານຍັງສາມາດ ປະດິດປະຕິທິນອອກມາໃຊ້ ແລະ ສາມາດປະດິດວົງມົນ (ກົມປາ), ຮູ້ຈັກຫຼັກເກນຂອງຄະນິດສາດ, ຮູ້ຈັກຄຸນລັກສະນະຂອງຮູບສາມແຈ, ຮາກກຳລັງສອງ, ຮາກກຳລັງສາມ, ຊຳນານກ່ຽວກັບການປູກປູກຝັງ, ການຮັກສາດິນ, ສິລະປະຫັດຖະກຳກໍ່ມີການຂະຫຍາຍຕົວເປັນຕົ້ນແມ່ນການແກະສະຫຼັກຄວັດຮູບຕ່າງໆ, ຕ່ຳຜ້າໄໝ, ປະດິດເຄື່ອງໃຊ້ ແລະ ເຄື່ອງເອ້ຍ້ອງຕ່າງໆ.

❖ ດ້ານດາລາສາດ

- ແຕ້ມແຜນທີ່ບອກຕຳແໜ່ງດວງດາວຕ່າງໆໃນທ້ອງຟ້າ.
- ສາມາດຄົ້ນພົບຈຸດດັບຂອງດວງອາທິດ.
- ສາມາດປະດິດປະຕິທິນອອກມາໃຊ້ໃນລັກສະນະທີ່ເປັນເອກະລັກສະເພາະຂອງປະຕິທິນຈີນ. ຄືການແບ່ງເວລາອອກເປັນໝວດ ແຕ່ລະໝວດມີ 10 ວັນ, ກຳນົດເອົາສາມໝວດໃດເປັນໜຶ່ງເດືອນ ແລະ ປີໜຶ່ງມີ 4 ລະດູການຄື: ລະດູບານໃໝ່, ລະດູຮ້ອນ, ລະດູໃບໄມ້ຫຼົ່ນ ແລະ ລະດູໜາວ.
- ຄົນຈີນສາມາດປະດິດເຂັມຊີ້ທິດ, ເຄື່ອງວັດແທກແຜ່ນດິນໄຫວ, ໂມງນ້ຳ ແລະ ໂມງແດດ ເພື່ອບອກເວລາ.
- ສ້າງທິດສະດີຕ່າງໆກ່ຽວກັບການກະສິກຳໂດຍສະເພາະແມ່ນການປູກຝັງ, ການຮັກສາດິນ ແລະ ບັນດາຄຳແນະນຳຕ່າງໆກ່ຽວກັບພຶດຊະນິດຕ່າງໆ.
- ຊາວຈີນສາມາດຄົ້ນຫາໄດ້ວ່າ 1 ປີ ມີຄວາມຍາວ 365 ວັນ.
- ສາມາດທຳນາຍການເກີດອຸປະລະລາຄາ ແລະ ເປັນປະເທດທຳອິດທີ່ຮູ້ກ່ຽວກັບດວງຈັນເຄື່ອນທີ່ຈາກທິດຕາເວັນຕົກໄປຍັງທິດຕາເວັນອອກໃຊ້ເວລາປະມານ 28 ວັນ.
- ເນື່ອງຈາກຈີນຢູ່ຫ່າງຈາກເອີລົບຫຼາຍເຮັດໃຫ້ຄວາມຮູ້ຂອງຈີນບໍ່ສມມາດເຜີຍແຜໄປຍັງປະເທດຕາເວັນຕົກໄດ້.

❖ ດ້ານວິຊາຄະນິດສາດ

ຄຳວ່າຄະນິດສາດມາຈາກຄຳວ່າ: ຄະນິດການນັບ ຫຼື ການຄຳນວນ ແລະ ເປັນວິຊາທີ່ກ່ຽວຂ້ອງກັບຄວາມຄິດໃຊ້ຄະນິດພິສູດຢ່າງມີເຫດຜົນເປັນຈິງແທ້ບໍໂດຍວິທີຄິດເຮົາກໍ່ສາມາດຄິດໄລ່ທາງແກ້ໄຂບັນຫາທາງຄະນິດສາດ. ໃນດ້ານນີ້ກໍ່ມີການຂະຫຍາຍຕົວພໍສົມຄວນສາມາດຜະລິດວົງວຽນ (ກົມປາ)ອອກມານຳໃຊ້ ແລະ ສາມາດຮູ້ຈັກຫຼັກເກນຂອງວິຊາເລກຫຼາຍຊະນິດ, ຮູ້ຈັກຄຸນລັກສະນະຂອງຈິດຕະນິຍົມ ແລະ ວັດຖຸນິຍົມ ຕົວແທນທິດສະດີແມ່ນຂົງຈື້ ເຊິ່ງແມ່ນນັກຈິດຕະນິຍົມຊື່ສຽງ( ມີຊີວິດໃນໄລຍະ 551-480 ກ່ອນ ຄສ).



ຮູບພາບ ນັກຄະນິດສາດຊົງຈື້

ນັກຄະນິດສາດ ຊົງຈື້ ຜົນງານຢ່າງຫຼວງຫຼາຍ ຜົນງານທີ່ສຳຄັນທີ່ສຸດຂອງຊົງຈື້ຢູ່ໃນດ້ານຄະນິດສາດ ແມ່ນຊົ້ງຈື້ໄດ້ຄິດອັດຕາສ່ວນລະຫວ່າງເສັ້ນຮອບວົງກັບເສັ້ນຜ່ານສູນກາງ ທີ່ມີຄວາມຖືກຕ້ອງທີ່ສຸດຖືກຈັດເປັນອັນດັບໜຶ່ງຂອງປະເທດຈີນ ທີ່ບໍ່ມີໃຜສາມາດຄົ້ນຄິດໄດ້ເທົ່າກັບຊົ້ງຈື້ ຈຶ່ງໄດ້ສະຫຼູບປະສົບການຂອງຄົນລຸ້ນກ່ອນ ແລະ ຕັດສິນໃຈໃຊ້ວິທີການຕັດຮູບວົງກົມຂອງຫຼີວຮຸຍ ໃນສະໄໝສາມກົກ ມາເປັນອັດຕາສ່ວນລະຫວ່າງເສັ້ນຮອບວົງ ກັບ ເສັ້ນຜ່າໃຈກາງ ແຕ່ເຄື່ອງມືໃນການຄຳນວນໃນສະໄໝນັ້ນຄືທ່ອນໄມ້ຢ່າງດຽວ ສຳລັບຕົວເລກ 9 ຫຼັກ ຈະຕ້ອງຄຳນວນ 130 ຄັ້ງຂຶ້ນໄປ ທັງຍັງເກີດຂໍ້ຜິດພາດໄດ້ງ່າຍ ຊົ້ງຈື້ ເມື່ອໄດ້ຄຳນວນໜຶ່ງຄັ້ງ ຈຳຕ້ອງທົບທ່ອນຢ່າງໜ້ອຍ 2 ຮອບ ຈົນຜົນຄຳນວນຂອງທຸກຄັ້ງລວມກັນຈຶ່ງນັບໄດ້ວ່າບັນລຸຜົນຫຼັງຈາກການຄຳນວນດ້ວຍຄວາມຂະຫຍັນໝັ່ນພຽນ ຊົງຈື້ ໄດ້ຄິດໄລ່ ອັດຕາສ່ວນລະຫວ່າງເສັ້ນວົງຮອບ ກັບ ເສັ້ນຜ່ານສູນກາງເປັນຕົວເລກຢູ່ລະຫວ່າງ 3,1415926 ເຖິງ 3,1415927.



ຮູບ: ຫລີວຮຸຍ

ຊົ້ງຈື້ ເປັນນັກວິທະຍາສາດທີ່ຄິດ ອັດຕາສວ່ນລະຫວ່າງເສັ້ນຮອບ ກັບ ເສັ້ນສູນກາງ ເຖິງຕົວເລກຫຼັກທີ 7 ຫຼັກຫຼັງທົດສະນິຍົມ. ອາລ ກາຊີ ນັກຄະນິດສາດ ຊາວອາຣັບໃນສະຕະວັດທີ 15 ແລະ ວຽດ ນັກຄະນິດສາດ ຊາວຝຣັ່ງ ໃນສະຕະວັດທີ 10 ໄດ້ຄຳນວນອັດຕາສ່ວນລະຫວ່າງ ເສັ້ນຮອບວົງ ກັບ ເສັ້ນສູນກາງ ມີຕົວເລກ 16 ຫຼັກ

ຫຼັງທິດສະນິຍົມ ເຖິງໄດ້ນຳໜ້າເຂົາໄປ ນອກຈາກນີ້ ຂິງຈື້ຍັງໄດ້ຮຽບຮຽງຕຳລາຄະນິດສາດ ຈຸ້ຍສູ້ ເຊິ່ງໄດ້ລວບລວມຜົນງານ ເຊິ່ງໄດ້ລວບລວມຜົນງານຜົນງານທາງຄະນິດສາດຂອງຕົນໃນສະໄໝລາຊະວົງຖັງ. ຈຸ້ຍສູ້ ຍັງເປັນໜຶ່ງໃນຕຳລາການສອນຄະນິດສາດທີ່ສຳຄັນ.



( ຮູບພາບ ອາລ໌ ກາຊິ AL-KACHI



( ຮູບພາບ ວຽດ VIETE )

➢ ສິ່ງທີ່ຂົ້ງຈື້ຄົ້ນພົບ

- ຄ່າ PI
- ຄຳນວນເວລາ 1 ປີ ເທົ່າກັບ 365,24281481 ວັນ ເຊິ່ງໃກ້ຄຽງກັບປະຈຸບັນທີ່ມີຄ່າ 365, 24219878 ວັນ.
- ຄຳນວນໜຶ່ງປີຂອງດາວພະຫັດເທົ່າກັບ 11,858 ປີ ເຊິ່ງປະຈຸບັນມີຄ່າ 11,862.
- ຄຳນວນຈຳນວນຂອງການຊອນກັນລະຫວ່າງດວງຈັນ ແລະ ດວງອາທິດໄດ້ 27,21223 ເຊິ່ງປະຈຸບັນແມ່ນ 27,21222 ເຮັດໃຫ້ເຂົາທຳນາຍ ຈະເກີດມີປາກົດການສຸລິຍະຄາດ 4 ຄັ້ງໃນຮອບ 23 ປີ.
- ຄິດຄົ້ນສູດປະລິມານ ຕວງກົມ $\pi r^{3}/_{3}$
- ຄົ້ນພົບຫຼັກການສອນຂອງ ຄາວາເລີຍຣີ

❖ ດ້ານການແພດ.

ດ້ານການແພດ ແລະ ວິທີປຸງແຕ່ງຢາແມ່ນໄດ້ຮັບການຂະຫຍາຍຕົວຢ່າງກວ້າງຂວາງເຊັ່ນ: ການປົວພະຍາດ, ດ້ານຊີບພະຈອນ ແລະ ການປັກເຂັມ ເປັນວິທີປົວຄົນເຈັບທີ່ໄດ້ຮັບຜົນດີ ແລະ ມີຄຸນຄ່າທາງ ດ້ານວິທະຍາສາດສູງ.

ການກຳເນີດ: ການແພດບູຮານຈີນກຳເນີດມາຈາກລຸ່ມແມ່ນ້ຳເຫຼືອງຂອງຈີນ ເຂົາເຈົ້າໄດ້ສ້າງລະບົບທາງທິດສະດີໃນແຕ່ລະຍຸກສະໄໝ. ການແພດບູຮານຈີນກໍ່ມີການສ້າງສັນບໍ່ຄືກັນ ໄດ້ກຳເນີດໝໍຈີນທີ່ມີຊື່ສຽງຈຳນວນຫຼາຍ ແລະ ເກີດມີສຳນັກແພດ, ຕຳລາແພດສາດທີ່ສຳຄັນ ຈຳນວນຫຼວງຫຼາຍໃນການບັນທຶກຕົວອັກສອນອອງເຕົ່າໃນສະໄໝລາຊະວົງອິນຊັງທີ່ຫ່າງຈາກປະຈຸບັນກວ່າ 3000 ປີ ແມ່ນມີການບັນທຶກກ່ຽວກັບການຮັກສາປົ່ວປົວຂອງແພດ ແລະ ພະຍາດ 10 ກວ່າຊະນິດແລ້ວ.

ມາເຖິງລາຊະວົງໂຈເລີ່ມມີການໃຊ້ວິທີກວດສອບແບບສັນນິຖານ 4 ວິທີຄື: ເບິ່ງ, ຟັງ, ຖາມ ແລະ ແມະ ຕະຫຼອດຈົນວິທີການຮັກສາໂລກຕ່າງໆເຊັ່ນ: ການຈ່າຍຢາ, ການຝັງເຂັມ ແລະ ການຜ່າຕັດເປັນຕົ້ນ.

ໃນສະໄໝລາຊະວົງຊິນ ແລະ ລາຊະວົງຫານ ໄດ້ມີບົດປະພັນຕຳລາແພດວິທະຍາສາດທີ່ມີລະບົບຊື່ ຫວາງ, ຕີ້,ເນ່ຍ, ຈິງ. ຖືເປັນຕຳລາແພດບູຮານຈີນທີ່ເກົ່າແກ່ທີ່ສຸດໃນປະຈຸບັນ. ສ່ວນບົດປະພັນເລື່ອງ: ຊາງຫັນ ຈໍ່າປີ້ງລຸ່ນ ແປວ່າ: ວ່າດ້ວຍໂລກໄຂ້ຕົວຮ້ອນຊະນິດຕ່າງໆ ທີ່ຂຽນໂດຍນາງ ຈາງຈຸ້ງຈິ່ງ ໄດ້ບັນລະຍາຍກ່ຽວກັບວິທີການວິໄຈ ແລະ ຫຼັກການຮັກສາຂອງໂລກຊະນິດຕ່າງໆ ປູພື້ນຖານໃຫ້ກັບການພັດທະນາການແພດພາກປະຕິບັດລຸ້ນຫຼັງໆ.

ຕັ້ງແຕ່ສະໄໝເວ່ຍຈິ້ນໜັນເປີ່ຍເສົາ ປີ ຄສ 220-589 ຈົນເຖິງລາຊະວົງສຸຍ, ຖັງ ແລະ ອູ່ໄຕ້ ປີ ຄສ 581-960 ການວິນິດໄສດ້ວຍວິທີການແມະໄດ້ຮັບຜົນຫຼາຍ ນາຍ ຫວັງຊູເຫີ ນາຍແພດທີ່ມີຊື່ສຽງໃນສະໄໝຈິ້ນ ໄດ້ຂຽນຕຳລາຊື່ ຕຳລາວ່າດ້ວຍລະບົບເສັ້ນໂລຫິດ ໄດ້ລວບລວມລັກສະນະຂອງພຶດ 24 ຊະນິດ. ໜັງສືເຫຼັ້ມນີ້ບໍ່ເປັນພຽງແຕ່ມີຄວາມສຳຄັນຕໍ່ການພັດທະນາແພດວິທະຍາສາດຂອງຈີນເທົ່ານັ້ນ ແຕ່ຍັງຖືກເຜີຍແຜ່ອອກໄປຕ່າງປະເທດອີກດ້ວຍ ໃນສະໄໝນັ້ນສາຂາການແພດຕ່າງໆໄດ້ພັດທະນາຈົນເປັນວິຊາການສະເພາະທາງຂ້ອນຂ້າງຊັດເຈນເຊັ່ນຕຳລາດ້ານການຝັງເຂັມ.

ຕຳລາດ້ານການກັ່ນຕອງຢາເມັດ ອາຍຸການກຳນົດຂອງຢາ ເປົາຟູຈື່ ແລະ ໂຈໂຮຟາງ ໃນດ້ານການຜະລິດຢາກໍ່ມີ ເຫຼີຍກົງ ເຜົ້າຈື່ວລຸ່ມ ດ້ານສາຍະກຳມີຕຳລາຊື່ ຫຼີວຈວນຈື່ກຸ່ຍອີ່ຝັງ ນອກຈາກນີ້ຍັງມີຕຳລາທີ່ຂຽນເຖິງດ້ານເຫດການທີ່ເກີດໂລກຊະນິດຕ່າງໆ ແລະ ບົດປະພັນເລື່ອງ: ຫູຫູ່ຈິງ ເຊິ່ງເປັນຕຳລາດ້ານກຸມມານເວດວິທະຍາລວບລວມສະໝຸນໄພສະບັບໃໝ່ ເປັນໜັງສືລວບລວມຕຳລາຢາສະບັບທຳອິດໃນໂລກ ແລະ ຍັງມີ ຫຍິນໄຫ່ວຈິງເວີ່ຍ

ເຊິ່ງເປັນຕຳລາຈັກສຸແພດ. ນອກຈາກນີ້ໃນສະໄໝລາຊະວົງຖັງຍັງມີຕຳລາ ຊຽນເຂີນເຢົ່າຟາງ ທີ່ປະພັນໂດຍ ຊຸນຊືໝຽວ ແລະ ໄຫວ້ໄຖມີ່ເຢົາ ເຊິ່ງເປັນຕຳລາຢາ ທີ່ປະພັນໂດຍນາຍຫວັງເທົາ. ໃນການສຶກສາແພດສາດສະໄໝລາຊະວົງຊົງ ປີ ຄສ 960-1279 ນັ້ນການຝັງເຂັມໄດ້ຮັບການປະຕິຮູບຄັ້ງສຳຄັນ ນາຍຫຫວັງເທົາໄດ້ສຶກສາການຝັງເຂັມໃນຕຳແໜ່ງຮ່າງກາຍດ້ວຍຫຸ່ນທອງແດງ ຫຼັງຈາກນັ້ນລາວໄດ້ອອກແບບຫຸ່ນຈຳລອງທອງແດງທີ່ມີຕົວໃຫ່ຍເທົ່າກັບຄົນເພື່ອສະແດງຕຳແໜ່ງຕ່າງໆໃນຮ່າງກາຍ ຂຶ້ນມາ 2 ຕົວ ເພື່ອໃຊ້ການສອນໃນການຝັງເຂັມ ເລື່ອງນີ້ມີອິດທິພົນຢ່າງຫຼາຍຕໍ່ການພັດທະນາວິຊາການຝັງເຂັມໃນຄົນລຸ້ນຫຼັງ.

ໃນລາຊະວົງມິງ ຄສ 1368-1644 ມີນັກແພດສາດຈຳນວນໜຶ່ງໄດ້ຈຳແນກຜູ້ປ່ວຍອອກເປັນໂລກໄທຟອຍ ຫຼື ທີ່ໝໍຈີນເອີ້ນວ່າ: ເປັນໄຂ້ຕົວຮ້ອນ ໂລກຮ້ອນໃນ ແລະ ໂລກຮາກອອກ ຈີນເຖິງລາຊະວົງຊິງ ວິວັດທະນາການໂລກຮ້ອນໄດ້ພັດທະນາມາເຖິງຂັ້ນສຸກງອມ ຈຶ່ງມີຕຳລາວ່າດ້ວຍໂລກຮ້ອນໃນ ຈຶ່ງເກີດຂຶ້ນຕັ້ງແຕ່ສະໄໝລາຊະວົງໝິງ ເປັນຕົ້ນມາ ແພດສາດຕາເວັນຕົກໄດ້ເຂົ້າມາປະເທດຈີນ ນັກແພດສາດສ່ວນໜຶ່ງສະເໜີໄປຫາແພດບູຮານຈີນ ກັບແພດຕາເວັນຕົກ ໃຫ້ເຂົ້າເປັນອັນດຽວ ນັບວ່າເປັນຈຸດເລີ່ມຕົ້ນຂອງການປະສານແພດແຜນບູຮານຈີນກັບແພດຕາເວັນຕົກເຂົ້າດ້ວຍກັນໃນໄລຍະຕໍ່ມາ.



ຮູບ: ການຝັງເຂັມແບບບູຮານຂອງຈີນ

❖ ດ້ານສິລະປະກຳ

ໃນດ້ານນີ້ຈີນແມ່ນມີຄວາມຊຳນານໂດຍສະເພາະແມ່ນການຕໍ່າຜ້າໄໝ, ການຜະລິດເຄື່ອງເອ້ຍ້ອງ, ເຄື່ອງໃຊ້ການຜະລິດ, ເຄື່ອງຫັດຖະກຳບູຮານຂອງຈີນນັ້ນແມ່ນມີລັກສະນະທີ່ລະອຽດອ່ອນ, ປານີດ ແລະ ລະອຽດຈົບງາມ

ຜ້າໄໝ: ເປັນເຄື່ອງທີ່ປະຊາຊົນຍົກຍ້ອງໃຫ້ເປັນສິລະປະຊັ້ນສູງຂອງຈີນ ຜ້າໄໝນີ້ເປັນພຽງສີມືແຮງງານຂັ້ນໜຶ່ງເທົ່ານັ້ນ ເຂົາເຈົ້າໄດ້ເວົ້າວ່າການໄໝ ເລີ່ມມີຂຶ້ນໃນສະຕະວັດທີ 3 ກ່ອນ ຄສ ຊາວຈີນເຊື່ອວ່າ: ຜູ້ລິເລີ່ມປູກມອນລ້ຽງໄໝຂຶ້ນເປັນຄົນທຳອິດຄື: ຟູຊີກ ບັນພະບູລຸດໃນຕຳນານ ຜ້າໄໝຖືກໃຊ້ແທນເງິນມາດົນນານຫຼາຍສະຕະວັດໃນນັ້ນມີຂຸນນາງ, ທະຫານ ແລະ ລາຊະທູດຕ່າງໆກໍ່ໄດ້ໃຊ້ຜ້າໄໝເປັນເຄື່ອງບັນນາການ. ການຜະລິດຜ້າໄໝໄດ້ເລີ່ມເຂົ້າມາສູ່ຍີ່ປຸ່ນ ແລະ ເກົາຫຼີເມື່ອປະມານ 200 ປີ ກ່ອນ ຄສ



ຮູບ: ຜ້າໄໝທີ່ມີຊື່ສຽງຂອງຈີນ

## 2. ວັດທະນະທຳຕົວໜັງສື

ຈີນເປັນກຸ່ມໜຶ່ງທີ່ມີການປະດິດຕົວອັກສອນ ແທນສຽງຂຶ້ນມານຳໃຊ້ແຕ່ເປັນອັກສອນແບບຮູບພາບ ເຊິ່ງມີມີປະມານ 200 ກວ່າຮູບ. ປະຈຸບັນນີ້ສາມາດອ່ານ ແລະ ຕີຄວາມໝາຍໄດ້ 1500 ໂຕ. ການປາກົດຕົວຂອງອັກສອນຈີນເກົ່າແກ່ທີ່ສຸດມາຈາກແຫຼ່ງບູຮານດິນປັ້ນ ເມືອງຊີອໍາ ມົນທົນສານຊີ ທາງຕາເວັນອອກສ່ຽງເໜືອຂອງປະເທດ. ສາມາດນັບຍ້ອນຫຼັງໄດ້ຫຼາຍກວ່າ 5000 ປີ ໂດຍຢູ່ໃນຮູບພາບທີ່ມີລັກສະນະເປັນຮູບວົງມົນ. ຈີນເມື່ອ 300 ປີກ່ອນ ຈຶ່ງກ້າວເຂົ້າສູ່ຮູບແບບເຖິງອັກສອນຈາລຶກກະດູກສັດ ເຊິ່ງຖືວ່າເປັນຍຸກຕົ້ນຂອງສິລະປະການຂຽນອັກສອນຈີນ.



ຮູບ: ລັກສະນະຕົວໜັງສືບູຮານຂອງຈີນ

- **ອັກສອນພາບທີ່ເກົ່າແກ່ທີ່ສຸດໃນຈີນ**

ເມື່ອປີ ຄສ 1899 ຊາວບ້ານຈາກໝູ່ບ້ານແຫ່ງໜຶ່ງຂອງແຂວງຫຍາງ ມົນທົນເຫີນານ ປະເທດຈີນ ໄດ້ຄົ້ນພົບສິ່ງທີ່ເອີ້ນວ່າ: ກະດູມມັງກອນ ຈຶ່ງນໍາມາໃຊ້ເປັນຢາຮັກສາໂລກ ຕໍ່ມາເນື່ອງຈາກພໍ່ຄ້າ ຫວັງອີ້ຫົງ ເກີດຄວາມສົນໃຈຕໍ່ຕົວອັກສອນເທິງກະດູກ ຈຶ່ງສະສົມໄວ້ຈຳນວນກວ່າ 5.000 ອັນ ແລະ ສົ່ງໃຫ້ຜູ້ຊ່ຽວຊານເຮັດການສຶກສາວິໄຈ ຈຶ່ງພົບ

ວ່າກະດູກມັງກອນແທ້ຈິງແລ້ວຄືກະດູກທີ່ຈາລຶກອັກຂະຫຼະບູຮານຂອງຍຸກສະໄໝຊາງ ທີ່ມີອາຍຸເກົ່າແກ່ ມີອາຍຸປະມານ 1.300 ປີ ກ່ອນ ຄສ.



ຮູບ: ອັກສອນພາບທີ່ເກົ່າແກ່ທີ່ສຸດໃນຈີນ

ວິວັດທະນາການຂອງຕົວອັກສອນຈີນ ມີການປະສົມປະສານກັນຂອງອັກສອນຊະນິດຕ່າງກັນໃນແຕ່ລະຊ່ວງໄລຍະເວລາ ແລ້ວມີການປັບປຸງຈົນເກີດເປັນອັກສອນຊະນິດໃໝ່ເຂົ້າແທນທີ່ອັກສອນຊະນິດເດີມ ແຕ່ບໍ່ແມ່ນການຍົກເລີກອັກສອນຊະນິດເກົ່າຢ່າງສິ້ນເຊີງ ດັ່ງນັ້ນຜູ້ຄົນໃນຍຸກຕໍ່ມາຈຶ່ງຍັງມີການສຶກສາ ແລະ ໃຊ້ອັກສອນໃນຍຸກເກົ່າກ່ອນທັງໃນເຊີງສິລະປະ ແລະ ໃນຊີວິດປະຈຳວັນທີ່ເຫັນຢູ່ສະເໝີ.

- **ອັກສອນຈານເທິງກະດູກສັດ**

ອັກສອນຈານເທິງກະດູກສັດເປັນອັກຂະຫຼະບູຮານທີ່ມີອາຍຸເກົ່າແກ່ທີ່ສຸດຂອງຈີນ ໂດຍສ່ວນຫຼາຍມີຢູ່ໃນຮູບບັນທຶກຂອງການທຳທີ່ໃຊ້ມີດແກະສະຫຼັກ ຫຼື ຈານລົງເທິງອອງເຕົ່າ ຫຼື ກະດູກສັດ ປາກົດວ່າມີການແຜ່ຫຼາຍໃນລາຊະສຳນັກຊາງເມື່ອ 1300 - 1100 ປີ ກ່ອນ ຄສ ລັກສະນະຂອງຄວາມເປັນອັກສອນພາບ. ຢູ່ໂຄງສ້າງຕົວອັກສອນລັກສະນະສູງປະມານນິ້ວປາຍ, ຂະໜາດນ້ອຍເທົ່າກັບເມັດເຂົ້າ ບາງຄັ້ງໃນອັກສອນດຽວກັນທີ່ແຕກກັນຕົວອັກສອນມີການພັດທະນາໃນແຕ່ລະຊ່ວງເວລາ ໂດຍມີລັກສະນະພິເສດ.



ຮູບ: ອັກສອນຈານເທິງກະດູກສັດ

❖ **ຕົວອັກສອນໂລຫະ.**

ອັກສອນໂລຫະເປັນອັກສອນທີ່ໃຊ້ໃນສະໄໝຊາງ ຕໍ່ເນື່ອງເຖິງລາຊະວົງໂຈ(1100-771 ປີ ກ່ອນ ຄສ) ມີຊື່ເອີ້ນວ່າ: ຈິງຕິ່ງເຫວີນ ໝາຍເຖິງອັກສອນທີ່ສະຫຼັກລົງແຜນທອງເຫຼືອງ ຫຼື ທອງສໍາລິດຕົວແທນຂອງພາບທອງສໍາລິດແມ່ນ ຕິ່ງ, ຊຶ່ງ ເປັນພາບຄ້າຍຄືກະຖັງ ມີສາມຂາ ໃຊ້ສະແດງສະຖານະທາງສັງຄົມຂອງຄົນໃນສະໄໝນັ້ນ ແລະ ຕົວແທນຈາກເຄື່ອງດິນຕີທີ່ເຮັດດ້ວຍໂລຫະ ຄື ຈົງ ຫຼື ຣະຄັງ. ເນື້ອໃນທີ່ບັນທຶກເປັນອັກສອນໂລຫະ ສ່ວນຫຼາຍແມ່ນເປັນຄໍາສັ່ງການຂອງຊົນຊັ້ນນໍາ, ພິທີການບູຊາຍັນ, ບັນທຶກການທໍາສົງຄາມ.



CS สแกนด้วย CamScanner

ຮູບ: ຕົວອັກສອນໂລຫະ.

❖ **ອັກສອນຈ້ວນນ້ອຍ**

ຈາກສະໄໝຊີວ ຈີນເຖິງຍຸກກໍ່ຕັ້ງລາຊະວົງຊິນ ( 770-202 ປີ ກ່ອນ ຄສ) ໂຄງສ້າງຂອງຕົວອັກສອນຈີນສ່ວນຫຼາຍຍັງຮັກສາຮູບແບບເດີມຈາກລາຊະວົງໂຈຕາເວັນຕົກ ເຊິ່ງນອກຈາກອັກສອນໂລຫະແລ້ວຍັງມີອັກສອນຮູບແບບຕ່າງໆທີ່ເໝາະກັບການບັນທຶກລົງໃນວັດສະດຸແຕ່ລະຊະນິດ ເຊັ່ນອັກສອນທີ່ໃຊ້ໃນການລົງນາມສັນຍາຮ່ວມລະຫວ່າງແຄ້ວນທີ່ສະລັກລົງໃນແຜ່ນຢົກກໍ່ເອີ້ນວ່າໜັງສືພັນທະມິດ. ຫາກສະລັກລົງເທິງໄມ້ກໍ່ເອີ້ນວ່າ: ສາສົນໄມ້. ຫາກສະລັກລົງເທິງຫີນກໍ່ເອີ້ນວ່າຕົວໜັງສືອິກລອງຫີນ. ນອກຈາກນີ້ກ່ອນການລວມປະເທດຈີນບັນດາເຈົ້ານະຄອນລັດ ຫຼື ແຄ້ວນຕ່າງໆ ກໍ່ມີຕົວອັກສອນຈ້ວນໃຫຍ່ ຫຼື ຕ້າຈວນ ເຊິ່ງເປັນຕົ້ນແບບຂອງສຽວຈ້ວນໃນເວລາຕໍ່ມາ.

ຫຼັງຈາກທີ່ຈີນຊີຮອງເຕ້ ໄດ້ລວມແຜ່ນດິນຈີນເຂົ້າເປັນອັນໜຶ່ງອັນດຽວ ໃນປີ ຄສ 221 ແລ້ວກໍ່ມີການປະຕິຮູບຕົວອັກສອນຄັ້ງໃຫຍ່ ໂດຍການສ້າງມາດຕະຖານຮູບແບບຕົວອັກສອນທີ່ເປັນອັນໜຶ່ງອັນດຽວກັນທົ່ວປະເທດ ແລະ ເລົ່າກັນວ່າພາຍໃຕ້ການຊຸກຍູ້ຂອງເສນາບໍດີ ຫຼີ່ຊື ໄດ້ມີການນຳເອົາຕົວອັກສອນດັ້ງເດີມຂອງລັດຊີວ( ອັກສອນຈ້ວນ) ມາປັບໃຫ້ອ່ານງ່າຍຂຶ້ນ ຈາກນັ້ນກໍ່ແຜ່ອອກໄປທົ່ວປະເທດ ໃນຂະນະດຽວກັນກໍ່ໄດ້ມີການຍົກເລີກຕົວອັກສອນທີ່ມີລັກສະນະສະເພາະຈາກແຄ້ວນອື່ນໆໃນຍຸກສະໄໝດຽວກັນອັກສອນທີ່ຜ່ານການປະຕິຮູບນີ້ລວມແລ້ວເອີ້ນວ່າ: ອັກສອນສ້ຽວຈ້ວນ ຫຼື ຈ້ວນນ້ອຍ ຖືເປັນອັກສອນທີ່ໃຊ້ທົ່ວປະເທດຈີນເປັນຄັ້ງທຳອິດ.



CS สแกนด้วย CamScanner

ຮູບ: ອັກສອນຈ້ອນນ້ອຍ

❖ **ອັກສອນລີຊູ**

ຂະນະທີ່ຍຸກສະໄໝຊິນປະກາດໃຊ້ອັກສອນຈ້ອນນ້ອຍຢ່າງເປັນທາງການນັ້ນກໍປາກົດວ່າມີການນຳໃຊ້ຕົວອັກສອນລີຊູຄວບຄູ່ກັນໄປໂດຍມີການປະຍຸກມາຈາກອັກສອນຈ້ອນນ້ອຍຢ່າງງ່າຍດາຍອັກສອນລີຊູເຮັດໃຫ້ອັກສອນຈີນກ້າວເຂົ້າສູ່ຂອບເຂດຂອງອັກສອນສັນຍາລັກຢ່າງເຕັມຮູບແບບ ອາດເວົ້າໄດ້ວ່າເປັນຂະບວນການການປ່ຽນແປງຈາກອັກສອນບູຮານມາສູ່ຄວາມເປັນອັກສອນພາບສູ່ອັກສອນຈີນທີ່ໃຊ້ໃນປະຈຸບັນ.

ສຳລັບທີ່ມາຂອງອັກສອນລີຊູນັ້ນເລົ່າກັນວ່າໃນສະໄໝຊິນມີຂ້າທາດຜູ້ໜຶ່ງຊື່ວ່າ: ເຊີງໝຽວ ເນື່ອງຈາກມີຄວາມຜິດຈຶ່ງຖືກສັ່ງຈຳຄຸກ ເຊິ່ງໃນເວລາທີ່ຢູ່ໃນຄຸກເຂົາໄດ້ມີການຄົ້ນຄິດຕົວອັກສອນຈ້ອນໃຫ້ຂຽນງ່າຍຂຶ້ນ ຈາກໂຄງສ້າງກົມມາ ເປັນ ໂຄງສີ່ຫຼ່ຽມ ກາຍເປັນອັກສອນຮູບແບບໃໝ່ ຈິນຊີຮົ່ງເຕ້ ເຫັນແລ້ວມີຄວາມຮູ້ສຶກມັກ ຈຶ່ງໄດ້ໃຫ້ ເຊີງໝຽວ ເຮັດໜ້າທີ່ຮັກສາໃນວັງຫຼວງ ຕໍ່ມາຕົວໜັງສືສະບັບນີ້ໄດ້ແຜ່ຫຼາຍອອກໄປແລະ ໄດ້ມີການເອີ້ນຊື່ຕົວອັກສອນນີ້ວ່າ: ອັກສອນລີຊູ ຫຼື ອັກສອນທາດ ( ຄຳວ່າ: ລີ ໃນພາສາຈີນໝາຍເຖິງທາດ)

ແຕ່ໃນທາງບູຮານຄະດີນັ້ນ ພົບວ່າອັກສອນ ລີຊູ ເປັນອັກສອນທີ່ໃຊ້ຂຽນເທິງວັດຖຸທີ່ເຮັດຈາກໄມ້ ແລະ ໄມ້ໄຜ່ ເປັນອັກສອນທີ່ໄດ້ຮັບຄວາມນິຍົມສູງ.



CS ສແກນດ້ວຍ CamScanner

ຮູບ: ອັກສອນລີຊູ

❖ **ອັກສອນຂ່າຍຊູ**

ອັກສອນຂ່າຍຊູ ຫຼື ເອີ້ນອີກຢ່າງໜຶ່ງວ່າອັກສອນຈິງເປັນອັກສອນຈີນຮູບແບບມາດຕະຖານໃຊ້ກັນຢ່າງແຜ່ຫຼາຍໃນປະຈຸບັນ ຄຳວ່າຂ່າຍ ມີຄວາມໝາຍວ່າ: ແບບສະບັບ ຫຼື ຕົວຢ່າງ ອັກສອນຂ່າຍຊູ ອັກສອນນີ້ມີຕົ້ນກຳເນີດໃນຍຸກປາຍຂອງລາຊະວົງຫານຕາເວັນອອກ ພາຍຫຼັງລາຊະວົງສຸຍຈິ້ນ ( ສາມກົກ) ປີ ຄສ 220-316 ໄດ້ຮັບຄວາມນິຍົມຫຼາຍ ແລະ ກາຍມາເປັນອັກສອນມາດຕະຖານຂອງຈີນໃນປະຈຸບັນ.




ຮູບ: ອັກສອນຂ່າຍຊູ

❖ **ອັກສອນເສົ່າຊູ**

ຕັ້ງແຕ່ມີການກຳເນີດອັກສອນຈີນເປັນຕົ້ນມາ ອັກສອນແຕ່ລະຮູບແບບລ້ວນແຕ່ມີວິທີຂຽນຕົວຫວັດທັງສິ້ນ ຈົນເຖິງລາຊະວົງຫານ ອັກສອນຫວັດ ຈຶ່ງໄດ້ຮັບປ່ຽນຊື່ມາເປັນອັກສອນເສົ່າຊູ ຢ່າງເປັນທາງການ. ອັກສອນຊູເສົາ ເກີດຈາກການເອົາລາຍເສັ້ນທີ່ມີແຕ່ເດີມມາຂີດຕິດກັນ



CS สแกนด้วย CamScanner

ຮູບ: ອັກສອນເສົ່າຊູ

- ❖ **ອັກສອນສິງຊູ**

ຕົວອັກສອນ ສິງຊູ ເປັນຕົວອັກສອນທີ່ຢູ່ລະຫວ່າງກາງຂອງຕົວອັກສອນຂ່າຍຊູ ກັບ ອັກສອນ ເສົ່າຊູ ເກີດຈາກການຂຽນອັກສອນລົງຢ່າງຫວັດ  ອັນສອນສິງຊູກໍາເນີດຂຶ້ນໃນຕອນປາຍຂອງລາຊະວົງຫານຕາເວັນອອກ ເປັນການລວບລວມເອົາຈຸດເດັ່ນຂອງອັກສອນຂ່າຍຊູ ແລະ ອັກສອນເສົ່າຊູ ເຂົ້າກັນ.



ຮູບ: ອັກສອນສິງຊູ

- **ອັກສອນບູຮານ ແລະ ອັກສອນປະຈຸບັນ**

ຕົວອັກສອນຈີນສາມາດແບ່ງອອກເປັນອັກຂະຫຼະທີ່ໃຊ້ໃນສະໄໝບູຮານ ກັບອັກສອນທີ່ໃຊ້ໃນປະຈຸບັນ ຕົວຢ່າງ: ອັກສອນລີຊູ ເຊິ່ງເປັນຮູບແບບຂອງອັກສອນບູຮານ ອັນເປັນຕົ້ນແບບຂອງການປະຕິຮູບລັກສະນະອັກສອນຈີນຂຶ້ນໃໝ່ກາຍເປັນເສັ້ນແບ່ງກາງລະຫວ່າງອັກສອນລຸ້ນເກົ່າ ແລະ ອັກສອນລຸ້ນໃໝ່ ຍຸກອັກສອນລີຊູ ແລະ ກ່ອນໜ້ານັ້ນຖືເປັນອັກສອນບູຮານໄດ້ແກ່: ອັກສອນຈານເທິງກະດູກສັດ, ອັກສອນໂລຫະ, ອັກສອນສ່ຽວຈ້ວນ. ຫຼັງຈາກກຳເນີດອັກສອນລີຊູໃຫ້ຖືເປັນອັກສອນໃນຍຸກປະຈຸບັນໄດ້ແກ່ອັກສອນລີຊູ, ອັກສອນຂ່າຍຊູ. ສຳລັບອັກສອນເສົ່າຊູ ແລະ ສິ່ງຊູ ອາດເວົ້າໄດ້ວ່າເປັນພຽງພັດທະນາການຂອງອັກສອນຈີນ.

ເມື່ອປະມານ 1500 ປີ ກ່ອນ ຄສ ຈີນໄດ້ປະດິດຕົວອັກສອນອອກມາໃຊ້ ແລະ ບັນທຶກເຫດການໄວ້ເປັນຫຼັກຖານ; ໜັງສືຈີນມີຕົວອັກສອນຮູບພາບເຊິ່ງມີປະມານ 2000 ກວ່າຮູບ ບາງເອກະສານບອກວ່າຕົວອັກສອນຂອງຈີນມີຕົວໃຜຕົວລາວເຊັ່ນ: ຕົ້ນໄມ້ແຕ່ເອົາຕົ້ນໄມ້ມາປະສົມເຂົ້າກັນ ຈະໄດ້ຄວາມໝາຍວ່າປ່າໄມ້ ຕົວອັກສອນຂອງຈີນສ່ວນຫຼາຍແມ່ນຂຽນໃສ່ກະດູກສັດ, ໄມ້, ອອງເຕົ່າ ແລະ ຜ້າໄໝ. ສະນັ້ນຈຶ່ງມີຄວາມຊຳນານທາງດ້ານການຂຽນທາງຕັ້ງ ການຮູ້ໃຊ້ຕົວອັກສອນເຮັດໃຫ້ຊາວຈີນໄດ້ບັນທຶກເລື່ອງລາວຂອງຕົນໄວ້ເປັນຈຳນວນຫຼາຍເຊັ່ນ: ປຶດສູ່ກິງ ເຊິ່ງເປັນກອນທີ່ມີຄຸນຄ່າທາງດ້ານວັດທະນະທຳ ແລະ ປະຫວັດສາດ.

## 3. ຈຸດພິເສດ ແລະ ການພັດທະນາດ້ານສິລະປະກຳ, ວັດທະນະທຳ

### 3.1 ວັດທະນະທຳລີ ແລະ ວັດທະນະທຳສຽນ

ເປັນວັດທະນະທຳເຄື່ອງປັ້ນດິນເຜົາລຸ້ນທຳອິດ ເຊິ່ງຖືກຄົ້ນພົບຢູ່ທາງທິດຕາເວັນອອກສ່ຽງເໜືອ ມີອາຍຸປະມານ 4000 ປີ ກ່ອນ ຄສ ລັກສະນະເດັ່ນແມ່ນເປັນເຄື່ອງປັ້ນດິນເຜົາທີ່ມີຮູບພາບ ມີລັກສະນະສາມຂາ ໃຊ້ຫຸງຕົ້ມ. ສ່ວນວັດທະນະທຳສຽນຈະມີຄວາມແຕກຕ່າງກັບວັດທະນະທຳລີຢູ່ບ່ອນວ່າຈະມີອຸປະກອນສຳລັບການໜຶ້ງ.

ສອງວັດທະນະທຳນີ້ສາມາດສະແດງໃຫ້ເຮົາເຫັນວ່າ ຈີນມີຄວາມຈະເລີນຫຼາຍໃນຍຸກຫີນໃໝ່ ທີ່ສາມາດປະດິດຄິດ ສ້າງວັດທະນະທຳທັງສອງນີ້ຂຶ້ນມາໄດ້.



ຮູບ: ຫຼັກຖານຄວາມຈະເລີນໃນຍຸກການຫຸງຕົ້ມ

**3.2 ວັດທະນະທຳຢາງເຊົາ**

ວັດທະນະທຳນີ້ມີອາຍຸປະມານ 3000-2000 ປີ ກ່ອນ ພສ ວັດທະນະທຳຢາງຊີງ ຈັດຢູ່ໃນສະໄໝຫີນໃໝ່ກ່ອນຍຸກລາຊະວົງ. ຊຶ່ງເປັນຊ່ວງການຕັ້ງຖິ່ນຖານເປັນໄລຍະທຳອິດທາງພາກເໜືອຂອງຈີນ ຫຼັກຖານທາງບູຮານຄະດີແມ່ນຄົ້ນພົບຢູ່ແມ່ນໍ້າຮວງໂຫ  ເຊິ່ງພົບຫຼັກຖານທີ່ເປັນເຄື່ອງປັ້ນດິນເຜົາທີ່ມີລັກສະນະສຳຄັນຄື: ເຄື່ອງປັ້ນດິນເຜົາທີ່ມີລາຍເປັນເລຂາຄະນິດ, ພືດ, ສັດ ແລະ ພົບໃບໜ້າມະນຸດນອກຈາກນີ້ຍັງມີການພິມລາຍ, ແກະສະຫັກລາຍເປັນຮູບລາຍຈັກສານ, ລາຍຄວັດ

ຈາກຮູບພາບແກະສະຫຼັກພາໃຫ້ຮູ້ວ່າສັງຄົມຂອງຊາວຈີນໃນຍຸກນີ້ມີການລວມຕົວເປັນໝູ່ບ້ານ ມີການແກະສະຫຼັກ, ລ້ຽງສັດ ແລະ ຍັງໄດ້ຄົ້ນພົບການທໍຜ້າໄໝ ໄດ້ສັນນິຖານວ່າໃນສະໄໝນີ້ໄດ້ມີການທໍຜ້າຂຶ້ນແລ້ວເຄື່ອງທີ່ໃຊ້ລ້ວນແຕ່ເປັນຫີນອ່ອນ ສິ່ງທີ່ເປັນໂລຫະແມ່ນຍັງບໍ່ທັນປາກົດມີ.



ຮູບ: ເຄື່ອງປັ້ນດິນເຜົາວັດທະນະທຳຢາງເຊົາ

**3.3 ວັດທະນະທຳລຸງຊານ**

ວັດທະນະທຳລຸງຊານແມ່ນຄົ້ນພົບແມ່ນນ້ຳເຍງຊີ  ບໍລິເວນຊານຕຸງ ຊຶ່ງໄດ້ພົບຫຼັກຖານທີ່ເປັນເຄື່ອງປັ້ນດິນເຜົາມີລັກສະນະສຳຄັນຄື: ເຄື່ອງປັ້ນດິນເຜົາມີເນື້ອລະອຽດມີເນື້ອລະອຽດ, ສີດຳ, ຂັດມັນເງົາ, ຄຸນນະພາບດີ, ເນື້ອບາງ ແລະ ແຂງແກ່ນ ເປັນພາສະນະສາມຂາ

ໃນຂະນະທີ່ວັດທະນະທຳຢາງຊົງມີຄວາມຈະເລີນຮຸ່ງເຮືອງຢູ່ທາງທິດຕາເວັນຕົກນັ້ນ ຢູ່ບໍລິເວນທາງພາກຕາເວັນອອກກໍ່ໄດ້ກຳເນີດວັດທະນະທຳລຸງຊານຂຶ້ນ ຊຶ່ງມີຊື່ເອີ້ນຕາມສະຖານທີ່ທີ່ຄົ້ນພົບຄື: ເມືອງລຸງຊານໃນມົນທົນຊານຕຸງ ລັກສະນະຄວາມຈະເລີນແມ່ນມີເງົາສີດຳ. ສີພື້ນສ່ວນຫຼາຍແມ່ນບໍ່ມີການປະດັບປະດາ ມີຫຼາຍຊະນິດແຕກຕ່າງກັນໄປ ເບິ່ງໂດຍທົ່ວໄປແລ້ວຄ້າຍຄືກັບເຄື່ອງປັ້ນດິນເຜົາຂອງຈີນໃນຍຸກປະຈຸບັນ.



ຮູບ: ເຄື່ອງປັ້ນດິນເຜົາວັດທະນະທຳລຸງຊານ

ນອກຈາກການຄົ້ນພົບວັດທະນະທຳຢາງເຊົາ ແລະ ວັດທະນະທຳລຸງຊານ ຍັງຄົ້ນພົບວ່າຊາວຈີນສະໄໝ 2000-1000 ປີ ກ່ອນ ຄສ ນັ້ນເປັນສັງຄົມທີ່ພັດທະນາແລ້ວເປັນສັງຄົມທີ່ມີການກະສິກຳມີການລ້ຽງສັດ ເຊັ່ນ: ໝາ , ໝູ, ແກະ, ແບ້, ງົວ, ຄວາຍ, ລີງ........... ຮູ້ຈັກທໍຜ້າ, ຮູ້ຈັກຂຸດນໍ້າສ້າງໄວ້ໃຊ້ໃນຍາມແລ້ງ, ໝູ່ບ້ານມີການຮັກສາຄວາມສະຫງົບເປັນຢ່າງດີມີການສ້າງກຳແພງອ້ອມຮອບ, ການເຮັດກຳແພງແມ່ນໃຊ້ດິນໜຽວປະສົມຫຍ້າ.

ໂດຍນັກບູຮານຄະດີໄດ້ຢັ້ງຢືນວ່າຄວາມຈະເລີນຂອງວັດທະນະທຳລຸງຊານເປັນຈຸດເລີ່ມຕົ້ນຂອງອະລິຍິທຳເຊິ່ງເປັນພື້ນຖານຂອງອະລິຍະທຳໃນດິນແດນລ່ອງແມ່ນນໍ້າຮວງໂຫ.

### 3.4 ຈຸດພິເສດ ແລະ ຜົນງານທາງດ້ານວັດທະນະທຳ

ວັດທະນະທຳແມ່ນຄຸນຄ່າອັນລວມຍອດຂອງບັນດາຜະລິດຕະພັນທາງດ້ານວັດຖຸ ແລະ ຈິດໃຈທີ່ມະນຸດສາມາດສ້າງຂຶ້ນມາໃນຂະບວນວິວັດຂອງປະຫວັດສາດ ແລະ ມີພາລະບົດບາດອັນສຳຄັນໃນການປະກອບສ້າງຄົນໃຫ້ກາຍເປັນຄົນກ້າວໜ້າສີວິໄລ. ວັດທະນະທຳຂອງຈີນປະກອບມີ ສະຖາປັດຕະຍາກຳ, ວັນນະກຳ, ດົນຕີ ແລະ ນາດທະສິນ, ອາຫານ, ສື່ສານມວນຊົນ, ວັນພັກ ແລະ ອື່ນໆ.

ນອກຈາກນີ້ຍັງມີວັດທະນະທຳທີ່ເປັນປະເພດເຄື່ອງປັ້ນດິນເຜົາມີລັກສະນະໂດດເດັ່ນໂດຍສະເພາະແມ່ນເຄື່ອງປັ້ນດິນເຜົາຕ່າງໆຂອງຈີນເຊັ່ນວ່າ: ວັດທະນະທຳລີ, ວັດທະນະທຳສຽນ, ວັດທະນະທຳຢາງຊົງ ແລະ ວັດທະນະທຳລຸງຊານ.

ສຳລັບຜົນງານດ້ານວັດທະນະທຳຂອງຈີນແມ່ນມີຢ່າງຫຼວງຫຼາຍເຊັ່ນ: ຕົວໜັງສື, ວັດທະນະທຳຊ່າງຊິ່ງຕຸ່ຍ, ໝໍ້ໂຮ້ມູ່ອູ້ຕິງ, ໂຄມໄພພະລາຊະວັງຊາງຊິ້ນ, ຮູບປັ້ນທະຫານ ແລະ ມ້າ ຂອງສຸສານຈີນຊີ້ຮົງເຕ້, ຊຸດລະຄັງຊຸນນາງອີ

ຂອງອານາຈັກເຈິ່ງ, ເສື້ອຍົກດ້າຍຄຳ, ມ້າທອງສຳລິດ, ລະຄັງໃຫ່ຍຢັ້ງລີ້, ເງິນຫຼຽນບູຮານ, ພະຖ້ຳໂມ້ກ່າວຕູ້ນຮວງ, ພະລາຊະວັງ, ວັດວາອາຮາມ ແລະ ອື່ນໆ.

### 3.5 ຜົນງານດ້ານວິທະຍາສາດ

❖ ດ້ານວິທະຍາການ:

ຈີນເປັນຊາດທີ່ມີວິທະຍາການທີ່ເກົ່າແກ່ມາຕັ້ງແຕ່ບູຮານເຊິ່ງເປັນແບບຢ່າງໃຫ້ແກ່ຊາດອື່ນໃນອາຊີເຊັ່ນ: ເລື່ອງການແພດໂດຍສະເພາະແມ່ນຢາຈີນ

❖ **ວິທີຮັກສາທາງການແພດ**

- ຊາວຈີນມີຄວາມເຊື້ອດ້ານບີງຂຽວ ວ່າມີປະໂຫຍດໃນການຮັກສາຄົນເຊັ່ນວ່າ: ຖ້າຄົນຖືກໝາວໍ້ກັດຕ້ອງໃຊ້ບີງູຂຽວທາ ດັ່ງນັ້ນບີງູຂຽວຈິ່ງມີລາຄາແພງ ນອກຈາກນັ້ນຍັງເອົາມາບອງເຫຼົ້າແລ້ວກິນເທື່ອລະນ້ອຍ. ຖ້າຫາກແມ່ຍິງເກີດລູກຍາກກໍ່ສາມາດເອົາມາກິນເພື່ອບັນເທົາ ແລະ ຄວາມເຈັບກໍ່ຈະຫາຍໄປແລ້ວເຮັດໃຫ້ເກີດລູກໄດ້ງ່າຍ, ຫາກມີອາການໄຄ່ພອງ ຫຼື ເປັນໜອງເປັນຜີ ຕາມຮ່າງກາຍກໍ່ຝົນບີງູຂຽວທາແລ້ວກໍ່ຈະຫາຍເຊົາ

❖ **ດ້ານຄວາມເຊື່ອ**

ຄົນຈີນເປັນຄົນກຸ່ມໜຶ່ງທີ່ມີຄວາມເຊື່ອດ້ານວິນຍານໂດຍສະເພາະແມ່ນວິນຍານຂອງຜູ້ລ່ວງຫຼັບໄປແລ້ວ ເຫດນີ້ຄົນຈີນຈຶ່ງມີພິທີກຳໃນການບູຊາບັນພະບູລຸດຊຶ່ງເອີ້ນວ່າ: ການໄຫວ້ເຈົ້າ ຫຼື ການໄຫວ້ສານເຈົ້າໂດຍເຊື່ອວ່າຜູ້ ຕາຍສາມມາດດົນບັນດານດ້ານຄວາມສຸກ-ທຸກ ໃຫ້ແກ່ຄົນຢູ່ເບື້ອງຫຼັງໄດ້.

ລັດທິຂົງຈື້, ລັດທິເຕົ່າ ແລະ ພຸດທະສາສະໜາ ເປັນລັດທິສຳຄັນໃນປະເທດຈີນມາຕັ້ງແຕ່ບູຮານ ສອງຢ່າງທຳອິດເປັນລັດດັ້ງເດີມຂອງຈີນ ໂດຍລັດຂົງຈື້ມີຄວາມເປັນປັດຊະຍາຫຼາຍກວ່າສາສະໜາ ຄຳສອນເນັ້ນຫຼັກຈິດລິຍະ ທຳກັບຄວາມປະພຶດປະຕິບັດຕົນໃຫ້ສອດຄ່ອງກັບສະພາບ ໃນຂະໜາດທີ່ລັດທິເຕົ່າມີທັ້ງມີຕິຂອງສາສະໜາ ແລະ ປັດຊະຍາກັນ ສ່ວນສາສະໜາພຸດນັ້ນເປັນລັດທິທີ່ໄດ້ຮັບມາຈາກອິນເດຍໃນຄຣິດຕະສັດກະລາດທຳອິດ ຕໍ່ມາໄດ້ຮັບ ອິດທິພົນຈາກລັດທິຂົງຈື້ ແລະ ລັດທິເຕົ່າ ຈຶ່ງໄດ້ວິວັດພັດທະນາຂຶ້ນມາເປັນພຸດທະສາສະໜາໃນແບບສະເພສະຂອງ ຈີນໂດຍສະເພາະ.

ໃນຍຸດຄອມມູນິດຄອງອຳນາດ ສາສະໜາຖືກເບິ່ງວ່າເປັນປໍລະປັກຕໍ່ລັດທິທາງການເມືອງໂດຍກົງ ມີສາສະ ໜາສະຖານຈຳນວນຫຼາຍຖືກທຳລາຍລົງໃນຊ່ວງການປະຕິວັດວັດທະນະທຳ ຫຼັງເໝົາເຈີຕົງເຖິງແກ່ອັດສະຍະກຳ ສະຖານການຈຶ່ງໄດ້ເລີ່ມດີຂຶ້ນມາ ຈີນປີຄ.ສ 1982 ທາງການຈຶ່ງໄດ້ອອກກົດໝາຍຮອງຮັບ ເສລີພາບໃນການບັນທຶກ ສາສະໜາຂອງປະຊາຊົນ ນອກຈາລັດທັ້ງສາມທີ່ກ່າວມາໃນຂ້າງຕົ້ນແລ້ວ ຊາວຈີນບາງສ່ວນຍັງນັບຖືສາສະໜາອິດ ສະລາມ ( ໂດຍສະເພາະໃນພາກຕາເວັນຕົກສຽງເໜືອນ ) ແລະ ຄຣິດດ້ວຍ ຄວາມເຊື່ອຖືໃນເລື່ອງຕົວເລກນາໂຊກ ໝໍດູ ແລະ ສາສະໜາດ້ານພູມີພະຍາກອນກໍ່ມີມາຕັ້ງແຕ່ບູຮານ. .

❖ **ເພິ່ງຝຸ່ຍ ແລະ ຕົວເລກນຳໂຊກ**

ຄວາມເຊື່ອເລື່ອງຊະຕາກຳ (ໂຊກຊະຕາ, ວາດສະໜາ) ເລີ່ມຂຶ້ນໃນຍຸກສັງຄົມສັກດີນາທີ່ຖືວ່າຈັກກະພັດເປັນ "ເທບພະເຈົ້າ ສາມາດຊີ້ເປັນຊີ້ຕາຍໃຫ້ກັບຜູ້ອື່ນໄດ້, ຍຸກລາຊະວົງຖັງກັບຊຶ່ງ ສັງຄົມຊັບຊ້ອນຂຶ້ນ, ຜູ້ຄົນຈຶ່ງ ຫັນ

ມາສົນໃຈເລື່ອງພິມລິຂິດຊາຕາກຳ(ໂຊກຊາຕາ, ວາດສະໜາ) ຫຼື ຊະຕາຊີວິດກັນຫຼາຍຂຶ້ນ ອາຊີບໝໍດເລີຍ ຂະຫຍາຍຕາມໄປດ້ວຍ

ການເຊື່ອໝໍດູຍ່ອມນຳມາ ຊຶ່ງພຶດຕິກາແປກໆເຊັ່ນ: ການຕັດຜົມເພື່ອເອົາໃຈເທບແຫ່ງໂຊກລາກ ຫຼື ເຂັມຂັດແດງທັງທີ່ບໍ່ເຂົ້າກັບສີເຊື້ອຜ້າ ເຊື່ອກັນວ່າການຮຽກຮ້ອງ(ເຄົາລົບ)ຮູບປັ້ນບູຊາທອງໄປຮອດຫ້ອງຈະນຳໂຊກດີມາໃຫ້, ບໍ່ຕ່າງຈາກການຍ້າຍແວ່ນອອກຈາກຫ້ອງນອນ ແລະ ການກິນເຈໃນຊ່ວງປີໃໝ່ຈີນ.

ອາຈານດູເພີ່ງຜຸ່ຍສ່ວນໃຫຍ່ຈະຊ່ຽວຊານການເບິ່ງລາຍມື ແລະ ເບິ່ງດວງຈາກຊື່ ຫຼື ເດືອນເກີດ, ປີເກີດກັບເວລາການເກີດ ປະຊາຊົນຍຸກລາຊະວົງຫານ (206 ປີກ່ອນຄຼິດຕະກະລາດ ຄ.ສ. 220) ໄດ້ຄິດຄົ້ນລະບົບ 12 ນັກສັດຕະມົນທົນ(ດາວໝູ່) (ປີຊວດ, ສະລູ, ຂານ, ເຖາະ, ມະໂລງ, ມະເສັງ, ມະເມັຍ, ມະແມ, ວອກ, ລະກາ, ຈໍ, ກຸນ) ໂດຍແບ່ງຄົນອອກເປັນ 12 ກຸ່ມຕາມປີເກີດ ແລະ ນຳເອົາຫຼັກປັດຊະຍາກັບຕົວເລກມາຄຳນວນເພື່ອທຳນາຍຄວາມໂຊກດີກັບອານາຄົດຂອງບຸກຄົນ ຊ່ວງທ້າຍປີຈະມີໜັງສືທຳນາຍຄວາມເປັນໄປໃນປີໜ້າຕີພິມອອກມາເຜີຍແຜ່ຫຼາຍເຫຼັ້ມ.

ເພີ່ງຜຸ່ຍ (ລົມ ແລະ ນ້ຳ) ເປັນວິທະຍາສາດດ້ານການຄາດຄະເນ (ທຳນາຍ) ທີ່ມີມາແຕ່ບູຮານ, ໃຊ້ດຶງດູດ ໂຊກລາກ, ປັດເປົ່າໄພພິບັດ ແລະ ບາດເຄາະຕ່າງໆ ຜູ້ທີ່ເຫຼື້ອມໃສສັດທາວິທະຍາສາດຂະແໜງນີ້ຢ່າງຈິງຈັງຈະຂໍ ຊີ້ນຳຈາກນັກທຳນາຍ(ນັກຄາດຄະເນ) ໃນທຸກໆເລື່ອງທັງຮູບແບບແຜນຜັງຂອງຕຶກອາຄານເລີກຍາມບໍ່ເວັ້ນເຖິງແມ່ນ ວ່າເປັນການຈັດບ້ານ ຫຼື ສຳນັກງານ.

ເຄື່ອງມືຂອງນັກຂອງນັກດູເພີ່ງຜຸ່ຍມີລັກສະນະເປັນແຜ່ນຄ້າຍເຂັມທິດທີ່ປະກອບຂຶ້ນຈາກສາມຫຼ່ຽມແປດ ຮູບເອີ້ນວ່າ ປາ-ກວ້າ ເປັນສັນຍາລັກແທນທຳມະຊາດຕ່າງໆເຊັ່ນ: ລົມ, ນ້ຳ, ພູເຂົາ, ດິນ ແລະ ອົງປະກອບເຫຼົ່ານີ້ກໍ່ແທນສັດແປດຊະນິດຄື: ມ້າ, ແບ້, ຫົງ, ມັງກອນ, ໄກ່, ໝູ, ໝາ ແລະ ງົວ.

ທິດສະດີເພີ່ງຜຸ່ຍມີພື້ນຖານມາຈາກພະລັງງານຂັບເຄື່ອນ (ພະລັງງານຊີວິດ/ລົມຫາຍໃຈ) ຊຶ່ງແບ່ງອອກເປັນພະລັງຫຍິນ (ເພດຊາຍ/ຄວາມເຂັ້ມແຂງ) ກັບພະລັງຫຍາງ (ເພດຍິງ/ຄວາມສະຫງົບ) ແນວຄິດເລື່ອງອູ່ສິງ (ທາດ (ອົງປະກອບ)ທັ້ງຫ້າ) ກໍ່ເປັນແນວຄິດທີ່ສຳຄັນໃນລະບົບປັດຊະຍາ, ການແພດ, ໂຫລາສາດ ແລະ ຄວາມເຊື່ອທີ່ງົມງວາຍຂອງຈີນ ( ໄສຍະສາດຂອງຈີນ ) ໝາຍເຖິງອຳນາດທັງຫ້າທີ່ຄອບຄອງຈັກກະວານໃນເວລາທີ່ແຕກຕ່າງກັນ ທາດນ້ຳຈະມີພະລັງງານກ້າໃນລະດູໜາວ, ທາດໄມ້ລະດູໃບໄມ້ປ່ອງ, ທາດໄຟລະດູຮ້ອນ, ທາດທອງລະດູໃບໄມ້ລົ່ນ ສ່ວນທາດດິນຈະຢູ່ໃນລະຫວ່າງຊ່ວງປ່ຽນລະດູການ.

## ❖ ຕົວເລກນຳໂຊກ

ມີແຕ່ໃນຮ່ອງກົງເທົ່ານັ້ນທີ່ຈະມີຄົນຍອມຈ່າຍເງິນຕັ້ງ 641000 ຫຼຽນຊື້ປ້າຍທະບຽນລົດພຽງແຜ່ນດຽວດັ່ງເຊັ່ນ: ນັກທຸລະກິດຄົນທຳໄປໃນປີ 1988 ເຂົາຄິດວ່າຕົວເລກໃນປ້າຍທະບຽນເປັນຕົວເລກ " ສັກສິດ " ເພາະຈະອ່ານເປັນພາສາວ່າງຕຸ້ງຈະຄ້າຍຄືກັບຕົວອັກສອນທີ່ມີຄວາມໝາຍວ່າລ່ຳລວຍ-ຮຸ່ງເຮືອງ.

ປົກກະຕິເລກສອງຈະໝາຍເຖິງງ່າຍດາຍ, ສາມຄືຊີວິດ ຫຼື ການໃຫ້ກາເນີດ, ຫົກຄືອາຍຸຍືນ, ແປດຄືຮັ່ງມີ, ເກົ້າຄືຍືນຍົງຄົງຕົວ ເມື່ອນຳຕົວເລກມາລວມກັນກໍ່ຈະໄດ້ຄວາມໝາຍຕ່າງກັນອກໄປເຊັ່ນ: 163 ມີອາຍຸຍືນ ຫຼື ມີ

ລູກເຕັມບ້ານຫຼານເຕັມເມືອງ, 8222 ໝາຍເຖິງລ່ຳລວຍຮຸ່ງເຮືອງ ຫຼັກການນີ້ໃຊ້ໄດ້ທັງໝາຍເລກຖະໜົນ, ໂທລະສັບ ຫຼື ເຖິງແມ່ນວ່າຈະເປັນລ໋ອກເຕຣີ.

- ❖ **ການບູຊາດວງວິນຍານບັນພະບຸລຸດ**

ການບູຊາດວງວິນຍານບັນພະບູລຸດຂອງຈີນມີຮາກຖານມາຈາກຄວາມເຊື່ອທີ່ວ່າ ມະນຸດເຮົາມີສອງວິນ ຍານ. ວິນຍານທຳອິດຈະກໍ່ກຳເນີດຂຶ້ນໃນຊ່ວງການຕັ້ງຖືພາ ແລະ ເມື່ອບຸກຄົນຕາຍໄປວິນຍານກໍ່ຈະໄປສະຖິດຢູ່ໃນ ຂຸມພ້ອມກັບສົບ ແລະ ຄົງຢູ່ໄດ້ດ້ວຍເຄື່ອງເຊັ່ນໄຫ້ວເມື່ອສົບເນົ່າເປື່ອຍໄປວິນຍານຈະອ່ອນແຮງລົງເລື້ອຍໆຈົນສຸດທ້າຍຕ້ອງໄປອາໄສຢູ່ໃນແດນຣວງຊຽນ ( ໂລກໃໝ່ ) ຖ້າບໍ່ໄດ້ຮັບການເຊັ່ນໄຫວ້ກໍ່ຈະຍ້ອນກັບມາຍັງໂລກມະນຸດເພື່ອກໍ່ກວນສ້າງຄວາມເດືອດຮ້ອນໃຫ້ ວິນຍານທີ່ສອງຈະເກີດຂຶ້ນໃນຊ່ວງທີ່ບຸກຄົນຖືກຳເນີດ ແລະ ຍັງຢູ່ໄດ້ດ້ວຍການເຊັ່ນໄຫວ້ບູຊາຈາກລູກຫຼານຫາກຂາດການເຊັ່ນໄຫວ້ ກໍ່ອາດຈະກາຍເປັນວິນຍານຮ້າຍໄປໄດ້ເຊັ່ນກັນ ແຕ່ຖ້າໝັ່ນເຊັ່ນໄຫວ້ດູແລບຳລຸງຮັກສາສຸສານບໍ່ໄດ້ຂາດວິນຍານກໍ່ຈະລໍຖ້າປົກປັກຮັກສາ ແລະ ຊ່ວຍເຫຼືອລູກຫຼານເປັນການຕອບແທນ.

ໃນເບື້ອງຕົ້ນທີ່ມີແຕ່ຈັກກະພັດເທົ່ານັ້ນທີ່ຖືຮີດຄອງປະເພນີບວງສວງບູຊາດວງວິນຍານບັນພະບູລຸດ ຕໍ່ມາຮີດຄອງປະເພນີນີ້ຈຶ່ງໄດ້ແຜ່ຂະຫຍາຍໄປສູ່ປະຊາຊົນ ຊຶ່ງໃນຍຸກນັ້ນເຊື່ອກັນວ່າດວງວິນຍານບັນພະບູລຸດຈະຫາຮ່າງກາຍມະນຸດສິງສູ່ໃນລະຫວ່າງພິທີເຊັ່ນໄຫວ້ ແລະ ຜູ້ເຮັດໜ້າທີ່ຮ່າງກໍ່ມັກຈະເປັນຫຼານຊາຍໃນຕະກູນ, ຊ່ວງເທດສະການຊົງໝິງ ( ເມສາ ) ຊາວຈີນຈະພາກັນໄປທຳຄວາມສະອາດສຸສານບັນພະບູລຸດເຊັ່ນໄຫວ້ ແລະ ເຜົາກະດາດເງິນ, ກະດາດທອງໄປໃຫ້.

- ❖ **ລັດທິເຕົ໋າ**

ແນວຄິດຫຼັກຂອງລັດທິເຕົ໋າຄື ເຕົ໋າ ຊຶ່ງແປຕົງຕົວວ່າວິຖີ ຫຼື ທາງ ໂດຍທີ່ວິທີການ ແລະ ຫຼັກການນັ້ນເປັນຄວາມໝາຍ ຮອງລົງມາ ອູ່ເຫວີຍຄືຫຼັກການແຫ່ງຄວາມສະຫງົບ ຫຼື “ ການລອຍຕາມກະແສ ” ສ່ວນແນວຄິດເລື່ອງເຕົ໋າ (ຄຸນນະ ທຳ) ກໍ່ບໍ່ໄດ້ໝາຍຄວາມເຖິງຄຸນນະທຳຄວາມຊື່ສັດທົ່ວໄປ ແຕ່ໝາຍເຖິງຄຸນນະທາຈາກການທີ່ບຸກຄົນນາເຕົ໋າມາ ປະຕິບັດໃນຊີວິດປະຈຳວັນ.

ລັດທິເຕົ໋າຖືວ່າທຸກສິ່ງທຸກຢ່າງໃນໂລກລ້ວນແລ້ວແຕ່ຕົກຢູ່ໃຕ້ອິດທິພົນຂອງພະລັງຫຍິນ-ຫຍາງ ຫຍາງໝ າຍເຖິງເພດຊາຍ, ຄວາມສະຫວ່າງໃນການເຄື່ອນໄຫວ ແລະ ສະຫວັນ, ສ່ວນຫຍິນໝາຍເຖິງເພດຍິງ, ຄວາມ ອ່ອນແອ , ຄວາມມືດ, ແລະ ຄວາມສະຫງົບນິ່ງ.

ຜູ້ກໍ່ຕັ້ງລັດທິເຕົ໋າຄືເລົ່າຜູ້ມີຊີວິດຢູ່ໃນຍຸກທຸກເຂັນ ບ້ານເມືອງວິກິດການວຸ່ນວາຍເຖິງວ່າຜູ້ທີ່ຖືລັດທິເຕົ໋າ ຈະຕໍ່ຕ້ານສັງຄົມສັກດີນາແຕ່ພວກເຂົາກໍ່ບໍ່ໄດ້ອອກມາຕໍ່ສູ້ເພື່ອໃຫ້ໄດ້ມາ ຊຶ່ງເປັນໂຄງສ້າງທາງສັງຄົມຮູບແບບໃໝ່, ພໍໃຈທີ່ຈະຫັນໄປໃຊ້ຊີວິດຢູ່ໃນສັງຄົມຊົນເຜົ່າຂອງເມື່ອກ່ອນໃນຍຸກສັງຄົມສັກດີນາຫຼາຍກວ່າ.

ສາມັນຊົນທົ່ວໄປເບິ່ງຈະບໍ່ຄ່ອຍສົນໃຈແນວຄິດ ແລະ ປັດຊະຍາໃນນາມມະທາຂອງລັດທິເຕົ໋າຫຼາຍເທົ່າໃດເຖິງແມ່ນວ່າໃນຊ່ວງຕົ້ນລາຊະວົງຫານກໍ່ຍັງເຫັນໄດ້ຊັດເຈນວ່າສັດທາແນວນີ້ແຍກອອກເປັນເຕົ໋າແບບຊາວບ້ານ ກັບເຕົ໋າແທ້ຢ່າງເດັ່ນຊັດ ເມື່ອພຸດທະສາສະໜາຈະເລີນຮຸ່ງເຮືອງຂຶ້ນກໍ່ໄດ້ມີການຢືມຄຳສອນຂອງກັນ ແລະ ກັນມາ ຈົນເຮັດໃຫ້ພຸດກັບເຕົ໋າປະປົນກັນຈົນແຍກບໍ່ອອກ.

ພວກນັບຖືເຕົ໋າກັບພວກນັບຖືພຸດຕ່າງເຊື່ອກົງກັນວ່າມີແດນສຸຂາວດີອັນໄກຕັ້ງຢູ່ທາງຕາເວນອອກຂອງແຜ່ນດິນຈີນຢູ່ພາຍໃຕ້ການດູແລຂອງເຈົ້າແມ່ຊີຫວາງໝູ່ກັບກົງຫວາງກົງ ນອກຈາກນີ້ ລັດທິເຕົ໋າຍັງຮັບເອົາຄວາມເຊື່ອເລື່ອງນາລົກມາຈາກສາສະໜາພຸດໂດຍບໍ່ໄດ້ມີການປັບປ່ຽນດັດແປງແຕ່ປະການໃດ.

ລັດທິເຕົ໋າແຕກແນວຄິດຄວາມເຊື່ອອອກເປັນຫຼາຍທິດທາງ, ຫຼາຍສຳນັກ ພວກນັກພົບມັກປລີກວິເວກໄປ ຢູ່ຕາມປ່າໄມ້ພູເຂົາ ແລະ ທຸ່ມເທເວລາທັງໝົດໃຫ້ກັບການເຝິກສະມາທິບຳເພັງ ຫຼື ຖ້າບໍ່ເຊັ່ນນັ້ນກໍ່ຕັ້ງວັດອາໄສຢູ່ລວມກັນເປັນໝູ່ເປັນຝູງ ນອກຈາກນີ້ແລ້ວນັກພົດໃນລັດທິເຕົ໋າຍັງເປັນທັງແພດ, ທັງນັກທານາຍ, ເປັນທັງຜູ້ປະກອບການພິທີທາງໄສຍະສາດ, ພິທີສົບ ພິທີສວດມົນແຜ່ສ່ວນກຸສົນ ແລະ ພິທີເຊັ່ນໄຫວ້ຜູ້ຕາຍດ້ວຍ.

ພຣະຄາພີເກົ່າແກ່ທີ່ສຸດຂອງເຕົ໋າເອີ້ນວ່າ: ເຕົ້າເຕີ່ຈິງ ເຖິງຈະເຊື່ອກັນວ່າເລົ່າຈື້ເປັນຜູ້ປະພັນຂຶ້ນ ແຕ່ເບິ່ງຈາກເນື້ອຄວາມແລ້ວບໍ່ນ່າຈະແຕ່ງຂຶ້ນດ້ວຍຄົນພຽງຄົນດຽວໄດ້.

### ❖ ລັດທິຂົງຈື້

ຂົງຈື້ ( ຂົ່ງຟູເຈື່ 551 - 479 ປີກ່ອນ ຄ.ສ ) ອາໄສຢູ່ທາງຕອນເໜືອຂອງປະເທດ ຫຼັກປັດຊະຍາຂອງທ່ານສຸມໃສ່ແນວຄິດເລື່ອງເຕົ໋າ ແລະ ເຕີ່ ເປັນຫຼັກໃໝ່ເຊັ່ນດຽວກັນກັບລັດທິເຕົ໋າ ແລະ ມີອິດທິພົນຄອບຄອງອະຣິຍະທາຈີນຍາວນານກວ່າ 2000 ປີທັງຍັງຖີ້ມຮ່ອງຮອຍເອົາໄວ້ໃນວັດທະນະທຳຂອງຊາດເພື່ອນບ້ານຢ່າງຈີນ, ຍີ່ປຸ່ນ ແລະປະເທດອາຊີອາຄະເນອື່ນໆອີກຫຼາຍປະເທດ ປັດຈຸບັນຍັງເປັນທີ່ໂຕ້ຖຽງກັນຢູ່ວ່າຈິງໆ ແລ້ວລັດທິຂົງຈື້ຖືເປັນສາດສະໜາ ຫຼື ບໍ ແຕ່ໃນແງ່ໜຶ່ງຂົງຈື້ກໍ່ໄດ້ຮັບການນັບຖືບູຊາພຣະເຈົ້າເຊັ່ນດຽວກັນ ເຖິງແມນວ່າຈັກກະພັດຈະເພິ່ງມີການແຕ່ງຕັ້ງທ່ານເປັນເທບເມື່ອປີ 1906 ນີ້ເທົ່ານັ້ນກໍ່ຕາມ(ຊາວຈີນເຊັ່ນໄຫວ້ບູຊາມາຈົນເຖິງປີ 1927).

### ❖ ແນວຄິດແບບຂົງຈື້

ລັດທິຂົງຈື້ເປັນສາສະໜາທີ່ວ່າດ້ວຍກົດເກນ ແລະ ລະບຽບແບບແຜນ, ດວງອາທິດ, ດວງເດືອນ ແລະ ດວງດາວໂຄຈອນໄປຕາມວິຖີຂອງທຳມະຊາດສໍ່າໃດມະນຸດເຮົາກໍ່ຕ້ອງອາໄສຢູ່ໃນກົດລະບຽບແບບແຜນຂອງໂລກ ສໍ່ານັ້ນ ແນວຄິດນີ້ຕັ້ງຢູ່ບົນຫຼັກຂອງສົມມຸດຕິຖານທີ່ວ່າມະນຸດທຸກຄົນສາມາດສັ່ງສອນໄດ້.

ຫຼັກຈາລິຍະທາເປັນຫົວໃຈສຳຄັນໃນຄຳສອນຂອງຂົງຈື້ເຖິງຂົງຈື້ຈະເປັນນັກປະຕິຮູບທີ່ອອກຈະຫົວເກົ່າຫຼາຍໆ ແຕ່ທ່ານກໍ່ນຳເອົາແນວຄິດເລື່ອງຈວິນ ( ວິຍູຊິນ ) ມາຕີຄວາມໃໝ່ໂດຍເຫັນວ່າວິຍູຊິນ ຄືຜູ້ພຽບພ້ອມໄປດ້ວຍຄຸນນະທຳ ແລະ ຈະຣິຍະທຳ ເຊັ່ນນີ້ແລ້ວເຂົາຍ່ອມຄູ່ຄວນແກ່ການປົກຄອງ ຂົງຈື້ເຊື່ອວ່າຖ້າຫາກສາມາດຟື້ນຟູວັດທະນະທຳໃນຍຸກຕົ້ນລາຊະວົງໂຈຂຶ້ນມາໄດ້ກໍ່ຍ່ອມສ້າງລະບຽບຂອງສັງຄົມໃຫ້ອຸດົມສົມບູນຂຶ້ນໄດ້ເຊັ່ນກັນ ຜູ້ຄົນ

ໃນຍຸກນັ້ນຍຶດໝັ້ນຢູ່ກັບຫຼັກເມດຕາທໍຮັກແພງລູກຫຼານປອງດອງກັນເໜືອນພີ່ນ້ອງຂົງເຊື່ອວ່າຜູ້ປົກຄອງຈະປະສົບຄວາມສຳເລັດຫາກໃຊ້ຫຼັກການເຫຼົ່ານີ້ປົກຄອງປະເທດ ອີກທັງຍັງໄດ້ຈັດແບ່ງສະຖານະພາບທາງສັງຄົມຂອງບຸກຄົນກັບລຳດັບຊັ້ນໃນການປົກຄອງອອກຢ່າງລະອຽດຫາກສະມາຊິກໃນສັງຄົມປະຕິບັດໜ້າທີ່ຄວາມຮັບພິຊອບຕາມສະຖານະຂອງຕົນສັງຄົມຍ່ອມມີຄວາມສະຫງົບສຸກ.

ພື້ນຖານອັນສາຄັນຢ່າງຍິ່ງກໍ່ຄື ຄວາມສາພັນຂອງສະມາຊິກໃນຄອບຄົວ ແລະ ສັງຄົມ ລວມເຖິງລຳດັບຊັ້ນ ໃນການປົກຄອງບໍ່ວ່າຈະເປັນລະຫວ່າງບິດາກັບບຸກ, ບູລຸດ ກັບສະຕີ, ອ້າຍກັບນ້ອງຊາຍ ຫຼື ຜູ້ປົກຄອງກັບ ລາສະດອນກໍ່ຕາມ.

ຊ່ວງສະຕະວັດທີ XII ຈູຊີໄດ້ນຳເອົາຫຼັກພະຄຳປັດຊະຍາຂອງພຸດທະສາສະໜາ ແລະ ລັດທທິເຕົ໋າມາລວມເຂົ້າກັນກັບວິທີປະຕິບັດຂອງລັດທິຂົງຈື້ລວບລວມຂຶ້ນເປັນໝວດໝູ່ ລວມເອີ້ນວ່າລັດທິຂົງຈື້ໃໝ່ ຊຶ່ງໄດ້ຮັບການຍົກຍ້ອງນັບຖືເປັນຢ່າງສູງຈາກທຸກລາຊະວົງຂອງຈີນໃຊ້ເປັນຫຼັກພື້ນຖານໃນການສອບເສັງເຂົ້າຮັບລາຊະການ ແລະເປັນເຄື່ອງມືຕັດສິນຊີ້ຂາດໃນການຄັດເລືອກຄົນດີເຂົ້າມາເປັນຂຸນນາງສືບມາຈົນເຖິງສະຕະວັດທີ 19.

❖ **ສະຖານທີ່ທາງສາສະໜາ ແລະ ສານເຈົ້າຂອງຈີນ**

ກ່ອນໄປຢ້ຽມຢາມວັດໃນພຸດທະສາສະໜາກັບສານເຈົ້າໃນລັດທິເຕົ່າ ລັດທິຂົງຈື້ ຜູ້ທີ່ມາຢ້ຽມຢາມ ຄວນທຳຄວາມຮູ້ຈັກກັບງານປະຕິມະກຳ ກິດຈະກຳ ແລະ ສັນຍາລັກຕ່າງໆ ໄປລ່ວງໜ້າເພື່ອໃຫ້ເກີດຄວາມເພີດເພີນ ໃນການທ່ຽວຊົມ.

ສະຖານທີ່ສ່ວນໃຫຍ່ໃນປະເທດຈີນເປັນວັດ ຊຶ່ງໝູ່ອາຄານທັງໝົດຮຽງຕົວກັນຢູ່ໃນແນວແກນເໜືອ-ໃຕ້ ແລະ ປະຕູໃຫຍ່ກໍ່ຫັນໜ້າອອກໄປທາງທິດໃຕ້ ທີ່ປະຕູທາງເຂົ້າດ້ານໜ້າສຸດອາດມີ " ກຳແພງຜີ " ຂວາງເອົາໄວ້ປ້ອງກັນບໍ່ໃຫ້ຜີວິນຍານຮ້າຍຜ່ານກາຍເຂົ້າມາໄດ້, ອາຄານຫຼັງທາອິດເປັນທີ່ປະດິດຖານພະພຸດທະຮູບພຣະເມດໄຕ ( ໝີລໍ່ຝ ພຣະໂພທິສັດຜູ້ເຊື່ອກັນວ່າ ຈຸຕິລົງມາຕຣັບເປັນພະພຸດທະເຈົ້າອົງຕໍ່ໄປ) ບາງຄັ້ງກໍ່ເອີ້ນວ່າ ພິກຂຸຖົງຢ່າມ ເພາະມັກຖືຢ່າງເອົາໄວ້ກັບຕົວສະເໝີ ດ້ານຫຼັງຂອງທ່ານມີຮູບປັ້ນເທບເທວາຖີ່ວຕັ້ງຫັນໜ້າອອກມາທາງທິດເໜືອ ເທວາຖີ່ວຜູ້ປົກປັກຮັກສາພຣະສາສະໜາ ແຕ່ງກາຍໃນຊຸດແມ່ທັບ ຖືຜ້າແພເອົາໄວ້ໃນມື, ສອງຂ້າງມີເທວະຮູບຕ້າຫຽນທວາງວາງຕັ້ງຂະໜານຢູ່ສີ່ອົງ.

ສານເຈົ້າໃນ ລັດທິເຕົ່າ ພົບເປັນນ້ອຍກ່ວາບັນຍາກາດທີ່ມີຄວາມສະຫງົບສຸກ ບໍ່ມີສີສັນບໍ່ມີຊີວິດເທົ່າກັບ ສານເຈົ້າໃນລັດທິເຕົ່າ ແລະ ວັດໃນພຸດທະສາສະໜາ, ສະຖານທີ່ໃຫຍ່ໃນສານເຈົ້າມັກມີປ້າຍຫີນທີ່ຈາລຶກຂໍ້ຂຽນ ຂອງບັນດານັກປັດຊະຍາເອົາໄວ້ບາງແຜ່ນຕັ້ງຢູ່ເທິງຫຼັງເຕົ່າຫີນຕົວມົນຫຼືມາ ຮູບກິແສນກໍ່ພົບເຫັນໄດ້ເລື້ອຍໆ ສານ ເຈົ້າໃນລັດທິຂົງຈື້ມັກປູກຕົ້ນສູນໄຊເປຣສເອົາເປັນທິວແຖວ ສ່ວນຮູບສະຫຼັກຕົວຂົງຈື້ນັ້ນຖ້າບໍ່ຕັ້ງຢູ່ປະຕູໜ້າທາງກໍ່ ມັກຕັ້ງຢູ່ໃນຫ້ອງໂຖງໃຫຍ່ ແລະ ປົກກະຕິຈຶ່ງມີຮູບຂອງຜູ້ສືບທອດປະດັບຢູ່ສອງຫ້ອງຂ້າງດ້ວຍ.

❖ **ພຸດທະສາດສະໜາ**

ປັດຈຸບັນຊາວຈີນທີ່ນັບຖືພຸດທະສາດສະໜາມີທັງຊາວຮັ່ນ ມົງໂກນຕິເບດ,ແມນ,ທາຈຽວສຽງ ແລະ ໄຕ ( ນິກາຍ ຊາວຈີນຮັບເອົາພຸດທະສາສະໜາເຂົ້າມາໃນຊ່ວງຄຣິດຕະສະກະລາດເມື່ອພໍ່ຄ້າ ແລະ ພະພິສູໃຊ້ເສັ້ນທາງສາຍໃດເດີນທາງເຂົ້າມາໃນປະເທດຈີນ ແຕ່ນິກາຍທີ່ແຜ່ຫຼາຍຢູ່ໃນປະເທດຈີນເປັນນິກາຍມະຫາຍານ ຊຶ່ງເຊື່ອວ່າ ສັດທັງໂລກຍ່ອມຫຼຸດພົ້ນໄດ້ດ້ວຍຄວາມຊ່ວຍເຫຼືອຈາກ ພະໂພທິສັກ ຊາວຈີນສົນໃຈສາສະໜາພຸດຢູ່ສອງຢ່າງໃຫຍ່ໆຄືຄຳສອນເລື່ອງກຳທີ່ໃຊ້ອະທິບາຍໄດ້ວ່າເປັນຫຍັງຊີວິດຊາດນີ້ຈຶ່ງໄດ້ລຳບາກຍາກແຄ້ນກັບຄຳສອນເລື່ອງຊີວິດຫຼັງ ຫິນຍານ ) ຄວາມຕາຍທີ່ມີຫວັງວ່າອາດດີກວ່າຊາດນີ້ ແຕ່ພຸດທະສາສະໜາກໍ່ມີຄຳສອນທີ່ຂັດແຍ່ງກັບຫຼັກຈະຣິຍະທຳຂອງຂົງຈື້ ແລະ ປະເພນີການເສັ້ນໄຫວ້ບັນທະບູລຸດໂດຍບໍ່ນ້ອຍ.

ສາສະໜາພຸດຈະເລີນຮຸ່ງເຮືອງເຖິງຂີດສູງສຸດໃນຍຸກລາສະວົງຖັງ ພາຍໃຕ້ການນາພາຂອງຈັກກະພັດຫຼາຍ ພະອົງໂດຍສະເພາະໃນລາຊະການຈັກກະພັດນີຖູ່ຈຽວຫຽນ ແຕ່ໃນທ້າຍລາຊະວົງດຽວກັນນີ້ ຊາວພຸດຕ້ອງປະເຊີນ ໜ້າກັບການທຳລາຍຄັ້ງຮຸນແຮງທີ່ສຸດໃນປະຫວັດສາດນານເຖິງ 3 ປີເຕັມ ວັດວາກວ່າ 40.000 ແຫ່ງຖືກຮື້ຖອນທຳລາຍ, ພຸດທະສາສະໜາຖືກກ່າວໂທດວ່າເປັນຕົ້ນເຫດຂອງຄວາມຕົກຕ່ຳທາງເສດຖະກິດ ແລະ ຄວາມເສື່ອມໂຊມທາງຊັບສິນບັດຂອງພະລາຊະວົງ.

ພຸດທະສາດສະໜາໃນຈີນແຕກອອກເປັນ 10 ສຳນັກ, ແປດສຳນັກເນັ້ນສຶກສາສະເພາະຫຼັກປັດຊະຍາ ລ້ວນໆຊາວບ້ານຈຶ່ງບໍ່ສົນໃຈ ຕ່າງຈາກນີ້ອີກສອງສຳນັກທີ່ຍັງຟື້ນຟູສືບຕໍ່ມາຈົນເຖິງປັດຈຸບັນນັ້ນຄື ສຳນັກງານ ( ພານ ຫຼື ເຊນ ) ກັບສຳນັກແດນບໍລິສຸດ ຊຶ່ງນັບຖືບູຊາພະອະມິຕະກະສຳນັກທີ່ມີອິດທິພົນຫຼາຍທີ່ສຸດຄື ສານັກງານ ຮຽກອີກ

ຢ່າງໜຶ່ງວ່າ ສຳນັກວິປັດສາສະໜາ ຖືກກຳເນີດຂຶ້ນໃນຍຸກລາຊະວົງຖັງ ແລະ ມີຫຼັກຄຳສອນວ່າ ບຸກຄົນຈະ ຫຼຸດພົ້ນກໍ່ຕໍ່ເມື່ອບັນລຸເຖິງຄວາມເປັນພຸດທະຊຶ່ງບໍ່ວ່າໃຜກໍ່ອາດບັນລຸເຖິງໄດ້, ສຳນັກນີ້ປະຕິເສດຄວາມຮູ້ທີ່ໄດ້ມາ ຈາກພະຄຳພີ ແລະ ພິທີກຳຕ່າງໆ ແຕ່ຈະໃຊ້ການບຳເພັນສະມາທິເປັນຫົນທາງໄປສູ່ບັນຫາ.

ສະຕະວັດ VII ພຸດທະສາດສະໜານິກາຍຕັນຕະ (ເປັນນິກາຍລາມະ) ໄດ້ແຜ່ຫຼາຍຈາກອິນເດຍເຂົ້າສູ່ຕິ ເບດໂດຍມີພິຖຸນາມປັກຖະມາສັມພາວະເປັນຜູ້ນຳເຂົ້າມາເຜີຍແຜ່ຈົນຂະຫຍາຍຂຶ້ນແທນຄວາມເຊື່ອທີ່ມີມາແຕ່ ດັ້ງເດີມ ແຕ່ໃນຂະນະດຽວກັນນັ້ນພຸດທະສາສະໜາຕັນຕະກໍ່ຮັບເອົາຄວາມເຊື່ອເດີມມາເຈືອປົນໄວ້ບໍ່ນ້ອຍ ວັດວາອາຮາມ ໃນທິເບດຈຶ່ງໄດ້ພັດທະນາຂຶ້ນມາເປັນທັງສູນກາງທາງບັນຫາ, ເປັນທັງສູນລວມອານາດທາງອານາຈັກ ແຕ່ຄວາມຂັດແຍ້ງກໍ່ເກີດຂຶ້ນຕັ້ງແລ້ວຄັ້ງເລົ່າ ແລະ ມີພຽງນັກປະຕິຮູບຢ່າງພະສັນຕະປະປາເທົ່ານັ້ນທີ່ສາມາດແກ້ໄຂ ຄວາມສັບສົນວຸ້ນວາຍໃຫ້ຄົງຕົວໄດ້ໂດຍການກໍ່ຕັ້ງນິກາຍຄຸນນະທຳຂຶ້ນ ນິກາຍນີ້ສຸມໃສ່ການຮັກສາເພດພົມມະຈັນ ແລະ ມີກົດລະບຽບທີ່ເຂັ້ມງວດຫຼາຍ ເນື່ອງຈາກສາວົກໃນນິກາຍໃສ່ໝວກເຫຼືອງຜູ້ຄົນທົ່ວໄປຈຶ່ງມັກເອີ້ນນິກາຍນີ້ວ່າ ນິກາຍໝວກເຫຼືອງ.

ຜູ້ນານິກາຍນີ້ຄື ດາໄລລາມະ ແລະ ປົນເຊນລາມ ດາໄລລາມະຄື ພະໂພທິສັດອະວາໂລຕິເກສວນຊາວທິເບດຖືວ່າທ່ານເປັນເທບຜູ້ປົກປັກຮັກສາແຜ່ນດິນທີ່ເບດ ປົ້ນເຊນລາມະ, ພະອະມິຕະກະທີ່ຊາວທິເບດຖືເປັນ ເທບສູງສຸດອີກອົງໜຶ່ງ ດາໄລລາມະອົງປັດຈຸບັນ(ອົງທີ່ 14) ຂຶ້ນຄອງລາດເມື່ອປີ 1949 ແລະ ໜີໄປລີ້ໄພຢູ່ອິນເດຍ ຫຼັງຈີນເຂົ້າຍຶດຄອງຕິເບດໃນປີ 1959 ແລະ ພະອົງຍັງໄດ້ກັບຄືນສູ່ຕູພູມິ ຈີນເຖິງດຽວນີ້ ບັນເຊນລາມະອົງທີ່ 10 ເຖິງແກ່ການເສຍຊີວິດປີ 1989 ຜູ້ສືບທອດຕຳແໜ່ງນັ້ນຍັງບໍ່ແນ່ວ່າຈະແມ່ນອົງຈິງ ຫຼື ບໍ່ ເພາະເດັກຊາຍຄົນທີ່ຕາ ໄລລາມະ ແຈ້ງມາວ່າເປັນປັນເຊນລາມະກັບຄືນມາເກີດຖືກທາງການຈີນພາຕົວໄປເປ່ຍຈິງ ແລ້ວສິ່ງເດັກອີກຄົນມາ ດຳລົງຕຳແໜ່ງແທນພ້ອມຟື້ນຟູອາຮາມຕາຊິລຸມໂປ ( ຈາຊື່ກູນ ) ຂຶ້ນໃໝ່ໃນປີ 1955 ແຕ່ຊາວທິເບດບໍ່ຍອມຮັບ ປັນເຊນລາມະອົງນີ້.

ພຸດທະສາສະໜານິກາຍລາມະມີເທບພະເຈົ້າທີ່ຜູ້ຄົນນັບຖືບູຊາຢູ່ຫຼາຍອົງ ທັງເທບຂອງພຸດ, ພາມ ອິນເດຍ ແລະ ເທບ ໃນສາດສະໜາບ່ອນອັນເປັນສັດທາຄວາມເຊື່ອເດີມຂອງຊາວຕິເບດດ້ວຍ. ນິກາຍນີ້ຖືວ່າ ເວດມົນຄາຖາ ການສວດມົນ, ການອະທິຖານ, ການສ້າງສັນຍາລັກ ແລະ ປະກອບພິທີບູຊາລ້ວນເປັນວິທີການທີ່ຈະນາໄປສູ່ຄວາມ ຫຼຸດພົ້ນທັງສິ້ນ.

### ❖ **ສາສະໜາອິດສະລາມ**

ປະຊາກອນຈາກ 56 ເຜົ່າຂອງຈີນນັບຖືສາສະໜາອິດສະລາມໄດ້ແກ່ ເຜົ່າລູຍ, ອູຊິເບດ, ອຸຍກູ, ຄາຮັກ, , ຕັກຊິດ, ຕົງຊຽງ, ຊາລາ ແລະ ເປ່າອານ ແລະ ລວມທັງໝົດ 14 ລ້ານຄົນ, ຊາວຫູຍຄວາມຈິງເປັນຊາວຮັ່ນ ແຕ່ ເພາະຫັນມານັບຖືອິດສະລາມຖືກແຍກອອກເປັນຊົນເຜົ່າກຸ່ມອ້ຍອີກກຸ່ມໜຶ່ງຕ່າງຫາກ ແຕ່ພວກເຂົາກໍ່ບໍ່ແມ່ນອິດສະ ລາມມີກະຊົນທີ່ເຄັ່ງຄັດປານໃດ.

ສາສະໜາອິດສະລາມແຜ່ເຂົ້າມາສູ່ດິນແດນຈີນສອງທາງຄື ທາງເສັ້ນທາງສາຍໄໝກັບທາງທະເລ ແລະ ເຂົ້າ ມາຕັ້ງຢ່າງແໜ້ນແຟ້ນຢູ່ໃນຈີນໄດ້ຢ່າງໝັ້ນຄົງໃນນຍຸກໃນຍຸກລາຊະວົງຢວນ.

ນະໂຍບາຍຫຼາຍຢ່າງໃນຍຸກລາຊະວົງຊິງໄດ້ສ້າງຄວາມບໍ່ພໍໃຈໃຫ້ກັບຊາວມຸດສະລິມເປັນຢ່າງຫຼາຍເຊັ່ນ ໃນສະຕະວັດທີ່ XVIII ທາງການໄດ້ສັ່ງຫ້າມບໍ່ໃຫ້ຊາວມຸດສະລິມຂ້າສັດຕາມວິທີແບບອິດສະລາມ, ຫ້າມສ້າງມັດ ສະໜິດ(ໂບດອິດສະລາມ), ຫ້າມບໍ່ໃຫ້ເດີນທາງໄປສະແຫວງບຸນຍັງເມືອງມັກກະ ແລະ ຫ້າມບໍ່ໃຫ້ຊາວຈີນແຕ່ງງານກັບຊາວມຸດສະລິມ ສິ່ງຜົນເຮັດໃຫ້ຄວາມສຳພັນລະຫວ່າງສອງຝ່າຍມີແຕ່ຄວາມຕຶກຕໍ່າ ແລະ ບໍ່ດີລົງທຸກທີ່ ໃນຍຸກ

ການປະຕິວັດວັດທະນະທຳສາສະໜາອິດສະລາມຕ້ອງປະເຊີນກັບມິກສັນນິຍຸດອີກຄັ້ງ ຈົນຮອດທ້າຍສະຕະວັດທີ່ 20 ທາງການຈຶ່ງໄດ້ປ່ຽນທ່າທີໂດຍດຶງສາສະໜາກັບລັດທິຄອມມູນິດໃຫ້ເຂົ້າມາໃກ້ຊິດກັນຍິ່ງຂຶ້ນ ແຕ່ຫຼັງເຫດກໍ່ການຮ້າຍເມື່ອເດືອນກັນຍາປີ ຄ.ສ. 2001 ກໍ່ເກີດບັນຫາຂຶ້ນອີກຈົນໄດ້ ເມື່ອພວກອຸຍກູໃນຊິນຈຽງກໍ່ການເພື່ອແຍກຕົວເປັນອິດສະຫຼະ, ທາງການຈຶ່ງໃຊ້ກຳລັງເຂົ້າປາບປາມຂັ້ນເດັດຂາດ

❖ **ສາສະໜາຄຼິດ**

ຜູ້ທີ່ນຳສາສະໜາເຂົ້າມາໃນປະເທດຈີນຄັ້ງທຳອິດໃນປີ ຄ.ສ. 635 ຄື ນັກບວດໃນນິກາຍ ເນທໍຣຽນ ໂດຍໄດ້ຮັບ ຄວາມຊ່ວຍເຫຼືອຈາກຊາວເປີເຊຍຊື່ ອະໂລເພັນ

ເຖິງວ່າຈະຖືກກີດຂວາງກັນ ແຕ່ມີຢູ່ໄລຍະໜຶ່ງທີ່ສາສະໜາຄິດໄດ້ແຜ່ຫຼາຍໄປທົ່ວປະເທດ ແລະ ໃນບາງ ພື້ນທີ່ກໍ່ມີຄົນນັບຖືສືບຕໍ່ມາຈົນເຖິງລາຊະວົງຢວນລົ້ມສະລາຍລົງ ເຮັດໃຫ້ຈີນກັບຄຼິດຕະຈັກໂຣມັນຄາທໍລິດຕິດຕໍ່ ສຳພັນກັນເຊື່ອກັນວ່າ ໂບດຄາທໍລິກແຫ່ງທຳອິດໃນປະເທດຈີນອາດຈະແມ່ນສ້າງຂຶ້ນໂດຍ ນັກບວດຟານຊິກັນຈາກອີຕາລີທີ່ເດີນທາງມາເຖິງໃນປີ 1295 ຍຸກລາຊະວົງໝິງກໍ່ມີມິຊະຊັນນາຣີຄາທໍລິກເດີນທາງເຂົ້າມາເຜີຍແຜ່ສາສະໜາຫຼາຍຄະນະດ້ວຍກັນ ແຕ່ຜູ້ທີ່ມີບົດບາດໃນການນີ້ຫຼາຍທີ່ສຸດກໍ່ຄື ນັກບວດອີຕາລີຊື່ ມັດໂອເຕ ຣິຊະຊີ ເມື່ອທ່ານເສຍຊີວິດລົງ ຈີນມີຄົນນັບຖືຄິດຢູ່ປະມານ 3000 ຄົນ.

ນັກບວດໃນນິກາຍເຢຊູໃຊ້ຄວາມຮູ້ທາງດ້ານວິທະຍາສາດທີ່ມີເປັນໃບເບີກທາງສ້າງສຳພັນກັບນັກປັດ ຊະຍາຈີນຜິດກັບ ນັກບວດຄາທໍລິກໃນນິກາຍອື່ນໆ ທີ່ຍຶດຕິດກັບຫຼັກຄຳສອນທາງສາສະໜາຈີນກໍ່ໃຫ້ເກີດບັນຫາຕຶງ ຄຽດຂຶ້ນ ເຮັດໃຫ້ອົງຈັກກະພັດວິກຣິຂະໜາດຮັບສັ່ງໃຫ້ປະຫານເສຍສິ້ນ. ເມື່ອເຖິງຕົ້ນທົດສະວັດ 1800 ພວກໂປຼ ເຕສະແຕນກໍ່ເຂົ້າມາເຜີຍແຜ່ສັດທາຂອງຕົນ ແຕ່ວິທີທີ່ໃຊ້ບໍ່ຄຳນຶງເຖິງສົມບັດສິນທຳຄວາມຖືກຕ້ອງ ຄົນທີ່ປ່ຽນມານັບຖືຄຣິດຈຶ່ງມີຢູ່ນ້ອຍກວ່າ.

ຫຼັງສົງຄາມໂລກຄັ້ງທີ່ 2 ນະຄອນຫຼວງວາຕິກັນປະກາດຕໍ່ຕ້ານຄອມມູນິດ ຈີນຈຶ່ງຫ້າມບໍ່ໃຫ້ພວກຄາທໍລິກ ໃນປະເທດຂຶ້ນຕໍ່ວາຕິກັນ ວາຕິກັນຕອບໂຕ້ດ້ວຍການຍອມຮັບລັດຖະບານໄຕ້ຫວັນວ່າເປັນລັດຖະບານທີ່ຖືກຕ້ອງຍຸດຕິທຳພຽງໜຶ່ງດຽວຂອງຈີນ.

# ເອກະສານອ້າງອີງ

ຈັນທະຊາຍ ວັດນິຄົມ ພິມປີ ຄສ 1982 *ປະຫວັດສາດຈີນຕໍ່ກິດຈະການໂລກ* ມະຫາວິທະຍາໄລລາມຄໍາແຫງ. ປະເທດໄທ.

ມາດຕະຍາ ອິງຄົມຈິດ ພິມປີ ຄສ 2001 *ປະຫວັດສາດຈີນສະໄໝໃໝ່* ມະຫາວິທະຍາໄລລາມຄໍາແຫງ.

ຄະນິນ ບຸນສຸວັນ ພິມປີ ຄສ 2005 *ປະຫວັດສາດຈີນສາມຍຸກສະບັບປັບປຸງໃໝ່*, ກຸງເທບມະຫາວິທະຍາໄລລາມຄໍາແຫງ.

ໂອເດັດ ເຈນຄາຊຽນ ພິມປີ ຄສ 2006 *ປະຫັວດສາດຈີນມະຫາອໍານາດ*..

ພູວິໄລ ແກ້ວກິນນາລີ ພິມປີ ຄສ 2019. *ເອກະສານປະກອບການສອນປະຫວັດສາດຈີນ* ຄະນະສຶກສາສາດ ມຂ.

# ໂຄງຮ່າງຫຼັກສູດລາຍວິຊາ
# ຊື່ວິຊາ: ປະຫວັດສາດຈີນ
# ຫຼັກສູດສ້າງຄູມັດທະຍົມລະດັບປະລິນຍາຕີ
# ລະຫັດວິຊາ: 0905406

| | |
|---|---|
| ລະບົບ-ພາກຮຽນ | ລະບົບ12+4ພາກຮຽນທີ 1 ປີທີ 2 |
| ຈຳນວນຊົ່ວໂມງ | 64 ຊົວໂມງ |
| ຈຳນວນໜ່ວຍກິດ | 3 (2-2-2) |
| ອະທິບາຍຄ່າໜ່ວຍກິດ | ວິຊານີ້ປະກອບດ້ວຍ**3**ໜ່ວຍກິດໃນນັ້ນມີ**2**ຊົ່ວໂມງບັນລະຍາຍຕໍ່ອາທິດໃນ**16** ອາທິດເທົ່າກັບ**32**ຊົ່ວໂມງແລະພາກປະຕິບັດ**2**ຊົ່ວໂມງຕໍ່ອາທິດໃນ**16**ອາທິດເທົ່າກັບ**32**ຊົ່ວໂມງລວມທັງໝົດ**64** ຊົ່ວໂມງ. |
| ຈຸດປະສົງ | ເມື່ອຮຽນວິຊານີ້ແລ້ວນັກສຶກສາຄູຈະສາມາດ<br>1.ອະທິບາຍໄດ້ປະຫວັດຄວາມເປັນມາແລະວິວັດທະນາການຂອງຊຸມຊົນຈີນ.<br>2.ອະທິບາຍກ່ຽວກັບການປົກຄອງຂອງບັນດາລາຊະວົງຕ່າງໆຂອງຈີນໃນສະໄໝຂ້າທາດແລະສະໄໝສັກດີນາ.<br>3.ວິເຄາະໄດ້ກ່ຽວກັບວິວັດທະນາການທາງດ້ານການເມືອງ,ເສດຖະກິດ, ສັງຄົມແລະວັດທະນະທຳຂອງຈີນ |
| ເນື້ອໃນຫຍໍ້ | ວິຊານີ້ຮຽນຮູ້ກ່ຽວກັບວິວັດທະນາການຂອງຊຸມຊົນຈີນ,ຈີນສະໄໝການປົກຄອງຂອງບັນດາລາຊະວົງຕ່າງໆຂອງຈີນແລະຈີນໃນສະໄໝສາທາລະນະລັດແລະວັດທະນະທຳຈີນ. |
| ການດຳເນີນການສອນ | ວິຊານີ້ປະກອບມີ 5 ບົດໃຊ້ເວລາ 16 ອາທິດແຕ່ລະບົດມີຫຼາຍຫົວຂໍ້ຍ່ອຍໂດຍນຳໃຊ້ວິທີສອນແບບບັນຍາຍ, ສຳມະນາ,ໃຫ້ນັກສຶກສາຄົ້ນຄວ້າດ້ວຍຕົວເອງຫຼືກຸ່ມແລ້ວຂຶ້ນລາຍງານຈາກນັ້ນຄູສະຫຼຸບຄືນ. |
| ອຸປະກອນ/ສື່ການສອນ | LCD,ບົດສອນແລະສື່ການສອນຕ່າງໆທີ່ກ່ຽວຂ້ອງກັບເນື້ອໃນບົດຮຽນ |
| ວິທີປະເມີນ/ຮູບແບບການປະເມີນ | - ສັງເກດການມີສ່ວນຮ່ວມ<br>- ຖາມ-ຕອບ<br>- ການນຳສະເໜີ, ບົດລາຍງານກິດຈະກຳ |
| ອາທິດ 1 | ບົດທີ 1<br>ວິວັດທະນາການຂອງຊຸມຊົນຈີນ<br>1.ສະພາບປະຫວັດສາດແລະຄວາມເປັນມາຂອງຊຸມຊົນ |

| | |
|---|---|
| | 1.1 ປະເທດຈີນລັດບູຮານໂລກ 5000-4000 ປີກ່ອນຄສ<br>1.2 ຈຸດສຳຄັນໃນວິຖີຊີວິດຈີນບູຮານ |
| ອາທິດ 2 | ບົດທີ 1 (ຕໍ່)<br>ວິວັດທະນາການຂອງຊຸມຊົນຈີນ<br>2 ຄວາມໝາຍແລະຄວາມສຳຄັນກ່ຽວກັບປະຫວັດສາດຈີນ |
| ອາທິດ 3 | ບົດທີ 1 (ຕໍ່)<br>ວິວັດທະນາການຂອງຊຸມຊົນຈີນ<br>3 ວັດທະນະທຳຈີນບູຮານ<br>3.1 ການກຳເນີດກິດຈະກຳຕ່າງໆຂອງຈີນ |
| ອາທິດ 4 | ບົດທີ 2<br>ຈີນສະໄໝການປົກຄອງຂອງບັນດາລາຊະວົງຕ່າງໆລາຊະວົງຈີນໃນສະໄໝຂ້າທາດ<br>1. ລາຊະວົງຈີນໃນສະໄໝຂ້າທາດ<br>1.1 ລາຊະວົງເຮຍ<br>1.2 ລາຊະວົງຊາງ<br>1.3 ລາຊະວົງຊິນ |
| ອາທິດ 5 | ບົດທີ 2 (ຕໍ່)<br>ຈີນສະໄໝການປົກຄອງຂອງບັນດາລາຊະວົງຕ່າງໆ<br>2. ລາຊະວົງຈີນໃນສະໄໝສັກດີນາ<br>2.1 ລາຊະວົງຊິນ<br>2.2 ລາຊະວົງຫານ<br>2.3 ລາຊະວົງຈິ້ນ |
| ອາທິດ 6 | ບົດທີ 2 (ຕໍ່)<br>ຈີນສະໄໝການປົກຄອງຂອງບັນດາລາຊະວົງຕ່າງໆ<br>2.4 ລາຊະວົງສຸຍ<br>2.5 ລາຊະວົງຕານ<br>2.6 ລາຊະວົງຊົ່ງ |
| ອາທິດ 7 | ບົດທີ 2 (ຕໍ່)<br>ຈີນສະໄໝການປົກຄອງຂອງບັນດາລາຊະວົງຕ່າງ |

| | |
|---|---|
| | 2.7 ລາຊະວົງຢວນ<br>2.8 ລາຊະວົງໝິງ<br>2.9 ລາຊະວົງຊິງ |
| ອາທິດ 8 | ບົດທີ 3<br>ຈີນສະໄໝການຮຸກຮານຂອງພວກລ່າເມືອງຂຶ້ນ<br>1. ການປະກົດຕົວຂອງພວກເອີຣົບຢູ່ຈີນ<br>1.1 ສົງຄາມຢາຝິ່ນຄັ້ງທີ 1 |
| ອາທິດ 9 | ບົດທີ 3 (ຕໍ່)<br>ຈີນສະໄໝການຮຸກຮານຂອງພວກລ່າເມືອງຂຶ້ນ<br>1.2 ຂະບວນການຕໍ່ສູ້ຂອງທາຍຜິງ-ທຽນກົວ<br>1.3 ການປະຕິວັດໃນປະເທດຈີນ |
| ອາທິດ 10 | ບົດທີ 4<br>ການປະຕິວັດຈີນ ແລະ ຈີນລະບອບສາທະລະນະລັດ<br>1 ການປະຕິວັດຈີນປີ 1925-1927<br>1.1 ສາເຫດທີ່ພາໃຫ້ເກີດການປະຕິວັດ<br>1.2 ການເລີ່ມຕົ້ນຂອງການປະຕິວັດຈີນ |
| ອາທິດ 11 | ບົດທີ 4 (ຕໍ່)<br>ການປະຕິວັດຈີນ ແລະ ຈີນລະບອບສາທະລະນະລັດ<br>1.3 ການສ້າງຖານທີ່ໝັ້ນຂອງການປະຕິວັດ<br>1.4 ຍີ່ປຸ່ນຮຸກຮານປະເທດຈີນ |
| ອາທິດ 12 | ບົດທີ 4 (ຕໍ່)<br>ການປະຕິວັດຈີນ ແລະ ຈີນລະບອບສາທະລະນະລັດ<br>2.ການສ້າງຕັ້ງສາທາລະນະລັດປະຊາຊົນຈີນ<br>3.ການກໍ່ສ້າງສັງຄົມນິຍົມຈີນ |
| | ບົດທີ 5<br>ວັດທະນະທຳຈີນ<br>1. ວິທະຍາສາດແລະສິລະປະກຳ<br>2. ວັດທະນະທຳຕົວໜັງສື |
| ອາທິດ 14 | ບົດທີ 5 (ຕໍ່) |

| | |
|---|---|
| | ວັດທະນະທຳຈີນ<br>3.ຈຸດພິເສດແລະການພັດທະນາດ້ານສິລະປະແລະວັດທະນະທຳ<br>3.1 ວັດທະນະທຳ |
| ອາທິດ 15 | ບົດທີ 5 (ຕໍ່)<br>ວັດທະນະທຳຈີນ<br>3.2 ວັດທະນະທຳຢາງເຊົາ<br>3.3 ວັດທະນະທຳລຸງຊານ |
| ອາທິດ 16 | ບົດທີ 5 (ຕໍ່)<br>ວັດທະນະທຳຈີນ<br>3.4 ຈຸດພິເສດແລະຜົນງານທາງດ້ານວັດທະນະທຳ<br>3.5 ຜົນງານດ້ານວິທະຍາສາດ |
| ການປະເມີນ | 1. ການຂຶ້ນຫ້ອງຮຽນ 10 %<br>2. ນັກສຶກສາມີສ່ວນຮ່ວມ 30 %<br>3. ກວດກາການພາກ 20 %<br>4. ເສັງຈົບໜ່ວຍກິດ 40 % |
| ເອກະສານອ້າງອີງ | 1. ຄະນິນບຸນສຸວັນ. ປະຫວັດສາດຈີນສາມຍຸກສະບັບປັບປຸງໃໝ່ພິມປີ 2548, ກຸງເທບມະຫາວິທະຍາໄລລາມຄຳແຫງ.<br>2. ຈັນທະຊາຍວັດນິຄົມ. ປະຫວັດສາດຈີນພິມປີ 2541. ປະເທດໄທ.<br>3. ຈັນທະຊາຍວັດນິຄົມ. ປະຫວັດສາດຈີນຕໍ່ກິດຈະການໂລກມະຫາວິທະຍາໄລລາມຄຳແຫງພິມປີ 2525. ປະເທດໄທ.<br>4. ມາດຕະຍາອີງຄົມຈິດ: ປະຫວັດສາດຈີນ ສະໄໝໃໝ່ມະຫາວິທະຍາໄລລາມຄຳແຫງ. ພິມປີ 2544.<br>5. ໂອເດັດເຈນຄາຊຽນ. ປະຫັວດສາດຈີນ ມະຫາອຳນາດ. ພິມປີ 2549. |
| ຊື່ຜູ້ຂຽນ | 1. ຊອ. ປານີມາໄລສານວິທະຍາໄລຄູຄັງໄຂເບີໂທ: 020 22344556<br>Email: Ppany113@gmail.com<br>2.ອຈ. ປທ ນ. ບົວລີ ພັນທະພາ ວິທະຍາໄລຄູຄັງໄຂ<br>ໂທລະສັບ: 020 55548700. Email: boualy phanthapha@gmail.com<br>3. ຊອ. ປທ ນ. ເພັດສະໝອນພຸດສະດີວິທະຍາໄລຄູຄັງໄຂ<br>ໂທລະສັບ: 020 5471 7789. Email: Phetsamone psd@gmail.com |

| | |
|---|---|
| | 4. ຊອ. ປທ ນ. ສຸວັນທອນ ຍົດສະຫວັດຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ<br><br>ໂທລະສັບ: 020 55798938. Email: thonesvt 2021@gmail.com<br><br>5. ຊອ. ປທ ນ. ພິມໃຈ ອິນແປງ ວິທະຍາໄລຄູດົງຄຳຊ້າງ<br><br>ໂທລະສັບ: 020 2821 1124. Email: Phim inpheng@gmail.com<br><br>6.ຊອ. ປທ ນ. ວິໄລພອນ ສີມສຸດທິ ຄະນະສຶກສາສາດ,  ມຊ<br><br>ໂທລະສັບ: 020 77983567. Email: man svk.119@gmail.com<br><br>7. ຊອ. ປທ ນ. ສີງອຳໄພພິມພາພອນວິທະຍາໄລຄູສາລະວັນ<br><br>ໂທລະສັບ: 030 9095686. Email: Phimpha sing sun@gmail.com<br><br>8. ປທ ອຸ່ນເຕົ້າ ໄຊຍະແສງ ສູນພັດທະນາຄູ<br><br>ໂທລະສັບ: 020 56472846. Email: Ountao 76@gmail.com<br><br>9. ປຕ ນ. ດາວອນສິດທິເດດ ສູນພັດທະນາຄູ<br><br>ໂທລະສັບ: 020 28892323. Email: Davonessi thided@gmail.com |